ເຫລັ້ມ
ທີ6

ຄັງຄວາມຮູ້ທາງດ້ານການເມືອງ

ກ. ປີໂຣກອຟ

# ລະບົບສັງຄົມນິຍົມ ແຫ່ງໂລກ

ສຳນັກພິມ "ກ້າວຫນ້າ"

ຄັງຄວາມຮູ້ທາງດ້ານການເມືອງ
ເຫລັ້ມ ທີ6

ກ. ປິໂຣກອຟ

# ລະບົບສັງຄົມນິຍົມ
# ແຫ່ງໂລກ

ອຸທິນ ບຸບະງາ.ກິງ

ສຳນັກພິມ "ກ້າວໜ້າ"
ມົດສະກູ
1984

ແປໂດຍ: ດວງເດືອນ ວິຣະວົງ

Библиотека политических знаний

Выпуск 6

Г. Пирогов

МИРОВАЯ СОЦИАЛИСТИЧЕСКАЯ СИСТЕМА

*на лаосском языке*

© ສຳນັກພິມ "ກ້າວໜ້າ", 1984

П $\frac{0302030101-139}{014(01)-84}$ без объявл.

# ຄຳນຳ

ລະບົບສັງຄົມນິຍົມແຫ່ງໂລກ ແມ່ນວົງຄະນາຍາດ ປະຊາຊາດອິດສະຫລະທັງຫລາຍ ທີ່ເປັນເຈົ້າຕົນເອງ, ເດີນຕາມເສັ້ນທາງສັງຄົມນິຍົມ ແລະ ກອມມູນິດ, ພວກເຂົາເຕົ້າໂຮມເຂົ້າກັນ ດ້ວຍຜົນປະໂຫຍດ ແລະເປົ້າໝາຍອັນດຽວກັນດ້ວຍສາຍພູກພັນແຫ່ງຄວາມສາມັກຄີແບບສາກົນ. ຢູ່ໃນຂອບເຂດ-ຂອງລະບົບນີ້ ເຫັນໄດ້ວ່າ ການແບ່ງປັນແຮງງານສາກົນແບບສັງຄົມນິຍົມ ໄດ້ກໍ່ຕົວຂຶ້ນ ແລະນັບມື້ນັບເລິກເຊິ່ງຂຶ້ນຢ່າງບໍ່ຢຸດຢັ້ງ, ຕະຫລາດໂລກອິດສະຫລະປະກອບຕົວຂຶ້ນ ແລະ ການຮ່ວມມືອັນສະໜິດແໜ້ນທາງດ້ານເສດຖະກິດການເມືອງແລະວັດທະນະທັມ ກໍເກີດຂຶ້ນທັງໄດ້ຜ່ານການຂະຫຍາຍຕົວມາ ໄລຍະໜຶ່ງແລ້ວ.

ຈຸນຫລັງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ແລະ ໄຊຊະນະຂອງລະບອບສັງຄົມນິຍົມຢູ່ສະຫະພາບໂຊວຽດແລ້ວການກໍ່ຕັ້ງລະບົບສັງຄົມນິຍົມແຫ່ງໂລກນັບວ່າແມ່ນປະກົດການ ປະ

ຫວັດສາດອັນມີຄວາມສຳຄັນຫລາຍກວ່າໝູ່. ໂດຍກ້າວຂຶ້ນມາເປັນກອງລະວັງໜ້າ ແຫ່ງຄວາມກ້າວໜ້າຂອງສັງຄົມ ວົງຄະນາຍາດສັງຄົມນິຍົມ ເພີ່ມທະວີກຳລັງແຮງຂອງຕົນ ຂຶ້ນຢ່າງເນື່ອງນິດ, ມັນປະກອບຕົວເປັນກຳລັງແຮງປະຕິວັດຕົ້ນຕໍ, ເປັນບ່ອນອີງຂອງຂະບວນປົດແອກທັງໝົດແຫ່ງຍຸກ ສະໄໝ. ບາດກ້າວເດີນທັງໝົດທີ່ດຳເນີນໄປໃນຊີວິດ ດ້ານເສດຖະກິດ ສັງຄົມການເມືອງ ແລະດ້ານວັດທະນະທຳຂອງເລກມັ້ນ ບໍ່ວ່າດ້ານໃດກໍດ້ານໜຶ່ງ ມັນຂຶ້ນກັບແບບວິທີ ຂະຫຍາຍຕົວຂອງການປະທະກັນລະຫວ່າງສອງລະບົບສັງຄົມ - ເສດຖະກິດຄື ລະບອບສັງຄົມນິຍົມ ກັບລະບອບທຶນນິຍົມ. ຜົນສຳເລັດທີ່ຍາດມາໄດ້ຂອງບັນດາປະຊາຊາດປະເທດ ສັງຄົມນິຍົມ ຢູ່ໃນການສະຖາປະນາສັງຄົມໃໝ່ແບບໜຶ່ງນັ້ນມີສ່ວນສົ່ງເສີມຄວາມຮຸ່ງເຮືອງຂອງຂະບວນກຳມະກອນ ແລະຂອງຂະບວນປົດປ່ອຍຊາດ, ຂອງການສ້າງຄວາມແໜ້ນແກ່ນໃຫ້ແກ່ພາລະກິດສັນຕິພາບປະຊາທິປະໄຕ ເອກະລາດຂອງຊາດກະທັ້ງຮອດການຕໍ່ສູ້ເພື່ອໄຊຊະນະຂອງລະບອບສັງຄົມນິຍົມຢູ່ໃນທົ່ວໂລກ.

ການຂັບປຸງລະບອບສັງຄົມນິຍົມ ການປ້ອງກັນມັນ ຕ້ານກັບການສ້າງຄວາມເສື່ອມເສຍຈາກຝ່າຍຈັກກະພັດນິຍົມແລະປະຕິການແມ່ນເລື່ອງເປັນຕາຍສຳລັບກຳລັງແຮງຂອງຄວາມກ້າວໜ້າ ແລະ ປະຊາທິປະໄຕ. ໂລກໃໝ່ໂລກຍຸຕິທຳກຳລັງຢູ່ໃນໄລຍະກໍ່ສ້າງດ້ວຍຄວາມບາກບັ່ນອົງອາດ ການ

ຂອງປະຊາຊາດຜູ້ເປັນອິດສະຫລະຢູ່ເທິງພື້ນແຜ່ນດິນ ອັນກວ້າງໃຫຍ່ ໄພສານແຫ່ງເອີຣົບ ອາຊີ ອາຟຣິກກາ ແລະອາເມລິກາລາຕິນ ໂດຍໄດ້ຮັບການສະຫນັບສະຫນູນ ອັນນັບມື້ນັບຫລາຍຂຶ້ນ ຈາກຊາວຜູ້ອອກແຮງງານທຸກໆປະເທດ. ນີ້ແມ່ນຮູບແບບການດຳລົງຊີວິດຂອງມະນຸດຊາດທັງຫມົດໃນອະນາຄົດ.

ການປະກອບສ້າງລະບົບສັງຄົມນິຍົມແຫ່ງໂລກ

ລະບົບສັງຄົມນິຍົມແຫ່ງໂລກ ຖືກກໍ່ເກີດຂຶ້ນມາໃນຖານະເປັນໝາກຜົນທຳມະຊາດຂອງການຂະຫຍາຍຕົວແຫ່ງສັງຄົມ. ການປະກອບສ້າງຂອງມັນ ຖືກຄາດຄະເນໄວ້ກ່ອນແລ້ວໂດຍນັກກໍ່ຕັ້ງທິດສະດີປະຕິວັດຜູ້ຍິ່ງໃຫຍ່ທັງສອງຄື ກ.ມາກ ແລະ ຝ. ອັງແກນ; ທ່ານທັງສອງນີ້ ຖືວ່າ ລະບອບ ສັງຄົມນິຍົມໂລກນັ້ນຕ້ອງແມ່ນຍຸກກ້າວໜ້າອັນຈຳເປັນແຫ່ງການ ຂະຫຍາຍຕົວຂອງອາລະຍະທຳ ຈາກຮູບແບບເກົ່າແກ່ ປະຖົມປະຖານໄປສູ່ຮູບແບບສູງສົ່ງກວ່າ. ເຊັ່ນວ່າ ລະບອບທຶນນິຍົມຄ່ອຍໆຂັບໄລ່ການພົວພັນສັງຄົມແບບສັກດີນາ (ແລະກ່ອນໜ້ານັ້ນ ລະບອບສັກດີນາກໍໄດ້ຂັບໄລ່ລະບອບຂ້າທາດ ), ລະບອບສັງຄົມນິຍົມຕ້ອງເຂົ້າມາແທນບ່ອນລະບອບ ທຶນນິຍົມ ແລະ ລຶບລ້າງໂຄງຮ່າງການຂູດຮີດຢ່າງຫລີກບໍ່ໄດ້. ໃນເວລານັ້ນ ທ່ານມາກ ແລະ ທ່ານອັງແກນ ເວົ້າໄວ້ຢ່າງນີ້ໂດຍອີງໃສ່ເຫດການທີ່ວ່າ ລະບອບທຶນນິຍົມໄດ້ຂະຫຍາຍຕົວຢູ່ໃນ

ປະເທດໃຫຍ່ໆທັງຫມົດເກືອບວ່າຢ່າງສະຫມ່ຳສະເຫມີ ແລະ ພວກເພິ່ນກໍໄດ້ຄາດຫມາຍໄວ້ວ່າ ການປະຕິຮູບແບບສັງຄົມນິຍົມຈະເກີດເປັນຕົ້ນເປັນໂຕຂຶ້ນຢູ່ໃນບັນດາປະເທດເຫລົ່ານີ້ ເກືອບພ້ອມໆກັນ.

ໂດຍນຳໃຊ້ແລະເສີມຂະຫຍາຍລັດທິຂອງມາກ ແລະອັງແກນ ໃຫ້ອຸດົມຮັ່ງມີຂຶ້ນຢ່າງມີຫົວຄິດປະດິດສ້າງຢູ່ພາຍໃນສະພາບການລະດັບໃຫມ່ຄືລະບອບຈັກກະພັດນິຍົມ ອັນແມ່ນ ລະບອບທຶນນິຍົມ ເຊິ່ງມີລັກສະນະສະເພາະຢູ່ບ່ອນວ່າ ມີຄວາມບໍ່ສະຫມ່ຳສະເຫມີຢູ່ໃນການຂະຫຍາຍຕົວຂອງແຕ່ລະ ພາກສ່ວນປະກອບຂອງມັນ, ທ່ານ ວ.ອີ.ເລນິນ ຜູ້ນຳທີ່ປີຊາສາມາດຂອງຊາວກຳມາຊີບລັດເຊຍ ໄດ້ພິສູດວ່າ ການປະຕິວັດສັງຄົມນິຍົມຈະສາມາດມີໄຊຊະນະຢູ່ໃນປະເທດຫນຶ່ງປະເທດດຽວ ຫລືໃນບາງປະເທດກ່ອນ, ສ່ວນການຂ້າມຜ່ານໄປ ສູ່ລະດັບຂະຫຍາຍຕົວສູງກວ່າເກົ່າຂອງມະນຸດຊາດນັ້ນ ຈະແຜ່ກວມເວລາຫມົດຍຸກສະໄຫມຫນຶ່ງຂອງປະຫວັດສາດ.

ເຫດການຕົວຈິງທີ່ເກີດຂຶ້ນກໍເປັນແນວນັ້ນແທ້.

ປະເທດລັດເຊຍສະໄຫມເຈົ້າຊາພິສູດຕົວອອກມາແລ້ວ-ວ່າມັນແມ່ນຕ່ອງໂສ້ຕ່ອງອ່ອນເພຍທີ່ສຸດຂອງລະບົບຈັກກະພັດນິຍົມ, ແມ່ນຕ່ອງທຳອິດທີ່ບໍ່ທົນທານຕໍ່ຄວາມຂັດແຍ່ງອັນໃຫຍ່ຫລວງຂົ້ນນ້ຳຫູກມັ້ ຂອງສັງຄົມນາຍທຶນ, ຕໍ່ແຮງຫນີບເຕັງຈາກຂະບວນປະຕິວັດ. ລັດນາຍທຶນທີ່ມີລະດັບຂະຫຍາຍ ຕົວປານກາງ ພ້ອມດ້ວຍການຄອບງຳຂອງການຜະລິດການ ກະ

ສີກຳ ແລະ ຮ່ອງຮອຍເສດເຫຼືອຂອງສັກດີນາຢັ່ງຮາກເລິກ ຢ່າງແຫນ້ນແກ່ນຢູ່ນັ້ນ ຕົກເປັນເປົ້າຫມາຍ ຂອງແອກລະບອບກົດຂີ່ອັນບໍ່ສາມາດແບກຫາບໄດ້ແລ້ວ. ຊົນຊັ້ນກຳມະກອນ ທີ່ຫ້າວຫັນໄດ້ນຳຫນ້າຢູ່ໃນການຕໍ່ສູ້ຂອງມວນຫມູ່ມະຫາຊົນແລະອັນນີ້ກໍແມ່ນຍ້ອນຖານະອັນເປັນກຸນແຈຂອງພວກເຂົາຢູ່ໃນ ຊີວິດເສດຖະກິດ ແລະ ສັງຄົມຂອງປະເທດ. ເບິ່ງ ໃນດ້ານຈຳນວນແລ້ວ ກໍຫາກຕ່ຳຫລູດຊົນຊັ້ນຊາວນາຢູ່ແຕ່ໃນອີກດ້ານຫນຶ່ງ ພວກເຂົາຫາກມີການຈັດຕັ້ງດີ ມີການສຶກສາດີ ມີບົດຮຽນອັນອຸດົມຮັ່ງມີຈາກພຶດຕິກຳປະຕິວັດ ແລະ ມີພັກບອນເຊວິກເຊິ່ງຜ່ານການຫລໍ່ຫລອມໃນບັ້ນຮົບຊົນຊັ້ນທີ່ມີ ວ.ອີ. ເລນິນ ນຳຫນ້າ.

ມະຫາປະຕິວັດສັງຄົມນິຍົມເດືອນຕຸລາເຊິ່ງເກີດຂຶ້ນ ໃນເດືອນຕຸລາ ປີ ໑໙໑໗ ຢູ່ລັດເຊຍນັ້ນໄດ້ເຈາະຮູບ່ອງທຳອິດຢູ່ໃນລະບົບທຶນນິຍົມແຫ່ງໂລກ. ປະເທດກວ້າງໃຫຍ່ໄພສານປະເທດຫນຶ່ງທີ່ມີຜືນແຜ່ນດິນກວ້າງກວມ ຂະຫນາດຫນຶ່ງສ່ວນຫົກຂອງແຜ່ນດິນໃນໂລກ ແລະ ມີປະຊາຊົນອາໄສຢູ່ປະມານ ໑0% ຂອງປະຊາກອນໂລກ ໄດ້ແຍກຕົວຂາດອອກຈາກລະ-ບົບດັ່ງກ່າວ. ຍຸກສະໄຫມໃຫມ່ຍຸກຫນຶ່ງ ແຫ່ງປະຫວັດ ສາດໄດ້ໄຂຂຶ້ນນັ້ນຄືຍຸກສະໄຫມຂ້າມຜ່ານຈາກລະບອບທຶນນິຍົມໄປສູ່ລະບອບສັງຄົມນິຍົມ. ຢູ່ຄຽງຂ້າງກັບລະບອບທຶນນິຍົມແລະເຂດແດນອັນກວ້າງໃຫຍ່ແຫ່ງການພົວພັນແບບກ່ອນທຶນນິຍົມ-ນັ້ນລະບົບສັງຄົມນິຍົມໄດ້ກໍ່ຕົວຂຶ້ນຢ່າງເຂັ້ມແຂງ ແລະ ດຳ

ເປັນການສູ້ຮົບຕ້ານກັບລະບອບເກົ່າ ຢ່າງບໍ່ຢຸດຢ່ອນ.

ພ້ອງພວກປະຕິວັດເຊິ່ງມະຫາປະຕິວັດເດືອນຕຸລາ ຍູ້ສົ່ງຂຶ້ນຢູ່ໃນຫລາຍໆປະເທດໃນໂລກໄດ້ກ້າວມາຮອດຂັ້ນການປະກາດສ້າງຕັ້ງອຳນາດຂອງຊາວກຳມະຊີບ ຢູ່ໃນຫລາຍໆ ປະເທດໃນເອີຣົບ, ຢ່າງໃດກໍຕາມ ບັນດາສາທາລະນະລັດໂຊວຽດ ເຊິ່ງໄດ້ຮັບການສະຖາປະນາຂຶ້ນຢູ່ໃນເອີຣົບນັ້ນ ກໍບໍ່ສາມາດສູ້ທົນສູ້ຮົບແບບບໍ່ສະເໝີພາບກັບຊຸມຊົ້ມນາຍທຶນທ້ອງຖິ່ນ ແລະ ຕ່າງດາວໄດ້. ການປະຕິວັດປະສົບໄຊຊະນະ ຢູ່ໃນປະເທດອາຊີ ທີ່ໃກ້ຄຽງກັບລັດເຊຍ ແຕ່ ສອງປະເທດເທົ່ານັ້ນ. ການປະຕິວັດຕ້ານລັດທິຈັກກະພັດນິຍົມ, ຕ້ານລະບອບສັກດີນາໄດ້ດຳເນີນເກີດຂຶ້ນຢູ່ໃນມົງໂກລີ ຫລັງຈາກນັ້ນລະບອບປະຊາທິປະໄຕກໍໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃນປະເທດນີ້ ເມື່ອປີ ໑໙໒໑. ການປະຕິວັດປົດປ່ອຍຊາດກໍໄດ້ຮັບ ໄຊຊະນະຢູ່ຕູວາ ແລະ ຢູ່ທີ່ນັ້ນກໍໄດ້ມີການປະກາດສ້າງຕັ້ງ ສາທາລະນະລັດປະຊາຊົນຂຶ້ນໃນປີ ໑໙໒໑. ແຕ່ໃນສະໄຫມນັ້ນບັນຫາການກໍ່ສ້າງລະບອບສັງຄົມນິຍົມຢູ່ໃນປະເທດເຫລົ່ານີ້ຍັງບໍ່ເຄີຍມີໃຜເວົ້າຮອດເທື່ອ.

ໃນໄລຍະສາມສິບປີລຸນຫລັງການປະຕິວັດເດືອນ ຕຸລາຜ່ານມານັ້ນ ລະບົບສັງຄົມນິຍົມມີຕົວແທນຢູ່ແຕ່ພຽງ ປະເທດດຽວເທົ່ານັ້ນ ຄືສະຫະພາບໂຊວຽດ. ປະເທດນີ້ຈຳຕ້ອງ ເດີນໄປຕາມເສັ້ນທາງການປ່ຽນແປງແບບປະຕິວັດຢ່າງໂດດດ່ຽວຢູ່ເຫິງນານ ທັງຊຸກດັນການບຸກໂຈມຕີຂອງຝ່າຍໂລກເກົ່າ ທີ່

ປະກາດ ສົງຄາມກັບຕົນ. ຢ່າງໃດກໍດີ ປະຊາຊົນແຫ່ງສະຫະພາບໂຊວຽດກໍຫາກຮູ້ຈັກປະເຊີນໜ້າກັບການທົດສອບອັນໜັກໜ່ວງ. ທີ່ພວກເຂົາຈຳຕ້ອງສູ້ທົນ, ພວກເຂົາໄດ້ເຮັດໃຫ້ເລກົນທຸກຢ່າງຂອງພວກສັດຕູພາຍໃນ ແລະ ພາຍນອກລົ້ມແຫລວລົງ ແລະ ຍອມຄວາມຊ່ວຍເຫລືອສົມທົບຈາກຊາວຜູ້ອອກແຮງງານປະເທດອື່ນໆ ພວກເຂົາໄດ້ກໍ່ຕັ້ງສັງຄົມແບບໃໝ່ ແບບໜຶ່ງອັນ, ປ່ຽນຮູບໂສມຂອງປະເທດພວກຕົນໃຫ້ເປັນກຳແພງອັນມີພະລັງຂອງຂະບວນປະຕິວັດໂລກ.

ຈັ່ງຊັ້ນ ມີປະເທດໃດແດ່ ທີ່ຕ້ອງເດີນຕາມແບບຢ່າງ - ຂອງປະເທດລັດເຊຍ ? ຄຳຕອບສຳລັບຄຳຖາມຂັ້ນຂຶ້ນກັບສະພາບການທາງປະຫວັດສາດຫລາຍອັນ ຂຶ້ນກັບສະພາບການຕົວຈິງຢູ່ໃນຂົງເຂດແນວຮົບຕ່າງໆຂອງການຕໍ່ສູ້ຕ້ານກັບທຶນ ແຫ່ງໂລກ. ປະຈຸບັນຄຳຕອບອັນນີ້ເປັນທີ່ຮູ້ກັນດີແລ້ວ. ໃນບັ້ນທ້າຍແລະຫລັງຈາກສົງຄາມໂລກຄັ້ງທີ່ສອງມານີ້ ແຮງລະເບີດປະຕິວັດໄດ້ແຕກພຸ່ງອອກຢູ່ໃນຫລາຍໆປະເທດທີ່ເອີຣົບ ແລະອາຊີ. ແຕ່ເປັນຫຍັງມັນຈຶ່ງເກີດຂຶ້ນຢູ່ໃນປະເທດເຫລົ່ານີ້ ?

ຖ້າພວກເຮົາພິຈາລະນາເບິ່ງປະເທດຕ່າງໆ ເຊິ່ງ ໃນນັ້ນການປະຕິວັດປະສົບໄຊຊະນະ ພວກເຮົາກໍຈະເຫັນວ່າ ບັນດາປະເທດເຫລົ່ານີ້ມີລັກສະນະຮ່ວມກັນຫລາຍອັນ.

ທຳອິດນີ້ ຈຳເປັນຕ້ອງເນັ້ນຍ້ຳກ່ອນວ່າ ນອກຈາກເຢຍລະມັນ ແລະ ເຊັກໂກສະໂລວາກີແລ້ວ ບັນດາປະເທດເຫລົ່ານີ້ໃນສ່ວນຫລວງຫລາຍເປັນປະເທດກຳລັງພັດທະນາທີ່ມີລະດັບ

ຂະຫຍາຍຕົວພໍປານກາງນັ້ນ ເປັນປະເທດທີ່ການຜະລິດກະສິກຳຄອບງຳຢູ່ ແລະ ເປັນບ່ອນທີ່ຮອງຮອຍສັກດິນາຍັງຄົງຝັງຮາກໄວ້ຢ່າງແໜ້ນແກ່ນຢູ່ ອານບານີ ເປັນປະເທດເຄິ່ງຫົວເມືອງຂຶ້ນປະເທດດຽວທີ່ການພົວພັນແບບທຶນນິຍົມຍັງຢູ່ໃນລະດັບຂະຫຍາຍຕົວຕ່ຳ ແລະ ເປັນບ່ອນທີ່ຂາດເຂີນຊາວກຳມາຊີບອຸດສາຫະກຳຫລາຍທີ່ສຸດ. ປະເທດຈີນ ເຊິ່ງເປັນ ປະເທດທີ່ມີປະຊາຊົນພົນລະເມືອງຫລາຍກວ່າໝູ່ໃນໂລກກໍເປັນປະເທດທີ່ຫລ້າຫລັງຍິ່ງກວ່າປະເທດໃດໆໝົດໃນດ້ານ ເສດຖະກິດ.

ຢູ່ໃນປະເທດເຫລົ່ານີ້, ທຶນຕ່າງປະເທດມີຖານະຊົງອິດທິພົນຫລາຍຢ່າງ, ພົນສະທ້ອນຂອງມັນບໍ່ແມ່ນພຽງແຕ່ ແມ່ນການໃຫ້ກຳລັງແຮງເພີ່ມເຕີມແກ່ການຂູດຮີດຊາວຜູ້ອອກແຮງງານທີ່ນັ້ນ ແຕ່ມັນຍັງໄດ້ກໍ່ໃຫ້ມີຄວາມຂັດແຍ່ງບາງອັນ ລະຫວ່າງນາຍທຶນທ້ອງຖິ່ນກັບນາຍທຶນຕ່າງດ້າວ. ເວົ້າລວມແລ້ວລັດຈັກກະພັດທັງຫລາຍໄດ້ຖ່ວງດຶງການຂະຫຍາຍຕົວຂອງປະເທດບໍລິວານຕ່າງໆໄວ້ໂດຍພະຍາຍາມ ຮັກສາມັນໄວ້ໃນຖານະເປັນພື້ນແຜ່ນດິນເຕີມຕໍ່ ແລະເປັນບໍ່ວັດຖຸດິບຂອງຕົນ.

ສະພາບຫລ້າຫລັງສະເພາະຕົວຂອງການກະສິກຳຢູ່ໃນ-ປະເທດເຫລົ່ານີ້ ຄຽງຄູ່ໄປກັບການຂູດຮີດຢ່າງປ່າເຖື່ອນ ຢູ່ໃນຊົນນະບົດ ມີແຕ່ເຮັດໃຫ້ຊົນຊັ້ນຊາວນາຫັນໄປຫາການປະຕິວັດ ແລະ ສ້າງເງື່ອນໄຂແປງທາງໃຫ້ແກ່ພຶດຕິກຳຕ່າງ ໆ ຮ່ວມກັນກັບຊົນຊັ້ນກຳມະກອນ.

ການທີ່ມີສະຖານະການເຄັ່ງຕຶງທາງດ້ານການເມືອງອັນ
ຍືນຢູ່ກັບການຄອບງຳຂອງລະບອບປະຕິການທັງຫລາຍ ຕະ
ຫລອດຮອດການເຂົ້າຮ່ວມໃນສົງຄາມຈັກກະພັດຕ່າງໆນັ້ນລ້ວນ
ແຕ່ແມ່ນລັກສະນະຮ່ວມກັນຢ່າງໜຶ່ງ ຂອງບັນດາປະເທດເຫຼົ່າ
ນີ້, ໃນປະເທດເຫລົ່ານີ້ ການຕໍ່ສູ້ຕ້ານລັດທິຟາຊິດ ໄດ້ມີ ລັກ
ສະນະແຜ່ກວ້າງອອກພາຍໃຕ້ຮູບການແຫລມຄົມຫລາຍແບບ .
ໂດຍປ່ຽນຮູບມາເປັນປັດໃຈສຳຄັນອັນໜຶ່ງຂອງຊີວິດແຫ່ງຊາດ
ການຕໍ່ສູ້ອັນນີ້ກໍ່ມີແຕ່ລົມທົບເປັນອັນໜຶ່ງອັນດຽວກັບການ ຕໍ່ສູ້
ເຊິ່ງ ປະຊາຊົນໂຊວຽດດຳເນີນຢູ່ ເພື່ອຕ້ານກັບການຮຸກຮານ
ຂອງພວກຟາຊິດ ໃນສະໄໝມະຫາສົງຄາມປ້ອງກັນ ປະຖູພູມ
( ໑໙໔໑-໑໙໔໕ ).

ໃນໄລຍະຕໍ່ສູ້ຕ້ານພວກຟາຊິດເພື່ອປົດປ່ອຍຊາດແລະຂະ
ມະທີ່ຂະບວນມະຫາຊົນແຂງແຮງຂຶ້ນເທື່ອລະເລັກລະນ້ອຍ ນັ້ນ
ຊົນຊັ້ນນາຍທຶນ ແລະ ພວກເຈົ້າທີ່ດິນພ້ອມດ້ວຍພັກການເມືອງ
ຂອງພວກເຂົາກໍ່ເຊັ່ນດຽວກັນ ໄດ້ສູນເສຍອຳນາດ ໃນການ
ກວດກາຊີວິດການເມືອງ ດັ່ງນັ້ນຈຶ່ງເກີດມີສະພາວະການປະຕິ
ວັດ. ຍອນແນວທາງຍຸດທະສາດແລະຍຸດໂທບາຍອັນຖືກ ຕ້ອງ
ເຊິ່ງພັກກອມມູນິດນຳມາໃຊ້ ສະພາວະການອັນນັ້ນຈຶ່ງປ່ຽນຄາບ
ມາເປັນການປະຕິວັດ.

ກ່ຽວກັບເລື່ອງນີ້ ສົມຄວນເນັ້ນຍ້ຳເຖິງຄວາມ ສຳຄັນ
ເປັນພິເສດທີ່ຕິດພັນຢູ່ກັບການເຄື່ອນໄຫວຕ່າງໆຂອງພັກກອມມູ
ນິດທັງຫລາຍ. ສາກົນກອມມູນິດເຊິ່ງໄດ້ຮັບການສ້າງຕັ້ງ ຂຶ້ນ

ເມື່ອປີ ໑໙໑໙ ນັ້ນໄດ້ມີສ່ວນກໍ່ສ້າງແລະຫລໍ່ຫລອມພັກກອມມູນິດສູ້ຣົບຢູ່ໃນຫລາຍປະເທດຂອງເອີຣົບ ອາຊີ ແລະ ທະວີບອື່ນໆ ມີສ່ວນເສີມສ້າງຄວາມຫມັ້ນຫນຽວໃຫ້ແກ່ສາຍພົວພັນຂອງພັກກັບມວນຫມູ່ມະຫາຊົນ. ບັນດາພັກເຫລົ່ານີ້ໄດ້ມີສ່ວນປະກອບຢ່າງບໍ່ມີ້ອນໃດຫຽມເທົ່າຢູ່ໃນການສ້າງເສີມການ ຕໍ່ສູ້ເພື່ອປະຊາທິປະໄຕ ແລະ ລະບອບສັງຄົມນິຍົມ, ເພື່ອເສີລີພາບ ແລະ ເອກະລາດແຫ່ງຊາດ.

ຄວາມສຳເລັດທັງຫລາຍຂອງຂະບວນປະຕິວັດເປັນ ສິ່ງຕິດພັນຢ່າງແຍກອອກຈາກກັນບໍ່ໄດ້ກັບການຕໍ່ສູ້ອັນມີໄຊ ຂອງສະຫະພາບ ເຊວຽດ ຕ້ານກັບລັດທິຟາຊິດໃນສະໄຫມສົງຄາມໂລກຄັ້ງທີສອງ ( ໑໙໓໙-໑໙໔໕ ) ຕະຫລອດຮອດ ການດັດປ່ຽນການຊັ່ງຊາກກຳລັງໃນສາກົນ ແບບໃຫ້ທ່າດີແກ່ ລະບອບປະຊາທິປະໄຕ ແລະ ລະບອບສັງຄົມນິຍົມ, ການ ດັດປ່ຽນດັ່ງກ່າວເກີດຂຶ້ນພາຍຫລັງການຕໍ່ສູ້ຄັ້ງນີ້.

ໃນໄລຍະປະຕິບັດການນັ້ນ ຢູ່ໃນຫລາຍໆປະເທດ ທາງເອີຣົບ ພາກກາງ ແລະ ຕາເວັນອອກໃຕ້ກໍ່ໄດ້ມີການ ທັບມ້າງກົງຈັກ ທະຫານແລະການເມືອງທີ່ທຳການປ້ອງກັນ ອຳນາດຂອງພວກຊົນຊັ້ນຂູດຣີດ, ສິ່ງດັ່ງກ່າວອຳນວຍຄວາມສະດວກໃຫ້ແກ່ພາລະກິດຂອງກຳລັງປະຕິວັດຢ່າງຫລວງຫລາຍ. ຍິ່ງໄປກວ່ານັ້ນການທີ່ກອງທັບ ໂຊວຽດໄດ້ທຳລາຍກວາດ ລ້າງກຸ່ມກອງທະຫານຟາຊິດ ສ່ວນຫລວງຫລາຍ ແລະປົດປ່ອຍດິນແດນໃຫ້ແກ່ຫລາຍລັດຫລາຍປະເທດໃນເອີຣົບນັ້ນກໍ່ແມ່ນການ

ຊ່ວຍເຫລືອກຳລັງແຮງປະຕິວັດເຫລົ່ານີ້ເຊັ່ນດຽວກັນ.

ເປັນທີ່ເຂົ້າໃຈກັນວ່າ ການເຄື່ອນໄຫວຂອງກຳລັງແຮງປະຕິວັດພາຍໃນ ມີຄວາມສຳຄັນ ຂັ້ນຕັດສິນສຳລັບໄຊຊະນະຂອງການປະຕິວັດ. ການຜັນປ່ຽນແບບປະຕິວັດເຊິ່ງໄດ້ - ເຈາະຣູປ່ອງໃຫມ່ຢູ່ໃນແນວຫນ້າຂອງລະບອບຈັກກະພັດນິຍົມດຳເນີນເກີດຂຶ້ນ ລະຫວ່າງປີ ໑໙໔໔ ຫາ ໑໙໔໕ ຢູ່ ໂປໂລຍ ເຊັກໂກສະໂລວາກີ ສາທາລະນະລັດປະຊາທິປະໄຕເຢຍລະມັນ, ບູນກາຣີ, ຮົງກາຣີ, ຣູມານີ, ຢູໂກສະລາວີ ອານບານີ, ຫວຽດນາມ ເກົາຫລີເຫນືອ ແລະຈີນ.

ນີ້ແມ່ນເສົາຫລັກຕົ້ນຕໍຂອງການຜັນປ່ຽນແບບປະຕິວັດ ຢູ່ໃນປະເທດເຫລົ່ານີ້, ມັນເຮັດໃຫ້ຂອບເຂດຊາຍແດນ ຂອງລະບົບສັງຄົມນິຍົມແຫ່ງໂລກແຜ່ກວ້າງອອກຢ່າງຫລວງຫລາຍ.

ລະຫວ່າງປີ ໑໙໔໔ ຫາ ໑໙໔໗ ພວກຍຶດຄອງ ຮິດແລ ຖືກກອງທະຫານໂຊວຽດໂດຍການຮ່ວມມືຂອງກອງທັບ ໂປໂລຍ ຂັບໄລ່ອອກຈາກດິນແດນຂອງປະເທດ ໂປໂລຍ. ລັດຖະບານປະຊາຊົນຄະນະກຳການປົດປ່ອຍຊາດແຫ່ງ ໂປໂລຍ ໄດ້ຮັບການສ້າງຕັ້ງຂຶ້ນບົນດິນແດນອິດສະຫລະ. ພັກກຳມະກອນ ແລະ ອົງການກຳມະບານ, ພັກຊາວນາ ແລະ ອົງການຈັດຕັ້ງກ້າວຫນ້າອື່ນໆ ໄດ້ຮວມກັນກໍ່ສ້າງແນວໂຮມ ອັນຫນຶ່ງຊຶ່ງຕໍ່ມາໄດ້ກາຍເປັນຜູ້ສ້າງຕັ້ງອົງການອື່ນໆແຫ່ງ ອຳນາດລັດໃຫມ່. ບັນດາອົງການຈັດຕັ້ງເຫລົ່ານີ້ໄດ້ປະດິດສ້າງກອງທັບປະຊາຊົນ ອົງການປະກັນໄພແຫ່ງລັດແລະຕຳຫລວດ

ຂຶ້ນ. ພາກສ່ວນຂອງປະຊາຊົນໄດ້ກໍ່ເກີດຂຶ້ນຢູ່ໃນອຸດສາຫະກຳ ແລະ ການກວດກາໂດຍຄະນະກຳມະການໂຮງຈັກໂຮງ ງານ ເຊິ່ງໄດ້ຮັບເລືອກຈາກກຳມະກອນ ກໍໄດ້ຮັບການກໍ່ຕັ້ງຂຶ້ນຢູ່ໃນໂຮງຈັກໂຮງງານທຸກໆແຫ່ງ. ໃນຕົ້ນປີ ໑໙໔໖ ຈີນຊັ້ນກຳມະກອນກໍປະສົບຄວາມສຳເລັດໃນການໂອນເອົາອຸດສາຫະກຳຂະໜາດໃຫຍ່ແລະກາງມາເປັນຂອງຊາດ, ອີກຄັ້ງໜຶ່ງສ່ວນໄດ້ທຳລາຍຖານະທາງເສດຖະກິດຂອງຈີນຊັ້ນນາຍທຶນ.ກ່ອນໜ້ານັ້ນບໍ່ດົນ, ຄືແຕ່ລະດູໃບໄມ້ຫລົ່ນປີ ໑໙໔໔ເປັນຕົ້ນມາ ທົ່ວທັງປະເທດໄດ້ດຳເນີນບາດກ້າວເຂົ້າສູ່ການປະຕິຮູບທີ່ດິນ.ຕໍ່ຈາກນັ້ນມາ ຈີນຊັ້ນເຈົ້າທີ່ດິນກໍໝົດສຽງໄປ ແລະ ມີຄອບຄົວຊາວນາຫລາຍກວ່າໜຶ່ງລ້ານຄອບຄົວໄດ້ພົບວ່າຕົນເອງມີດິນດອນ. ໃນຂະນະຕໍ່ສູ້ເພື່ອເອົາຊະນະການສູ້ຍັນຂອງພວກນາຍທຶນເຊິ່ງບາງຄັ້ງກໍມາໃນຮູບການຮຸນແຮງ, ຈີນຊັ້ນກຳມະກອນໄດ້ເຕົ້າໂຮມຖັນແຖວຂອງພວກຕົນເຂົ້າກັນ, ປັບປຸງພັນທະພາບກັບຈີນຊັ້ນຊາວນາ ແລະ ຮູ້ຈັກວາງຕົວເອງ ເປັນຜູ້ນຳທີ່ແທ້ຈິງຂອງສັງຄົມ. ໃນປີ ໑໙໔໙ ປະເທດໂປໂລຍກໍກ້າວເຂົ້າສູ່ ເສັ້ນທາງແຫ່ງການກໍ່ສ້າງລະບອບສັງຄົມນິຍົມ.

ໃນເດືອນກັນຍາປີ ໑໙໔໔, ທີ່ປະເທດບຸນກາຣີ ການລຸກຮືຂອງມະຫາຊົນໄດ້ລະເບີດຂຶ້ນ ແລະໄດ້ໂຄ່ນລົ້ມ ລັດຖະບານ ຟາຊິດລົງ. ຊາວກຳມະກອນຜູ້ໄດ້ຮັບການອູມຊູ ຍູ້ໜູນຈາກໜ່ວຍກອງຫລອນ ແລະ ກອງທະຫານ ເປັນກຳລັງແຮງຕົ້ນຕໍ ຂອງການລຸກຮື. ຕັ້ງແຕ່ທຳອິດພຸ້ນແລ້ວ ການປະຕິວັດ

ເຊິ່ງຕາມທາດແທ້ຂອງມັນເອງກໍໄດ້ມີລັກສະນະສັງຄົມນິຍົມ . ໂດຍອີງໃສ່ຂໍ້ຮັບປະກັນເຫຼົ່ານີ້: ມີຄວາມສາມັກຄີ ເອກະພາບ ເກືອບສົມບູນຂອງຊົນຊັ້ນກຳມະກອນ, ມີບົດບາດ ນຳພາຢູ່ພາຍໃນແນວໂຮມຮັກຊາດ ເຊິ່ງໄດ້ກຳອຳນາດ ແລະສະພາບອອນເພຍຂອງຊົນຊັ້ນນາຍທຶນໄທຍ ແລະ ສະພາບທີ່ ປາສະຈາກເຈົ້າທີ່ດິນ. ຫລັງຈາກການໂອນເອົາອຸດສາຫະກຳ - ໄທຍ ແລະການທັງໝົດເປັນຂອງຊາດໃນທ້າຍປີ ໑໙໔໗ແລ້ວ ກໍໄດ້ມີການສ້າງຕັ້ງພາກສ່ວນປະຊາຊົນຂຶ້ນຢູ່ໃນລະບົບເສດຖະກິດ, ຕໍ່ມາມັນໄດ້ກາຍເປັນສິ່ງ ຄອບງຳຢູ່ເໜືອໝູ່ ພາຍໃນເສດຖະກິດແຫ່ງຊາດ. ຄຽງຄູ່ກັນນີ້ ເພິ່ນຍັງໄດ້ດຳເນີນບາດກ້າວສ້າງເບົ້າຫລໍ່ໃໝ່ແບບສັງຄົມນິຍົມໃຫ້ແກ່ກະສິກຳ, ການຫັນປ່ຽນເປັນສະຫະກອນເທື່ອລະຂັ້ນຢູ່ໃນໝູ່ຊາວນາ,ມັນແມ່ນບາດກ້າວເດີນທີ່ສຳເລັດລົງໃນທ້າຍຊຸມປີ ໕໐.

ການທີ່ກຳລັງແຮງຕົ້ນຕໍຂອງກອງທະຫານຟາຊິດ ຖືກທຳລາຍມ້າງມຸ່ນລົງຢ່າງກະທັນຫັນໂດຍກອງທັບໂຊວຽດນັ້ນມັນໄດ້ອຳນວຍໃຫ້ກອງທັບປົດປ່ອຍປະຊາຊົນ ຂານບານີ ທີ່ສ້າງ ຕັ້ງຂຶ້ນໃນເດືອນກໍລະກົດປີ ໑໙໔໓ ປົດປ່ອຍປະເທດຊາດທັງໝົດອອກຈາກມືພວກຍຶດຄອງໃນລະຫວ່າງທ້າຍເດືອນພະຈິກ ປີ ໑໙໔໔. ອຳນາດການປົກຄອງຂອງແນວໂຮມປົດປ່ອຍຊາດໄດ້ຮັບການສະຖາປະນາຂຶ້ນ, ມັນແມ່ນຜະເດັດການປະຕິວັດແບບປະຊາທິປະໄຕຂອງຊົນຊັ້ນກຳມະກອນ ແລະ ຊົນຊັ້ນຊາວນາ. ໃນໄລຍະຕໍ່ສູ້ເພື່ອເອົາຊະນະ ການຕ້ານທານຂອງພວກຝືນປະ

ຕິວັດ, ອຳນາດການປົກຄອງໃຫມ່ໄດ້ຍຶດເອົາດິນດອນ ຂອງ ພວກຊາວນາຮັ່ງມີ ( ກູລັກ ) ໃນປີ ໑໙໔໖ ສະພາ ຣາງ ລັດຖະທຳມະນູນໄດ້ປະກາດໃຫ້ ອານບານີ ເປັນສາທາ ລະ ນະລັດປະຊາຊົນ; ເມື່ອໃນຂັ້ນຕໍ່ມາ ຈະໄດ້ຮັບຮອງເອົາລັດ ຖະທຳມະນູນທີ່ໄດ້ກຳນົດລະບຽບການປ່ຽນແປງຂັ້ນຮາກຖານ ທາງດ້ານການເມືອງ ແລະ ສັງຄົມໃຫ້ເປັນຫມາກຜົນຕົວຈິງ ພາຍຫລັງການປະຕິວັດປະຊາທິປະໄຕປະຊາຊົນ.

ວັນທີ ໒໓ ເດືອນສິງຫາ ປີ ໑໙໔໔ ແມ່ນວັນທີ່ຊາວ ຜູ້ ອອກແຮງງານ ຣູມານີ ລະເບີດ ການລຸກຮືປະກອບອາວຸດ ແລະ ໂຄ່ນລົ້ມພະເດັດການທະຫານຟາຊິດລົງ ໂດຍທີ່ພວກ-ເຂົາໄດ້ສວຍໂອກາດຫມູນໃຊ້ສະຖານະການອັນໃຫ້ທ່າດີຍອມ ໃຊ້ຊະນະຕ່າງໆຂອງກອງທັບໂຊວຽດ, ວັນນັ້ນແມ່ນບັ້ນເລີ່ມ ຕົ້ນຂອງການປະຕິວັດຢູ່ ຣູມານີ. ຄະນະກຳມະການ ແນວ ໂຮມເອກະພາບກຳມະກອນ ໄດ້ຂັບໄລ່ພວກຟາຊິດອອກຈາກ ອຳນາດການປົກຄອງທ້ອງຖິ່ນ ແລະ ສ້າງຕັ້ງການ ກວດກາ ການຜະລິດຂອງກຳມະກອນຂັ້ນທັງຊ່ວຍວຽກງານເພື່ອ ການ ປະຕິຮູບທີ່ດິນ. ໃນເດືອນມີນາ ປີ ໑໙໔໕ ລັດຖະບານ ປະ ຊາທິປະໄຕກໍໄດ້ກໍ່ຕັ້ງຂຶ້ນ, ລັດຖະບານນີ້ກຳເອົາອຸດສາຫະ-ກຳມາໄວ້ພາຍໃຕ້ການກວດກາຂອງຕົນ ແລະເສີມຂະຫຍາຍ ສິດທິຂອງຊາວຜູ້ອອກແຮງງານ. ເດືອນພະຈິກ ປີ ໑໙໔໗ ເປັນເດືອນທີ່ເພີ່ນສາມາດເຜີຍແຜ່ວິນາສະກຳຜົນປະຕິວັດ - ຂອງຊົນຊັ້ນນາຍທຶນ, ຕົວແທນຜູ້ສຸດທ້າຍຂອງພວກເຂົາ ຖືກ

ອັບ ຫ່າງອອກຈາກລັດຖະບານ. ວັນທີ ໒໐ ທັນວາ ແມ່ນ
ວັນດັບສູນລະບອບລາຊາທິປະໄຕ ແລະ ວັນສະຖາປະນາສາ
ທາລະນະລັດປະຊາຊົນ ຮູມານີ້ ອັນອານວຍໃຫ້ຊົນຊັ້ນກຳມະ
ກອນ ແລະ ພັນທະມິດຂອງພວກເຂົາເລີ່ມເຂົ້າສູ່ການແກ້ໄຂ
ພາລະກິດສັງຄົມນິຍົມ.

ໃນເດືອນທັນວາ ປີ ໑໙໗໕ ລັດຖະບານຊົ່ວຄາວ ແຫ່ງ
ຊາດຢູ່ ຮົງກາຣີ ກໍໄດ້ຮັບການປະກອບສ້າງຂຶ້ນ. ອົງການຈັດ
ຕັ້ງຂອງພວກເຟາຊິດ ຖືກຍຸບຖິ້ມໄປແລ້ວກອງຕຳຫຼວດ ແລະ
ກອງທັບໃໝ່ ກໍໄດ້ຮັບການສ້າງຕັ້ງຂຶ້ນ, ຍິ່ງໄປກວ່ານີ້ເພີ່ມ
ຍັງໄດ້ຈັດຕັ້ງຄະນະກຳມະການໂຮງຈັກໂຮງງານຂຶ້ນ ທັງນີ້
ເພື່ອກວດກາການດຳເນີນກິດຈະການຢູ່ໃນໂຮງຈັກໂຮງງານ.
ໄດ້ມີການປະກາດໃຊ້ ດຳລັດສະບັບໜຶ່ງກ່ຽວກັບການ ປະຕິ
ຮູບທີ່ດິນ, ດຳລັດດັ່ງກ່າວແມ່ນໃສ່ດັບສູນເຈົ້າກຳມະສິດ ທີ່ດິນ
ໃຫຍ່ ແລະ ການໂອນສົ່ງທີ່ດິນໃຫ້ແກ່ຊາວນາ. ວັນທີ ໒໑
ເດືອນມັງກອນ ປີ ໑໙໗໖ ແມ່ນວັນປະກາດການສ້າງຕັ້ງສາ
ທາລະນະລັດ ຢູ່ຮົງກາຣີ. ດ້ວຍການສະໜັບສະໜູນ ຈາກ
ນັກສັງຄົມປະຊາທິປະໄຕສ່ວນຫຼວງຫຼາຍ ແລະ ບັນດາອົງ
ການກຳມະບານຕ່າງໆ ນັກກອມມູນິດກໍສາມາດໂອນເອົາອຸດ
ສາຫະກຳໜັກ ມາເປັນຂອງລັດ ແລະ ຕໍ່ມາກໍໄດ້ອອກ ກົດ
ໝາຍກ່ຽວກັບແຜນການສາມປີສຳລັບການຟື້ນຟູເສດຖະກິດ.
ໃນໄລຍະທີ່ມີການພະຍາຍາມຢາກເຮັດໃຫ້ແຜນການອັນນີ້ -
ເກີດເປັນຈິງນັ້ນ ເຫັນໄດ້ວ່າ ລະບອບປະຊາທິປະໄຕປະຊາ

ຈີນ ໄດ້ເຂັ້ມແຂງໜັກແໜ້ນຂຶ້ນ. ໃນເດືອນສິງຫາປີ໑໙໔໙ ຮັງກາຣີ ກໍສະຖາປະນາຂຶ້ນເປັນສາທາລະນະລັດປະຊາຊົນ, ໄດ້ມີການຮັບຮອງເອົາລັດຖະທຳມະນູນໃໝ່ ທີ່ໄດ້ກຳນົດລະບຽບການປ່ຽນແປງຂັ້ນຮາກຖານທາງດ້ານສັງຄົມ-ເສດຖະ-ກິດ.

ໄຊຊະນະຂອງກອງທັບໂຊວຽດ ໄດ້ອຳນວຍສ້າງເງື່ອນໄຂອັນໃຫ້ທ່າດີແກ່ໄຊຊະນະຂອງກຳລັງແຮງປະຊາທິປະໄຕ-ໃນເຊັກໂກສະໂລວາກີ ຄືກັນ. ໃນເດືອນ ເມສາປີ ໑໙໔໕ ໄດ້ມີການສ້າງຕັ້ງລັດຖະບານຊຸດທຳອິດຂອງແນວໂຮມ ແຫ່ງຊາດ, ຄຽງຂ້າງກັບນັກກອມມູນິດ ແລະ ນັກສັງຄົມປະຊາທິປະໄຕແລ້ວ ຢູ່ໃນລັດຖະບານຊຸດນີ້ຍັງມີຕົວແທນຂອງພັກນາຍທຶນເຂົ້າຮ່ວມນຳອີກ. ອົງການຕ່າງໆ ຂອງອຳນາດການປົກຄອງປະຕິວັດພາຍໃຕ້ຮູບຄະນະກຳມະການແຫ່ງຊາດ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃນທົ່ວປະເທດ. ຫລັງຈາກການເລືອກຕັ້ງໃນເດືອນພຶດສະພາປີ ໑໙໔໖ ແລ້ວ ນັກກອມມູນິດໄດ້ ກາຍເປັນຝ່າຍສຽງສ່ວນຫລາຍຢູ່ໃນສະພາ. ລະບອບປະຊາທິປະໄຕປະຊາຊົນໄດ້ຕັ້ງຕົວຢູ່ໃນປະເທດທີ່ຮັບປະກັນການແຜ່ ຂະຫຍາຍສິດທິໃນດ້ານເສດຖະກິດ ສັງຄົມຂອງຊາວຜູ້ອອກແຮງງານ ແລະ ການດຶງດູດເອົາພວກນີ້ເຂົ້າມາຮ່ວມບໍລິຫານຄຸ້ມຄອງລັດ. ການຕໍ່ສູ້ຂອງຊົນຊັ້ນກຳມະກອນເພື່ອໃຫ້ການປະຕິວັດປະຊາທິປະໄຕປະຊາຊົນປ່ຽນຮູບມາເປັນການປະຕິວັດສັງຄົມນິຍົມນັ້ນ ໄດ້ປະສົບກັບການຕ້ານທານອັນດຸເດືອດຈາກຊົນ

2*

ຊັ້ນນາຍທຶນ ເຊັກໂກສະໂລວາກີ ເຊິ່ງເປັນຜູ້ມີຖານະ ເຂັ້ມແຂງກວ່າພວກຊົນຊັ້ນນາຍທຶນສ່ວນຫລວງຫລາຍໃນ ປະເທດອື່ນໆທາງເອີຣົບຕາເວັນອອກ. ໃນເດືອນກຸມພາ ໑໙໔໘ຊົນຊັ້ນນາຍທຶນ ໄດ້ພະຍາຍາມທາລັດຖະທະຫານ ຟື້ນປະຕິວັດ. ແຕ່ຄວາມພະຍາຍາມອັນນັ້ນກັບປະສົບກັບຄວາມພ່າຍແພ້ ຍອມການຕ້ານທານຂອງມວນຫມູ່ມະຫາຊົນເອງ. ຊົນຊັ້ນກຳມະ-ກອນ ສົມທົບກັບຊົນຊັ້ນຊາວນາຜູ້ອອກແຮງງານໄດ້ສະຖາປະນາອຳນາດພະເດັດການຂອງຕົນຂຶ້ນຢ່າງເດັດດ່ຽວ ທັງດຳເນີນບາດກ້າວໄປສູ່ການເຮັດໃຫ້ພາລະຫນ້າທີ່ສະຖາປະນາ-ລະບອບສັງຄົມນິຍົມເກີດເປັນຕົວຈິງ, ລົງມືດຳເນີນ ການປ່ຽນແປງອັນເລິກເຊິ່ງຢູ່ໃນອຸດສາຫະກຳ ແລະ ກະສິກຳນັບທັງທາງດ້ານວັດທະນະທຳກໍເຊັ່ນດຽວກັນ.

ໃນເດືອນຕຸລາປີ ໑໙໔໔ ກອງທັບປົດປ່ອຍແຫ່ງຊາດ -ຂອງ ຢູໂກສະລາວີ ກໍໄດ້ຂັບໄລ່ພວກຍຶດຄອງດິນແດນ ສ່ວນໃຫຍ່ຂອງປະເທດຕົນຫມີໄປ, ໄດ້ປົດປ່ອຍນະຄອນ ແບນກຣາດ ໂດຍການຊ່ວຍເຫລືອຂອງກອງທັບໂຊວຽດ, ດິນແດນພາກເຫນືອກໍໄດ້ຮັບການປົດປ່ອຍຄືກັນ. ໃນເດືອນມີນາ ປີ ໑໙໔໕ ໄດ້ມີການສ້າງຕັ້ງລັດຖະບານປະຊາທິປະໄຕຂຶ້ນແລະໃນເດືອນພະຈິກ ສະພາຮ່າງລັດຖະທຳມະນູນ ເຊິ່ງ ປະຊາຊົນເປັນຜູ້ເລືອກຕັ້ງຂຶ້ນນັ້ນ ກໍໄດ້ໂຄ່ນລົ້ມລະບອບລາຊາທິປະໄຕ ແລະ ສະຖາປະນາປະເທດຢູໂກສະລາວີເປັນສະຫະພັນສາທາລະນະລັດປະຊາທິປະໄຕ. ການປ່ຽນແປງແບບມີປະ-

ຊາທິປະໄຕທີ່ເກີດຂຶ້ນໃນໄລຍະຕໍ່ສູ້ຕ້ານພວກຍຶດຄອງກັບພວກລູກແຫລ່ງຂອງພວກເຂົາ ມີລັກສະນະສັງຄົມນິຍົມໂດຍ ຮາກຖານຕັ້ງແຕ່ບັ້ນເລີ່ມຕົ້ນພູ້ນແລ້ວ.

ຢູ່ເຢຍລະມັນຕາເວັນອອກ, ບາດກ້າວເດີນ ແຫ່ງການຂະຫຍາຍຕົວແບບປະຕິວັດ ມີຈຸດພິເສດອັນສະເພາະຕົວ ຢູ່ຫລາຍຈຸດ. ຂະນະທີ່ຢູ່ໃນເຂດຕາເວັນຕົກຂອງເຢຍລະມັນ, ພວກກຳອຳນາດຍຶດຄອງຈາກສະຫະລັດອາເມລິກາ, ອັງກິດ, ແລະ ຝະລັ່ງ ໄດ້ວາງຕົນເປັນອຸປະສັກຕໍ່ຄວາມ ກາວຫນາຂອງຂະບວນປະຊາທິປະໄຕນັ້ນ ຢູ່ເຢຍລະມັນ ຕາເວັນອອກ ອຳນາດບໍລິຫານຂອງກອງທັບໂຊວຽດຊ້າດຳເນີນການ ປ່ຽນແປງອັນເລິກເຊິ່ງຢ່າງມີປະຊາທິປະໄຕໂດຍປະຕິບັດຕາມ ຂໍ້ຕົກລົງຂອງກອງປະຊຸມມະຫາອຳນາດຜູ້ມີໄຊຢູ່ໂປດສະດາມ ( ເດືອນກໍລະກົດປີ ໑໙໔໕ ). ໄດ້ມີການຟື້ນຟູອົງການຈັດຕັ້ງຂອງກຳມະກອນຄືນ ແລະ ໄດ້ມີການກໍ່ຕັ້ງພັກຂອງຊົນຊັ້ນກຳມະກອນພັກດຽວຄືພັກສັງຄົມນິຍົມ ເອກະພາບເຢຍລະມັນ ເຊິ່ງມາຮອດປີ ໑໙໕໐ ຈຶ່ງໄດ້ປ່ຽນຮູບ ມາເປັນພັກມາກຊິດເລນິນ ປະຕິວັດ. ພັກນີ້ກໍ່ເຊັ່ນດຽວກັບອົງການຈັດຕັ້ງອື່ນໆ ໄດ້ລົງມືດຳເນີນການປະຕິຮູບທີ່ດິນອັນເປັນການດັບສູນ ເຈົ້າກຳມະສິດທີ່ດິນໃຫຍ່ ທັງໄດ້ສາງຕັ້ງພາກສ່ວນປະຊາຊົນຂຶ້ນຢູ່ໃນອຸດສາຫະກຳ, ໄດ້ດຳເນີນການຫັນປ່ຽນການສຶກສາໃຫ້ມີລັກສະນະປະຊາທິປະໄຕ .

ການຕໍ່ສູ້ຕ້ານລະບອບລັກດິນາ ກັບຈັກກະພັດນິຍົມ,ຕ້ານ

ນັກໂຫດເມືອງຂຶ້ນຝະລັ່ງ ກັບພວກຍຶດຄອງຍີ່ປຸ່ນ ເປັນການຕໍ່ສູ້
ທີ່ຍືດຍາວຢູ່ເປັນເວລາ ໑໕ ປີ (໑໙໓໐-໑໙໔໕ )ພາຍໃຕ້
ການນຳພາຂອງພັກກອມມູນິດອິນດູຈີນ, ຫລັງຈາກນັ້ນແລ້ວປະ
ຊາຊົນ<u>ຫວຽດນາມ</u> ກໍເປັນຝ່າຍມີໄຊ. ລະຫວ່າງກາງເດືອນ
ສິງຫາປີ ໑໙໔໕ ການລຸກຮື ອັນມີໄຊຕ້ານພວກຍຶດຄອງຍີ່ປຸ່ນ
ໄດ້ລະເບີດຂຶ້ນຢູ່ພາຍໃນປະເທດ. ນອກຈາກກອງທັບ ປົດ
ປ່ອຍປະຊາຊົນ ເຊິ່ງກອງທະຫານຂອງລັດຖະບານຫຸ່ນ ພາກ
ສ່ວນໜຶ່ງພາກັນ ຫັນໜ້າມາຫາແລ້ວ, ການລຸກຮືຍັງໄດ້ຮັບ
ການຮ່ວມມືຈາກອົງການຈັດຕັ້ງກຳມະກອນ, ອົງການກຳມະ
ບານ ແລະ ກອງທະຫານປ້ອງກັນຕົນເອງ ຊາວນາຈຳນວນ
ຫລວງຫລາຍນັບທັງຊັ້ນຊົນຜານກາງຕ່າງໆໃນຕົວເມືອງອີກ.
ຖັດຈາກການປະຕິວັດໃນເດືອນສິງຫາຄັ້ງນີ້, ໃນວັນທີ ໒ກັນ
ຍາປີ ໑໙໔໕ ກໍໄດ້ມີການປະກາດສະຖາປະນາສາທາລະນະ
ລັດປະຊາທິປະໄຕຫວຽດນາມ. ສະພາແຫ່ງຊາດເຊິ່ງປະຊາ
ຊົນເລືອກຕັ້ງຂຶ້ນໄດ້ຮັບຮອງເອົາລັດຖະທຳມະນູນສະບັບໜຶ່ງ
ເຊິ່ງໄດ້ບົ່ງເຖິງເອກະລາດແຫ່ງຊາດໃນທົ່ວປະເທດ ແລະ
ການດັດສ້າງປະເທດຊາດບົນພື້ນຖານປະຊາທິປະໄຕ.

ແຕ່ການແຊກແຊງຂອງພວກໂຫດທົ່ວເມືອງຂຶ້ນຝະລັ່ງ ໃນ
ປີ ໑໙໔໖ ໄດ້ກີດຂວາງການປະຕິບັດແຜນການປະດິດສ້າງ-
ໃຫ້ເປັນຈິງໄດ້. ປະຊາຊົນຫວຽດນາມ ຕົກຢູ່ໃນສະພາບຈຳ
ຕ້ອງເຮັດສົງຄາມຕ້ານທານອັນຍາວນານຢູ່ຫລາຍປີ, ສົງຄາມ
ນີ້ອາວະສານລົງໃນປີ ໑໙໕໔ ໂດຍພວກໂຫດທົ່ວເມືອງຂຶ້ນ -

ເປັນຝ່າຍປະລາໄຊ. ແມ່ນຢູ່ວ່າພາກສ່ວນໜຶ່ງຂອງປະເທດທາງເບື້ອງລຸ່ມຂອງເສັ້ນຂະໜານທີ ໑໗ ລົງໄປໄດ້ຕົກຢູ່ໃນເງື້ອມມືຂອງຊົນຊັ້ນນາຍທຶນ ທີ່ ຜູກມັດຢູ່ກັບທຶນຕ່າງປະເທດແລະ ຂອງເຈົ້າທີ່ດິນ. ຢູ່ທາງພາກເໜືອຂອງຫວຽດນາມ, ໄດ້ມີການປ່ຽນແປງອັນເລິກເຊິ່ງ ແລະ ລະຫວ່າງຕົ້ນຊຸມ ປີ ໕໐ ການພົວພັນແບບສັງຄົມນິຍົມກໍປະສົບໄຊຊະນະຢູ່ໃນ ທຸກຂົງເຂດຂອງຊີວິດສັງຄົມ.

ຈາກນັ້ນບໍ່ດົນ ສາທາລະນະລັດກໍຕ້ອງສູ້ທົນກັບການ ທົດສອບອັນໜັກໜ່ວງອີກອັນ ໃໝ່ນັ້ນຄື: ສົງຄາມ ຮຸກຮານເຊິ່ງຈັກກະພັດອາເມລິກາ ເປັນຜູ້ກໍ່ຂຶ້ນໃນປີ ໑໙໖໕. ໂດຍໄດ້ຮັບການສະໜັບສະໜູນຈາກສະຫະພາບໂຊວຽດແລະປະເທດອ້າຍນ້ອງອື່ນໆ ປະຊາຊົນຫວຽດນາມ ໄດ້ຕີຊະນະພວກຮຸກຮານແລະໃນປີ ໑໙໗໕ ກໍກ້າວເຖິງຂັ້ນປົດປ່ອຍແລະເຕົ້າໂຮມປະເທດຊາດຂອງຕົນເຂົ້າກັນ. ປະຊາຊົນຫວຽດນາມ-໕໐ ລ້ານຄົນດຳເນີນການກໍ່ສ້າງລະບອບສັງຄົມນິຍົມຢູ່ທົ່ວທຸກແຂວງບົນພື້ນແຜ່ນດິນຂອງສາທາລະນະລັດສັງຄົມນິຍົມ ຫວຽດນາມ.

ຕໍ່ຈາກໄຊຊະນະຂອງປະເທດສຳພັນທະມິດ ( ສະຫະພາບໂຊວຽດ ສະຫະລັດອາເມລິກາ, ອັງກິດ ) ຢູ່ໃນ ສົງຄາມໂລກຄັ້ງທີສອງ ປະຊາຊົນ ເກົາຫລີ ກໍໄດ້ປົດປ່ອຍ ຕົນເອງອອກຈາກແອກຈັກກະພັດຍີ່ປຸ່ນ. ພື້ນແຜ່ນດິນ ສ່ວນຢູ່ເໜືອເສັ້ນຂະໜານທີ ໓໘ ຖືກພວກກອງທະຫານອາເມລິ-

ກາຍຶດຄອງ. ໃນເດືອນສິງຫາປີ ໑໙໔໖ ຫລັງຈາກ ມີການເຊື່ອມໂຮມ ພັກກອມມູນິດກັບພັກປະຊາຊົນເຂົ້າກັນແລ້ວ ກໍມີການສ້າງຕັ້ງພັກແຮງງານ ແຫ່ງເກົາຫລີຂຶ້ນ ຕໍ່ມາພັກນີ້ ໄດ້ກາຍເປັນຜູ້ນຳພາອົງການຈັດຕັ້ງມະຫາຊົນ ແລະ ອົງການ-ແຫ່ງລັດຂອງປະເທດ. ພັກເປັນຜູ້ອອກຫນ້າຢູ່ໃນ ຂະບວນການປ່ຽນແປງອັນສຳຄັນທາງດ້ານການເມືອງແລະເສດຖະ-ກິດ ອັນເປັນການກະກຽມເງື່ອນໄຂໃຫ້ແກ່ການສະຖາປະນາລັດປະຊາທິປະໄຕ. ໃນເດືອນກັນຍາປີ ໑໙໔໘ ສາທາລະນະລັດປະຊາທິປະໄຕປະຊາຊົນ ເກົາຫລີ ກໍເກີດຂຶ້ນແລະໄດ້ກ້າວເຂົ້າສູ່ເສັ້ນທາງແຫ່ງການສະຖາປະນາລະບອບສັງຄົມນິຍົມ.

ການຕໍ່ສູ້ປະຕິວັດອັນຍືດເຍື້ອຫລາຍສິບປີຂອງປະຊາຊົນ-ຈີນ ໃນຂັ້ນທ້າຍກໍສູດລົງດ້ວຍໄຊຊະນະ. ແຕ່ປີ ໑໙໒໗ຫາ ໑໙໓໗ ປະຊາຊົນເຫລົ່ານີ້ໄດ້ດຳເນີນ ສົງຄາມປະຕິຮູບທີ່ດິນ ເຮັດສົງຄາມຕ້ານກັບພວກຍຶດຄອງຍີ່ປຸ່ນ ແຕ່ປີ ໑໙໓໗ ຫາປີ ໑໙໔໕ ແລະເຮັດສົງຄາມປົດປ່ອຍຊາດຕ້ານກັບກຸ່ມປະຕິການ ກຽວມິນຕັນ ຫລາຍຄັ້ງ. ສົງຄາມເຫລົ່ານີ້ປະສົມປະສານ - ເຂົ້າກັບບາດກ້າວເດີນແຫ່ງການປະຕິວັດປະຊາທິປະໄຕເຊິ່ງເລີ່ມຂຶ້ນໃນປີ ໑໙໑໙ ຢ່າງສະໜິດແໜ້ນ. ໄຊຊະນະຂອງກອງທັບປົດປ່ອຍປະຊາຊົນຈີນ ພາຍໃຕ້ການນຳພາ ຂອງພັກກອມມູນິດນັ້ນ ຊົງຄວາມສຳຄັນອັນຕັດສິນສຳລັບ ໄຊຊະນະຂອງການປະຕິວັດ. ສະພາທີ່ປຶກສາດ້ານການເມືອງຂອງປະ

ຊາຊົນ ເຊິ່ງມີຕົວແທນຈາກວົງການທຸກໆແຫ່ງຂອງກຳມະກອນ ຊາວນາ ຊັ້ນຄົນປານກາງໃນເຂດເທດສະບານເມືອງ ແລະ ພາກສ່ວນຫນຶ່ງຂອງຊົນຊັ້ນນາຍທຶນ ເຂົ້າປະກອບສ່ວນ ນຳນັ້ນ ໄດ້ປະກາດສະຖາປະນາ ສາທາລະນະລັດ ປະຊາຊົນຈີນ ໃນ ວັນທີ່ ໑ ຕຸລາ ປີ ໑໙໔໙. ຫລັງຈາກການປະຕິວັດອັນມີ ໄຊ ຊະນະນີ້ແລ້ວ ອຳນາດປະຊາຊົນ ເຊິ່ງໃນຕົວຈິງ ກໍແມ່ນ ຜະ ເດັດການຂອງຊົນຊັ້ນກຳມະກອນ ແລະ ຊາວນາ ກໍໄດ້ຮັບ - ການສ້າງຕັ້ງຂຶ້ນ. ສິ່ງດັ່ງກ່າວໄດ້ອຳນວຍສ້າງເງື່ອນໄຂການ ເມືອງອັນໃຫ້ທ່າດີແກ່ຈີນ ສຳລັບການຂ້າມຜ່ານໄປສູ່ ການສະ ຖາປະນາລະບອບສັງຄົມນິຍົມ.

ໃນໄລຍະຕິດຕາມກັນມານີ້ ປະກົດການປະຕິວັດອື່ນໆກໍໄດ້ ເກີດຂຶ້ນ. ໃນປີ ໑໙໕໙ ການປະຕິວັດຢູ່ ກູຍບາ ກໍປະສົບໄຊ ຊະນະ. ການປະຕິວັດຄັ້ງນີ້ແມ່ນຫມາກຜົນຂອງຄວາມຂັດແຍ່ງ ຮຸນແຮງທີ່ສຸດ ລະຫວ່າງຊົນຊັ້ນພາຍໃນປະເທດເອງ ແລະ ຄວາມຂັດແຍ່ງລະຫວ່າງປະຊາຊົນ ກູຍບາ ກັບຈັກກະພັດ ອາ ເມລິກາ ຜູ້ຍຶດເອົາ ກູຍບາ ເປັນຫົວເມືອງຂຶ້ນ. ໃນເຄິ່ງຫລັງ ຂອງຊຸມປີ ໕໐, ສະພາວະການປະຕິວັດແບບຫນຶ່ງໄດ້ກໍ່ຮູບຂຶ້ນ ພາຍໃນປະເທດ. ກຸ່ມນັກປະຕິວັດນຳພາໂດຍ ຟ.ກາສ໌ໂຕຣ- ໄດ້ສ້າງຕັ້ງກອງທັບຜູ້ລຸກຮືຂຶ້ນ. ໂດຍໄດ້ຮັບການສະຫນັບ ສະ ຫນູນອັນນັບມື້ນັບຫລວງຫລາຍຂຶ້ນຈາກປະຊາຊົນຊັ້ນຕ່າງໆ ກອງ ທັບນີ້ກໍສາມາດຍາດເອົາໄຊຊະນະເຫນືອກອງກຳລັງ ຂອງນັກ ຜະເດັດການ ບາຕິສຕາ. ໂດຍມີກຳມະກອນ ຊາວນາ ຊັ້ນ

ຄົນປານກາງ ແລະ ພາກສ່ວນນາຍທຶນແຫ່ງຊາດຈຳນວນຫນຶ່ງ ເປັນແຮງຍູ້ດັນ, ການປະຕິວັດປົດປ່ອຍຊາດຕ້ານລັດທິຈັກກະພັດ ນິຍົມແລະຕ້ານລັດທິເຈົ້າທຶນປູກຝັງຈຶ່ງປະສົບໄຊຊະນະ ຢູ່ໃນ ກູຍບາ. ຊາວຜູ້ອອກແຮງງານໃນຕົວເມືອງແລະຊົນນະບົດ ປະມານຫນຶ່ງລ້ານຄົນເປັນຜູ້ມີບົດບາດຕົ້ນຕໍຢູ່ໃນການຕໍ່ສູ້ປະຕິວັດ. ຍຸກປະຕິບັດການຫັນປ່ຽນມາມີປະຊາທິປະໄຕຂອງການປະຕິວັດ (໑໙໕໙-໑໙໖໑) ແລະການກ້າວເຂົ້າສູ່ຍຸກປະຕິວັດສັງຄົມນິຍົມ ຂອງ ກູຍບາ ດຳເນີນໄປພາຍໃຕ້ການນຳພາຂອງນັກປະຊາທິປະໄຕປະຕິວັດຕາງຫນ້າໂດຍກອງທັບລູກຣິຊຶ່ງມີ ຟ. ກາສໂຕຣ ນຳຫນ້າ" ຂະບວນວັນທີ ໒໖ ກໍລະກົດ" ຊຶ່ງແມ່ນອົງການຈັດຕັ້ງທາງການເມືອງຂອງກອງທັບນີ້ແລະພ້ອມນັ້ນຍັງມີ ການປະກອບສ່ວນຢ່າງຫ້າວຫັນທີ່ສຸດຂອງນັກກອມມູນິດ ກູຍບາ.

ໃນປີ ໑໙໗໖ ປະເທດລາວກໍໄດ້ເຂົ້າມາປະກອບເປັນສ່ວນຫນຶ່ງຢູ່ໃນຄອບຄົວປະເທດສັງຄົມນິຍົມ. ປະຊາຊົນຂອງປະເທດນີ້ໄດ້ໃຊ້ເວລາເກືອບຮ້ອຍປີເພື່ອຍູ້ດັນການບຸກຮຸກຂອງພວກຮຸກຮານຈັກກະພັດ. ລະຫວ່າງປີ໑໙໗໔-໑໙໗໕ ການປະຕິວັດຊາດປະຊາທິປະໄຕ ໄດ້ແຜ່ລາມອອກຢູ່ໃນປະເທດລາວ, ໄຊຊະນະຂອງປະຊາຊົນປະເທດອ້າຍນ້ອງໃກ້ຄຽງຄື ຫວຽດນາມ ແລະ ກຳປູເຈັຍກໍມີສ່ວນຊຸກຍູ້ການປະຕິວັດຄັ້ງນີ້. ໃນປີ ໑໙໗໕ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ການລຸກຮື ທົ່ວໄປ ກໍໄດ້ທັບມ້າງຢ່າງສົມບູນກຳລັງທະຫານ ແລະການເມືອງຂອງຝ່າຍເຈົ້າທຶນນາຍຫນ້າ, ພວກອາດຍາສິດຊຸມເສີກແລະສັກ

ດິນາກັບພວກປະຕິການທ້ອງຖິ່ນຊຶ່ງໃນອັ້ນທຳອິດພວກນີ້ເປັນລູກແຫລ່ງຂອງພວກໂຫດຫົວເມືອງອັນຟະລັ່ງ ແລະ ຕໍ່ມາ ພວກຈັກກະພັດອາເມລິກາ. ໄຊຊະນະຂອງການລຸກຮື້ເປັນ ຂີດຫມາຍບອກອັ້ນອາວະສານຂອງການປະຕິວັດຊາດປະຊາທິປະໄຕ,ຫຼັງຈາກນັ້ນຈຶ່ງແມ່ນຍຸກຂ້າມຜ່ານໄປຫາລະບອບສັງຄົມນິຍົມ ໂດຍບໍ່ຜ່ານລະບອບນາຍທຶນ.

<u>ປະເທດຕ່າງໆທີ່ປະກອບສ້າງລະບົບສັງຄົມ</u>

<u>ນິຍົມ ( ໑໙໘໒ )</u>

| ຊື່ປະເທດ | ພື້ນທີ່ດິນ(ຫົວໜ່ວຍ ໑ພັນ ກມ$^{໒}$ ) | ປະຊາຊົນ ( ຫົວໜ່ວຍ ໑ ລ້ານ |
|---|---|---|
| ໑ | ໒ | ໓ |
| ຄູບາ | ໑໑໑ | ໙,໘໐(໑໙໘໑) |
| ສ.ປ.ປ.ກ | ໒໓໗ | ໒໒,໔໐(໑໙໘໑) |
| ຈີນ | ໙.໖໐໐ | ໙໙໖,໒໒(໑໙໘໑) |
| ສະຫະພາບໂຊວຽດ | ໒໒໔໐໐ | ໒໗໐,໐໐(໑໙໘໒) |
| ເຊັກໂກສະໂລວາກີ | ໑໒໗,໙ | ໑໕,໓໔(໑໙໘໑) |
| ບູນກາຣີ | ໒໘,໗ | ໒,໗໓(໑໙໘໐) |
| ໂປໂລຍ | ໓໑໓ | ໓໖,໐໖(໑໙໘໑) |
| ມົງໂກລີ | ໑໕໖໕ | ໑,໗໓(໑໙໘໐) |
| ຢູໂກສະລາວີ | ໒໕໕,໘ | ໒໒,໓໕(໑໙໘໑) |
| ສ.ປ.ຢ | ໑໐໘ | ໑໖,໗໘(໑໙໘໐) |

24 / VII
ຫ້າມຈຳໜ່າຍ

| ໑ | ໒ | ໓ |
|---|---|---|
| ຣູມານີ | ໒໓໗ | ໒໒,໔໐(໑໙໘໑ ) |
| ລາວ | ໒໓໗ | ໓,໗໒( ໑໙໘໐ ) |
| ຫວຽດນາມ | ໓໓໓ | ໕໓,໗໒( ໑໙໘໐ ) |
| ອານບານີ | ໒໘,໗ | ໒,໗໓( ໑໙໘໐ ) |
| ຮົງກາຣີ | ໙໓ | ໑໐,໗໑( ໑໙໘໐ ) |

ໃນສ່ວນຫລວງຫລາຍແລວ ບາດກ້າວເດີນຂອງການປະຕິວັດຢູ່ໃນປະເທດສັງຄົມນິຍົມ ດຳເນີນໄປໂດຍສອງໄລຍະ ທີ່ຂຶ້ນຕໍ່ກັນເອງຢ່າງໃກ້ຊິດທີ່ສຸດຄື ໄລຍະປະຕິວັດປະຊາທິປະໄຕໂດຍທົ່ວໄປແລະໄລຍະປະຕິວັດສັງຄົມນິຍົມ. ໃນໄລຍະ ຕົ້ນແມ່ນການລົ້ມຖານະທາງເສດຖະກິດແລະການເມືອງ ຂອງຊົນຊັ້ນນາຍທຶນໃຫຍ່ ແລະ ພວກສັກດີນາຊົນນະບົດ, ລົບລ້າງອິດທິພົນຂອງທຶນຕ່າງປະເທດ ແລະ ຫັນປ່ຽນໃຫ້ສະຖາບັນ ການເມືອງຕົ້ນຕໍທັງຫລາຍຂອງລັດມາເປັນສະຖາບັນປະຊາທິປະໄຕ. ເຖິງຢ່າງໃດກໍຕາມຊົນຊັ້ນນາຍທຶນຍັງຄົງຮັກສາອິດທິພົນ ສ່ວນໃດສ່ວນຫນຶ່ງຢູ່ໃນເສດຖະກິດ ແລະ ການເມືອງ, ພວກເຂົາເຂົ້າຮ່ວມໃນລັດຖະບານປະສົມ ແລະ ຍັງຄົງຮັກສາຖານະອັນສຳຄັນໃນດ້ານແນວຄິດຢູ່.

ໃນຂະນະທີ່ຖານະຂອງຊາວຜູ້ອອກແຮງງານຜູ້ກຳອຳນາດດີຂຶ້ນ, ການຕໍ່ສູ້ຊົນຊັ້ນຮ້າຍແຮງຂຶ້ນ ແລະ ໃນຂະນະທີ່ຄວາມມຸ່ງມາດປາຖະຫນາ ອັນເພີ່ມທະວີຂຶ້ນທຸກມື້ຂອງຊັ້ນຄົນທຸກໆຊັ້ນຢູ່ໃນຫມູ່ປະຊາຊົນ ເພື່ອດຳເນີນບາດກ້າວເດີນສຳລັບ ການ

ບ່ຽນແປງເລິກເຊິ່ງກວ່າເກົ່າ ແລະ ສຳລັບທຳລາຍ ຮູບແບບການຂູດຮີດທຸກຢ່າງນັ້ນ ເພິ່ນກໍກ້າວໄປສູ່ໄລຍະທີ່ສອງ ຂອງການປະຕິວັດ, ນັ້ນຄືໄລຍະປະຕິວັດສັງຄົມນິຍົມ ເຊິ່ງມີ ທາດມູນມາແຕ່ໄລຍະທີ່ໜຶ່ງແລ້ວ, ເວລານັ້ນເພິ່ນເຫັນວ່າ ມີການເຕົ້າໂຮມເອົາຊົນຄົນຕ່າງໆຢູ່ໃນສັງຄົມເຂົ້າກັນຢ່າງເນືອງນິດ ເຊັ່ນ: ຊົນຊັ້ນກຳມະກອນ, ຊາວນາ, ຊັ້ນຄົນລະຫວ່າງກາງອື່ນໆນັບທັງຊົນຊັ້ນນາຍທຶນພາກສ່ວນໜຶ່ງ ທີ່ມີທ່າອຽງຮັກຊາດເວົ້າອີກຢ່າງໜຶ່ງ, ກໍແມ່ນເຫັນໄດ້ວ່າມີການແຜ່ຂະຫຍາຍພື້ນຖານສັງຄົມຂອງການປະຕິວັດອອກ, ບໍ່ມີພຽງແຕ່ຊົນຊັ້ນກຳມະກອນທໍ່ນັ້ນ ແຕ່ຍັງມີມວນໝູ່ມະຫາຊົນທີ່ນັບມື້ນັບກວ້າງ ຂວາງອອກມາທີ່ເຂົ້າໃຈໃນຄວາມຈຳເປັນຂອງລະບອບສັງຄົມນິຍົມ.

ຢູ່ໃນບາງປະເທດ ການປະຕິວັດທີ່ໄດ້ຮັບໄຊຊະນະ ໂລດແມ່ນການປະຕິວັດສັງຄົມນິຍົມ.

## ໄລຍະຕ່າງໆຂອງການປະຕິວັດຢູ່ໃນປະເທດ ສັງຄົມນິຍົມ

| ຊື່ປະເທດ | ໄລຍະປະຕິວັດປະຊາທິປະໄຕ | ຂັ້ນຕົ້ນຂອງການປະຕິວັດສັງຄົມນິຍົມ ແລະ ການສ້າງຕັ້ງຜະເດັດການກຳມາຊີບ |
|---|---|---|
| ໑ | ໒ | ໓ |
| ກູຍບາ | ໑໙໕໓-໑໙໕໘ | ໑໙໕໙ |

| ໑ | ໒ | ໓ |
|---|---|---|
| ຈີນ | ໑໙໑໙-໑໙໔໙ | ໑໙໔໙ |
| ສ.ປ.ຢ | ໑໙໔໕-໑໙໔໙ | ໑໙໔໙ |
| ສ.ປ.ຢ.ກ | ໑໙໔໕-໑໙໔໖ | ໑໙໔໖ |
| ສະຫະພາບໂຊວຽດ | ໑໙໐໕-໑໙໐໗<br>ມີນາ-ຕຸລາ໑໙໑໗ | ພະຈິກ ໑໙໑໗ |
| ເຊັກໂກສະໂລວາກີ | ໑໙໔໔-໑໙໔໗ | ໑໙໔໘ |
| ໂປໂລຍ | ໑໙໔໔-໑໙໔໗ | ໑໙໔໗ |
| ມົງໂກລີ | ໑໙໒໑-໑໙໔໐ | ໑໙໔໐ |
| ຢູໂກສະລາວີ | ໑໙໔໑-໑໙໔໕ | ໑໙໔໕ |
| ຫວຽດນາມ | ໑໙໔໑-໑໙໔໕ | ໑໙໔໕ |
| ຮົງກາຣີ | ໑໙໔໔-໑໙໔໗ | ໑໙໔໘ |
| ອານບານີ | ໑໙໓໙-໑໙໔໕ | ໑໙໔໖ |
| ບູນກາຣີ | - | ໑໙໔໔ |
| ລາວ | ໑໙໗໓-໑໙໗໕ | ໑໙໗໖ |
| ຣູມານີ | ໑໙໔໔-໑໙໔໗ | ໑໙໔໘ |

ການສ້າງຕັ້ງລັດສັງຄົມນິຍົມໃໝ່, ການປະກົດຕົວ ແລະ ການປັບປຸງລະບອບໃໝ່ດຳເນີນໄປດ້ວຍການແລກປ່ຽນ ແລະ ການຮ່ວມມືແບບສະໜິດສະໜົມລະຫວ່າງບັນດາປະເທດເຫລົ່ານີ້ ໂດຍສະເພາະແລ້ວ ກໍແມ່ນກັບປະເທດຜູ້ແຜ້ວທາງໃຫ້ແກ່ລະບອບສັງຄົມນິຍົມທີ່ສະສົມກຳລັງແຮງ ແລະ ບົດຮຽນໄດ້ ຫລາຍກວ່າໝູ່ ຄືສະຫະພາບໂຊວຽດ. ອິດທິພົນຂອງປະເທດນີ້ ຕໍ່

ບາດກ້າວເດີນຂອງການສ້າງຕັ້ງລະບອບສັງຄົມນິຍົມໂລກ ມີຫລາຍຮູບ ຫລາຍແບບທີ່ສຸດ.

ໃນຂັ້ນຕົ້ນ ບົດບາດຂອງສະຫະພາບໂຊວຽດສະແດງອອກຢູ່ບ່ອນວ່າ ບາດກ້າວເດີນປະຕິວັດອັນນີ້ ດຳເນີນເກີດຂຶ້ນ ໃນສະຖານະການປະຫວັດສາດອັນໃຫ້ທ່າດີທີ່ສຸດ, ຢູ່ໃນ ສະພາບການທີ່ລັດທິທຶນນິຍົມກຳລັງອ່ອນເພຍລົງອີກຄັ້ງໃໝ່. ໃນເມື່ອວ່າການປະຕິວັດເດືອນຕຸລາ ໄດ້ຮັບການສະໜັບສະໜູນສ່ວນສຳຄັນທາງດ້ານຈິດໃຈແລະການເມືອງຈາກຊົນຊັ້ນ ກຳມາຊີບສາກົນ, ບັນດາປະເທດໃນລະບອບປະຊາທິປະໄຕປະຊາຊົນກໍ່ມີບ່ອນອີງອັນເຂັ້ມແຂງທາງດ້ານເສດຖະກິດ, ການທະ ຫານ ການເມືອງແລະແນວຄິດຈາກກະໂຕລັດສັງຄົມນິຍົມລັດ ທຳອິດໃນໂລກເລີຍ. ການຄົງຕົວຢູ່ຂອງສະຫະພາບໂຊວຽດ ຂັດຂວາງການແຊກແຊງດ້ວຍອາວຸດຂອງຈັກກະພັດເຂົ້າສູ່ປະເທດເຫລົ່ານີ້, ຄວາມພະຍາຍາມທຳການປິດລ້ອມທາງດ້ານ ເສດຖະກິດຕ້ານກັບປະເທດປະຊາທິປະໄຕປະຊາຊົນທັງຫລາຍກໍ່ປະລາໄຊຄືກັນ. ໃນຖານະເປັນນັກສາກົນນິຍົມຜູ້ຫ້າວຫັນ ສະຫະພາບໂຊວຽດ ໄດ້ຊ່ວຍໃຫ້ກຳລັງປະຕິວັດ ຂອງບັນດາປະເທດເຫລົ່ານີ້ສາມາດດຳເນີນການປ່ຽນແປງປະຊາທິປະໄຕ ແລະຕໍ່ມາກໍ່ແມ່ນການປ່ຽນແປງສັງຄົມນິຍົມອັນເລິກເຊິ່ງ. ສ.ສ.ສ.ຊ. ໄດ້ໃຫ້ການອຸ້ມຊູອັນໃຫຍ່ຫລວງທາງດ້ານການເມືອງ ແລະເສດຖະກິດ, ຊ່ວຍຊູໃຫ້ບັນດາປະເທດປະຊາທິປະໄຕປະຊາຊົນ ປັບປຸງຖານະຂອງຕົນຢູ່ໃນເວທີສາກົນ.

ຢູ່ໃນໄລຍະຕົ້ນການຕໍ່ສູ້ປະຕິວັດສຳແດງຕົວອອກ ໃນຮູບແບບຮຸນແຮງຕ່າງໆຫລາຍກວ່າໝູ່. ໃນເມື່ອວ່າການຕໍ່ສູ້ຕ້ານລັດທິຟາຊິດ ແລະ ພວກປະຕິການ, ຕ້ານພວກຍຶດຄອງ ຕ່າງດ້າວ ກັບພວກລູກແຫລ້ງນາຍທຶນເຈົ້າທີ່ດິນຂອງພວກເຂົາ,ພ້ອມກັບການກ້າວຫາການປົດປ່ອຍຊາດໄດ້ດຳເນີນໄປດ້ວຍ ຄວາມຮຸນແຮງ ຢູ່ໃນສ່ວນຫລວງຫລາຍຂອງບັນດາປະເທດປະຊາທິ-ປະໄຕປະຊາຊົນແລ້ວ, ແຕ່ບາດກ້າວເດີນຢູ່ໃນການປ່ຽນແປງແບບປະຊາທິປະໄຕໃນຂັ້ນຕໍ່ມາ, ການຂ້າມຜ່ານສູ່ການສະຖາປະນາລະບອບສັງຄົມນິຍົມຢູ່ໃນຫລາຍໆປະເທດກໍຫາກດຳເນີນໄປຢ່າງສະຫງົບ ປາສະຈາກການປະຕິວັດດ້ວຍອາວຸດແລະສົງຄາມກາງເມືອງ.

ຕົວຢ່າງ ຢູ່ປະເທດບູນກາຣີ ການຍຶດອຳນາດສຳເລັດທັນທີຫລັງຈາກການລຸກຮື້ປະກອບອາວຸດ ສ່ວນຢູ່ ຢູໂກສະລາວີນັ້ນ ມັນສຳເລັດລົງຫລັງຈາກສົງຄາມປົດປ່ອຍຊາດອັນຍືດຍາວທ້າຍທີ່ສຸດ, ຊາວກຳມາຊີບຢູ່ ຮົງກາຣີ, ເຊັກໂກສະໂລວາກີແລະໃນປະເທດອື່ນໆກໍຍຶດອຳນາດໄດ້ ດ້ວຍຄວາມສັນຕິເກືອບເທົ່າເທົ່າກັນ. ທັງນີ້ເປັນຍ້ອນວ່າ ກົງຈັກລັດຂອງຊົນຊັ້ນນາຍ ທຶນແລະເຈົ້າທີ່ດິນໄດ້ຖືກທຳລາຍລົງແລ້ວ ໃນສະໄໝ ສົງຄາມແລະໃນໄລຍະການປະຕິຮູບປະຊາທິປະໄຕໃນຂັ້ນຕໍ່ມາ ແລະຍ້ອນວ່າຊົນຊັ້ນກຳມະກອນໄດ້ມີກຳລັງເໜືອກວ່າຢ່າງ ຫລວງຫລາຍ.

ຜະເດັດການກຳມາຊີບໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃນ ແວດ

ວົງສະຖາບັນການເມືອງທີ່ມີຢູ່ແລ້ວ. ຕົວຢ່າງ, ພັກກອມມູນິດເຊັກໂກສະໂລວາກີ ຢາກໃຫ້ສະພາຮັບຮອງເອົາຂໍ້ຕົກລົງ ທີ່ສອດຄອງກັບຄວາມມຸ່ງມາດປາຖະໜາຂອງປະຊາຊົນ, ຢາກໃຫ້ມີການລົງມືປະຕິບັດການວາງລະບຽບ ແບບປະຊາທິປະໄຕ ແລະສັງຄົມນິຍົມຢ່າງຖືກຕ້ອງຕາມກົດໝາຍ. ເມື່ອພວກນາຍທຶນຢູ່ໃນເຊັກໂກສະໂລວາກີ ພະຍາຍາມ ເຮັດລັດຖະປະຫານຝືນປະຕິວັດໃນເດືອນກຸມພາ ປີ ໑໙໔໘ ນັ້ນ ພຶດຕິກຳ ຂອງພວກເຂົາກໍ່ຖືກຊົນຊັ້ນກຳມະກອນພາຍໃຕ້ການຊີ້ນຳຂອງພັກ - ກອມມູນິດທັບມ້າງລົງ ແລະ ເຫດການນີ້ກໍ່ດຳເນີນໄປຢ່າງສັນຕິ .

ໃນຈີນ, ເກົາຫລີເໜືອ, ຫວຽດນາມ ແລະກູຍບາ, ໄລຍະປະຕິວັດປະຊາທິປະໄຕຍາດເອົາໄຊຊະນະຫລັງຈາກການຕໍ່ສູ້ດ້ວຍກຳລັງຕ້ານກັບພວກຈັກກະພັດ ແລະ ກຳລັງປະຕິ ການພາຍໃນປະເທດ, ຕ້ານພວກໂຫເມືອງຂຶ້ນກັບລູກແຫລ່ງ ຂອງພວກເຂົາ. ສ່ວນການຂ້າມຜ່ານຈາກໄລຍະປະຕິວັດປະຊາ ທິປະໄຕໄປສູ່ໄລຍະປະຕິວັດ ສັງຄົມນິຍົມ ເຊິ່ງດຳເນີນຢູ່ໃນປະເທດເຫລົ່ານັ້ນ ອາໄສວ່າຊົນຊັ້ນກຳມະກອນ ໄດ້ກຳອຳນາດແລ້ວ ແລະ ກໍ່ຍ້ອນຄວາມອ່ອນເພຍຂອງກົງຈັກທະຫານ ອາດຍາສິດເກົ່າ, ມັນຈຶ່ງມີລັກສະນະສັນຕິເປັນສ່ວນຫລາຍ.

ປະມານລະຫວ່າງປີ ໑໙໔໘-໑໙໔໙, ບັນດາປະເທດປະຊາທິປະໄຕປະຊາຊົນທັງຫລາຍໄດ້ມ້າງມູນຊົນຊັ້ນນາຍທຶນ ໃນນາມວ່າມັນເປັນຊົນຊັ້ນການເມືອງໜຶ່ງ. ຊົນຊັ້ນກຳມະກອນ,

ກັບພັນທະມິດ ຂອງພວກເຂົາ ກໍໄດ້ຍຶດເອົາອຳນາດທາງການ ເມືອງທັງໝົດໄວ້ໃນກຳມືຕົນ. ຫຼັງຈາກການໂອນຊຸດສາທະກຳ ເຂົ້າເປັນຂອງລັດ ອັນເປັນບາດຄອນຄັ້ງຕັດສິນພາດລົງໃສ່ - ພວກຂູດຣີດພາຍໃນປະເທດແລ້ວ ສະຖານະຂອງທຶນ ຕ່າງປະ ເທດກໍເປາະພ່ອຍ ແລະ ການຂະຫຍາຍເສດຖະກິດ ໂດຍອີງ ໃສ່ການມີກຳມະສິດຣວມໝູ່ກໍຈຶ່ງເປັນໄປໄດ້. ການປະຕິຮູບທີ່ ດິນມີຜົນໃຫ້ຊົນຊັ້ນເຈົ້າທີ່ດິນໃຫຍ່ຖືກລົບລ້າງ ພວກຊາວນາໄດ້ ຮັບດິນດອນຄືນ. ເຫັນໄດ້ວ່າມີການປັບປຸງພັນທະພາບ ລະ ຫວ່າງກຳມະກອນ ແລະ ຊາວນາ. ການປ່ຽນແປງ ຂັ້ນຮາກ ຖານ ຈຶ່ງສາມາດເກີດເປັນຕົວຈິງໄດ້ ຢູ່ໃນການດຳລົງ ຊີວິດ ທາງດ້ານຈິດໃຈຂອງສັງຄົມ ແລະ ລັດທິມາກຊິດ-ເລນິນນິດ ກໍ ແຜ່ຂະຫຍາຍອອກຢ່າງກວ້າງຂວາງ. ທັງໝົດນີ້ໝາຍຄວາມ ວ່າການປະຕິວັດສັງຄົມນິຍົມໄດ້ຮັບໄຊຊະນະຢູ່ໃນປະເທດ ປະ ຊາທິປະໄຕສັງຄົມນິຍົມແລ້ວ, ໃນໄລຍະດຽວກັນນີ້ການປະຕິ- ວັດປະຊາຊົນຢູ່ປະເທດຈີນ ກໍໄດ້ຮັບໄຊຊະນະຄືກັນ.

ໃນຊີວິດຂອງບັນດາປະຊາຊາດທີ່ໄດ້ເລືອກເອົາ ລະບອບ ສັງຄົມນິຍົມແລ້ວນີ້ ຊຸມປີ ໕໐ ຖືກຂີດໝາຍດ້ວຍໄລຍະ ຂາມ ຜ່ານຈາກລະບອບທຶນນິຍົມ ໄປສູ່ລະບອບສັງຄົມນິຍົມ,ດ້ວຍການ ສະຖາປະນາຮາກເຫງົ້າຂອງສັງຄົມໃໝ່ແບບໜຶ່ງ.

ຍ້ອນວ່າຫລາຍໆປະເທດທີ່ໄດ້ທຳການປະຕິວັດສັງຄົມນິຍົມ ແລ້ວນັ້ນ ຍັງມີລັກສະນະສະເພາະຢູ່ຍ້ອນວ່າມີລະດັບຂະຫຍາຍ ຕົວທາງດ້ານເສດຖະກິດຕ່ຳ ດັ່ງນັ້ນຄວາມສຳຄັນພິເສດ ຢ່າງ

ໜຶ່ງກໍແມ່ນຄວາມຮີບຮ້ອນໃນການສ້າງຕັ້ງພື້ນຖານວັດຖຸ ແລະ ເຕັກນິກອັນຈຳເປັນສຳລັບການປ່ຽນແປງສັງຄົມແບບສັງຄົມນິ-ຍົມ.

ການແກ້ໄຂວຽກງານອັນນີ້ໃຫ້ຢ່າງປະຈັກຕາເຖິງ ທ່າດີທີ່ລະບົບເສດຖະກິດສັງຄົມນິຍົມແບບມີແຜນການ ການພົວ ພັນແບບສາກົນສັງຄົມນິຍົມ ແລະ ການຊ່ວຍເຫລືອກັນ ແລະ ກັນແບບອ້າຍນ້ອງຂອງບັນດາປະເທດສັງຄົມນິຍົມສະເໜີໃຫ້ເຖິງແມ່ນວ່າສະຫະລັດອາເມລິກາແລະລັດຈັກກະພັດອື່ນໆໄດ້ນຳໃຊ້ມາດຕະການປິດລ້ອມອັນໂຫດຫ້ຽມທາງດ້ານເສດຖະກິດ ການເນັ້ນໃສ່ປະເທດໃນລະບົບສັງຄົມນິຍົມກໍຕາມ, ການປິດລ້ອມອັນນັ້ນບັງຄັບໃຫ້ບັນດາປະເທດເຫລົ່ານີ້ສຸມກຳລັງແຮງ ແລະ ພາຫະນະ ຕັ້ງຫລວງຫລາຍເພື່ອປ້ອງກັນຕົວເອງ ບັນດາປະເທດເຫລົ່ານີ້ບໍ່ພຽງແຕ່ສາມາດຮັບປະກັນເອກະລາດທາງດ້ານເສດຖະກິດຂອງຕົນເທົ່ານັ້ນ ແຕ່ຫາກຍັງສາມາດກ້າວໜ້າຢ່າງແຫຈັ່ງ ຢູ່ໃນການແຂ່ງຂັນທາງດ້ານເສດຖະກິດກັບໂລກນາຍທຶນ. ເພີຍຢ່າງວ່າ ປະເທດສະມາຊິກສະພາຊ່ວຍເຫລືອກັນແລະ ກັນທາງດ້ານເສດຖະກິດ ( ສ.ຊ.ສ )ມີລາຍໄດ້ແຫ່ງຊາດເພີ່ມຂຶ້ນຮອດ ໔,໕ ເທົ່າ ຕັ້ງແຕ່ປີ ໑໙໕໐ ຫາ ໑໙໖໐ ສ່ວນບັນດາປະເທດນາຍທຶນຈະເລີນທາງດ້ານເສດຖະກິດນັ້ນມີລາຍໄດ້ເພີ່ມຂຶ້ນແຕ່ ໑,໕ ເທົ່ານັ້ນ. ຢູ່ໃນໄລຍະດຽວກັນ ຜົນຜະລິດທາງດ້ານອຸດສາຫະກຳຢູ່ໃນປະເທດສັງຄົມນິຍົມກໍຂຶ້ນທະວີ-ຂຶ້ນ ໗,໖ ເທົ່າ ສ່ວນຢູ່ພາກສ່ວນທີ່ເຫລືອໃນໂລກ ຜົນຜະລິດ

ກັບເພີ່ມຂຶ້ນແຕ່ ໑,໗ ເທົ່າ ( ໗໔% ຢູ່ໃນປະເທດ ນາຍທຶນ ອຸດສາຫະກຳ ).

ຢູ່ໃນບາງປະເທດ, ບາດກ້າວເດີນອັນຫຍຸ້ງຍາກ ຢູ່ໃນການສະຖາປະນາສັງຄົມແບບໃໝ່, ຄວາມພະຍາຍາມອັນແນ ໃສ່ທັບມ້າງການຕ້ານຍັນຂອງຝ່າຍສັດຕູຂອງລະບອບ ສັງຄົມນິຍົມກໍບໍ່ປາສະຈາກຄວາມຜິດພາດອັນສຳຄັນຫລາຍອັນ. ຢູ່ໃນຫຼາຍກໍລະນີໄດ້ມີການຕີລາຄາຕ່ຳຈຸດພິເສດຢູ່ໃນການຂະຫຍາຍຕົວຂອງປະເທດເອງຫລືກົງກັນຂ້າມເພີ່ມບໍ່ກຳເສັ້ນສາຍສຳຄັນຢູ່ໃນກົດເກນທົ່ວໄປຂອງການສະຖາປະນາລະບອບສັງຄົມນິຍົມ ໂດຍຍົກເອົາເອກະລັກແຫ່ງຊາດມາຂຶ້ນໜ້າ ແລະຖືເອົາຜົນປະໂຫຍດຊາດມາຂັດກັບຜົນປະໂຫຍດ ແລະ ເປົ້າໝາຍລວມຂອງວົງຄະນາຍາດສັງຄົມນິຍົມ. ແນວຄິດຂອງພວກລັດທິ ແກ້ກັບພວກຊາດນິຍົມເຊິ່ງແຜ່ຂະຫຍາຍຫລາຍຢູ່ໃນບາງ ປະເທດໄດ້ຮັບການອູ້ມຊູຈາກ " ເສດເຫລືອ " ຂອງຊົນຊັ້ນ ຂູດຣີດທີ່ຖືກໂຄ່ນລົ້ມໄປແລ້ວ ແລະ ຈາກພາກສ່ວນໜຶ່ງຂອງຊົນ ຄົນນາຍທຶນນ້ອຍ. ພວກປະຕິການສາກົນເຊິ່ງຄວາມພະຍາ ຍາມກີດຂວາງການປະກົດຕົວຂອງລັດສັງຄົມນິຍົມຂອງເຂົາ ໄດ້ປະສົບກັບຄວາມປະລາໄຊໄປແລ້ວນັ້ນ ກໍໄດ້ຊ່ວຍເຫລືອພວກວົງການລັດທິແກ້ ແລະ ຊາດນິຍົມຢ່າງຫ້າວຫັນ ໂດຍຄາດຫວັງ-ໃສ່ການແບ່ງປັນປະເທດເຫລົ່ານີ້ຈາກພາຍໃນ. ໃນສ່ວນຫລວງຫລາຍແລ້ວ ພວກລັດທິແກ້ກັບພວກຊາດນິຍົມໄດ້ປະສົບກັບການໂຕ້ຕອບອັນເຂັ້ມແຂງໃນທັນທີທັນໃດຈາກພັກກອມມູນິດ ຈາກ

ຊົນຊັ້ນກຳມະກອນ ແລະ ພວກເຂົາທັງບໍ່ຮູ້ຈັກຖ່ວງດຶງການຂະຫຍາຍຕົວທາງດ້ານສັງຄົມ ແມ່ນແຕ່ໜ້ອຍດຽວ.

ລະຫວ່າງຊຸມປີ ໕໐ ນັ້ນ ບັນດາປະເທດສັງຄົມນິຍົມ ໄດ້ກ້າວເຂົ້າສູ່ໄລຍະໃໝ່ ແຫ່ງການຂະຫຍາຍຕົວ. ສະຫະພາບໂຊວຽດເຂົ້າເຖິງຂັ້ນ ສັງຄົມສັງຄົມນິຍົມຂະຫຍາຍຕົວ, ປະເທດອື່ນໆຂອງວົງຄະນາຍາດສັງຄົມນິຍົມ ກໍ່ວາງພື້ນຖານ ສຳລັບລະບອບສັງຄົມນິຍົມສຳເລັດລົງ. ຄືດັ່ງບັນດາພັກກອມມູນິດຕ່າງໆຖືເອົາການກໍ່ສ້າງຮາກຖານຂອງລະບອບສັງຄົມນິຍົມຢູ່ໃນບູນກາຣີ, ເຊັກໂກສະໂລວາກີ, ຮົງກາຣີ, ສາທາລະນະລັດປະຊາທິປະໄຕເຢຍລະມັນ ແລະ ມົງໂກລີ ໄດ້ສຳເລັດ ຮຽບຮ້ອຍໃນປີ ໑໙໕໘, ໑໙໖໑, ໑໙໖໔, ໑໙໕໘ ແລະ ໑໙໖໐ ຕາມລຳດັບ. ເຫັນໄດ້ວ່າມີການປັບປຸງອຳນາດທາງດ້ານການເມືອງຂອງກຳມະກອນ ແລະ ຊາວນາ, ການເປັນເຈົ້າກຳມະສິດຮວມໝູ່ແບບສັງຄົມນິຍົມ ຕໍ່ພາຫະນະການຜະລິດ ໝັ້ນຄົງເຂັ້ມແຂງຂຶ້ນ. ປະເທດທັງຫລາຍເຊິ່ງເຄີຍຢູ່ພາຍໃຕ້ ລະບອບນາຍທຶນນັ້ນ ໄດ້ເປັນພຽງແຜ່ນດິນຕໍ່ເຕີມ ແລະ ບໍ່ອັດຖຸດິບຕໍ່ເຕີມຂອງມະຫາອຳນາດຈັກກະພັດນັ້ນ ໄດ້ປ່ຽນຮູບມາເປັນລັດອຸດສາຫະກຳ ແລະ ກະສິກຳອັນເຂັ້ມແຂງ ສາມາດນຳພາພາລະກິດສັງຄົມ ແລະ ວັດທະນະທຳຢ່າງກວ້າງຂວາງ.

ການສະຖາປະນາສັງຄົມ ສັງຄົມນິຍົມຂະຫຍາຍຕົວໃນສະຫະພາບໂຊວຽດ ແລະ ການກໍ່ສ້າງຮາກຖານລະບອບສັງຄົມນິຍົມ ຢູ່ໃນປະເທດອ້າຍນ້ອງອື່ນໆ ປະກອບຕົວເປັນຜົນສຳເລັດ

ອັນມະຫາສານຂອງລະບອບສັງຄົມນິຍົມແຫ່ງໄລຍະນັ້ນມັນໝາຍເຖິງຄວາມກ້າວໜ້າໃນດ້ານເສດຖະກິດສັງຄົມ-ການເມືອງ, ແລະ ແນວຄິດ. ກອງປະຊຸມນາໆຊາດຂອງພັກກອມມູນິດແລະກຳມະກອນເມື່ອປີ ໑໙໖໐ ນັ້ນໄດ້ກ່າວເຖິງຄຳສະຫລຸບ ທີ່ວ່າໃນປະຈຸບັນນີ້ຄວາມອາດສາມາດຟື້ນຟູລະບອບນາຍທຶນໃນທາງສັງຄົມເສດຖະກິດ ໄດ້ຖືກລົບລ້າງບໍ່ພຽງແຕ່ຢູ່ໃນສະຫະ ພາບໂຊວຽດເທົ່ານັ້ນ ແຕ່ຢູ່ໃນປະເທດສັງຄົມນິຍົມອື່ນໆກໍເຊັ່ນດຽວກັນ ( ເອກະສານໂຄງການ ຂອງການຕໍ່ສູ້ເພື່ອສັນຕິພາບ ປະຊາທິປະໄຕ ແລະ ສັງຄົມນິຍົມ. ມົດສະກູ, ໑໙໖໔, ໜ້າ ໔໙ ພາສາລັດເຊຍ ).

ໃນເຄິ່ງຫລັງຂອງຊຸມປີ ໖໐, ພັກກອມມູນິດຂອງບັນດາ-ປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ກໍໄດ້ດຳເນີນບາດກ້າວ ສູ່ການສະຖາປະນາລະບອບສັງຄົມນິຍົມຂະຫຍາຍຕົວເຊັ່ນ ດຽວກັນ.

ໄລຍະສັງຄົມນິຍົມແກ່ຕົວ ຂະຫຍາຍຕົວເກີດຂຶ້ນຢູ່ໃນທຸກໆປະເທດສັງຄົມນິຍົມ ບໍ່ວ່າຈະມີເອກະລັກແບບໃດກໍຕາມແຕໄລຍະດັ່ງກ່າວກໍເປັນຄືຕ່ອງໂສ້ຈຳເປັນຕ່ອງໂສ້ໜຶ່ງຕາມກົດເກນຕັກກະສາດຂອງການດັດປ່ຽນແບບສັງຄົມນິຍົມ ແລະເປັນຄືກັບໄລຍະຍືດເຍື້ອບັ້ນໜຶ່ງຂອງການຂະຫຍາຍຕົວຈາກລະບອບທຶນນິຍົມໄປສູ່ລະບອບກອມມູນິດ.

ແມນບັນດາພັກກອມມູນິດອ້າຍນ້ອງເປັນຜູ້ຮ່າງວາງທັດສະນະພາບຂອງສັງຄົມ ສັງຄົມນິຍົມຂະຫຍາຍຕົວອອກບົນພື້ນຖານ

ປົກຄຣອງຕົວຈິງອັນອູດົມສົມບູນ ແລະ ຈາກການຄົ້ນຄວ້າ ໃນທາງທິດສະດີຢ່າງເລິກເຊິ່ງໂດຍອີງໃສ່ການຕີລາຄາຂອງ ວ. ອີ.ເລນິນ ທີ່ວ່າ ສັງຄົມສັງຄົມນິຍົມຂະຫຍາຍຕົວ " ແມ່ນໄລຍະໜຶ່ງຂອງຂັ້ນຕອນທຳອິດແຫ່ງສັງຄົມກອມມູນິດ, ຊຶ່ງໃນນັ້ນລະບອບສັງຄົມນິຍົມເຂັ້ມແຂງຂຶ້ນຢ່າງຕົ້ນປຽນແລວແລະເປັນຜ່າຍມີໄຊຢ່າງເດັດຂາດແລ້ວ ". ຄືດັ່ງລັດຖະທຳມະນູນແຫ່ງ ສ.ສ.ສ.ຊ.ບົ່ງໄວ້ນັ້ນແລ້ວວ່າ ລະບອບສັງຄົມນິຍົມຂະຫຍາຍຕົວ ແມ່ນ " ສັງຄົມໜຶ່ງທີ່ໃຫ້ກຳເນີດກຳລັງການຜະລິດ ອັນເຂັ້ມແຂງ, ວິທະຍາສາດ ແລະ ວັດທະນະທຳອັນກ້າວໜ້າ, ແມ່ນສັງຄົມໜຶ່ງຊຶ່ງໃນນັ້ນ ຄວາມຢູ່ດີກິນດີຂອງປະຊາຊົນ ນັບມື້ນັບເພີ່ມທະວີຂຶ້ນ ແລະ ແມ່ນບ່ອນທີ່ເງື່ອນໄຂສຳລັບການຂະຫຍາຍຕົວຢ່າງສົມສ່ວນຂອງບຸກຄົນ <u>ນັບມື້ນັບສະດວກດີຂຶ້ນ</u> ". ( ລັດຖະທຳມະນູນ ( ກົດໝາຍພື້ນຖານ ) ຂອງສະຫະ - ພາບ ສາທາລະນະລັດສັງຄົມນິຍົມໂຊວຽດ . ສຳນັກພິມກ້າວໜ້າ " ມົດສະກູ, ໑໙໘໐ ໜ້າ ໕.) ເຫັນໄດ້ວ່າ ແບບແຜນການດຳລົງຊີວິດແບບສັງຄົມນິຍົມ ເຊິ່ງຜ່ານການ ຂະຫຍາຍຕົວມາລະດັບໜຶ່ງແລ້ວນັ້ນ ໄດ້ເຂັ້ມແຂງໜັກແໜ້ນຂຶ້ນ ມັນແມ່ນປະກົດການໃໝ່ອຽມຢ່າງໜຶ່ງໃນປະຫວັດສາດ ແຫ່ງທາງສະຫະທາຂອງໂລກ. ລັກສະນະສະເພາະຂອງມັນ ແມ່ນການຜ່ານຜ່າເຣງງານອູດີດ ແລະ ການດັດປຽນອັນນີ້ ມາເປັນໜ້າທີ່ລວມຂອງສະມາຊິກໃນສັງຄົມ ໂດຍອາໄສ ຄວາມຈະເລີນພາຍໃນຕົວບຸກຄົນເອງ. ເຫັນໄດ້ວ່າແນວຄິດຮ່ວມໝູ່

ອັນແທ້ຈິງເຊິ່ງສົມທົບເຂົ້າກັບຫລັກການສ່ວນບຸກຄົນ ຢ່າງສະຫນິດແຫນ້ນນັ້ນ ກໍໄດ້ຫມັ້ນຄົງເຂັ້ມແຂງຂຶ້ນ. ມະນຸດກາຍເປັນຜູ້ມີຄຸນຄ່າສູງສຸດຂອງສັງຄົມ, ການພົວພັນຂອງມະນຸດກັບ ສັງຄົມ ນັບມື້ນັບກົມກຽວຂຶ້ນ. ແບບແຜນການດຳລົງຊີວິດແບບສັງຄົມນິຍົມ ອາບເອີບໄປດ້ວຍແນວຄິດສາກົນນິຍົມ.

ໃນເຄິ່ງຫລັງຂອງຊຸມປີ ໗໐ ແລະ ໃນຕົ້ນຊຸມປີ ໘໐ຊາວຜູ້ອອກແຮງງານໃນບຸນກາຣີ, ຣົງກາຣີ, ສ.ປ.ຢ.ແລະເຊັກໂກສະໂລວາກີ ຍັງຄົງສືບຕໍ່ສະຖາປະນາລະບອບສັງຄົມ ນິຍົມຂະຫຍາຍຕົວຢູ່ໂດຍກໍ່ສ້າງເງື່ອນໄຂອັນຈຳເປັນຕໍ່ການກາວໄປສູ່ລະບອບກອມມູນິດເທື່ອລະຂັ້ນ. ຊາວຜູ້ອອກແຮງງານ ຣູມານີ ລ້ວນມີປະຕິບັດໂຄງການສະຖາປະນາລະບອບສັງຄົມນິຍົມຂະຫຍາຍຕົວ ແລະ ກາວຄືບໄປສູ່ສັງຄົມກອມມູນິດເປັນຂັ້ນໆ.ປະຊາຊົນຢູໂກສະລາວີ ໄດ້ປະສົບຜົນສຳເລັດອີກຄັ້ງໃຫມ່ໃນການສະຖາປະນາລະບອບສັງຄົມນິຍົມ. ຢູ່ມົງໂກລີ ການປະຕິ ບັດໂຄງການເພື່ອສຳເລັດການສະຖາປະນາລະບອບສັງຄົມ ນິຍົມແລະ ການດັດປ່ຽນ ສ.ປ.ມ ໃຫ້ກາຍເປັນປະເທດອຸດສາຫະກຳ ແລະ ກະສິກຳກໍໄດ້ກາຍເປັນຕົວຈິງແລ້ວ. ກູຍບາ ກໍໄດ້ປະສົບກັບຄວາມກ້າວຫນ້າຄັ້ງສຳຄັນຢູ່ໃນເສັ້ນທາງການ ປ່ຽນແປງແບບສັງຄົມນິຍົມ. ປະຊາຊົນຫວຽດນາມ ກຳລັງແກ້ໄຂພາລະອັນຫນັກຫນ່ວງໃນການຟື້ນຟູ ແລະ ການຂະຫຍາຍ ຕົວແຫ່ງເສດຖະກິດຂອງຕົນ ພາຍຫລັງສົງຄາມມາຣຸເຜ ທຳລາຍຢ່າງນີ້, ພວກເຂົາພວມກຳລັງກໍ່ສ້າງສັງຄົມແບບສັງຄົມນິຍົມ.

ການສ້າງສາລະບອບສັງຄົມນິຍົມຢູ່ໃນສາທາລະນະລັດ ປະຊາ
ທິປະໄຕ ປະຊາຊົນເກົາຫລີ ດຳເນີນໄປພາຍໃນສະພາບການ
ອັນສັບສົນແຫ່ງການຕໍ່ສູ້ເພື່ອເຕົ້າໂຮມປະເທດຊາດບົນພື້ນຖານ
ຫລັກການປະຊາທິປະໄຕ. ປະເທດລາວ ແລະ ສາທາລະນະ
ລັດ ປະຊາຊົນກຳປູເຈຍ ກໍເຊັ່ນດຽວກັນ ກຳລັງດຳເນີນຂາດ
ກາວຕັດປ່ຽນອັນເລິກເຊິ່ງຢູ່ໃນທຸກຂົງເຂດຂອງສັງຄົມ ໂດຍ
ເດີນຕາມເສັ້ນທາງຂະຫຍາຍຕົວແບບສັງຄົມນິຍົມ ແບບຫລີກ-
ເວັ້ນຈາກລະບອບທຶນນິຍົມ.

ໃນປະຈຸບັນ ບັນດາປະເທດໃນວົງຄະນາຍາດສັງຄົມ ນິ
ຍົມແຫ່ງເລກ ກາວມາເຖິງຂັ້ນຂະຫຍາຍຕົວເຕັມສ່ວນອັນແມ່ນ
ລະດັບທີ່ທາດແທ້ສັງຄົມນິຍົມຂອງລະບອບໃໝ່ ພ້ອມກັບ ທ່າດີ
ເໜືອກວ່າລະບອບທຶນນິຍົມຂອງມັນນັບມື້ນັບສຳແດງໂຕ ອອກ
ຢ່າງສົມບູນກວ່າເກົ່າ. ປະເທດເຫລົ່ານັ້ນກາວເຖິງລະດັບເສດ
ຖະກິດທີ່ອະນຸມັດໃຫ້ແກ້ໄຂພາລະໜ້າທີ່ແບບມີຄຸນນະພາບໃໝ່
ທັງມີຂອບເຂດກວ້າງຂວາງຂັ້ນນຳໜ້າ. ມີການປ່ຽນແປງແບບ
ກາວໜ້າ ແລະ ເລິກເຊິ່ງຢູ່ໃນໂຄງຮ່າງການຜະລິດຂອງສັງ
ຄົມຕາມຂະແໜງການ ແລະ ເຂດທ້ອງຖິ່ນ, ຢູ່ໃນວິທະຍາ-
ການ ແລະ ເຕັກນິກ, ຢູ່ໃນລັກສະນະ ແລະຄຸນນະພາບຂອງ
ວຽກງານ, ຢູ່ໃນການພົວພັນການຜະລິດ ແບບສັງຄົມນິຍົມ.
ພັກກອມມູນິດຂອງປະເທດສັງຄົມນິຍົມປະຕິບັດນະໂຍບາຍການ
ເມືອງທີ່ແນໃສ່ຍົກຄຸນນະພາບ ແລະ ປະສິດທິພາບ ຂອງການ
ຜະລິດ ແລະ ຂອງການເຄື່ອນໄຫວເພື່ອສັງຄົມທຸກໆ ປະເພດ

ໂດຍນຳໃຊ້ໝາກຜົນຂອງດ້ານວິທະຍາສາດ ແລະເຕັກນິກໃນຂອບເຂດກວ້າງໃຫຍ່ຂຶ້ນທຸກໆມື້ ແລະ ທັງສົມທົບສິ່ງດັ່ງກ່າວເຂົ້າໃສ່ກັບທ່າດີກວ່າຂອງລະບອບສັງຄົມນິຍົມ. ລະບອບ ປະຊາທິປະໄຕ ແບບສັງຄົມນິຍົມ ຍາມໃດກໍເລິກເຊິ່ງ ແລະກ້າວໜ້າທັນສະໄໝຂຶ້ນຢ່າງບໍ່ຢຸດຢັ້ງ.

ຜົນສຳເລັດທັງຫລາຍເຊິ່ງປະເທດສັງຄົມນິຍົມເກັບກຳໄດ້ຢູ່ໃນຂອບເຂດການດຳລົງຊີວິດໃນສັງຄົມ ແບບຕ່າງໆນັ້ນ,ມາໃນໄລຍະຊຸມປີຫລັງນີ້ ໄດ້ບົ່ງໄວ້ຢ່າງຖືກຕ້ອງຕາມກົດໝາຍຢູ່ໃນເອກະສານອັນເໝາະສົມ ນັບທັງຢູ່ໃນລັດຖະທຳມະນູນສະບັບໃໝ່ນຳ. ໄດ້ມີການຮັບຮອງເອົາເອກະສານນີ້ຢູ່ ສ.ປ.ຢ ໃນປີ ໑໙໖໘, ຢູ່ບູນກາຣີ ໃນປີ ໑໙໗໑, ຢູ່ ຮົງກາຣີ ໃນປີ ໑໙໗໒, ຢູ່ ຣູມານີ ໃນປີ ໑໙໗໕. ໃນປີ ໑໙໗໗ ສ.ສ.ສ.ຊ ກໍໄດ້ຮັບຮອງເອົາລັດຖະທຳມະນູນສະບັບໃໝ່ ທີ່ຕ່າງໜ້າໃຫ້ແກ່ກົດໝາຍພື້ນຖານຂອງປະເທດທີ່ໄດ້ກໍ່ສ້າງສັງຄົມສັງຄົມນິຍົມຂະຫຍາຍຕົວແລ້ວ.

ໃນໄລຍະການສະຖາປະນາລະບອບສັງຄົມນິຍົມນີ້ ໂຄງຮ່າງຊົນຊັ້ນຂອງປະຊາຊົນໄດ້ປ່ຽນແປງໄປຢ່າງຫລວງຫລາຍ. ດ້ວຍບໍ່ມີເຈົ້າທີ່ດິນ ແລະ ນາຍທຶນອີກແລ້ວ, ຊົນຊັ້ນ ກຳມະກອນກາຍເປັນກຳລັງແຮງນຳພາຂອງສັງຄົມ. ຊົນຊັ້ນນີ້ ໄດ້ເຕີບໃຫຍ່, ໄດ້ເສີມສ້າງຖານະຂອງພວກຕົນໃຫ້ເຂັ້ມແຂງທັງໄດ້ຫລໍ່ຫລອມຕົນເອງໃນໄລຍະລອກຄາບອັນເລິກເຊິ່ງຂອງສັງຄົມ. ຕົວຢ່າງຢູ່ໃນຮົງກາຣີ ຈຳນວນກຳມະກອນເພີ່ມຂຶ້ນຫລາຍ

ກວ່າສາມເທົ່າ ເມື່ອທຽບໃສ່ປີ ໑໙໓໘, ຢູ່ໂປໂລຍ ຈຳນວນດັ່ງກ່າວເພີ່ມຂຶ້ນສອງເທົ່າ. ຊົນຊັ້ນຊາວນາກໍດັດແປງຕົນເອງຢ່າງ ເຖິງກົກເຖິງຮາກ. ຊາວນາເອກະເທດ ເຊິ່ງສະໄໝກ່ອນ ດຳລົງຊີວິດຢູ່ດ້ວຍການມີກຳມະສິດທີ່ດິນສ່ວນຕົວໄດ້ເຕົ້າໂຮມກັນເຂົ້າຢູ່ພາຍໃນສະຫະກອນ.

**ການຈັດແບ່ງພົນລະເມືອງຢູ່ໃນກຸ່ມສັງຄົມ[໑)]**

( ເປັນ % ໂດຍປຽບໃສ່ພົນລະເມືອງທັງໝົດຂອງປະເທດ-ຫລັງຈາກຫັກລົບຍອດຂອງການລົງທະບຽນ ).

| ຊື່ປະເທດ, ປີ | | ກຳມະກອນແລະພະນັກງານ | ຊາວນາແລະຊາງຫັດຖະກຳລວມໝູ່ | ຊາວນາແລະຊາງຫັດຖະກຳເອກະເທດ | ວິຊາຊີບອິດສະຫລະແລະປະຊາຊົນກຸ່ມອື່ນໆ |
|---|---|---|---|---|---|
| ກູບາ | - ໑໙໕໓ | ໕໗,໙ | ໐,໑ | ໔໑,໔ | ໐,໖ |
| | - ໑໙໗໐ | ໖໙,໕ | ໑໘,໘ | ໑໑,໒ | ໐,໕ |
| ສ.ປ.ຢ | - ໑໙໖໔ | ໘໐,໕ | ໑໑,໕ | ໔,໐ | ໔,໐ |
| | - ໑໙໗໑ | ໘໒,໓ | ໑໑,໗ | ໓,໗ | ໒,໓ |
| ສ.ສ.ສ.ຊ | - ໑໙໕໙ | ໖໘,໓ | ໓໑,໔ | ໐,໓ | |
| | - ໑໙໗໗ | ໘໔,໙ | ໑໕,໐ | ໐, | |
| ສ.ສ.ຊ | - ໑໙໖໑ | ໘໔,໒ | ໑໑,໙ | ໓,໘ | ໐,໑ |
| | - ໑໙໗໗ | ໘໙,໖ | ໙,໖ | ໐,໘ | - |
| ບູນກາຣີ | - ໑໙໕໖ | ໔໓,໙ | ໓໗,໐ | ໑໘,໑ | ໑,໐ |
| | - ໑໙໗໕ | ໘໓,໘ | ໑໕,໔ | ໐,໔ | ໐,໔ |
| ໂປໂລຍ | - ໑໙໖໐ | ໖໐,໔ | ໒,໗ | ໓໖,໘ | ໐,໑ |
| | - ໑໙໗໔ | ໗໒,໒ | ໓,໒ | ໒໓,໖ | ໐,໕ |
| ມົງໂກລີ | - ໑໙໖໓ | ໔໖,໔ | ໔໓,໓ | ໑໐,໒ | ໐,໒ |
| | - ໑໙໖໙ | ໕໖,໔ | ໔໓,໔ | ໐,໑ | ໐,໑ |
| ຣູມານີ | - ໑໙໕໖ | ໓໗,໐ | ໘,໓ | ໕໓,໗ | ໑,໐ |
| | - ໑໙໖໖ | ໕໒,໒ | ໔໐,໙ | ໖,໑ | ໐,໘ |
| ຮົງກາຣີ | - ໑໙໗໐ | ໗໕,໕ | ໒໑,໔ | ໒,໘ | ໐,໓ |

໑) ວາລະສານສະຖິຕິລາຍປີຂອງປະເທດ ສະພາຊ່ວຍເຫລືອຊຶ່ງກັນແລະກັນ (໑໙໗໘ ໜ້າ ໑໕ ).

ເຖິງຢ່າງໃດກໍຕາມ ໃນໄລຍະການຂະຫຍາຍຕົວ ເປັນຂັ້ນໆນີ້ ບັນດາປະເທດສັງຄົມນິຍົມຍັງປະເຊີນ ກັບບັນຫາ ສັບສົນອີກ. ເຫດທີ່ວ່າ ກ່ອນການປະຕິວັດນັ້ນ. ຫລາຍໆ ປະເທດສັງຄົມນິຍົມເຄີຍເປັນຂ້າທາດຂອງຈັກກະພັດຜູກຂາດແລະເຄີຍຫລ້າຫລັງທາງດ້ານເສດຖະກິດມາແລ້ວດັ່ງນັ້ນ ຍັງຄົງມີຮ່ອງຮອຍໃຫ້ຮູ້ສຶກຢູ່ສະເໝີ. ຄວາມຫຍຸ້ງຍາກບາງອັນຕິດພັນ ກັບຄວາມບໍ່ສົມສ່ວນຢູ່ໃນລະບົບເສດຖະກິດ, ຄວາມບໍ່ສົມສ່ວນອັນເກີດຈາກຄວາມຂາດເຂີນທາງດ້ານບໍ່ວັດຖຸດິບຂອງຫລາຍໆປະເທດ ແລະ ກັບການເຕີບໃຫຍ່ແບບບໍ່ສະໝ່ຳສະເໝີ ຢູ່ໃນບາງຂະແໜງອຸດສາຫະກຳ. ຢູ່ໃນບາງປະເທດ, ການກະສິກຳຊັກຊ້າຫລ້າຫລັງກວ່າຈັງຫວະການເຕີບໃຫຍ່ຂອງອຸດສາຫະກຳ, ສິ່ງດັ່ງກ່າວກີດຂວາງຄວາມຮຸ່ງເຮືອງຂອງເສດຖະກິດ-ໃນທົ່ວໆໄປ. ຢູ່ໃນເຄິ່ງຫລັງຂອງຊຸມປີ ໗໐, ບໍ່ແຮງງານຕົນມີໃນຫລາຍໆປະເທດເຫືອດແຫ້ງໄປ ແລະ ດອຍເຫດນີ້ ການເຕີບໃຫຍ່ຂອງລາຍໄດ້ແຫ່ງຊາດຈຶ່ງແນ່ນອນຮັບປະກັນໄດ້ກໍແຕ່ຍ້ອນການເພີ່ມທະວີທາງດ້ານຜະລິດຕະພາບຂອງແຮງງານ , ແລະ ປະສິດທິຜົນຂອງການຜະລິດສັງຄົມເທົ່ານັ້ນ. ເພິ່ນເຫັນວ່າອິດທິພົນຂອງມາດຕະການໃຈ້ແຍກເຊິ່ງບັນດາປະເທດສັງຄົມນິຍົມຮັບເອົາຈາກປະເທດສຸດຄາຂາຍຕາເວັນຕົກ ພ້ອມກັບອິດທິ-ພົນອັນຕັດສິນຂອງສະພາບເສດຖະກິດອັນບໍ່ອຳນວຍໃນທົ່ວໆໄປກຳລັງສະແດງຕົວອອກມາ. ເພິ່ນເຫັນຄວາມຫຍຸ້ງຍາກອັນຕິດພັນກັບການຕອບສະໜອງຢ່າງພຽງພໍໃນຄວາມຕ້ອງການ ອັນ

ນັບມື້ນັບຫລາຍຂຶ້ນ ທາງດ້ານວັດຖຸດິບ ໂປໂລຍຂຶ້ນມາ ໂດຍສະເພາະວັດຖຸທາງດ້ານພະລັງງານ. ເຖິງຈະມີຄວາມຫຍຸ້ງຍາກເພີ່ມທະວີຂຶ້ນໃນດ້ານການຍົກຍ້າຍບ່ອນກັ່ນນ້ຳມັນດິບແລະອາຍແກສ ຢູ່ເຂດກວາງໄກອອກໄປນຳຫູກໆມື້ກໍຕາມ ສະຫະ ພາບໂຊວຽດກໍຍັງຮັກສາບໍລິມາດການສົ່ງອາຍແກສ ແລະຜະລິດຕະພັນຈາກນ້ຳມັນດິບໃຫ້ແກ່ປະເທດສັງຄົມນິຍົມຢູ່ໃນລະດັບສູງຢູ່. ວັດຖຸພະລັງງານສົ່ງອອກໄປຍັງລັດອ້າຍນ້ອງ ຍາມໃດກໍ ແມ່ນຂາຍໃຫ້ໃນລາຄາທີ່ໃຫ້ພົນດີກວ່າເມື່ອປຽບໃສ່ລາຄາຕະຫລາດໂລກ. ການຈັດສົ່ງວັດຖຸປະກອນຈາກໂຊວຽດ ຢ່າງຮັບປະກັນນັ້ນ ປະກອບສ່ວນເປັນພື້ນຖານອັນສຳຄັນສຳລັບການວາງແຜນເສດຖະກິດ. ໃນທາງປີ້ນກັນ ວັດຖຸປະກອນຈາກການ ຜະລິດອຸດສາຫະກຳ ແລະ ກະສິກຳ ມາຈາກປະເທດອ້າຍນ້ອງອື່ນໆກໍມີຄວາມສຳຄັນຢ່າງຫລວງຫລາຍສຳລັບການຂະຫຍາຍຕົວ - ຂອງເສດຖະກິດໂຊວຽດ.

ທາດແທ້ຂອງລະບອບສັງຄົມນິຍົມເອງ ແມ່ນປາສະ ຈາກຄວາມຂັດແຍ່ງອັນເປັນລັກສະນະສະເພາະຕົວຂອງລະບອບທຶນນິຍົມ. ທ່າດີຂອງລະບອບສັງຄົມໃໝ່ ການຊ່ວຍເຫລືອຊຶ່ງກັນແລະກັນ ລະຫວ່າງລັດສັງຄົມນິຍົມ ອຳນວຍໃຫ້ບັນດາປະເທດເຫລົ່ານັ້ນຜ່ານຜ່າເອົາຊະນະຄວາມຫຍຸ້ງຍາກທີ່ປະເຊີນໜ້າກັບພວກເຂົາໃນໄລຍະການຂະຫຍາຍຕົວຂອງປະເທດຊາດ. ນະໂຍບາຍການເມືອງແບບມາກຊິດ ເລນິນິດ ແລະສາກົນ ນິຍົມອັນສູດກົກສູດປາຍຂອງພັກກອມມູນິດ ແລະ ກຳມະກອນ ແມ່ນ

ປັດໄຈຕັດສິນໃນການຕໍ່ສູ້ເພື່ອສະຖາປະນາລະບອບສັງຄົມນິຍົມ ແລະລະບອບກອມມູນິດ.

ຜົນສຳເລັດທີ່ໄດ້ຮັບໃນໄລຍະ ຂະຫຍາຍຕົວຂອງ ເສດຖະກິດນັ້ນ ອຳນວຍໃຫ້ປະເທດອ້າຍນ້ອງແກ້ໄຂພາລະໜ້າ ທີ່ອັນສຳຄັນທາງດ້ານສັງຄົມ. ລັດສະມາຊິກຂອງສະພາ ຊ່ວຍເຫຼືອຊຶ່ງກັນແລະກັນ ທາງດ້ານເສດຖະກິດ ກຳລັງປັບປຸງ - ເງື່ອນໄຂການອອກແຮງງານຢ່າງເນື່ອງນິດ,ຍົກລະດັບຄວາມຢູ່ດີກິນດີຂອງປະຊາຊົນຂຶ້ນຫລາຍທີ່ສຸດ ທັງປະຕິບັດ ໂຄງການທາງດ້ານສັງຄົມເສດຖະກິດທີ່ຮັບຮອງເອົາໂດຍກອງປະຊຸມ - ໃຫຍ່ ຂອງພັກກອມມູນິດ ແລະ ກຳມະກອນຢ່າງມີຜົນສຳເລັດ. ສະມາຊິກສະພາ ຈັດສັນລາຍໄດ້ແຫ່ງຊາດໄວ້ເຖິງ ໗໕%ເພື່ອການບໍລິໂພກສາທາລະນະຊົນ ແລະ ສ່ວນບຸກຄົນ.ຕົວຢ່າງໃນໄລຍະແຜນການຫ້າປີຄືແຕ່ ໑໙໗໕–໑໙໘໐ ລາຍໄດ້ຕົວຈິງ ຕໍ່ປະຊາຊົນຜູ້ໜຶ່ງໃນປະເທດສະມາຊິກ ສ.ຊ.ສ ໄດ້ເພີ່ມ ຂຶ້ນ ໑໕% .

ຍົກຕົວຢ່າງ ປີ ໑໙໗໙ ແມ່ນປີທຳມະດາສາມັນປີໜຶ່ງ ຢູ່ໃນຊີວິດຂອງປະເທດສັງຄົມນິຍົມທັງຫລາຍ. ໃນປີນີ້ ລາຍໄດ້ຕົວຈິງ ຕໍ່ປະຊາຊົນຜູ້ໜຶ່ງໃນ ສ.ປ. ບູນກາຣີ ແລະ ສ.ສ. ຣູມານີ ໄດ້ສູງຂຶ້ນ ໔% ປຽບໃສ່ປີ ໑໙໗໘, ຢູ່ ສ.ສ.ສ.ຊ. ສູງຂຶ້ນ ໓ %, ຢູ່ ສ.ປ. ເຢຍລະມັນ ສູງຂຶ້ນ ໓,໔ %, ຢູ່ ສ.ປ. ມົງໂກລີ ແລະ ສ.ສ. ເຊັກໂກສະໂລວາກີ ( ລາຍໄດ້ເປັນເງິນສົດ ) ສູງຂຶ້ນ ໒,໙ % ແລະ ໓,໒ %ຕາມລຳ

ດັບ .

ເງິນເດືອນອັນສູງຂຶ້ນເລື້ອຍ ໆ ຂອງກຳມະກອນແລະພະນັກງານນັ້ນ ນັບວ່າແມ່ນບໍ່ເກີດຕົ້ນຕໍຂອງລາຍໄດ້ຕົວຈິງ ຂອງປະຊາຊົນ.

ປະເທດສະມາຊິກສະພາຊ່ວຍເຫລືອເຊິ່ງກັນ ແລະ ກັນໄດ້ແກ້ໄຂຢ່າງມີຜົນ ບັນຫາວ່າດ້ວຍການຕອບສະໜອງຢ່າງພຽງພໍຕໍ່ຄວາມຕ້ອງການຂອງປະຊາຊົນໃນດ້ານວັດຖຸ ບໍລິໂພກດ້ວຍການເພີ່ມທະວີການຜະລິດຂອງພວກຕົນເອງ ແລະ ທັງປັບ ປຸງຄຸນນະພາບຂອງມັນ. ທັງໝົດນີ້ສະແດງອອກຢູ່ໃນອັດຕາທະວີຂອງການແລກປ່ຽນສິນຄ້າຍ່ອຍ.

ການກໍ່ສ້າງບ້ານຢູ່ອາໄສ ກໍດຳເນີນໄປຢ່າງກວ້າງຂວາງ. ໃນລະຫວ່າງປີ ໑໙໗໙, ຢູ່ ສ.ປ. ບູນກາຣີ ໄດ້ມີການ ກໍ່ສ້າງເຮືອນພັກຫອງຊຸດເຖິງ ໖໕.໕໐໐ ບ່ອນ, ຢູ່ ສ.ປ ຮົງກາຣີ ມີ ໘໘.໓໐໐ ບ່ອນ, ຢູ່ ກູຍບາ ມີ ໔໐.໐໐໐ບ່ອນ, ຢູ່ ສ.ປ ເຢຍລະມັນ ມີ ໑໖໔.໗໐໐ ບ່ອນ ( ນັບລວມ ທັງຫ້ອງຊຸດທັນສະໄໝ ), ຢູ່ ສ.ປ ໂປໂລຍ ມີ ໔໘໕. ໐໐໐ ບ່ອນ ຢູ່ ສ.ສ ຣູມານີ ມີ ໑໓໑.໐໐໐ ບ່ອນ, ຢູ່ ສ.ສ.ສ. ຊ. ມີປະມານ ໔ ລ້ານບ່ອນ .

ໃນປີ ໑໙໗໙ ເພີ່ນຍັງສືບຕໍ່ປັບປຸງພື້ນຖານວັດຖຸຂອງການສຶກສາສາທາລະນະ ແລະຂອງການສິດສອນ ວັດທະນະ-ທຳ ແລະ ສາທາລະນະສຸກ.

ຢູ່ໃນບັນດາລັດ ສະມາຊິກສະພາຊ່ວຍເຫລືອເຊິ່ງກັນ ແລະ

ກັນບ່ອນເຮັດການຂອງປະຊາຊົນ ຜູ້ມີຄວາມສາມາດເຮັດວຽກ ແມ່ນຮັບປະກັນ. ຈຳນວນກຳມະກອນ ແລະ ພະນັກງານເຮັດວຽກຢູ່ໃນເສດຖະກິດແຫ່ງຊາດມີເຖິງ ໑໕໘ ລ້ານຄົນ.

ທ່ວງທ່າດີກວ່າຂອງແບບແຜນການດຳລົງຊີວິດແບບສັງຄົມນິຍົມ ສະແດງຕົວອອກຢ່າງປະຈັກແຈ້ງເປັນພິເສດ ເມື່ອເພິ່ນສົມທຽບມັນໃສ່ກັບສະພາບຂອງຊາວຜູ້ອອກແຮງງານຢູ່ໃນ ປະເທດນາຍທຶນທັງຫລາຍ. ປະເທດນາຍທຶນອຸດສາຫະກຳ ຈະເລີນແລ້ວ ໒໕ ປະເທດ ເຊິ່ງເປັນສະມາຊິກຂອງອົງການປະສານງານ ແລະ ພັດທະນາເສດຖະກິດ ມີຜູ້ຫວ່າງງານຢູ່ ໒໙ ລ້ານໃນທ້າຍປີ ໑໙໘໑, ໃນນັ້ນສະຫະລັດອາເມລິກາມີ ໙,໕ ລ້ານ, ອັງກິດມີ ໓ ລ້ານ, ອີຕາລີມີ ໒ ລ້ານ, ສ.ສ ເຢຍລະມັນ ໑,໗ ລ້ານ, ຍີ່ປຸ່ນ ໑,໒ ລ້ານ.

ຜົນລວມຍອດການພັດທະນາຂອງບັນດາປະເທດສະມາຊິກສະພາຊ່ວຍເຫລືອເຊິ່ງກັນແລະກັນ ຊີ້ບອກຢ່າງປະຈັກຕາ ເຖິງການປະຕິບັດແນວທາງຢ່າງສຸດກຶກສຸດປາຍ ຂອງພັກກອມມູນິດ ແລະ ກຳມະກອນ, ແນວທາງອັນແນໃສ່ສ້າງເປົ້າໝາຍ ສູງຍອດແຫ່ງລະບອບສັງຄົມນິຍົມໃຫ້ກາຍເປັນຈິງນັ້ນຄື: ທຸກສິ່ງທຸກຢ່າງເພື່ອມະນຸດ, ທຸກສິ່ງທຸກຢ່າງເພື່ອຄວາມຢູ່ດີກິນດີຂອງມະນຸດ !

ອີງໃສ່ຄວາມຈະເລີນທາງດ້ານສັງຄົມ-ເສດຖະກິດ ແລະ ການໄຂກວ້າງຂອບເຂດປະຊາທິປະໄຕ ສັງຄົມນິຍົມ, ຄວາມອາດສາມາດອັນນັບມື້ນັບກວ້າງຂວາງຈຶ່ງກໍ່ຕົວຂຶ້ນເພື່ອ ຄວາມ

ຈະເລີນແບບສົມສ່ວນຂອງຕົວບຸກຄົນ ແລະ ການສົມທົບອັນກົມກຽວລະຫວ່າງຜົນປະໂຫຍດຂອງເຂົາ ກັບຂອງຫມົດສັງຄົມ . ພົນລະເມືອງຂອງສັງຄົມສັງຄົມນິຍົມ ເປັນອິດສະຫລະ ຈາກການຂູດຣີດ ຈາກຜູ້ຂູດຣີດ, ພວກເຂົາຈຶ່ງໃຊ້ສິດທິທາງສັງຄົມອັນກວ້າງຂວາງເຊັ່ນ: ສິດທິໃນການເຮັດວຽກ, ໃນການສຶກສາ, ໃນບ່ອນຢູ່ອາໄສ ຍ້ອນການກໍ່ສ້າງທີ່ພັກພາອາໄສ ເຊິ່ງດຳເນີນຢູ່ພາຍໃນຂອບເຂດອັນກວ້າງຂວາງ, ສິດໃນການຮັບການປິ່ນປົວໂດຍບໍ່ເສຍຄ່າ. ເສລີພາບໃນການເລືອກອາຊີບ, ການຫມູນໃຊ້ສະມັດຖະພາບ ແລະ ພອນສະຫວັນຂອງເຂົາຢ່າງເປັນອິດສະຫລະທີ່ສຸດ ເພື່ອຄວາມຢູ່ດີກິນດີຂອງສັງຄົມ ແລະ ເພື່ອຜົນປະໂຫຍດຂອງຕົວບຸກຄົນເອງ ນັ້ນກໍ່ໃຫ້ຄົນເຮົາ ເກີດຄວາມແນ່ໃຈໃນວັນຂ້າງຫນ້າໃນກຳລັງແຮງຂອງຕົນ ແລະ ມີຄວາມເຄົາລົບນັບຖືໃນຕົວເອງ.

ໃນໄລຍະກໍ່ສ້າງສັງຄົມນິຍົມນີ້ ການຫັນປ່ຽນອັນຫນ້າ ສັງເກດຫລາຍຢ່າງໄດ້ເກີດຂຶ້ນຢູ່ໃນແນວຄິດຈິດໃຈຂອງຜູ້ຄົນ, ສະຕິຕື່ນຕົວຂອງມະຫາຊົນຜູ້ອອກແຮງງານໄດ້ກໍ່ຮູບຂຶ້ນແລວຢູ່ໃນ-ຂອບເຂດອັນກວ້າງຂວາງພາຍໃຕ້ອິດທິພົນກ້ານົກຂອງລັດທິ - ມາກຊິດ ເລນິນິດ, ຄຸນສົມບັດຂອງຄົນແບບໃຫມ່ແຫ່ງສັງ ຄົມສັງຄົມນິຍົມ ກໍ່ຮູບຂຶ້ນ, ແບບແຜນດຳລົງຊີວິດແບບສັງຄົມນິຍົມກໍ່ຂະຫຍາຍອອກ.

ຄວາມຍືນຍົງຂອງລັດທິມາກຊິດ-ເລນິນິດຢູ່ໃນປະເທດສັງຄົມນິຍົມ, ການເຕີບໃຫຍ່ຂອງກຳລັງແຫ່ງລັດທິນີ້ ຕິດພັນຢ່າງ

ສະໜິດແໜ້ນ ກັບການແກ້ໄຂບັນຫາການກໍ່ສ້າງ ສັງຄົມນິຍົມ ແລະ ກອມມູນິດ, ກັບການຍົກລະດັບແນວຄິດ ຢູ່ໃນພຶດຕິກຳການເມືອງ, ກັບການກໍ່ສ້າງຄົນແບບໃໝ່, ກັບການຂະຫຍາຍຕົວຂອງວັດທະນະທຳສັງຄົມນິຍົມ. ໃນເວລາດຽວກັນ ເພິ່ນກໍປັບປຸງການຕອບໂຕ້ການໂຄສະນາຂອງນາຍທຶນ, ປັບປຸງການຕໍ່ສູ້ຕ້ານພວກຝືນລັດທິກອມມູນິດ, ປັບປຸງການເຜີຍແຜ່ ລັກສະນະຕ້ານມະຫາຊົນຂອງສັງຄົມນາຍທຶນໃຫ້ຊາວຜູ້ອອກແຮງງານຮູ້ເຫັນ.

ການກໍ່ສ້າງໂລກທັດແບບມາກຊິດ-ເລນິນິດ ວິທະຍາ - ສາດຢູ່ໃນຕົວຊາວຜູ້ອອກແຮງງານທຸກຄົນ ຍັງຄົງເປັນ ວຽກງານໃຈກາງເຊິ່ງບັ້ງໄວ້ຢູ່ໃນເອກະສານຕ່າງໆ ຂອງພັກກອມມູນິດອ້າຍນ້ອງ. ນັ້ນມັນໝາຍຄວາມວ່າ ຄວາມສຳຄັນອັນດັບໜຶ່ງກໍແມ່ນການກໍ່ສ້າງສະຕິຕື່ນຕົວທາງການເມືອງ ໃນລະດັບສູງນັ້ນເອງ. ທ່ານ ລ.ເບຣຊເນຟ ໄດ້ເວົ້າຢູ່ໃນກອງປະຊຸມໃຫຍ່ຄັ້ງທີ ໒໕ ຂອງ ພ.ກ.ສ.ຊ ວ່າ: " ແມ່ນສະຕິ ຕື່ນຕົວຂອງມວນໝູ່ມະຫາຊົນນັ້ນເອງ ທີ່ເປັນກຳລັງແຮງຂອງລະບອບພວກເຮົາ ແລະ ພັກຖືວ່າຕົນມີໜ້າທີ່ເສີມຂະຫຍາຍສະຕິຕື່ນຕົວແບບກອມມູນິດຂອງຜູ້ຄົນ, ຄວາມອາດສາມາດ ຂອງພວກເຂົາ, ເຈດຈຳນົງຂອງພວກເຂົາແລະສະມັດຖະນະ ໃນການສ້າງລະບອບກອມມູນິດຂອງພວກເຂົາຢ່າງສະເໝີຕົ້ນສະເໝີປາຍ ". ( ເອກະສານຂອງກອງປະຊຸມໃຫຍ່ຄັ້ງທີ ໒໕ ຂອງພັກກອມມູນິດສະຫະພາບໂຊວຽດ. ໑໙໗໖, ໜ້າ ໗໑

ພາສາລັດເຊຍ ).

ມັນໝາຍເຖິງຄວາມເຂົ້າອົກເຂົ້າໃຈ ແລະ ການ ສະໜັບສະໜູນຂອງມວນໝູ່ມະຫາຊົນຕໍ່ແນວທາງຂອງພັກກອມມູນິດ; ການມີແນວຄິດອັນຖືກຕ້ອງຕໍ່ປະຫວັດການຕໍ່ສູ້ປະຕິວັດ - ແລະ ການກໍ່ສ້າງສັງຄົມນິຍົມ ຕໍ່ພົນສຳເລັດແລະ ບັນຫາຂອງລະບອບສັງຄົມນິຍົມທີ່ແທ້ຈິງ, ຕໍ່ເປົ້າໝາຍອັນແທ້ຈິງຂອງສົງຄາມຈິດຕະສາດຂອງຝ່າຍສັດຕູຊົນຊັ້ນ, ການຮູ້ຈັກຕອບໂຕ້ພວກເຂົາຢ່າງທັນການ.

ພັກກອມມູນິດຂອງປະເທດສັງຄົມນິຍົມອື່ນໆກໍ່ກຳນົດ ເປົ້າໝາຍຄ້າຍຄືກັນນີ້ສຳລັບຕົນເອງ. ຫຼັກການຕົ້ນຕໍອັນໜຶ່ງ - ຂອງວຽກງານສຶກສາແມ່ນກໍ່ສ້າງອົບຮົມແນວຄິດຮັກຊາດບົນຈິດໃຈຄວາມຈົງຮັກພັກດີຕໍ່ປະເທດຊາດສັງຄົມນິຍົມ, ບົນ ຈິດໃຈປັບປຸງບຳລຸງລັດສັງຄົມນິຍົມ ແລະ ສະຖາບັນຕ່າງໆຂອງລັດ, ບົນຈິດໃຈການປັບປຸງບຳລຸງລະບຽບວິໄນສາທາລະນະ, ຄວາມເຂົ້າອົກເຂົ້າໃຈໃນຄວາມເປັນເອກະພາບຂອງສິດທິແລະ ພັນທະກິລະນີຕ່າງໆຈົນຮອດຄວາມເລິກເຊິ່ງໃນອາລົມຈິດ ທະນົງຕົວດ້ອຍເຫດພົນທີ່ໄດ້ເປັນສ່ວນໜຶ່ງຂອງວົງຄະນາຍາດໄທຍ-ສັງຄົມນິຍົມ.

ການຕີຄວາມໝາຍຢ່າງຖືກຕ້ອງໃນທາດແທ້ຊົນຊັ້ນ ແລະ ຈຸດສະເພາະຂອງການພັນປ່ຽນເຊິ່ງພູດເກີດຂຶ້ນຢູ່ໃນສະພາບ-ການສາກົນນັ້ນ ແມ່ນເງື່ອນໄຂສຳຄັນຢ່າງໜຶ່ງ ຂອງການແກ້ໄຂພາລະໜ້າທີ່ທາງດ້ານແນວຄິດ. ພັກກອມມູນິດທັງ ຫຼາຍ

ຊອກທາງໃຫ້ຊາວຜູ້ອອກແຮງງານມີທັດສະນະຊຶມຊັບ ຕໍ່ການຕີຄວາມໝາຍເຫດການຕົວຈິງປະກົດການ ແລະ ຂະບວນບາດກ້າວເດີນຂອງຊີວິດສັງຄົມທຸກຢ່າງ. ພ້ອມກັນນີ້ ພວກເຮົາ ກໍເນັ້ນໜັກເຖິງຄວາມຈຳເປັນໃນການຖືສຳຄັນອິດທິພົນ ຂອງການຕໍ່ສູ້ອັນດຸເດືອດ ທາງດ້ານແນວຄິດ-ການເມືອງລະຫວ່າງກຳລັງແຮງຂອງສັງຄົມນິຍົມກັບທຶນນິຍົມໃນເວທີສາກົນ ທີ່ມີຕໍ່ຊີວິດພາຍໃນປະເທດ, ຄວາມຈຳເປັນໃນການເຂົ້າໃຈເຖິງ - ຄວາມສຳຄັນຂອງການຕໍ່ສູ້ອັນດຸເດືອດບໍ່ອ່ອນຂໍ້ຂອງຄວາມເປັນປໍລະປັກກັນ ລະຫວ່າງແນວຄິດໃໝ່ກັບແນວຄິດເກົ່າ ເພື່ອສະຖາປະນາເລກໃໝ່.

ການຮ່າງທິດສະດີອັນຈິງຈັງກ່ຽວກັບບັນຫາປະຈຸບັນຂອງວິວັດທະນາການທາງສັງຄົມ ການເມືອງສາກົນ ແລະການ ຕໍ່ສູ້ທາງດ້ານແນວຄິດ ຢູ່ໃນເວທີສາກົນແມ່ນຮາກຖານອັນໜຶ່ງສຳລັບການຮຸກຮານທາງດ້ານແນວຄິດທີ່ພືແຜ່ອອກໂດຍລະບອບສັງຄົມນິຍົມ. ເຫັນໄດ້ວ່າ ການຄົ້ນຄວ້າທາງທິດສະດີວ່າດ້ວຍບັນຫາຕົ້ນຕໍຂອງວິວັດທະນາການຂອງໂລກ ແລະ ການພົວພັນສາກົນ; ບາດກ້າວເດີນຂອງການປະຕິວັດ, ການປະສານພຶດຕິກຳ ແລະ ຄວາມເປັນເອກະພາບຂອງກະແສຕ່າງໆຂອງມັນ, ສາຍສຳພັນລະຫວ່າງການຕໍ່ສູ້ເພື່ອປະຊາທິປະໄຕ ແລະ ເພື່ອສັງຄົມນິຍົມ, ຄວາມເປັນປໍລະປັກລະຫວ່າງກຳລັງແຮງຕ່າງໆຢູ່ໃນບັນຫາໃຫຍ່ໃນຍຸກສະໄໝຂອງພວກເຮົາ ເຊັ່ນ ຄວາມເປັນປໍລະປັກລະຫວ່າງສົງຄາມ ແລະສັນຕິພາບ,ທັງໝົດເຫຼົ່າ

ນັບມື້ນັບມີຄວາມສຳຄັນຫລາຍຂຶ້ນ.

ຕາມຈິດໃຈຂອງພາລະໜ້າທີ່ເຫລົ່ານີ້, ສັດຈະວິພາກແຫ່ງການພົວພັນລະຫວ່າງການແຂ່ງຂັນອັນເປັນປະຫວັດການ ຂອງລະບົບສັງຄົມ ກົງກັນຂ້າມກັບການປະສານງານຂອງລັດຕ່າງໆທີ່ມີລະບອບສັງຄົມແຕກຕ່າງກັນ ນັ້ນຮຽກຮ້ອງໃຫ້ມີການ ວິໄຈອັນເລິກເຊິ່ງຢ່າງໜຶ່ງໃນດ້ານທິດສະດີ.

ຢູ່ໃນການເຄື່ອນໄຫວທາງດ້ານແນວຄິດເທິງເວທີ ສາກົນນັ້ນ ພັກກອມມູນິດແຫ່ງສະຫະພາບໂຊວຽດ ແລະ ພັກກອມມູ-ນິດທີ່ກຳອຳນາດພັກອື່ນໆກຳລັງຕໍ່ສູ້ຢ່າງຫາວຫັນເພື່ອເອົາຊະ-ນະແນວຄິດຕາຍຕົວທີ່ເວົ້າວ່າ ບໍ່ອາດມີການຜັນປ່ຽນອັນສຳຄັນອັນໃດອັນໜຶ່ງເກີດຂຶ້ນໄດ້ ຢູ່ໃນການພົວພັນສາກົນ ຕາບໃດທີ່ລັດທິຈັກກະພັດນິຍົມຄົງຕົວຢູ່. ແນວຄິດດັ່ງກ່າວເປັນອັນຕະລາຍເພາະວ່າມັນບໍ່ຮັບຮູ້ການປ່ຽນແປງສະຖານະການສາກົນ ແບບໃຫ້ທ່າດີແກ່ລະບອບສັງຄົມນິຍົມ, ມັນປະຕິເສດຄວາມອາດສາ-ມາດແບບໃໝ່ ເຊິ່ງພະລັງທະວີຂອງລະບົບສັງຄົມນິຍົມ ສະເໜີມອບໃຫ້ແກ່ຂະບວນປະຕິວັດ, ມັນຂັດຂວາງທຳລາຍການຕໍ່ສູ້ອັນຫ້າວຫັນເພື່ອສັນຕິພາບອັນຍຸຕິທຳ ຍືນຍົງລະຫວ່າງ ປະຊາຊາດຂອງກຳລັງທີ່ກ້າວໜ້າ.

ພັກກອມມູນິດຂອງປະເທດສັງຄົມນິຍົມໃຫ້ຄວາມສຳຄັນ - ເປັນພິເສດແກ່ການຕໍ່ສູ້ຕ້ານແນວຄິດນາຍທຶນ. ພວກເຂົາ ດຳເນີນວຽກງານທາງດ້ານທິດສະດີຂອງຕົນຢູ່ໃນການສູ້ຍັນ ອັນບໍ່ຢຸດເຊົາເປັນ ກັບພວກສັດຕູຂອງລະບອບສັງຄົມນິຍົມ, ຢູ່ໃນ

ການຕໍ່ສູ້ບຸກຄົນພວກຕ້ານລັດທິກອມມູນິດ ຕ້ານໂຊວຽດ ແລະລັດທິຊາດນິຍົມ, ຕ້ານທິດສະດີຫຼັກອັນ ແລະ ທັດສະນະພາບແບບຈັກກະພັດຫຼາຍຢ່າງ, ຕ້ານພວກສ່ວຍໂອກາດວຽງຂວາກັບພວກຊ້າຍຈັດ ໃນບັນຫາອັນກ່ຽວພັນກັບການວິວັດແຫ່ງສັງຄົມ.

ທັດສະນະຊົນຊັ້ນຕໍ່ການຕໍ່ສູ້ຕ້ານແນວຄິດນາຍທຶນນັ້ນບໍ່ພຽງແຕ່ຮຽກຮ້ອງໃຫ້ຕໍາໜິວິຈານທັດສະນະພາບແບບນາຍທຶນແລະແບບປະຕິຮູບນິຍົມຂອງພວກຕ່າງດ້າວຕໍ່ລັດທິມາກແບບໃດແບບໜຶ່ງທໍ່ນັ້ນ ແຕ່ມັນຍັງຮຽກຮ້ອງໃຫ້ເອົາໃຈຢ່າງເລິກເຊິ່ງ ບາດກ້າວເດີນຕົວຈິງເຊິ່ງກ່ຽວຂ້ອງ ເຖິງທັດສະນະພາບເຫຼົ່ານັ້ນອີກ. ໂດຍສ່ວຍໃຊ້ປະກົດການໃໝ່ໆໃນຄວາມເປັນຈິງ ປະຈຸບັນ ໂດຍສະເພາະອັນທີ່ຕິດພັນກັບການປະຕິວັດວິທະຍາສາດ-ເຕັກນິກ, ກັບສະຕິຊາດອັນນັບມື້ນັບຫລາຍຂຶ້ນ, ກັບການເຄື່ອນໄຫວທາງການເມືອງຂອງຊາວໜຸ່ມ ແລະ ອື່ນໆ ນັກແນວຄິດນາຍທຶນກໍາລັງພະຍາຍາມບິດເບືອນຄວາມໝາຍ ແລະລັກສະນະສະເພາະຂອງບາດກ້າວເດີນແຫ່ງສັງຄົມໃນປະຈຸບັນ. ແມ່ນຍ້ອນເຫດນີ້ແລ້ວທີ່ຢູ່ໃນການເຄື່ອນໄຫວທາງດ້ານແນວຄິດທຸກໆແບບຄວາມສໍາຄັນພິເສດຢ່າງໜຶ່ງຈຶ່ງຕົກເປັນນໍາການ ຂະຫຍາຍຕົວຂອງແນວຄິດ ແລະຂໍ້ວິນິດໄສທາງດ້ານທິດສະດີຂອງລັດທິມາກ. ແນວຄິດແຮກກໍ່ຂອງລັດທິເລນິນ, ການຂະຫຍາຍຕົວ ແລະ ຄວາມອຸດົມສົມບູນອັນຕໍ່ເນື່ອງຂອງທິດສະດີມາກຊິດ ເລນິນິດ ບົນພື້ນຖານການສະສົມບົດຮຽນປະຫວັດສາດໃໝ່ໆ ນັ້ນແມ່ນອຸປະກອນອັນດີສຸດຍອດຂອງການຕໍ່ສູ້ຕ້ານແນວຄິດນາຍທຶນ.

ບົດຮຽນພິສູດວ່າ ຢູ່ບ່ອນໃດມີຄວາມຜິດພາດແລະການຄິດໄລ່ຜິດຢູ່ໃນນະໂຍບາຍພາຍໃນ ບວກໃສ່ກັບການເຄື່ອນ ໄຫວແບບທຳລາຍຂອງພວກຈັກກະພັດ ຢູ່ບ່ອນນັ້ນກໍເກີດມີແກວຟື້ນຟູພຶດຕິກຳຂອງພວກບໍ່ລະປັກກັບລະບອບສັງຄົມນິຍົມໂລດ . ມັນເປັນເຊັ່ນນັ້ນແລ້ວລະຫວ່າງປີ ໑໙໘໐-໑໙໘໑ ຢູ່ໂປໂລຍ - ບ່ອນທີ່ພວກສັດຕູຂອງລະບອບສັງຄົມນິຍົມໄດ້ຮັບການສະໜັບສະໜູນຈາກກຳລັງພາຍນອກ, ດ້ວຍການສ້າງຄວາມ ສັບສົນວຸ່ນວາຍຂຶ້ນ ພວກເຂົາໄດ້ພະຍາຍາມເບັດສະພາບການ ໄປສູ່ການຕ້ານການປະຕິວັດ. ສະພາບການຢູ່ໂປໂລຍ ຊີ້ບອກ ອີກເທື່ອໜຶ່ງວ່າ ການຂາດຮຽງຫູຟັງທາງສຽງມະຫາຊົນຢ່າງ ເອົາໃຈໃສ່, ການຕໍ່ສູ້ຢ່າງເດັດຂາດຕ້ານກັບປະກົດການ ອາດຍາສິດທຸກແບບທຸກແນວກັບລັດທິປ່ອຍຕາມໃຈ, ການສົ່ງເສີມ ລະບອບປະຊາທິປະໄຕແບບສັງຄົມນິຍົມຢ່າງຫາວຫັນ ແລະ ການບັນລຸແນວທາງນະໂຍບາຍອັນເປັນຈິງສອດຄ່ອງເຫມາະສົມ ຢູ່ໃນການພົວພັນເສດຖະກິດພາຍນອກ ທັງໝົດນີ້ເປັນສິ່ງສຳຄັນທີ່ສຸດສຳລັບພັກເອງ ແລະ ສຳລັບການປັບປຸງບົດບາດການນຳຂອງພັກ.

ຜົນບັນລຸທຸກຢ່າງຂອງລະບອບສັງຄົມນິຍົມ ອາດເປັນ ໄປໄດ້ກໍແຕ່ຍ້ອນເຫດການອັນມີຄົນນັບແຕ່ຂັ້ນທຳອິດພຸ້ນແລ້ວລະບອບສັງຄົມນິຍົມເປັນຕົວແທນຂອງປະກົດການສາກົນອັນໜຶ່ງ, ມັນກໍຕົວຂຶ້ນໃນຖານະເປັນໜ່ວຍມິດຕະພາບແຫ່ງລັດຕ່າງໆ ແລະ ຂອງປະຊາຊາດທີ່ປະສານງານກັນເອງ, ໃນຖານະເປັນ ປະ

ຊາຄົມເສດຖະກິດ ການເມືອງ ແລະ ແນວຄິດ.

ການຫັນມາມີລັກສະນະສາກົນຂອງຊີວິດ ແລະຈິດໃຈທາງດ້ານເສດຖະກິດການເມືອງ ຂອງສັງຄົມ ແມ່ນກົດເກນພາວະວິໄສຂອງການພັດທະນາລະບອບສັງຄົມນິຍົມ. ທ່ານ ວ.ອີ . ເລນິນ ເນັ້ນຢ້ຳວ່າ " ລະບອບສັງຄົມນິຍົມ ມີເປົ້າໝາຍ ບໍ່ພຽງແຕ່ຍຸບເລີກການແບ່ງແຍກມະນຸດຊາດອອກຈາກກັນ ໃຫ້ເປັນລັດເລັກລັດນ້ອຍໂດດດ່ຽວ ເປັນຊາດໃຜຊາດລາວ, ບໍ່ພຽງແຕ່ຫຍັບບັນດາຊາດຕ່າງໆເຂົ້າຫາກັນເທົ່ານັ້ນ ແຕ່ຍັງເຊື່ອມໂຮມມັນເຂົ້າກັນ ". ( ວ.ອີ.ເລນິນ, ນິພົນຄົບຊຸດ, ເຫລັ້ມທີ ໔໗, ໜ້າ ໔໕໖ .) ອັນນັ້ນມັນໝາຍຄວາມ ວ່າແມ່ນບາດກ້າວເປັນອັນໆ ໄລຍະໜຶ່ງ ເຊິ່ງຈະກວມກິນເວລາທັງໝົດຍຸກປະຫວັດສາດຍຸກໜຶ່ງ.

ຄວາມແຕກຕ່າງຂອງໂລກສັງຄົມນິຍົມກັບໂລກທຶນນິຍົມມີຢູ່ບ່ອນວ່າ ໃນໄລຍະການຫັນປ່ຽນມາມີລັກສະນະສາກົນນັ້ນ ບໍລິສັດຜູກຂາດ ແລະ ລັດມະຫາອຳນາດທີ່ເຂັ້ມແຂງກວ່າໝູ່ຂອງໂລກທຶນນິຍົມ ບັງຄັບໃຫ້ປະເທດແລະປະຊາຊາດອື່ນໆ ເຮັດຕາມໃຈຕົນ ພວກເຂົາສ້າງຕັ້ງ " ເຂດຕໍ່" ທາງດິນແດນແລະວັດຖຸດິບອັນ, ສ່ວນໂລກສັງຄົມນິຍົມກັບເດີນຕາມຫລັກການອີກແບບໜຶ່ງຕ່າງຫາກ. ຂະບວນການກໍ່ຕັ້ງແລະການພັດທະນາ-ລະບົບສັງຄົມນິຍົມແຫ່ງໂລກ ເປັນໄປບົນພື້ນຖານແຫ່ງ ຄວາມເປັນເຈົ້າຕົນເອງ ມີອິດສະຫລະເຕັມຕົວ ທັງສອດຄ່ອງກັບຜົນປະໂຫຍດຂອງຊາວຜູ້ອອກແຮງງານໃນທຸກໆລັດທີ່ນອນຢູ່ໃນລະ

ບົບນີ້.

ບໍ່ວ່າຢູ່ໃນຂັ້ນຕອນໃດ ການພົວພັນລະຫວ່າງປະເທດອ້າຍ
ນ້ອງ ກໍຫາກອີງໃສ່ການປະສານພຶດຕິກຳຈາກສອງທ່າອ່ຽງຕົວ
ຈິງຄື: ດ້ານຫນຶ່ງທ່າອ່ຽງໄປສູ່ການພັດທະນາເສດຖະກິດແຫ່ງ
ຊາດ ກັບໂຄງຮ່າງແຫ່ງລັດ ແລະ ວັດທະນະທຳ, ທ່າອ່ຽງ-
ໄປສູ່ການປັບປຸງບຳລຸງຄວາມເປັນເອກະລາດ ແລະການເປັນ
ເຈົ້າຕົນເອງຂອງແຕ່ລະປະເທດ, ອີກທ່າອ່ຽງຫນຶ່ງແມ່ນມຸ່ງສູ່
ການຫຍັບປະຊາຊາດຕ່າງໆເຂົ້າໃກ້ກັນສຸດຂີດ, ຂະຫຍາຍ
ແລະ ເຮັດໃຫ້ຄວາມຜູກພັນລະຫວ່າງພວກເຂົາເລິກເຊິ່ງຂຶ້ນ.
ລະບອບສັງຄົມແບບໃຫມ່ ຢູ່ໃນແຕ່ລະປະເທດ ກຳລັງປັບປຸງ
ຄວາມເຂັ້ມແຂງທາງດ້ານເສດຖະກິດຂອງຕົນ, ເຊັ່ນດຽວກັນ
ຄວາມອາດສາມາດໃນການກໍ່ສ້າງທາງດ້ານເສດຖະກິດ ແລະ
ວັດທະນະທຳ, ການພັດທະນາໂຄງຮ່າງແຫ່ງລັດກໍ່ມີແຕ່ ເພີ່ມ
ທະວີຂຶ້ນຕະຫລອດເວລາ. ການພົວພັນຫລາຍຮູບຫລາຍແບບ-
ລະຫວ່າງລັດສັງຄົມນິຍົມ ກັບປະຊາຊົນພາຍໃນປະເທດ ຕົນ
ເອງ ແຜ່ຂະຫຍາຍອອກເອງ ແລະ ຈະເລີນຂຶ້ນເອງຢ່າງສະ
ຫມ່ຳສະເຫມີ.

ການພົວພັນລະຫວ່າງປະເທດສັງຄົມນິຍົມອ້າຍນ້ອງ ຕັ້ງຢູ່
ບົນຫລັກການລັດທິສາກົນກຳມະຊີບ. ຫລັກການດັ່ງກ່າວ ສອດ
ແຊກຢູ່ໃນການພົວພັນລະຫວ່າງລັດ ແລະ ລະຫວ່າງພັກ. ມັນ
ແມ່ນລັກສະນະສະເພາະຂອງການພົວພັນລະຫວ່າງອົງການຈັດ
ຕັ້ງມະຫາຊົນຕ່າງໆ ແລະ ຄະນະຮວມຫມູ່ຂອງຊາວຜູ້ອອກ -

ແຮງງານຂອງປະເທດເຫລົ່ານີ້, ມັນຕັ້ງໝັ້ນຢູ່ໃນທຸກຂົງເຂດແຫ່ງຊີວິດຂອງພວກເຂົາ ແລະ ກາຍເປັນຄວາມຈິງຢູ່ໃນການຮ່ວມມືທາງດ້ານເສດຖະກິດແລ້ວ. ລັດທິສາກົນກຳມະຊີບ ທີ່ຊູດົມຮ່ວມມືຂື້ນ ຍ້ອນເນື້ອໃນສັງຄົມນິຍົມ, ທີ່ຂະຫຍາຍຕົວ ອອກຫລາຍວາດຫລາຍຊົງ ແລະ ເລິກເຊິ່ງຂື້ນຢູ່ການພົວພັນ ລະຫວ່າງປະເທດສັງຄົມນິຍົມນັ້ນ ມີຊື່ວ່າລັດທິສາກົນສັງຄົມນິຍົມ.

ບົດຮຽນຂອງລັດໂຊວຽດທີ່ປະກອບດ້ວຍຫລາຍຊາດຫລາຍເຜົ່າ, ລັດທຳອິດໃນປະຫວັດສາດທີ່ການພົວພັນແບບສະເໝີ-ພາບໃນດ້ານສິດທິລະຫວ່າງຊາດຕ່າງໆ ພາຍໃນປະເທດ ໄດ້ຮັບການສ້າງຕັ້ງບູລະນະຂຶ້ນນັ້ນ, ບົດຮຽນດັ່ງກ່າວມີຄວາມສຳຄັນຫລາຍ ຕໍ່ການສະຖາປະນາສາຍພົວພັນແບບໃໝ່ລະຫວ່າງປະຊາຊາດຂອງລັດສັງຄົມນິຍົມ. ລັດເອກະລາດທັງຫລາຍ - ເອງກໍສາມາດນຳໃຊ້ຫລັກການຕົ້ນຕໍຂອງສາຍພົວພັນ ເຫລົ່ານີ້ເຖິງວ່າ ມັນກຳນົດສາຍພົວພັນພາຍໃນປະເທດຂອງລັດສະຫະພັນນາໆຊາດໂດດດ່ຽວລັດໜຶ່ງກໍຕາມ.

ການຂະຫຍາຍຕົວຂອງສາຍພົວພັນລະຫວ່າງປະເທດ ສັງຄົມນິຍົມໄດ້ຜ່ານກາຍຫລາຍຂັ້ນຕອນມາແລ້ວ, ແຕ່ລະຂັ້ນຕອນມີລັກສະນະສະເພາະ ທັງດ້ວຍຄວາມຄືບໜ້າຂອງບາງລັດສັງຄົມນິຍົມເອງ ທັງດ້ວຍລະດັບການປະສານງານທີ່ສູງກວ່າ ລະຫວ່າງພວກເຂົາເຈົ້າເອງ.

ໃນຂັ້ນຕອນທີ່ໜຶ່ງນັ້ນ (ປະມານຊ່ວງປີ ໑໙໔໕-໑໙໔໙) ບັນດາປະເທດສັງຄົມນິຍົມໄດ້ສ້າງພັນທະພາບທາງດ້ານ ການ

ທະຫານ-ການເມືອງອົນ. ໃນນັ້ນໄດ້ມີການຕົກລົງກັນກ່ຽວກັບສັນຍາແບບມິດຕະພາບ ແບບຮ່ວມມືແລະຊ່ວຍເຫລືອຊຶ່ງກັນ - ແລະ ກັນ ລະຫວ່າງສະຫະພາບໂຊວຽດ ກັບບັນດາລັດປະຊາທິປະໄຕປະຊາຊົນ ແລະ ລະຫວ່າງບາງປະເທດເຫລົ່ານີ້ເອງ ກໍເຊັ່ນດຽວກັນຄື :

ໃນປີ ໑໙໔໓-ລະຫວ່າງສະຫະພາບໂຊວຽດ ກັບເຊັກໂກສະໂລວາກີ;

ໃນປີ ໑໙໔໕-ລະຫວ່າງສະຫະພາບໂຊວຽດກັບໂປໂລຍ;

ໃນປີ ໑໙໔໖-ລະຫວ່າງສະຫະພາບໂຊວຽດກັບມົງໂກລີ, ລະຫວ່າງຢູໂກສະລາວີ ກັບເຊັກໂກສະໂລວາກີ, ລະຫວ່າງຢູໂກສະລາວີ ກັບອານບານີ;

ໃນປີ ໑໙໔໗, ລະຫວ່າງໂປໂລຍ ກັບເຊັກໂກສະໂລວາກີ, ບູນກາຣີ ກັບຢູໂກສະລາວີ, ຢູໂກສະລາວີ ກັບຮົງກາຣີ, ອານບານີ ກັບບູນກາຣີ, ຢູໂກສະລາວີ ກັບ ຣູມານີ;

ໃນປີ ໑໙໔໘-ລະຫວ່າງບູນກາຣີ ກັບ ຣູມານີ, ຣູມານີ-ກັບຮົງກາຣີ, ຣູມານີ ກັບ ສ.ສ.ສ.ຊ, ສ.ສ.ຊ.ຊ ກັບຮົງກາຣີ, ບູນກາຣີ ກັບ ສ.ສ.ສ.ຊ, ບູນກາຣີ ກັບ ເຊັກໂກ-ສະໂລວາກີ, ບູນກາຣີ ກັບ ໂປໂລຍ, ໂປໂລຍ ກັບ ຮົງກາຣີ, ບູນກາຣີ ກັບ ຮົງກາຣີ, ຣູມານີ ກັບ ເຊັກໂກສະໂລວາກີ ;

ໃນປີ ໑໙໔໙-ລະຫວ່າງໂປໂລຍກັບ ຣູມານີ, ເຊັກໂກສະໂລວາກີກັບຮົງກາຣີ .(Weltgeschichte in Dater. Berlin, 1973, S. 898

ຫນ່ວຍມິດຕະພາບແຫ່ງລັດ ແລະ ປະຊາຊາດຕ່າງໆ. ໑໙໗໔ ຫນ້າ ໒໒-໒໓ .)

ການເສີມສ້າງຄວາມແຂງແກ່ນໃຫ້ແກ່ການຮ່ວມມື ທາງດ້ານທະຫານ-ການເມືອງລະຫວ່າງລັດມິດສະຫາຍກັນນັ້ນໄດ້ມີ-ສ່ວນຊ່ວຍເຮັດໃຫ້ອຳນາດປະຊາຊົນເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃນປະເທດນັ້ນເຂັ້ມແຂງຍິ່ງຂຶ້ນ, ເຮັດໃຫ້ຖານະຂອງລັດເຫລົ່ານັ້ນຢູ່ໃນເວທີສາກົນຫນັກແຫນ້ນຂຶ້ນ ແລະ ມີສ່ວນປ້ອງກັນໄຊພິຊິດຂອງພວກເຂົາອອກຈາກການບຸກຮຸກຂອງພວກ ຈັກກະພັດ.

ເປັນຄວາມຈິງທີ່ວ່າ ສະຫະພາບໂຊວຽດເປັນຜູ້ມີບົດບາດສຳຄັນເປັນພິເສດຢູ່ໃນບາດກ້າວເດີນອັນນີ້. ແມ່ນພະລັງ ອຳນາດຂອງມັນເອງທີ່ເປັນສິ່ງຊີ້ຂາດເພື່ອປ້ອງກັນລັດປະຊາທິປະໄຕປະຊາຊົນທັງຫລາຍ ອອກຈາກການຂົ່ມຂູ່ຮຸກຮານຂອງຈັກ-ກະພັດ. ລຸນຫລັງສົງຄາມໂລກຄັ້ງທີສອງ ສະຫະພາບໂຊວຽດໄດ້ໃຫ້ການສົງເຄາະອັນຍິ່ງໃຫຍ່ທາງດ້ານວັດຖຸແກ່ບັນດາ ລັດປະຊາທິປະໄຕປະຊາຊົນທັງຫລາຍ, ໄດ້ຕົກລົງໃຫ້ຜະລິດຕະ-ພັນດ້ານອາຫານຮ່ວມທັງວັດຖຸ ສຳລັບກໍ່ສ້າງເຄຫະສະ ຖານ ແລະ ເຄື່ອງປະກອບອັນຈຳເປັນສຳລັບການຟື້ນຟູອຸດສາຫະກຳ ແລະ ການຂົນສົ່ງ. ການອູ້ມຊູຢູ່ຫນູນທາງດ້ານແນວຄິດ ແລະ ຈິດໃຈກໍ່ມີຄວາມສຳຄັນຢ່າງມະຫາສານຄືກັນ.

ໃນຂັ້ນຕອນທີຫນຶ່ງນີ້ ເບິ່ງໃນດ້ານເສດຖະກິດແລ້ວ ປະ

ເທດປະຊາທິປະໄຕປະຊາຊົນທັງຫລາຍກັບສະຫະພາບໂຊວຽດ ຍັງພົວພັນກັນໜ້ອຍຢູ່. ຢູ່ໃນຂົງເຂດການພົວພັນທາງ ດ້ານເສດຖະກິດໃນລະດັບສາກົນແລ້ວ ປະເທດປະຊາທິປະໄຕ ປະຊາຊົນ ໃນເອີຣົບ ຍັງຄົງຈາລຶກຮ່ອງຮອຍຂອງຄວາມເປັນບໍລິວານອັນຍາວນານຂອງເສດຖະກິດໂລກແຫ່ງລະບົບທຶນນິຍົມ . ເສດຖະກິດຂອງພວກເຂົາໄດ້ເອົາຊະນະທິດທາງເຊິ່ງກໍ່ຕົວຂຶ້ນຢູ່ໃນເງື່ອນໄຂຂອງລະບອບທຶນນິຍົມຢ່າງຍາກຊາ.

ໃນໄລຍະຕັ້ງຕົ້ນຂອງການກໍ່ຮ່າງສ້າງຕົວຂອງລະບົບ ສັງຄົມນິຍົມແຫ່ງໂລກນັ້ນ ແມ່ນການແລກປ່ຽນສິນຄ້າແລະການຈັດສົ່ງພົນພະລິດຢູ່ໃນຂອບເຂດການຊ່ວຍເຫລືອທາງດ້ານເສດຖະກິດ ທີ່ຄອບງຳຢູ່ໃນຂົງເຂດການພົວພັນເສດຖະກິດລະຫວ່າງ-ປະເທດສັງຄົມນິຍົມ. ຍິ່ງໄປກວ່ານີ້ ສ່ວນຫລາຍແລ້ວ ມັນຍັງແມ່ນການພົວພັນລະຫວ່າງສອງກ້າສອງຝ່າຍອີກ. ຕະຫລາດ-ສັງຄົມນິຍົມແຫ່ງໂລກ ຫາກໍ່ແຕ່ເລີ່ມກໍ່ຮູບຮ່າງຂຶ້ນທໍ່ນັ້ນ, ຮູບການແບບສັງຄົມນິຍົມຂອງການປະສານງານຍັງຄົງຢູ່ໃນໄລຍະເລີ່ມຕົ້ນຈໍ່ໄຂທໍ່ນັ້ນ. ມັນແມ່ນໄລຍະຂ້າມຜ່ານປະເພດ ໜຶ່ງຈາກການພົວພັນສາກົນຕາມລະບົບເກົ່າສະເພາະຂອງ ໂລກນາຍທຶນໄປສູ່ການກໍ່ຮູບຂອງສາຍພົວພັນປະເພດໃໝ່ອ່ຽມ ລະຫວ່າງລັດຕ່າງໆ. ໃນລຳດັບຕໍ່ມາພັນທະພາບທາງທະຫານ -ການເມືອງກໍເລີ່ມສົມບູນຂຶ້ນເທື່ອລະຂັ້ນ ດ້ວຍການຮ່ວມມືອັນກວ້າງຂວາງທາງດ້ານສັງຄົມ-ເສດຖະກິດ.

ພ້ອມໆກັບຄວາມສຳເລັດໃນການພັນປ່ຽນເທື່ອລະກ້າວ ຢູ່

ໃນປະເທດປະຊາທິປະໄຕປະຊາຊົນ ແລະ ການຂ້າມຜ່ານໄປ
ສູ່ໄລຍະກໍ່ສ້າງສັງຄົມນິຍົມນັ້ນ ບັນດາປະເທດອ້າຍນ້ອງໄດ້ກ້າວ
ເຂົ້າສູ່ຂັ້ນຕອນທີ່ສອງ ຄືການພັດທະນາສາຍພົວພັນນາໆຊະນິດ
ລະຫວ່າງບັນດາປະເທດສັງຄົມນິຍົມ. ໃນໄລຍະຂັ້ນຕອນອັນນີ້
ເຊິ່ງກິນເວລາຢູ່ປະມານທົດສະວັດໜຶ່ງ ( ໑໙໔໙-໑໙໕໙),
ສາຍພົວພັນອັນກວ້າງຂວາງລະຫວ່າງນາໆຊາດກໍ່ກຳເນີດຂຶ້ນ.
ສາຍພູກພັນເຫຼົ່ານີ້ມີຜົນກວມຢູ່ໃນທຸກຂົງເຂດຊີວິດຂອງບັນດາ
ປະເທດອ້າຍນ້ອງເຊັ່ນ ໃນດ້ານເສດຖະກິດ, ການພົວພັນ -
ທາງດ້ານສັງຄົມ-ການເມືອງ, ການປ້ອງກັນແລະ ວັດທະນະ
ທຳ. ແມ່ນຢູ່ໃນຂັ້ນຕອນນີ້ເອງ ທີ່ເພີ່ມເລີ່ມລົງມືປະຕິບັດ ພາ
ລະກິດເຊິ່ງເລນິນ ກຳນົດໄວ້ຄືອອກຈາກການປ່ຽນຮູບຜະເດັດ
ການກຳມາຊີບເຊິ່ງມີຢູ່ແລ້ວ " ໃນລະດັບຊາດ(ໝາຍຄວາມ
ວ່າ ມີຢູ່ແລ້ວຢູ່ໃນປະເທດໜຶ່ງປະເທດດຽວ ແລະ ບໍ່ມີຄວາມ
ສາມາດກຳນົດແນວທາງນະໂຍບາຍຂອງໂລກ ) ມາເປັນຜະ
ເດັດການສາກົນ ( ໝາຍຄວາມວ່າ ມາເປັນຜະເດັດການ-
ກຳມາຊີບຢູ່ໃນຫລາຍໆປະເທດຈະເລີນ, ແລະຢ່າງໜ້ອຍ ກໍ
ສາມາດສິ່ງອິດທິພົນອັນຕັດສິນໃສ່ທຸກແນວທາງນະໂຍບາຍຂອງ
ໂລກ ". ( ວ.ອີ.ເລນິນ, ນິພົນຄົບຊຸດ, ເຫຼັ້ມທີ ໔໑,
ໜ້າ ໑໖໕ .)

ການຊ່ວຍເຫຼືອທາງດ້ານເສດຖະກິດ ແລະ ເຕັກນິກ ວິ
ທະຍາສາດ ໂດຍກົງຂອງລັດສັງຄົມນິຍົມຂະຫຍາຍຕົວຫລາຍ-
ກວ່າໝູ່ນັ້ນ ຖືວ່າເປັນເລື່ອງສຳຄັນສົມຄວນຢູ່ໃນການ ພົວພັນ

ລະຫວ່າງປະເທດໃນລະບົບສັງຄົມນິຍົມແຫ່ງໂລກ. ການຊ່ວຍເຫຼືອອັນນີ້ ມີສ່ວນຊ່ວຍຢ່າງຫລວງຫລາຍໃນການກໍ່ສ້າງ ພື້ນຖານອຸດສາຫະກຳທັນສະໄໝຢູ່ໃນບາງປະເທດເຊັ່ນ ບູນກາຣີ, ຣູມານີ ແລະ ພ້ອມດຽວກັນ ມັນກໍກາຍມາເປັນປັດໄຈຕົ້ນຕໍ - ຂອງການສ້າງລະດັບດຽວກັນ ໃຫ້ແກ່ເສດຖະກິດຂອງປະເທດຕ່າງໆ ເຊິ່ງໃນໄລຍະຊຸມປີ ໕໐ ນັ້ນໄດ້ຂະຍັບເຂົ້າໃກ້ຊິດ ສະໜິດກັນຂຶ້ນຢ່າງຫລວງຫລາຍ.

ການຄ້າຂາຍຈາກສອງກໍ້າສອງຝ່າຍກໍໄດ້ຂະຫຍາຍ ຕົວອອກຄືກັນ, ບໍລິມາດຂອງມັນໄດ້ເພີ່ມຂຶ້ນຫລາຍກວ່າສາມເທົ່າໃນລະຫວ່າງປີ ໑໙໕໐-໑໙໖໐.

ຄຽງຄູ່ກັບການແລກປ່ຽນທາງດ້ານພານິດ ແລະການຊ່ວຍເຫຼືອທາງດ້ານເສດຖະກິດນັ້ນ ການວາງແຜນເສດຖະກິດ - ແຫ່ງຊາດກໍເລີ່ມຂະຫຍາຍຕົວອອກນັບຕັ້ງແຕ່ຊຸມປີ ໕໐ເປັນຕົ້ນມາ.

ໃນເດືອນມັງກອນປີ ໑໙໔໙ ກອງປະຊຸມເສດຖະກິດຂອງຜູ້ຕາງໜ້າຈາກບູນກາຣີ ຮົງກາຣີ ໂປໂລຍ ຣູມານີ, ສ.ສ. ສ.ຊ ແລະເຊັກໂກສະໂລວາກີ ກໍປະກາດສ້າງຕັ້ງສະພາຊ່ວຍເຫຼືອຊຶ່ງກັນແລະກັນທາງດ້ານເສດຖະກິດ, ມັນແມ່ນອົງການຈັດຕັ້ງໜຶ່ງທີ່ກວມລວມເອົາການຮ່ວມມືທາງດ້ານເສດຖະກິດ-ຂອງບັນດາປະເທດອ້າຍນ້ອງ. ຕໍ່ມາປະເທດອື່ນໆກໍເຂົ້າເປັນສະມາຊິກເຕັມຄື: ອານບານີ ( ໃນປີ ໑໙໔໙ ) (ນັບແຕ່ ປີ ໑໙໖໑ ມາປະເທດນີ້ບໍ່ໄດ້ເຂົ້າປະກອບສ່ວນໃນວຽກງານຂອງ

ສະພາ ), ສ.ປ.ເຢຍລະມັນ ( ໑໙໕໐ ), ມົງໂກລີ ປີ ( ໑໙໖໒ ), ກູບາ ( ໑໙໗໒ ), ຫວຽດນາມ໑໙໗໘).

ເພື່ອຕອບໂຕຕໍ່ການເພີ່ມທະວີກຳລັງແຮງຂອງກຸ່ມຮຸກຮານຈັກກະພັດ ( ນາໂຕ ) ໃນເດືອນພຶດສະພາປີ ໑໙໕໕ຈຶ່ງໄດ້ມີການສ້າງຕັ້ງອົງການສົນທິສັນຍາ ວາກໂຊວີ ຂຶ້ນ, ອົງການນີ້ຮັບປະກັນຄວາມປອດໄພຂອງສະມາຊິກຂອງມັນຢ່າງ ເຂັ້ມແຂງ ແລະ ປະສານນະໂຍບາຍຕ່າງປະເທດຂອງພວກຕົນໃນດ້ານການຕໍ່ສູ້ເພື່ອປົກປັກຮັກສາ ແລະ ປົບປຸງສັນຕິພາບ.ການກໍ່ຕັ້ງອົງການສົນທິສັນຍາ ວາກໂຊວີ ໝາຍບອກການ ກະທຳອັນມີຄວາມສຳຄັນຢ່າງເປັນປະຫວັດການອັນໜຶ່ງ. ສິ່ງ ດັ່ງກ່າວໄດ້ເຮັດໃຫ້ແນວຄິດເລນິນິດ ກ່ຽວກັບລັດທິສາກົນ ກຳມາຊີບ, ກ່ຽວກັບການປ້ອງກັນໄຊພິຊິດຂອງການປະຕິວັດຮ່ວມກັນຂອງຊາວຜູ້ອອກແຮງງານຕ້ານກັບຈຸດປະສົງຮຸກຮານ ຂອງຈັກກະພັດ ປະກົດຕົວເປັນຈິງຢ່າງຈະແຈ້ງ. ການສ້າງຕັ້ງພັນທະພາບປ້ອງກັນຕົວ ໄດ້ແກ້ໄຂພາລະກິດອັນມີຄວາມສຳຄັນ ໂດຍພື້ນຖານນັ້ນຄື: ມັນໄດ້ເຕົ້າໂຮມບໍ່ຈຸບພະຍາກອນເສດຖະກິດ, ແລະ ຄວາມສາມາດທາງການທະຫານຂອງປະເທດສັງຄົມນິຍົມ ໃນເອີຣົບ. ສິ່ງດັ່ງກ່າວໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຫງົ້າພະລັງປ້ອງກັນຕົວຂອງພວກເຂົາຢ່າງຫລວງຫລາຍ.

ກອງປະຊຸມສາກົນ ຂອງຜູ້ຕ່າງໜ້າພັກກອມມູນິດແລະກຳມະກອນໃນປີ ໑໙໖໐ ສະຫລຸບວ່າ ລະບົບສັງຄົມນິຍົມ ແຫ່ງໂລກ ໄດ້ຜ່ານກາຍຂັ້ນຕອນໃໝ່ແຫ່ງການຂະຫຍາຍຕົວ ຂອງ

ມັນແລ້ວ. ຈຸດພິເສດຕົ້ນຕໍຂອງ ຂັ້ນຕອນປະຈຸບັນ ຫລືຂັ້ນຕອນທີສາມ ມີດັ່ງຕໍ່ໄປນີ້: ສະຫະພາບໂຊວຽດກ້າວເຂົ້າສູ່ ໄລຍະກໍ່ສ້າງລະບອບກອມມູນິດ, ມີການສະຖາປະນາສັງຄົມ ສັງຄົມນິຍົມຂະຫຍາຍຕົວຢູ່ໃນຫລາຍປະເທດ ປະຊາທິປະໄຕ ປະຊາຊົນ, ໄຊຊະນະຂອງການພົວພັນແບບສັງຄົມນິຍົມຢູ່ໃນທົ່ວ ລະບົບສັງຄົມນິຍົມແຫ່ງໂລກ. ບາດກ້າວເດີນເຫລົ່ານີ້ໄປຄຽງ ຄູ່ກັບການບັບປຸ່ງການຮວມມືນາໆຊະນິດລະຫວ່າງປະເທດສັງຄົມນິຍົມຢູ່ໃນທຸກຂົງເຂດ.

ເມື່ອຕີລາຄາບົດຮຽນຈາກການປະກົດຕົວຂອງສາຍພົວພັນສາກົນປະເພດໃຫມ່ນີ້, ກອງປະຊຸມສາກົນຂອງພັກກອມມູນິດ- ແລະ ກຳມະກອນປີ ໑໙໖໐ ໃຫ້ຂໍ້ສັງເກດວ່າ:"ຜົນປະໂຫຍດຮວມກັນຂອງປະຊາຊາດໃນປະເທດສັງຄົມນິຍົມ,ຜົນປະໂຫຍດຂອງພາລະກິດແຫ່ງລະບອບສັງຄົມນິຍົມ ແລະ ຂອງສັນຕິພາບນັ້ນ ໃນດ້ານການເມືອງແລ້ວມັນຮຽກຮ້ອງໃຫ້ລົມທົບຫລັກການຂອງລັດທິສາກົນສັງຄົມນິຍົມ ແລະ ລັດທິຮັກຊາດສັງຄົມ ນິຍົມເຂົ້າກັນຢ່າງເຫມາະສົມ. ແຕ່ລະພັກກອມມູນິດ ເມື່ອໄດ້ກາຍເປັນພັກກຳອຳນາດໃນປະເທດຂອງຕົນແລ້ວ ເປັນຜູ້ແບກຫາບຄວາມຮັບຜິດຊອບທາງດ້ານປະຫວັດສາດໃນຊາຕາກຳຂອງປະເທດຕົນ ກໍຄືຂອງຄ່າຍສັງຄົມນິຍົມທັງຫມົດ ".(ເອກະສານ-ໂຄງການຂອງການຕໍ່ສູ້ເພື່ອສັນຕິພາບປະຊາທິປະໄຕ ແລະລະບອບສັງຄົມນິຍົມ ມົດສະກູ, ໑໙໖໔. ຫນ້າ ໑໐໐ .)

ແມ່ນຢູ່ວ່າ ການສະຖາປະນາສາຍພົວພັນສາກົນ ແບບໃຫມ່

ອ່ຽມບໍ່ໝາຍຄວາມວ່າມັນໄດ້ຕັດບັນຫາທີ່ມີມາແຕ່ກ່ອນແລ້ວທຸກຢ່າງຢູ່ໃນການພົວພັນລະຫວ່າງລັດສັງຄົມນິຍົມ ອອກໂດຍ ອັດຕະໂນມັດ. ບັນຫາຫລາຍແບບຫລາຍແນວ ແລະ ແບບ ສະເພາະເຈາະຈົງ ທີ່ເກີດຂຶ້ນກັບແຕ່ລະລັດ, ເງື່ອນໄຂອັນແຕກຕ່າງກັນຢູ່ໃນການຂະຫຍາຍຕົວບາງເທື່ອກໍເປັນເຫດໃຫ້ເກີດມີທັດສະນະແຕກຕ່າງກັນໃນບາງບັນຫາ. ແຕ່ຈຸດພິເສດພື້ນຖານຂອງສາຍພົວພັນແບບໃຫມ່ກໍຫາກນອນຢູ່ໃນກະໂຕເຫດການ ທີ່ວ່າ ຄວາມແຕກຕ່າງກັນເຊິ່ງກໍເກີດຂຶ້ນໃນໄລຍະແຫ່ງການຂະຫຍາຍຕົວຂອງມັນນັ້ນມັນບໍ່ມີລັກສະນະປໍລະປັກອັນໃດອັນ ໜຶ່ງ ແລະ ຍ້ອມມີທັດສະນະ ແບບເລນິນິດ-ມາກຊິດ ຢ່າງຖືກຕ້ອງນັ້ນແລ້ວ ເພິ່ນຈຶ່ງເອົາຊະນະຄວາມແຕກຕ່າງເຫລົ່ານີ້ໄດ້ຢ່າງມີຜົນສອດຄ່ອງກັບຜົນປະໂຫຍດຂອງທຸກໆປະເທດສັງຄົມນິຍົມ.

ການສ້າງຕັ້ງລະບົບສັງຄົມນິຍົມແຫ່ງໂລກບໍ່ພຽງແຕ່ ກາຍເປັນລະບົບທຳມະດາປະເພດໜຶ່ງ ທີ່ມີຄວາມໝາຍແຕ່ ໃນດ້ານປະລິມານເທົ່ານັ້ນ, ແຕ່ມັນຍັງອຳນວຍໂອກາດໃຫ້ ດຳເນີນການດັດປ່ຽນທາງດ້ານຄຸນນະພາບຢູ່ໃນການພັດທະນາ - ຂອງແຕ່ລະປະເທດ. ຄວາມອາດສາມາດປະສານນະໂຍບາຍການເມືອງຢູ່ໃນຂອບເຂດຂອງການລວມໝູ່ຂອງປະເທດສັງຄົມນິຍົມ ໝາຍເຖິງການສ້າງເງື່ອນໄຂຕ່າງໆເພື່ອຮັບປະກັນໃຫ້ລະດັບຂະຫຍາຍຕົວສູງກວ່າເກົ່າ ບໍ່ວ່າພາຍໃນປະເທດ ອ້າຍນ້ອງ ແຕ່ລະປະເທດກໍດີໃນລະຫວ່າງປະເທດເຫລົ່ານີ້ກໍ່.

ຊີວິດຕົວຈິງໄດ້ພິສູດແລ້ວວ່າ ສັງຄົມສັງຄົມນິຍົມນັ້ນ ເປັງ

ໃນດ້ານເສດຖະກິດ ການເມືອງ ແລະ ແນວຄິດຈິດໃຈ ແລ້ວ ແມ່ນສັງຄົມນຶ່ງທີ່ອຸດົມຮັ່ງມີ ແລະ ບໍລິສຸດກວ່າສັງຄົມນາຍທຶນ ລະບອບສັງຄົມນິຍົມ ອຳນວຍໃຫ້ຊາບຊຶມທ່າອ່ຽງ ກ້າວໜ້າ ແຫ່ງວິວັດທະນາການຂອງມະນຸດຊາດ ຢ່າງສົມບູນກວ່າ, ສິ່ງ ດັ່ງກ່າວຢັ້ງຢືນຄວາມຖືກຕ້ອງຂອງຄຳເວົ້າ ເລນິນ ທີ່ວ່າ ລັດ ທິກອມມູນິດນັ້ນສາງຕັ້ງຂຶ້ນ " ບົນການສັງລວມເອົາທຸກສິ່ງທຸກ ຢ່າງທີ່ປະເສີດສູດຢູ່ໃນຄວາມນຶກຄິດ ແລະ ວັດທະນະທຳ ອັນ ປະເສີດຕະຫລອດໄລຍະປະຫວັດສາດກວ່າສອງພັນປີແຫ່ງ ມະ ນຸດຊາດ ". ( ວ.ອີ.ເລນິນ, ນິພົນຄົບຊຸດ ເຫລັ້ມທີ ໔໑, ໜາ ໓໓໗ .)

ປະຊາຊາດໃນປະເທດ ສັງຄົມນິຍົມ ສາມາດສຶກສາແລກ ປ່ຽນຄວາມຮູ້ນຳກັນແລະກັນ ໄດ້ຢ່າງໄວ ແລະ ຢ່າງມີ ປະສິດ ທິພາບສູງສູດ. ພວກເຂົາສ້າງຄວາມອຸດົມຮັ່ງມີໃຫ້ແກ່ມໍລະດົກ ລວມທາງດ້ານຈິດໃຈຂອງມະນຸດຊາດດ້ວຍອົງປະກອບແຫ່ງວັດ ທະນະທຳອັນແຕກຕ່າງກັນ ດ້ວຍປະສົບການທາງດ້ານປະຫວັດ ສາດ ແລະ ຄວາມສະຫລຽວສະຫລາດຫລາຍຮູບຫລາຍແບບ, ອັນເປັນສິ່ງອະນຸມັດໃຫ້ສົ່ງເສີມ ວັດທະນະທຳ ທາງດ້ານວັດຖຸ ແລະ ຈິດໃຈແບບກ້າວໜ້າຢ່າງວ່ອງໄວ.

ແນ່ນອນແລ້ວວ່າ ການເປັນສະມາຊິກຢູ່ໃນວົງຄະນາຍາດ ໃຫຍ່ສັງຄົມນິຍົມນັ້ນ ໄດ້ພາກຮອຍຈາລຶກອັນເລິກເຊິ່ງໃສ່ ຊາ ຕາຊີວິດຂອງປະຊາຊາດອ້າຍນ້ອງແຕ່ລະຊາດ. ຄວາມ ຮຸ່ງ ເຮືອງຂອງລະບອບສັງຄົມນິຍົມມີສ່ວນຊ່ວຍ ຂັບປຸງບຳລຸງອິດທິ

ພື້ນຂອງມັນຢູ່ໃນວິວັດທະນາການຂອງໂລກ, ເລັ່ງລັດການດັດ ປ່ຽນການຊັ່ງຊາກຳລັງລະຫວ່າງລະບອບສັງຄົມນິຍົມ ກັບ ລະບອບທຶນນິຍົມ. ດ້ວຍເຫດນີ້, ລະຫວ່າງຊຸມປີ ໗໐ ຫາ ໘໐ ນັ້ນ ການຊັ່ງຊາກຳລັງໄດ້ຜັນປ່ຽນຢ່າງໄວວາ, ເບິ່ງໃນດ້ານຄຸນນະພາບແລ້ວ ແມ່ນໃຫ້ທ່າດີແກ່ລະບອບສັງຄົມນິຍົມແລະສິ່ງທີ່ສຳຄັນເປັນພິເສດສຸດກໍຄືກຳລັງແຮງຍຸດທະສາດລະຫວ່າງສ.ສ.ສ.ຊ ກັບສະຫະລັດອາເມລິກາ ເກືອບວ່າເທົ່າທຽມ ກັນແລ້ວ.

ສະພາບການຫລ້າສຸດນີ້ມີຜົນປະທົບຢ່າງແຮງໃສ່ລັກສະນະ ແລະຮູບຮ່າງຂອງສາຍພົວພັນປະເພດປະຈັນໜ້າກັນ ກັບ ປະເພດຮ່ວມມືກັນລະຫວ່າງລັດຕ່າງໆ ທີ່ຢູ່ໃນລະບົບສັງຄົມ ການເມືອງ ກົງກັນຂ້າມ. ລະບອບຈັກກະພັດນິຍົມໄດ້ສູນເສຍ - ຄວາມຂາດສາມາດທີ່ຈະເຮັດໃຫ້ເປົ້າໝາຍເຊິ່ງພວກ ເຂົາໝາຍໝັ້ນໄວ້ນັ້ນ ກາຍເປັນຄວາມຈິງດ້ວຍກຳລັງອາວຸດແລ້ວນັ້ນຄື: ການ " ຕີຖອຍ " ແລະ " ລົບລ້າງ"ລະບອບ ສັງຄົມນິຍົມ. ລັດນາຍທຶນທັງຫລາຍແມ່ນເຫັນຄວາມຂາດສາມາດໃນການນຳໃຊ້ນະໂຍບາຍການເມືອງແບບ " ໃຊ້ກຳລັງ " ຂອງຕົນຫລຸດໜ້ອຍຖອຍລົງ ແລະ ອັນນີ້ກໍບໍ່ແມ່ນແຕ່ໃນລະດັບລວມສະເລ່ຍແລ້ວທໍ່ນັ້ນ ແຕ່ຫາກແມ່ນໃນເຂດທ້ອງຖິ່ນຕ່າງ ໆ ນຳ ໂດຍສະເພາະຢູ່ໃນເວທີຫລາຍແຫ່ງ. ໂດຍໄດ້ຮັບ ການອູ້ມຊູຈາກລະບອບສັງຄົມນິຍົມ ກຳລັງຕ້ານຈັກກະພັດນິຍົມ ທັງຫລາຍ ຮູ້ຈັກດຳເນີນການຕໍ່ສູ້ເພື່ອເສລີພາບຂອງພວກຕົນຕໍ່ໄປ

ຢ່າງມີຜົນສຳເລັດ . ( ເບິ່ງ "ເດືອນຕຸລາທີ່ຍິ່ງໃຫຍ່ແລະຍຸກສະໄໝປະຈຸບັນ ", ມົດສະກູ, ໑໙໗໘, ໜ້າ ໗໖ .)

ລະບອບສັງຄົມນິຍົມກາຍເປັນກຳລັງແຮງແຫ່ງໂລກອັນຍິ່ງໃຫຍ່ແຮງໜຶ່ງ, ເປັນປັດໃຈຕັດສິນຄວາມກ້າວໜ້າຂອງ ມະນຸດຊາດ. ບໍ່ມີບັນຫາກ່ຽວກັບວິວັດທະນາການສັງຄົມ ບັນຫາ·ໃດທີ່ລະບອບສັງຄົມນິຍົມບໍ່ສົ່ງອິດທິພົນຂອງຕົນໄປກະທົບໃສ່ - ການແກ້ໄຂມັນ. ຈາກສະພາບເປັນດອນໜຶ່ງກາງ ມະຫາສະໝຸດສັດຕູ ບ່ອນທີ່ລັດທິຈັກກະພັດນິຍົມຄອບງຳຢູ່ເປັນເຈົ້ານັ້ນ, ລະບອບສັງຄົມນິຍົມອັນແທ້ຈິງໄດ້ປ່ຽນຮູບມັນມາເປັນ ຜືນແຜ່ນດິນເຂັ້ມແຂງແຫ່ງໜຶ່ງໃນເວລາສອງສາມທົດສະວັດທໍ່ນັ້ນ. ລະບອບສັງຄົມນິຍົມແມ່ນຖານທີ່ໝັ້ນຕົ້ນຕໍ ບ່ອນທີ່ເພິ່ນກຳລັງສ້າງສາອະນາຄົດແຫ່ງມະນຸດຊາດ. ກຳລັງແຮງແຫ່ງຊີວິດ ທີ່ບໍ່ມີໃຜເອົາຊະນະໄດ້, ຄວາມສາມາດປົ່ງຮາກລົງເລິກແລະ ການຂະຫຍາຍຕົວອອກຢູ່ໃນເງື່ອນໄຂຫລາຍແບບຫລາຍແນວຂອງ ມັນໄດ້ພິສູດຕົວອອກມາແລ້ວ. ລະບອບສັງຄົມນິຍົມກາຍເປັນກຳລັງແຮງຕົ້ນຕໍຢູ່ໃນການຕໍ່ສູ້ເພື່ອປ້ອງກັນໄພພິບັດສົງຄາມ ພະລັງຮອມນິວເຄລຍ, ໝາຍຄວາມວ່າ ເພື່ອປ້ອງກັນມະນຸດຊາດ-ອອກຈາກຄວາມສູນເສຍ. ມັນໄດ້ເຮັດໃຫ້ການຫັນປ່ຽນອົງປະກອບສຳຄັນຂອງລະບົບສາຍພົວພັນສາກົນ ມີລັກສະນະ ປະຊາທິປະໄຕເປັນໄປໄດ້, ໄດ້ສ້າງເງື່ອນໄຂຕ່າງໆເພື່ອດຳເນີນການຮ່ວມມືລະຫວ່າງລັດຕ່າງໆທີ່ມີລະບອບສັງຄົມແຕກຕ່າງກັນບົນພື້ນຖານຫລັກການຂອງການຢູ່ຮ່ວມກັນຢ່າງສັນຕິ.

ປະຫວັດຂອງລະບອບສັງຄົມນິຍົມໄດ້ຢືນຢັນດ້ວຍຄວາມຈະແຈ້ງເຖິງແນວຄິດຂອງ ເລນິນ ກ່ຽວກັບຮູບແບບລະອຽດນາໆຊະນິດຂອງການກໍ່ສ້າງສັງຄົມນິຍົມ. ການພັດທະນາແຕ່ລະປະເທດສັງຄົມນິຍົມ ມີຈຸດສະເພາະຕົວຫລາຍຈຸດທີ່ເປັນເອກະລັກຂອງໃຜລາວ ຢູ່ໃນການແກ້ໄຂບັນຫາວ່າດ້ວຍຮູບຖານຂອງລະບົບການເມືອງ ແລະ ຢູ່ໃນການສ້າງສາອຸດສາຫະກຳສັງຄົມນິຍົມ ກັບການຮ່ວມມືທາງດ້ານກະສິກຳ ແລະ ຢູ່ໃນການລົງ ມືປ່ຽນແປງແນວຄິດອຸດົມການ-ວັດທະນະທຳ.

ເລນິນ ຂຽນໄວ້ວ່າ: " ທຸກໆຊາດຈະກ້າວມາຫາ ລະບອບສັງຄົມນິຍົມ, ສິ່ງນີ້ແມ່ນແນ່ນອນຫລີກບໍ່ໄດ້ ແຕ່ວ່າມັນຈະກ້າວຮອດລະບອບນີ້ດ້ວຍວິທີທາງບໍ່ຄືກັນ ແຕ່ລະຊາດ ຈະນຳເອົາຄວາມແປກຕ່າງຂອງຕົນເອງມາສູ່ລະບອບປະຊາທິປະໄຕໃນຮູບການຫນຶ່ງໆ, ມາສູ່ລະບອບພະເດັດການກຳມາຊີບແບບຕ່າງໆ, ມາສູ່ຈັງຫວະການປ່ຽນແປງແບບສັງຄົມນິຍົມ ຕາມວາດຊີວິດຫລາຍແບບຂອງການດຳລົງຊີວິດແຫ່ງສັງຄົມ. ກ່ຽວກັບດ້ານນີ້ ເບິ່ງໃນທາງທິດສະດີ ແລະ ພາກປະຕິບັດແລ້ວ ບໍ່ມີຫຍັງຂີ້ຮ້າຍ ແລະ ຫນ້າຫົວຂວັນໄປກວ່າການວາດພາບອະນາຄົດ " ໃນນາມລັດທິວັດຖຸນິຍົມປະຫວັດສາດ " ດ້ວຍສີຫມົ່ນ-ມົວແບບດຽວ. ມັນກໍ່ແມ່ນການລະບາຍສີແບບຊູຊະດານ ທີ່ນັ້ນແລ້ວບໍ່ແມ່ນຫຍັງອື່ນໄກດອກ ".( ວ.ອິ.ເລນິນ, ນິພົນຄົບຊຸດເຫລັ້ມທີ ໓໐, ຫນ້າ ໑໔໓ .)

ຈຸດພິເສດສະເພາະຂອງການປະຕິວັດສັງຄົມນິຍົມ ຢູ່ປະ

ເທດຕ່າງໆໃນເອີຣົບກາງ ແລະ ຕາເວັນອອກໃຕ້ມີດັ່ງຕໍ່ ໄປ ນີ້ :

- ໃນຂະນະທີ່ທຳການປະຕິວັດສັງຄົມນິຍົມນັ້ນ ຊົນຊັ້ນກຳມະກອນໄດ້ກຳອຳນາດແລ້ວ ແລະ ກໍ່ຍັງມີບັນຫາກ່ຽວກັບ ການໂຄ່ນລົ້ມອຳນາດເກົ່າ ບັນຫານີ້ແຕ່ວ່າຕ້ອງຫມູນໃຊ້ມັນເພື່ອ - ໂຄ່ນລົ້ມຊົນຊັ້ນນາຍທຶນ;

- ຢູ່ໃນປະເທດເຫລົ່ານີ້ໄດ້ເກີດມີຂະບວນມະຫາຊົນ ອັນກວ້າງຂວາງ ແຕ່ລຸ່ມຫາເທິງ, ຂະບວນດັ່ງກ່າວໄດ້ຮັບ ການສະຫນັບສະຫນູນຈາກຂັ້ນເທິງ ;

- ເພິ່ນໄດ້ປັດເຂ່ຍຊົນຊັ້ນນາຍທຶນ, ສິ່ງດັ່ງກ່າວເປັນໄປໄດ້ຢ່າງງ່າຍດາຍ ເນື່ອງຈາກມີການແບ່ງແຍກຢູ່ໃນຖັນແຖວ- ຂອງພວກເຂົາເອງ, ເພິ່ນໄດ້ທຳລາຍສາຍພົວພັນໂດຍກົງ - ຂອງພວກເຂົາກັບພວກຈັກກະພັດ ດ້ວຍບາດຄ້ອນຕິດໆກັນ ຊຸດຫນຶ່ງ;

- ຊົນຊັ້ນກຳມະກອນປະກອບສ່ວນຢ່າງຫ້າວຫັນເພື່ອການເຕົ້າໂຮມແບບປະຊາທິປະໄຕ ຊາວຜູ້ອອກແຮງງານ ທຸກຄົນຕ້ານກັບລູກມືຈັກກະພັດຜູ້ກໍ່ກວນທຳລາຍ ໄຊພິຊິດ ຂອງປະຊາທິປະໄຕ;

- ເພິ່ນໄດ້ເຜີຍແປພັກນາຍທຶນແລະທຳລາຍອິດທິພົນຂອງພວກເຂົາ;

- ອິດທິພົນຂອງພັກກອມມູນິດ ແລະ ກຳມະກອນ ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດເຊົາ;

- ຊົນຊັ້ນກຳມະກອນໄດ້ກຳຣອບເອົາໄມ້ງັດບັນຊາ ເສດຖະກິດໄວ້ໃນກຳມືຂອງພວກຕົນ. ( ເບິ່ງ ລ.ໂຕນກູນິບ "ກຳລັງແຮງປະຕິວັດຕົ້ນຕໍຂອງຍຸກສະໄໝພວກເຮົາ ". ມົດສະກູ ໑໙໗໙, ຫນາ ໖໐-໖໑ .)

ໃນເວລາດຽວກັນ ກົດເກນລວມກໍເປັນສິ່ງສະເພາະ ຕົວຂອງການປະຕິວັດສັງຄົມນິຍົມ ແລະ ຂອງພາກປະຕິບັດຕົວຈິງແຫ່ງການສ້າງສາສັງຄົມນິຍົມ. ຖະແຫລງການຂອງກອງປະ-ຊຸມຜູ້ຕາງຫນ້າພັກກອມມູນິດ ແລະ ກຳມະກອນປີ ໑໙໕໗ ທີ່ໄດ້ຕີລາຄາຮ່ວມກັນເປັນຄັ້ງທຳອິດໃນຄຸນຄ່າຂອງບົດຮຽນແຫ່ງການຂະຫຍາຍຕົວຂອງລະບອບສັງຄົມນິຍົມໃນຖານະເປັນ ລະບົບແຫ່ງໂລກ ກໍຍົກເອົາກົດເກນຕົ້ນຕໍສະເພາະຕົວຂອງທຸກ ໆ ປະເທດທີ່ກ້າວເຂົ້າສູ່ເສັ້ນທາງສັງຄົມນິຍົມ ອັນຕໍ່ໄປນີ້[໕໑]:"... ການນຳພາມະຫາຊົນຜູ້ອອກແຮງງານໂດຍຊົນຊັ້ນກຳມະ ກອນ ເຊິ່ງມີແກນກາງປະກອບສ້າງດ້ວຍພັກມາກຊິດ-ເລນິນິດ ໃນການປະຕິວັດກຳມາຊີບພາຍໃຕ້ຮູບການອັນໃດອັນຫນຶ່ງແລະໃນການສ້າງຕັ້ງພະເດັດການກຳມາຊີບພາຍໃຕ້ຮູບການໃດ ຮູບການຫນຶ່ງ; ການສ້າງພັນທະພາບລະຫວ່າງຊົນຊັ້ນກຳມະກອນກັບມະຫາຊົນຕົ້ນຕໍຂອງຊາວນາແລະ ຊາວຜູ້ອອກແຮງງານຊັ້ນອື່ນໆ; ການທັບມ້າງກຳມະສິດແບບທຶນນິຍົມ ແລະ ການສ້າງຕັ້ງກຳມະສິດສັງຄົມໃນພາຫະນະຕົ້ນຕໍຂອງການຜະລິດ; ການຜັນປ່ຽນກະສິກຳແບບສັງຄົມນິຍົມເທື່ອລະກ້າວ; ການພັດທະ-ນາເສດຖະກິດແຫ່ງຊາດ ຢ່າງມີແຜນການ ທີ່ມຸ່ງສູ່ການສ້າງສາ

ລະບອບສັງຄົມນິຍົມກັບລະບອບກອມມູນິດ ມຸ່ງສູ່ການຍົກລະດັບການດຳລົງຊີວິດຂອງຊາວຜູ້ອອກແຮງງານ, ການປະຕິວັດສັງຄົມນິຍົມຢູ່ໃນດ້ານແນວຄິດ ແລະ ວັດທະນະທຳກັບການ ກໍ່ຕັ້ງຊົນຊັ້ນປັນຍາຊົນທີ່ຈົງຮັກພັກດີຕໍ່ຊົນຊັ້ນກຳມະກອນ ຕໍ່ປະຊາຊົນຜູ້ອອກແຮງງານ ແລະ ຕໍ່ພາລະກິດຂອງລັດທິສັງຄົມນິຍົມ, ການຍຸບເລີກແອກກົດຂີ່ຊາດ ແລະ ການສະຖາປະນາຄວາມ ສະເໝີພາບໃນດ້ານສິດທິ ແລະ ໄມຕີຈິດມິດຕະພາບຖານ ອ້າຍນ້ອງ ລະຫວ່າງປະຊາຊາດທັງຫລາຍ, ການປ້ອງກັນໄຊພິຊິດຂອງລະບອບສັງຄົມນິຍົມ ອອກຈາກການບຸກຣຸກຂອງພວກສັດຕູພາຍນອກ ແລະ ພາຍໃນ, ການສ້າງຄວາມສາມັກຄີຂອງຊົນຊັ້ນກຳມະກອນ ປະເທດໃດປະເທດໜຶ່ງກັບຊົນຊັ້ນກຳມະກອນໃນປະເທດອື່ນໆ ນັ້ນຄືລັດທິສາກົນກຳມາຊີບ ".(ເອກະສານໂຄງການອາກາບຕໍ່ສູ້ເພື່ອສັນຕິພາບ, ປະຊາທິປະໄຕ ແລະ ລະບອບສັງຄົມນິຍົມ", ມົດສະກູ, ໑໙໖໑, ໜ້າ ໑໔-໑໕.)

ດ້ວຍການສ້າງຮູບຖານລະບົບສັງຄົມນິຍົມໂລກ, ກົດເກນຂອງລະບອບສັງຄົມນິຍົມບໍ່ພຽງແຕ່ສະແດງຕົວອອກຢູ່ໃນ ປະເທດດຽວຄືກັບແຕ່ໃນຄາວກ່ອນແລ້ວ ແຕ່ຫາກຢູ່ໃນລະດັບ ທີ່ກວ້າງຂວາງກວ່າ. ຍິ່ງໄປກວ່ານີ້ ກົດເກນໃໝ່ອີກຕັ້ງຊຸດ ກໍເລີ່ມສະແດງລິດອອກຄືກັນ, ມັນຊີ້ບອກ ລັກສະນະສະເພາະຂອງການຂະຫຍາຍຕົວຂອງລະບົບສັງຄົມນິຍົມແຫ່ງໂລກໃນຖານະເປັນສິ່ງໜຶ່ງສິ່ງດຽວ. ເວົ້າໄດ້ວ່າກົດເກນເຫລົ່ານີ້ ຂະຫຍາຍອອກ ແລະ ເຮັດໃຫ້ກົດເກນ ແຫ່ງການຂະຫຍາຍຕົວ

ພາຍໃນຂອງລະບອບສັງຄົມນິຍົມ ສົມບູນຂຶ້ນວາດໃດວາດໜຶ່ງ, ມັນຊອນຊ່ອນເຂົ້າກັນດ້ວຍຫລັກການລວມແຫ່ງການແກ້ໄຂ ບັນຫາຊາດຢູ່ໃນຂອບເຂດຂອງລັດສັງຄົມນິຍົມຫລາຍຊົນຊາດ ຊົນເຜົ່າເຊິ່ງຮັບປະກັນຄວາມສະເໝີພາບອັນສົມບູນທາງດ້ານ - ການເມືອງ ແລະ ນິຕິໃນໃຫ້ແກ່ທຸກໆປະຊາຊາດ.ກົດເກນດັ່ງກ່າວສ່ອງແສງເຖິງຮູບການສະເພາະຂອງການຫັນມາມີລັກສະນະສາກົນຂອງລະບົບສັງຄົມນິຍົມແຫ່ງໂລກ, ຊຶ່ງໃນ ຂະນະ-ດຽວກັນກໍແມ່ນຮູບການທີ່ກົມກຽວກັບທັງຜົນປະໂຫຍດແຫ່ງຊາດ ແລະ ທັງຜົນປະໂຫຍດຂອງສາກົນ.

ກົດເກນເຫລົ່ານີ້ ມີດັ່ງຕໍ່ໄປນີ້: ຄວາມໃກ້ຊິດ ຫລາຍຮູບຫລາຍແບບລະຫວ່າງປະເທດສັງຄົມນິຍົມ, ການຮ່ວມມື ແລະ ການຊ່ວຍເຫລືອຊຶ່ງກັນແລະກັນແບບອ້າຍນ້ອງ, ການ ແບ່ງວຽກງານແບບສັງຄົມນິຍົມສາກົນ; ການສົ່ງເສີມບູລະນະພາບທາງດ້ານເສດຖະກິດ, ກະແສອ່ຽງສ້າງຕັ້ງເສດຖະກິດ ໂລກແບບເອກະພາບຂອງປະເທດສັງຄົມນິຍົມ; ອັດຕາທະວີ ອັນວ່ອງໄວແລະໝັ້ນທ່ຽງຂອງເສດຖະກິດ ຢູ່ໃນການຂະຫຍາຍຕົວອັນມີແຜນຂອງມັນ;ການປັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດການເມືອງ ແລະ ວັດທະນະທຳ ແລະ ການຂ້າມຜ່ານໄປສູ່ລະບອບກອມມູນິດຂອງປະເທດສັງຄົມນິຍົມໄປພ້ອມໆກັນຫລືຫລຸດລົ່ນກັນ ( ຢູ່ໃນຂອບເຂດຂອງຍຸກສະໄໝປະຫວັດສາດອັນດຽວກັນ ); ການປ້ອງກັນໄຊພິຊິດຂອງລະບອບ ສັງຄົມນິຍົມຈາກການຮຸກຮານຂອງພວກສັດຕູພາຍນອກແລະ ພາຍ

ໃນ.

ເຫັນໄດ້ເອງແລ້ວວ່າ ກົດເກນເຫລົ່ານີ້ກໍ່ຮູບຮ່າງ ຂຶ້ນເອງ ແລະ ເລີ່ມສະແດງຕົວອອກເທື່ອລະຂັ້ນຂະນະທີ່ ລະບົບສັງຄົມນິຍົມແຫ່ງໂລກກໍ່ນັບມື້ນັບເຂັ້ມແຂງ ແລະ ຂະຫຍາຍຕົວອອກຈັກໄຊ, ຢ່າງໃດກໍຕາມ ທາດມູນຂອງກົດເກນທັງ ຫມົດເຫລົ່ານີ້ກໍ່ຫາກແຕກຕ່າງກັນເອງແລ້ວ ຕັ້ງແຕ່ຢູ່ໃນຂັ້ນຕອນທຳອິດຂອງການຂະຫຍາຍຕົວແຫ່ງລະບອບສັງຄົມນິຍົມໂລກພູມ.

ບົດຮຽນປະຫວັດສາດອັນຮັ່ງມີຢັ້ງຢືນກົດເກນລວມ ຂອງການປະຕິວັດສັງຄົມນິຍົມ ແລະ ຂອງການສ້າງສາລະບອບສັງຄົມນິຍົມ, ຂອງການກໍ່ສ້າງລະບົບສັງຄົມນິຍົມແຫ່ງໂລກ. ໃນເວລາດຽວກັນພາກປະຕິບັດຕົວຈິງກໍ່ຊີ້ບອກວ່າ ການ ຜີກທ່າງອອກຈາກແນວທາງຂອງລັດທິມາກ-ເລນິນ, ຄວາມຫ່າງເຫີນຈາກລັດທິສາກົນກຳມາຊີບ ກໍ່ໃຫ້ເກີດສະພາບຢຸດຊະງັກ ກ້າວຖອຍຫລັງ, ສ້າງຄວາມຫວ່າດກົວທີ່ຈະສູນເສຍ ສິ່ງທີ່ໄດ້ ມາແລ້ວ.

ຢູ່ໃນບົດຕໍ່ໄປ ພວກເຮົາຈະພິຈາລະນາເບິ່ງວ່າກົດເກນທີ່ກ່າວຜ່ານມານີ້ ມີປະພຶດຕິກຳແນວໃດຕໍ່ການຂະຫຍາຍຕົວຂອງລະບອບສັງຄົມນິຍົມໂລກ.

## ວົງຄະນາຍາດປະຊາຊາດອ້າຍນ້ອງ

ຄວາມເບັ່ງບານຂອງປະເທດສັງຄົມນິຍົມແຕ່ລະຊາດ ກັບການປັບປຸງອະທິປະໄຕຂອງລັດສັງຄົມນິຍົມເດີນໄປຄຽງຄູ່ ກັບການເສີມກຳລັງແຮງແບບນັບມື້ນັບເລິກເຊິ່ງກວ່າເກົ່າ ໃຫ້ແກ່ການພົວພັນຕໍ່ກັນ ແລ້ວເພີ່ນກໍເຫັນວ່າ ເກີດມີທາດມູນຮ່ວມກັນນັບມື້ນັບຫລາຍຂຶ້ນຢູ່ໃນນະໂຍບາຍການເມືອງຂອງພວກເຂົາຢູ່ໃນເສດຖະກິດ ແລະ ການດຳລົງຊີວິດຢູ່ໃນສັງຄົມ ຂອງພວກເຂົາ, ມີການປັບລະດັບແຫ່ງການຂະຫຍາຍຕົວ ເປັນກ້າວໆ. ຕາມກົດເກນຕັກກະສາດ ແລະ ພາວະວິໄສແລ້ວ ບາດ ກ້າວເດີນຂອງຂະບວນການຫຍັບເຂົ້າຫາກັນເປັນຂັ້ນໆ ຂອງການເສີມກຳລັງໃນການຮ່ວມມືຂອງບັນດາປະເທດໃນລະບົບສັງຄົມນິຍົມກຳລັງດຳເນີນຢູ່.

ການຫຍັບເຂົ້າຫາກັນຂອງປະຊາຊາດ ແລະ ປະເທດສັງຄົມນິຍົມມີດຳເນີນໄປດ້ວຍຫລາຍຮູບຫລາຍແບບ. ຢູ່ໃນ ຂອບເຂດເສດຖະກິດມັນໝາຍເຖິງການຂະຫຍາຍຕົວຂອງການ ບູ

ລະນະເສດຖະກິດແບບສັງຄົມນິຍົມ; ຢູ່ໃນຂອບເຂດ ສັງຄົມ ການເມືອງ ຫມາຍເຖິງການປັບປຸງ ແລະ ການຂະຫຍາຍຕົວຂອງລະບອບສັງຄົມນິຍົມ ສ່ວນໃນດ້ານການເມືອງຕ່າງປະ - ເທດ ມັນຫມາຍເຖິງວ່າ ໄດ້ມີການລົງມືປະຕິບັດແນວທາງປະສານອັນຫນຶ່ງທີ່ໄດ້ຕົກລົງຮ່ວມກັນ ແນວທາງທີ່ແນໃສ່ປັບປຸງບຳລຸງສັນຕິພາບ ແລະ ມິດຕະພາບລະຫວ່າງປະຊາຊາດຕ່າງໆ, ແນໃສ່ເຮັດໃຫ້ການຫລຸດຜ່ອນຄວາມເຄັ່ງຕຶງສາກົນຫນັກແຫນ້ນຂຶ້ນ ແນໃສ່ຄັດຄ້ານແນວທາງການເມືອງແບບຮຸກຮານຂອງຈັກກະພັດນິຍົມ; ຢູ່ໃນຂອບເຂດແນວຄິດ-ຫມາຍເຖິງການສ້າງ-ໂລກະທັດແບບມາກຊິດ-ເລນິນິດ ຢ່າງຕໍ່ເນື່ອງ ການແຜ່ ຂະຫຍາຍການແລກປ່ຽນສິ່ງມີຄຸນຄ່າດ້ານວັດທະນະທຳຕໍ່ກັນ ແລະ ກັນ ແລະ ອື່ນໆອີກ. ວາດຊີວິດທ່ວງທ່າ ຂອງລະບອບດຳເນີນ ອັນມີຕິດພັນກັນໄປຫມົດ.

ການຮ່ວມມືຫລາຍແບບຫລາຍແນວແລະການຫຍັບເຂົ້າໃກ້ກັນຂອງບັນດາປະເທດອ້າຍນ້ອງ ສືບເນື່ອງມາຈາກ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາລະບົບສັງຄົມ ນິຍົມ. ການຮ່ວມມືດັ່ງກ່າວໄດ້ຈັດຕັ້ງຂຶ້ນ ແລະ ຮັບການ ຊີ້ນຳຈາກພັກກອມມູນິດທີ່ກຳອຳນາດບົນພື້ນຖານຂອງຄວາມ ຮອບຮູ້ທາງດ້ານວິທະຍາສາດກ່ຽວກັບກົດເກນຂອງລະບອບສັງຄົມນິ-ຍົມໂລກ, ບົນພື້ນຖານຂອງສັດຈະວິພາກກ່ຽວກັບຄວາມ ຂ້ອງກ່ຽວລະຫວ່າງຜົນປະໂຫຍດແຫ່ງຊາດ ກັບຜົນປະໂຫຍດ ແຫ່ງສາກົນ.

ທ່າອຽງທັນມາມີລັກສະນະສາກົນຂອງຊີວິດສັງຄົມ ສືບເນື່ອງມາຈາກເງື່ອນໄຂພາວະວິໄສ ແລະ ມັນກຳລັງສະແດງຕົວອອກຢູ່ໃນທົ່ວໂລກ. ຢູ່ໃນພາກສ່ວນລະບົບນາຍທຶນ ແຫ່ງໂລກ ທ່າອຽງອັນນີ້ສະແດງຕົວອອກຢູ່ໃນການສ້າງຕັ້ງກຸ່ມເສດຖະກິດລະຫວ່າງລັດເຊັ່ນ ກຸ່ມປະຊາຄົມເສດຖະກິດເອີຣົບ ສະມາຄົມເອີຣົບ ເພື່ອການຄ້າເສລີ ອົງການປະສານງານ ແລະ ພັດທະນາເສດຖະກິດ ແລະ ອື່ນໆ. ເຫັນໄດ້ວ່າປະກົດມີ ພົນທະພາບທາງການເມືອງລະຫວ່າງຊາດຫລາຍອັນເກີດຂຶ້ນໂດຍສະເພາະອົງການສົນທິສັນຍາອັດລັງຕິກເໜືອ ຫລືນາໂຕເຊິ່ງມີລັກສະນະຮຸກຮານ. ກຸ່ມທັງໝົດເຫລົ່ານີ້ກ່ອນອື່ນໝົດ ແມ່ນຮັບໃຊ້ຜົນປະໂຫຍດຂອງນາຍທຶນຜູກຂາດໃຫຍ່ ຜູ້ແລ່ນນຳ ນະໂຍບາຍການເມືອງຈັກກະພັດ. ຢູ່ພາຍໃນອົງການຈັດຕັ້ງເຫຼົ່ານີ້ເຫັນວ່າມີການຂັດແຍ່ງຢ່າງຮຸນແຮງລະຫວ່າງປະເທດຕ່າງໆ ລະຫວ່າງຄູ່ຮ່ວມຜົນປະໂຫຍດທີ່ເຂັ້ມແຂງແລະອ່ອນເພຍ, ລະຫວ່າງບໍລິສັດຜູກຂາດສາກົນ ກັບຊົນຊັ້ນກຳມະກອນ.

ຄວາມສຳພັນລະຫວ່າງປະເທດສັງຄົມນິຍົມຕ່າງໆແລະລະບົບການຮ່ວມມືກັນຢູ່ໃນຂອບເຂດທັງໝົດຂອງຕົນຫລືຢູ່ໃນ ວົງຄະນາຍາດສັງຄົມນິຍົມນັ້ນ ເບິ່ງໃນດ້ານຄຸນນະພາບແລ້ວມັນມີລັກສະນະແຕກຕ່າງຢູ່ຢ່າງໜຶ່ງ. ແມ່ນສ່ວນເອງທີ່ເປັນ ແບບຢ່າງຂອງຄວາມສຳພັນແບບອ້າຍນ້ອງໃນອະນາຄົດ ລະຫວ່າງປະຊາຊາດທັງໝົດຢູ່ໃນໂລກ.

# <u>ການຊ່ວຍເຫລືອຊຶ່ງກັນແລະກັນທາງດ້ານເສດຖະກິດ</u>

ທຳອິດນີ້ ມາເບິ່ງຄວາມສຳພັນທາງດ້ານເສດຖະກິດ ລະຫວ່າງປະເທດສັງຄົມນິຍົມກ່ອນ. ຄວາມສຳພັນອັນນີ້ມີ ເປົ້າໝາຍຢາກກໍ່ສ້າງເສດຖະກິດສັງຄົມນິຍົມອັນເຂັ້ມແຂງ,ຮັບປະກັນຄວາມກ້າວໜ້າຫລາຍໆແບບຂອງອຸດສາຫະກຳ ກະສິກຳວິທະຍາສາດ ແລະ ເຕັກນິກພ້ອມດ້ວຍຄວາມສຳເລັດ ໃນການສ້າງສາພື້ນຖານທາງດ້ານວັດຖຸ ແລະ ເຕັກນິກຂອງລະບອບ-ສັງຄົມນິຍົມ ແລະ ກອມມູນິດ. ຄວາມສຳພັນເຫລົ່ານີ້ອຳນວຍຄວາມຮຸ່ງເຮືອງໃຫ້ແກ່ລະບົບເອກະພາບຂອງເສດຖະກິດ ສັງຄົມນິຍົມແຫ່ງໂລກ, ອຳນວຍຄວາມສະດວກໃຫ້ແກ່ໄຊຊະນະ-ຂອງລະບອບສັງຄົມນິຍົມ ເໜືອລະບອບທຶນນິຍົມຢ່າງວ່ອງໄວທີ່ສຸດເທົ່າທີ່ຈະໄວໄດ້ ອຳນວຍ ການປັບປຸງບຳລຸງກຳລັງຂອງວົງຄະນາຍາດສັງຄົມນິຍົມ.

ຄວາມເລິກເຊິ່ງໃນການຮ່ວມມືກັນທາງດ້ານເສດຖະກິດ, ແລະ ການປັບປຸງມັນແມ່ນໜ້າທີ່ຂອງທຸກໆລັດສັງຄົມນິຍົມບໍ່ວ່າເຫງົ້າພະລັງທາງດ້ານເສດຖະກິດ ແລະ ເງື່ອນໄຂ ສຳລັບການຂະຫຍາຍຕົວຈະຢູ່ໃນລະດັບໃດ. ປະເທດສັງຄົມນິຍົມ ທີ່ໃຫຍ່ກວ່າໝູ່ຄືສະຫະພາບໂຊວຽດ ມີບໍ່ຊັບພະຍາກອນ ທາງດ້ານພະລັງງານ ແລະ ວັດຖຸດິບພື້ນຖານຫລາຍກວ່າ ປະເທດອື່ນໆ, ມີຄວາມສາມາດອັນກວ້າງຂວາງກວ່າໃນດ້ານການຜະລິດວັດຖຸ, ບໍ່ວ່າຢູ່ໃນດ້ານຄວາມກ້າວໜ້າຂອງວິທະຍາສາດ-

ເຕັກນິກກໍເຊັ່ນດຽວກັນ. ແຕ່ວ່າສະຫະພາບໂຊວຽດເອງ ກໍຫາກມີຄວາມສົນໃຈຢ່າງເລິກເຊິ່ງຄືກັນຕໍ່ການນຳໃຊ້ ຢ່າງກ້ວາງຂວາງກວ່າເກົ່າໃນທ່າດີຂອງການແບ່ງງານສາກົນໂດຍສະເພາະຢູ່ໃນວົງຄະນາຍາດສັງຄົມນິຍົມ ດ້ວຍອິງໃສ່ ເຫດການທີ່ວ່າ ການເຕົ້າໂຮມຄວາມພະຍາຍາມ ຊ່ວຍເລັ່ງລັດ - ຄວາມຄືບຫນ້າ ຊ່ວຍໃຫ້ໄດ້ຮັບຜົນສູດທ້າຍຫລາຍກວ່າເກົ່າ .

ຍິ່ງສົ່ງເສີມ ການຮ່ວມມື ທາງດ້ານເສດຖະກິດ ລະ-ຫວ່າງປະເທດອ້າຍນ້ອງຄືບຫນ້າໄປເທົ່າໃດບູລະນະພາບຂອງເສດຖະກິດລະຫວ່າງປະເທດເຫລົ່ານີ້ ກໍຍິ່ງມີຄວາມ ສຳຄັນຫລາຍຂຶ້ນ ຍ້ອນວ່າມັນທັງສອດຄ່ອງກັບຜົນປະໂຫຍດຂອງ ວົງຄະນາຍາດໂດຍທົ່ວໄປ ແລະ ທັງສອດຄ່ອງກັບຜົນປະໂຫຍດແລະພາລະຫນ້າທີ່ຂອງປະເທດຕ່າງໆ. ຢູ່ໃນການ ບູລະນະເສດຖະກິດເອງ, ເພິ່ນເຫັນມີຄວາມຍາດສາມາດ ຫລາຍຂຶ້ນໃນສ່ວນທີ່ກ່ຽວກັບການນຳໃຊ້ຊັບພະຍາກອນແລະຄວາມອຸດົມສົມບູນຂອງຊາດຢ່າງມັດທະຍັດເຫມາະສົມ ແລະຢ່າງມີປະສິດທິພາບ,ທັງໃນສ່ວນທີ່ກ່ຽວກັບການປັບປຸງອະທິປະໄຕແຫ່ງຊາດໃນຂ້າງຫນ້າ. ການຮ່ວມມືມີສ່ວນສົ່ງເສີມການຂະຫຍາຍ ຕົວຢ່າງສົມສ່ວນ ຂອງເສດຖະກິດແຫ່ງຊາດ ຢູ່ໃນແຕ່ລະປະເທດສົ່ງເສີມການສ້າງໂຄງຮ່າງປະສົມທີ່ສົມທົບອຸດສາຫະກຳກັບກະສິກຳເຂົ້າກັນ, ທີ່ສົມທົບຂະແຫນງຂອງກັນແລະ ປຸງແຕ່ງເຂົ້າກັນ ສົມທົບການຜະລິດ ພາຫະນະການຜະລິດ ແລະພາກສ່ວນສິນຄ້າບໍລິໂພກເຂົ້າກັນຢູ່ໃນອັດຕາສ່ວນອັນເຫມາະສົມ ທີ່ສຸດ

ເທົ່າທີ່ຈະເຮັດໄດ້. ຮູບແບບໃຫມ່ອ່ຽມທີ່ສຸດຂອງການ ແບ່ງງານສາກົນ ເຊິ່ງກຳລັງກໍ່ຮູບຢູ່ໃນລະຫວ່າງການເຮັດໃຫ້ສາຍຜູກພັນທາງດ້ານເສດຖະກິດເລິກເຊິ່ງຂຶ້ນນີ້ຊ່ວຍໃຫ້ບັນດາ ປະເທດທີ່ມີລະດັບຂະຫຍາຍຕົວທາງດ້ານເສດຖະກິດບໍ່ສູງປານໃດນັ້ນ ດຳເນີນຂະບວນຫັນປ່ຽນມາເປັນອຸດສາຫະກຳ ແລະການນຳໃຊ້ຄວາມກ້າວຂອງເຕັກນິກວ່ອງໄວຂຶ້ນກວ່າເກົ່າ, ແລະອີງໃສ່ພື້ນຖານອັນນີ້ກໍຍົກລະດັບຜະລິດຕະພາບຂອງແຮງງານ ສັງຄົມສູງຂຶ້ນອີກ. ອຸດສາຫະກຳຢູ່ໃນແຕ່ລະປະເທດສັງຄົມນິຍົມ-ກາຍເປັນຂະແຫນງກຸນແຈຂອງເສດຖະກິດແຫ່ງຊາດ. ນອກຈາກນີ້ ເພິ່ນຍັງໃຫ້ຄວາມສຳຄັນອັນຍິ່ງໃຫຍ່ແກ່ການພັດທະນາການກະສິກຳ, ແກ່ການນຳໃຊ້ວິທີການອັນມີປະສິດທິພາບສູງຢູ່ໃນຂົງເຂດນີ້.

ການຮ່ວມມືທາງດ້ານເສດຖະກິດລະຫວ່າງປະເທດສັງຄົມນິຍົມ ເຊິ່ງກຳລັງດຳເນີນຢູ່ທັງເຂັ້ມແຂງຂຶ້ນນຳນັ້ນ ເປັນຂໍ້ ພິສູດອັນຫນ້າເຊື່ອຖືຂອງຄວາມຫນັກແຫນ້ນໃນທ່າອ່ຽງ ( ເຊິ່ງເລນິນ ຄາດຫມາຍໄວ້ແລ້ວ ) ໄປສູ່ການລະຖາບະນາລະບົບເສດຖະກິດໂລກຢ່າງຫນຶ່ງທີ່ເປັນເອກະພາບແລະໄດ້ຮັບຄວາມຄຸ້ມຄອງຕາມແຜນການລວມຂອງຊົນຊັ້ນກຳມາຊີບທຸກໆຊາດ . ( ເບິ່ງ ວ.ອີ.ເລນິນ, ນິພົນຄົບຊຸດ, ເຫລັ້ມທີ ໔໑, ຫນ້າ ໑໖໔ .)

ບົດບາດອັນຍິ່ງໃຫຍ່ຢູ່ໃນການພັດທະນາການຮ່ວມມື ທາງດ້ານເສດຖະກິດ ລະຫວ່າງປະເທດສັງຄົມເປັນຂອງສະພາ -

ຊ່ວຍເຫລືອຊຶ່ງກັນແລະກັນ. ໃນປີ ໑໙໘໐ ອົງການນີ້ ເຕົ້າໂຮມເອົາປະເທດຕ່າງໆໄດ້ ໑໐ ປະເທດຢູ່ທະວີບເອີຣົບອາຊີ ແລະ ອາເມລິກາ.

ປະເທດສະມາຊິກ ສ.ຊ.ສ.ປະກອບຕົວເປັນ ໂຮງງານອຸດສາຫະກຳສົມບູນທີ່ສຳຄັນກວ່າໝູ່ຢູ່ໃນໂລກ. ແມນແທແລວ ຕາມພະລັງແຮງທາງດ້ານເສດຖະກິດຂອງຕົນ ປະເທດເຫລົ່ານີ້ ຜະລິດເຄື່ອງອຸດສາຫະກຳໄດ້ເກືອບຮອດ ໑/໓ ຂອງ ຜະລິດຕະພັນອຸດສາຫະກຳໂລກ ແລະ ລື່ນກາຍ "ສູນກາງກຳລັງແຮງ " ຂອງປະເທດທຶນນິຍົມເຊັ່ນ ເອີຣົບ ຕາເວັນຕົກ(ຊຶ່ງຜະລິດໄດ້ປະມານ ໔໔% ຂອງຜະລິດຕະກຳໂລກ)ແລະສະຫະລັດອາເມລິກາ(ຜະລິດໄດ້ປະມານ ໓໐%) ຖ້າສົມທຽບພະລັງທາງດ້ານເສດຖະກິດ ຂອງຕົນ ໃສ່ກັບຂອງພວກນີ້. ປະເທດສະມາຊິກ ສ.ຊ.ສ ຮວມທັງໝົດມີລາຍໄດ້ແຫ່ງຊາດຢູ່ ປະມານ ໔໕% ຂອງລາຍໄດ້ແຫ່ງຊາດໃນໂລກ. ການຜະລິດ - ເຄື່ອງສິນຄ້າອຸດສາຫະກຳສະເລ່ຍຕໍ່ຫົວຄົນໄດ້ສູງທະວີຂຶ້ນຮອດ ໘ ເທົ່າ ເມື່ອປຽບໃສ່ປີ ໑໙໕໐ ( ຢູ່ໃນປະເທດສະມາ ຊິກ ສ.ຊ.ສ.) ສ່ວນອັດຕາສະເລ່ຍໂລກທະວີຂຶ້ນພຽງແຕ່ ໓,໖ ເທົ່ານັ້ນ. ສາມສິບປີກ່ອນນີ້ ໃນດ້ານພະລັງທາງດ້ານອຸດສາຫະກຳນີ້ ບັນດາປະເທດສະມາຊິກສະພາຍັງເປັນຮອງ ເອີຣົບຕາເວັນຕົກຢູ່ ແຕ່ມາປະຈຸບັນ ປະເທດເຫລົ່ານີ້ ຜະລິດ ໄດ້ຫລາຍກວ່າປະເທດສະມາຊິກຂອງຕະຫລາດຮວມເອີຣົບເຊັ່ນ: ດ້ານພະລັງງານໄຟຟ້າ ໄດ້ ໑,໓ ທົບ, ອາຍໄຕໄດ້ ໔, ໘

ທົບ, ຖ່ານຫີນ ( ຄິດໄລ່ຕາມຫົວໜ່ວຍພະລັງງານ ) ໄດ້ ໓ ທົບ, ເຫລັກກ້າ ແລະ ອາຊິດມາດ ໄດ້ ໑,໕ ທົບ, ຊີມັງ ໄດ້ ໑,໓ ທົບ, ໃຍເຈ້ຍໄດ້ ໔,໓ ທົບ. ເວົ້າລວມແລ້ວໃນປະຈຸບັນນີ້ ປໍລິມາດການຜະລິດອຸດສາຫະກຳຢູ່ໃນປະເທດສະມາຊິກ ສ.ຊ.ສ ນີ້ ມີຫລາຍກວ່າຂອງລັດສະມາຊິກຕະຫລາດຮ່ວມເອີຣົບ ຮອດສອງເທົ່າ.

ອັດຕາທະວີແຮງທາງດ້ານເສດຖະກິດ, ຄວາມກ້າວໜ້າທາງວິທະຍາສາດເຕັກນິກອັນວ່ອງໄວ, ການເພີ່ມລະດັບຄວາມຢູ່ດີກິນດີ ແລະ ວັດທະນະທຳຂອງປະຊາຊົນຢ່າງຕໍ່ເນື່ອງ, ການປັບລະດັບການພັດທະນາເສດຖະກິດໃຫ້ເທົ່າທຽມກັນ ທັງໝົດນີ້ລ້ວນແຕ່ແມ່ນເອກະລັກຂອງບັນດາປະເທດສະມາຊິກ ສ.ຊ.ສ.

ການຮ່ວມມືລະຫວ່າງປະເທດສະມາຊິກ ສ.ຊ.ສ. ດຳເນີນເກີດເປັນຈິງຢ່າງສອດຄ່ອງກັບຫລັກການຂອງລັດທິສັງຄົມນິຍົມສາກົນບົນພື້ນຖານຄວາມເຄົາລົບໃນອະທິປະໄຕແຫ່ງ ລັດ ໃນຄວາມເປັນເອກະລາດແຫ່ງຊາດ, ແລະສິດຜົນປະໂຫຍດ-ແຫ່ງຊາດ ທັງບໍ່ມີການແຊກແຊງເຂົ້າໃນກິດຈະການພາຍ ໃນຂອງປະເທດອື່ນ,ມີສິດສະເໝີພາບ ອີງຕາມຄວາມ ສະໝັກໃຈ, ແບບຕ່າງຝ່າຍຕ່າງມີຜົນ ແລະ ການຊ່ວຍເຫລືອ ຖານອາຍນອງອີກ.

ການຮ່ວມມືທາງດ້ານເສດຖະກິດຂອງບັນດາປະເທດ ສັງຄົມນິຍົມມີຫລາຍຮູບແບບທີ່ສຸດເຊັ່ນ: ການຄ້າພາຍນອກ,ການ

ຮ່ວມມືວາງແຜນເສດຖະກິດ, ການຫັນປ່ຽນເປັນ ສາຂາສະເພາະ ແລະປະສານງານກັນລະຫວ່າງລັດ, ການຮ່ວມມືທາງດ້ານວິທະຍາສາດເຕັກນິກ ແລະ ອື່ນໆອີກ.

ການຄ້າພາຍນອກ ແມ່ນຮູບການສຳຄັນຢ່າງໜຶ່ງ ຂອງການຮ່ວມມືທາງດ້ານເສດຖະກິດລະຫວ່າງປະເທດອາຍນອງ. ມັນເຮັດໃຫ້ການແບ່ງງານແບບສັງຄົມນິຍົມສາກົນ ເລິກເຊິ່ງໜັກແໜ້ນ ແລະດີຂຶ້ນ, ມັນມີສ່ວນອຳນວຍໃນການເຕີບໃຫຍ່ຂະຫຍາຍຕົວໂດຍທົ່ວໄປ ຂອງເສດຖະກິດສັງຄົມນິຍົມ. ການຄ້າຂອງກໍຂະຫຍາຍຕົວອອກບົນພື້ນຖານການຕົກລົງໄລຍະຍາວ ສິ່ງດັ່ງກ່າວຮັບປະກັນໃຫ້ແຕ່ລະລັດຮັບເອົາວັດຖຸດິບພື້ນຖານວັດສະດຸ ອຸປະກອນປະກອບ ແລະ ວັດຖຸສິນຄ້າເຍື່ອງຕ່າງໆ ທີ່ພວກເຂົາຕ້ອງການຕາມແຜນການ, ມັນອຳນວຍໃຫ້ຄວາມສະດວກແກ່ການຄ້າຂາຍຜະລິດຕະພັນຢ່າງຫລວງຫລາຍ.

ການຫັນປ່ຽນປະເທດສັງຄົມນິຍົມໃຫ້ເປັນປະເທດອຸດສາຫະກຳ ມີຜົນກະທົບຕໍ່ການດັດແປງໂຄງຮ່າງການຄ້າພາຍນອກຂອງພວກເຂົາ. ເຄື່ອງຈັກຍົນຍານ ແລະ ອຸປະກອນປະກອບນັບມື້ນັບມີບົດບາດສຳຄັນຂຶ້ນ ຢູ່ໃນການສົ່ງສິນຄ້າອອກ. ເພີ່ມເຕີມວ່າ ການແລກປ່ຽນທາງດ້ານພານິດ ລະຫວ່າງ ປະເທດສັງຄົມນິຍົມແຜ່ກວ້າງອອກ. ທາງດ້ານການແລກປ່ຽນ ສິນຄ້າລະຫວ່າງປະເທດສະມາຊິກ ສ.ຊ.ສ. ກັບລັດນາຍທຶນ ແລະປະເທດກຳລັງພັດທະນາກໍເພີ່ມທະວີຂຶ້ນເຊັ່ນດຽວກັນ. ດັ່ງຕົວຢ່າງໃນປີ ໑໙໗໙ ບໍລິມາດສິນຄ້າແລກປ່ຽນພາຍນອກຂອງປະ

ເທດສະມາຊິກ ສ.ຂ.ສ ເພີ່ມຂຶ້ນຮອດ ໑໘ % ນັບເປັນ ມູນຄ່າ ໑໙໖ ພັນລ້ານຣູບ ໃນນັ້ນນັບທັງການແລກປ່ຽນກັບຄືນມູນຄ່າ ໑໑໑ ພັນລ້ານ.

ບັນດາປະເທດສະມາຊິກ ສ.ຂ.ສ ໃຫ້ຄວາມສຳຄັນເປັນພິເສດຕໍ່ການຂະຫຍາຍຕົວໃນການຄ້າຂາຍເຄື່ອງຈັກຍົນແລະອຸປະກອນປະກອບບົນພື້ນຖານການຕົກລົງແບບຍາວນານ ລະຫວ່າງສອງຝ່າຍ ແລະ ຫລາຍຝ່າຍ, ຢູ່ໃນຂອບເຂດການຫັນປ່ຽນເປັນສາຂາສະເພາະ ແລະ ການປະສານງານກັນຢູ່ໃນດ້ານການຜະລິດກໍເປັນເຊັ່ນດຽວກັນ. ໃນປີ ໑໙໗໘ ປະລິມານຂອງຜະລິດຕະພັນຕາມສາຂາສະເພາະຢູ່ໃນການແລກປ່ຽນຄືນລະຫວ່າງປະເທດສະມາຊິກ ສ.ຂ.ສ ໄດ້ເພີ່ມຂຶ້ນເປັນ ໘໖%.

ການແລກປ່ຽນວັດຖຸຕອບສະໜອງຄວາມຕ້ອງການ ສ່ວນຫລວງຫລາຍຂອງລັດອ້າຍນ້ອງ. ໃນດ້ານວັດຖຸດິບ ພື້ນຖານຫລາຍຊະນິດ, ວັດຖຸເຊື້ອໄຟ ແລະ ວັດຖຸດິບຕ່າງໆ ໃນພາກສ່ວນເຄື່ອງຈັກຍົນຍານ ແລະ ອຸປະກອນປະເພດຕ່າງໆກໍເຊັ່ນດຽວກັນ. ໃນປີ ໑໙໗໘ ການແລກປ່ຽນວັດຖຸເຫລົ່ານີ້ໄດ້ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານຜະລິດຕະພັນອຸດສາຫະກຳກົນຈັກຮອດ ໖໓%, ສຳລັບແຮ່ເຫລັກ, ຖ່ານຫີນ, ຖ່ານກົກ, ນ້ຳມັນດິບ, ຂາງ, ຜະລິດຕະພັນແຜ່ນໂລຫະ ປະສົມເຫລັກນັ້ນ ຕົວເລກເຫລົ່ານີ້ມີດັ່ງຕໍ່ໄປນີ້: ໗໐%, ໙໘%, ໙໔%, ໖໓%, ໓໗% ແລະ ໖໐%.

ດ້ວຍຄວາມຈົງຮັກພັກດີຕໍ່ຫລັກການຂອງລັດທິສາກົນນິຍົມ,

ສະຫະພາບໂຊວຽດເອົາໃຈໃສ່ຕໍ່ການຕອບສະໜອງ ຄວາມຮຽກຮ້ອງຕ້ອງການໃນດ້ານພະລັງງານຂອງບັນດາ ປະເທດອ້າຍນ້ອງໃນລະບົບສັງຄົມນິຍົມ ທັງສືບຕໍ່ຈັດຫາສົ່ງນ້ຳມັນດິບ, ຜະລິດຕະພັນສຳຮອງຈາກນ້ຳມັນດິບ ແລະ ອາຍທຳມະຊາດ-ຈຳນວນຫລວງຫລາຍໃຫ້ແກ່ປະເທດເຫລົ່ານີ້. ລາຄາຂອງສິນຄ້າເຊິ່ງມີຄວາມສຳຄັນຂະໜາດນີ້ຍັງຄົງຫລຸດຕ່ຳກວ່າ ລາຄາໃນຕະຫລາດໂລກຫລາຍຢູ່.

ລາຄາຢູ່ໃນການແລກປ່ຽນລະຫວ່າງປະເທດສັງຄົມນິຍົມ-ຖືກກຳນົດດ້ວຍຂໍ້ຕົກລົງຮ່ວມໂດຍອີງໃສ່ລາຄາຕະຫລາດໂລກ. ໂດຍທົ່ວໄປແລ້ວມັນຖືກຮ່າງວາງອອກດ້ວຍຂໍ້ຕົກລົງໄລຍະຍາວສຳລັບໄລຍະຕົວຈິງໃດໜຶ່ງ; ດັ່ງນັ້ນຈຶ່ງບໍ່ມີບັນຫາວ່າດ້ວຍການຂຶ້ນລາຄາຫຼືການຫຼຸດລາຄາ ອັນເປັນລັກສະນະສະເພາະ ຂອງຕະຫລາດນາຍທຶນ. ລະບົບການວາງລາຄາຢູ່ໃນຕະຫລາດສັງຄົມນິຍົມແຫ່ງໂລກ ຍາມໃດກໍໄດ້ຮັບການບຳລຸງປັບປຸງທັງສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດອັນມີແຜນຜັງ ຂອງລະບອບສັງຄົມນິຍົມ.

ໃນປີ ໑໙໕໙ ປະເທດສະມາຊິກຂອງ ສ.ຊ.ສ ໄດ້ ຍຸຕິການຕົກລົງວ່າດ້ວຍດັດຊະນີ ຕົ້ນຕໍຢູ່ຂະແໜງຕ່າງໆຂອງເສດຖະກິດແຫ່ງຊາດ ເພື່ອຮ່ວມກັນວາງແຜນພັດທະນາເສດຖະກິດ ການຮ່ວມກັນວາງແຜນເສດຖະກິດແມ່ນວິຖີທາງອັນສຳຄັນທີ່ອະນຸມັດໃຫ້ສ້າງຄວາມຕິດແທດທາງດ້ານເສດຖະກິດໂດຍກົງ ລະຫວ່າງປະເທດສັງຄົມນິຍົມ. ຮູບການແຫ່ງການຮ່ວມມື ອັນນີ້

ຍັງກວມເອົາການຈໍລະຈອນແລະການຜະລິດນຳອີກທັງຍາມໃດກໍໄດ້ຮັບການປັບປຸງ ແລະ ເລິກເຊິ່ງຂຶ້ນກວ່າເກົ່າ.

ການປະສານສົມທົບໄຂເຂດແດນອັນກວ້າງຂວາງ ໃຫ້ແກ່ພຶດຕິກຳຂອງກົດເກນແຫ່ງການຂະຫຍາຍຕົວຢ່າງມີແຜນ ແລະ ຢ່າງສົມສ່ວນ ຂອງເສດຖະກິດ. ມັນອຳນວຍໃຫ້ທຸກໆ ປະເທດສັງຄົມນິຍົມ ນັບທັງປະເທດທີ່ບໍ່ທັນຢູ່ໃນລະດັບ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕົນເອງໃນດ້ານການຜະລິດວັດຖຸພັນຖານ ແລະ ເຄື່ອງອຸປະກອນປະກອບຈາກບໍ່ຊັບພະຍາກອນພາຍໃນຂອງຕົນນັ້ນຂະຫຍາຍເສດຖະກິດຂອງຕົນອອກຢ່າງມີແຜນການ.

ການຫັນປ່ຽນເປັນສາຂາສະເພາະ ແລະ ການປະສານ-ງານໃນການຜະລິດແບບຕ່າງໆ ແມ່ນຮູບການຊຶ່ງປະສິດທິພາບອັນໜຶ່ງຂອງການບຸລະນະແບບສັງຄົມນິຍົມຢູ່ໃນເງື່ອນໄຂປະຈຸບັນ. ສິ່ງດັ່ງກ່າວສ່ອງແສງເຖິງທ່າອ່ຽງເສດຖະກິດຕົ້ນຕໍແລະຂະບວນການເຕົ້າໂຮມ ແລະ ການຫັນປ່ຽນມາມີລັກສະນະສາກົນທີ່ນັບມື້ນັບແຮງຂຶ້ນ ຂອງການຜະລິດຢູ່ໃນຂອບເຂດຂອງລະບົບເສດຖະກິດແຫ່ງສັງຄົມນິຍົມໂລກ.

ຢູ່ໃນບັນດາປະເທດສັງຄົມນິຍົມນັ້ນ ກໍມີຫລາຍປະເທດທີ່ມີດິນແດນກວ້າງຂວາງ, ມີບໍ່ຊັບພະຍາກອນທຳມະຊາດອັນອຸດົມສົມບູນ, ມີປະຊາກອນຫລາຍ ແລະ ເນື່ອງຈາກເຫດນີ້ ການຮຽກຮ້ອງ ຈຶ່ງມີລະດັບ ສຳຄັນເຕີບ. ສິ່ງດັ່ງກ່າວ ອຳນວຍໃຫ້ການຜະລິດມີຜົນດີທີ່ສຸດ ໃຫ້ຜະລິດສິນຄ້າບໍ່ວ່າປະເພດ

ໃດໜຶ່ງໃນປະລິມານຫລາຍສົມຄວນ. ສ່ວນວ່າປະເທດ ທີ່ບໍ່ມີເງື່ອນໄຂເຫລົ່ານີ້ພ້ອມພຽງກັນ ເຫດການກໍເປັນໄປແບບອື່ນ. ຖ້າຫາກວ່າ ຢູ່ໃນປະເທດເຫລົ່ານີ້ເພິ່ນດຳເນີນຂະບວນພັດທະນາການຜະລິດເຄື່ອງຈັກຍົນທຸກປະເພດແລ້ວ ການຜະລິດ ດັ່ງກ່າວຄົງຈະບໍ່ໃຫ້ຜົນຮັບພຽງພໍ. ການຮ່ວມມືທາງດ້ານເສດຖະກິດລະຫວ່າງລັດອ້າຍນ້ອງ ແລະ ການຮ່ວມມືວາງແຜນ ເສດຖະກິດແຫ່ງຊາດ ບົນພື້ນຖານການຫັນເປັນສາຂາສະເພາະ , ແລະ ການປະສານງານຢູ່ໃນການຜະລິດນີ້ ໄດ້ສ້າງເງື່ອນໄຂເກືອບເທົ່າໆກັນເພື່ອສະຖາປະນາລະບອບສັງຄົມຢູ່ໃນທຸກ ປະເທດ ແລະ ເລັ່ງລັດການຂະຫຍາຍຕົວຂອງມັນ. ການແບ່ງ-ງານລະຫວ່າງປະເທດສັງຄົມນິຍົມອຳນວຍໃຫ້ແຕ່ລະ ປະເທດພວກເຂົາໄດ້ຮັບຜົນຜະລິດຫລາຍກວ່າ ທັງໆທີ່ໃຊ້ຈ່າຍວັດຖຸ ອຸປະກອນ ແລະ ແຮງງານຄືເກົ່າ.

ການແບ່ງງານແບບສາກົນ ບໍ່ສ້າງບັນຫາກ່ຽວກັບ ຄວາມເປັນອັນໜຶ່ງອັນດຽວຂອງເສດຖະກິດແຫ່ງຊາດ. ກົງກັນຂາມມັນຊ່ວຍໃນການຫັນປ່ຽນເປັນສາຂາສະເພາະຂອງຂະແໜງ-ຕ່າງໆຂອງມັນ, ສະເໜີຄວາມອາດສາມາດຈັດຕັ້ງການ ຜະລິດຂະໜາດໃຫ່ຍແບບຕ່ອງໂສ້ຕິດຕໍ່ກັນ. ເບິ່ງໃນດ້ານ ເສດຖະກິດແລ້ວ ການຫັນເປັນສາຂາສະເພາະອັນນີ້ມີທ່າດີ ແລະ ເໝາະສົມຫລາຍ, ມັນແມ່ນປະກົດການໜຶ່ງທີ່ສ້າງຕັ້ງຂຶ້ນບົນພື້ນຖານຄວາມສະໝັກໃຈແທ້ໆ. ຄວາມມັ່ງມູນທຳມະຊາດ , ແລະ ບໍ່ຊັບພະຍາກອນວັດຖຸ ຍັງຄົງຢູ່ໃນກຳມືຂອງ ປະເທດ

ຊາດນັ້ນໆຢ່າງສົມບູນ, ບັນຫາວ່າດ້ວຍການຮ່ວມມືທາງ ດ້ານ ເສດຖະກິດໄດ້ຮັບການແກ້ໄຂດ້ວຍການຕົກລົງຮ່ວມກັນ ແລະ ດ້ວຍສັດສະເໝີພາບຢ່າງສົມບູນ ແຕ່ລະລັດເລືອກເອົາ ຮູບການປະກອບສ່ວນເຂົ້າໃນການແບ່ງແຮງງານແບບສາກົນທີ່ຕົນຖືວ່າເປັນໜ້າຮັບເອົາ ແລະ ໃຫ້ທ່າດີກວ່າໝູ່.

ຊຸມປີ ໗໐ ແມ່ນຊຸມປີທີ່ໃຫ້ໝາກໃຫ້ຜົນເປັນພິເສດ ໃນສ່ວນທີ່ກ່ຽວກັບການເຮັດໃຫ້ການຮ່ວມມືລະຫວ່າງສະມາຊິກ - ຂອງ ສ.ຊ.ສ ເລິກເຊິ່ງໜັກແໜ້ນຂຶ້ນ ແລະ ໃນການ ພັດທະນາທາງດ້ານສັງຄົມ ແລະ ເສດຖະກິດຂອງມັນ. ໃນໄລ-ຍະນີ້ ສະມາຊິກຂອງ ສ.ຊ.ສ ໄດ້ເຮັດໃຫ້ເທົ່າພະລັງອຸດ-ສາຫະກຳຂອງຕົນເພີ່ມທະວີຂຶ້ນສອງເທົ່າ ແລະການແລກປ່ຽນກັບຄືນສູງຂຶ້ນສາມເທົ່າ. ນີ້ແລວບັນດາປັດໄຈທີ່ຊີ້ບອກ ທ່າດີກວ່າຂອງການຈັດຕັ້ງສາຍພົວພັນເສດຖະກິດແບບສັງຄົມນິຍົມຢູ່ໃນລະດັບສາກົນ.

ກອງປະຊຸມຄັ້ງທີ່ ໑໕ ຂອງ ສ.ຊ.ສ ໃນປີ ໑໙໗໑ ໄດ້ຮັບຮອງເອົາໂຄງການສົມບູນເພື່ອການພັດທະນາ ແລະປັບປຸງການຮ່ວມມືຢ່າງເນື່ອງນິດ ແລະການພັດທະນາບູລະນະ ພາບຂອງເສດຖະກິດສັງຄົມນິຍົມ.

ປະເທດສະມາຊິກຂອງ ສ.ຊ.ສ. ກຳລັງປັບປຸງ ການຮ່ວມມືທາງດ້ານເສດຖະກິດວິທະຍາສາດ ແລະເຕັກນິກ ທັງເຮັດໃຫ້ມັນເລິກເຊິ່ງໜັກແໜ້ນຍິ່ງຂຶ້ນ, ກຳລັງຂະຫຍາຍ ບູລະນະພາບຂອງເສດຖະກິດສັງຄົມນິຍົມຢ່າງສອດຄ່ອງກັບໂຄງ

ການສົມບູນ ທັ້ງນີ້ເພື່ອ:

- ຂະຫຍາຍກຳລັງການຜະລິດຢູ່ໃນທຸກໆປະເທດສະມາຊິກຂອງ ສ.ຊ.ສ ໃຫ້ວ່ອງໄວກ່ວາເກົ່າ, ກ້າວຂຶ້ນສູ່ ລະດັບວິທະຍາສາດເຕັກນິກສູງເທົ່າທີ່ຈະສູງໄດ້ ແລະ ເພີ່ມທະວີປະສິດທິພາບທາງດ້ານເສດຖະກິດຂອງການຜະລິດແຫ່ງສັງຄົມໃຫ້ສູງສຸດ ເຊັ່ນດຽວກັນ ກໍເພີ່ມທະວີຜະລິດຕະພາບແຫ່ງ ສັງຄົມຂອງແຮງງານສັງຄົມໃຫ້ສູງສຸດຄືກັນ;

- ປັບປຸງໂຄງຮ່າງແລະເພີ່ມພູນປໍລິມາດການຜະລິດ ທັງເພີ່ມທະວີອັດຕານຳໃຊ້ອຸປະກອນເຕັກນິກຂອງຂະແໜງຕ່າງໆຢ່າງເປັນລະບົບ ແລະ ທັງນຳໃຊ້ເຕັກໂນໂລຢີໃໝ່ໆໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດວິທະຍາສາດ ແລະ ເຕັກນິກ;

- ຮັບປະກັນການຕອບສະໜອງຄວາມຮຽກຮ້ອງ ຕ້ອງການອັນເພີ່ມຫລາຍຂຶ້ນທຸກມື້ຂອງເສດຖະກິດແຫ່ງຊາດ ສຳລັບແລວທາງອະນາຄົດອັນຍາວນານໃນດ້ານວັດຖຸເຊື້ອໄຟດ້ານພະລັງງານ ແລະ ດ້ານວັດຖຸພື້ນຖານ, ດ້ານອຸປະກອນ ປະກອບທັນສະໄໝ, ດ້ານເຄື່ອງມືກະສິກຳອາຫານ ແລະ ເຄື່ອງບໍລິໂພກອື່ນໆ ໂດຍສະເພາະແລວແມນຍອນການຜະລິດແລະການຊຸດຄົ້ນຢ່າງສົມເຫດສົມຜົນ ບໍຊັບພະຍາກອນຂອງປະເທດ ສະມາຊິກ ສ.ຊ.ສ. ເອງ;

- ປັບປຸງຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ທາງດ້ານວັດທະນະທຳຂອງປະຊາຊົນໃນປະເທດສະມາຊິກ -

ຂອງ ສ.ຊ.ສ ;

- ເພີ່ມພູນຂອບເຂດ ແລະ ສະຖຽນລະພາບຂອງ ຕະຫລາດສັງຄົມນິຍົມໂລກ;

- ປັບປຸງຄວາມເຂັ້ມແຂງຂອງຖານະປະເທດ ສະມາຊິກ ສ.ຊ.ສ.ຢູ່ໃນວົງການເສດຖະກິດໂລກແລະ ຮັບປະກັນໄຊຊະນະຕະຫລອດການຢູ່ໃນການແຂ່ງຂັນທາງດ້ານເສດຖະກິດ ກັບລະບອບທຶນນິຍົມ;

- ປັບປຸງບ້ຳລຸງສະມັດຖະພະໃນການປ້ອງກັນຂອງ ປະເທດສະມາຊິກ ສ.ຊ.ສ.

ໂດຍປະພຶດຢ່າງສອດຄ່ອງກັບໂຄງການສົມບູນ ບັນດາປະເທດສະມາຊິກ ສ.ຊ.ສ. ຫມູນໃຊ້ທ່າດີຕ່າງໆຂອງລະບົບ - ເສດຖະກິດແບບສັງຄົມນິຍົມ ການແບ່ງງານແບບສັງຄົມນິຍົມ-ສາກົນ ນັບມື້ນັບເຕັມປ່ຽມຂຶ້ນທັງນີ້ເພື່ອເສີມຕື່ມພະລັງ ທາງດ້ານເສດຖະກິດ ແລະ ການປ້ອງກັນຕົວຂອງຕົນ, ເພື່ອ ຍົກລະດັບຄວາມຢູ່ດີກິນດີຂອງປະຊາຊາດຂອງຕົນ.

ໂຄງການສົມບູນຄາດຫມາຍການຈັດວາງລະບຽບ ສະເພາະເພື່ອພັດທະນາເສດຖະກິດຂອງປະເທດທີ່ຈະເລີນຫນ້ອຍກວ່າຫມູ່. ໂຄງການນີ້ເນັ້ນຢ້ຳເຖິງຄວາມຈຳເປັນທີ່ຈະຮັບປະກັນການເຕີບໃຫຍ່ ແລະ ການເພີ່ມພູນແບບເລັ່ງລັດປະສິດ ທິພາບຂອງເສດຖະກິດຢູ່ສາທາລະນະລັດປະຊາຊົນມົງໂກລີ.ສຳລັບກູຍບາ ແລະ ຫວຽດນາມ ເຊິ່ງຫາກໍເຂົ້າເປັນສະມາຊິກ-ຂອງ ສ.ຊ.ສ ໃນລະຍະຫລັງນີ້ ເພິ່ນກໍວາງມາດຕະ ການຄາຍຄືກັນນີ້ໄວ້ເຊັ່ນກັນ.

ການຮ່ວມມືຢູ່ໃນດ້ານການເຄື່ອນໄຫວກ່ຽວກັບການ ວາງແຜນ ແລະອັນສະເພາະທີ່ສຸດແມ່ນການຮ່ວມມືວາງແຜນ ເສດຖະກິດແຫ່ງຊາດນັ້ນແມ່ນວິທີການຈັດຕັ້ງຕົ້ນຕໍ ຂອງການ ປະສານງານລະຫວ່າງປະເທດສະມາຊິກຂອງ ສ.ຊ.ສ, ຂອງການພັດທະນາ ແລະ ປັບປຸງການແບ່ງງານແບບສັງຄົມ ນິຍົມສາກົນ.

ບາດກ້າວໃໝ່ອັນສຳຄັນບາດກ້າວໜຶ່ງຢູ່ໃນການ ປັບປຸງບຳລຸງວິທີການອັນນີ້ກໍແມ່ນການຮ່າງ "ແຜນການຮ່ວມວ່າດ້ວຍມາດຕະການບູລະນະປະເທດສະມາຊິກ ສ.ຊ.ສ ສຳລັບໄລຍະ ໑໙໗໖-໑໙໘໐ " ດ້ວຍຄວາມອຸດສ່າຫະພະຍາຍາມຮ່ວມ ກັນຂອງປະເທດເຫຼົ່ານີ້ກັບສະຖາບັນຕ່າງໆຂອງ ສ.ຊ.ສ,ແຜນການນີ້ສອດຄ່ອງເປັນຢ່າງດີກັບໂຄງການສົມບູນ. ເຊັ່ນວ່າໂຄງການນີ້ຄາດໝາຍເຖິງການຂຸດຄົ້ນບໍ່ຊັບພະຍາກອນທຳມະຊາດຮ່ວມກັນ ເພື່ອຜົນປະໂຫຍດຂອງແຕ່ລະຝ່າຍ, ການກໍ່ສ້າງໂຮງງານສົມບູນຂະໜາດໃຫຍ່ອັນແມ່ນໃສ່ຕອບສະໜອງຄວາມຕ້ອງການຂອງອົງປະກອບທຸກພາກສ່ວນ, ການປະສານງານ ຄາດໝາຍໄວ້ສຳລັບໄລຍະຍາວນານລະຫວ່າງໂຮງງານ ແລະຂະແໜງຕົ້ນໆຂອງອຸດສາຫະກຳ.

ການປະຕິບັດແຜນການຮ່ວມ "ໃຫ້ປະກົດເປັນຈິງນັ້ນ ອຳນວຍໃຫ້ການຊ່ວຍເຫຼືອກັນແລະກັນທາງດ້ານເສດຖະກິດ ລະຫວ່າງປະເທດອ້າຍນ້ອງເລິກເຊິ່ງຂຶ້ນ, ມັນຊ່ວຍຕໍ່ເຕີມສົມທົບຄວາມສົມບູນພູນເຕັມຂອງເສດຖະກິດຂອງພວກເຂົາ ຂຶ້ນອີກ.

ແມ່ນຢູ່ໃນຂອບເຂດນີ້ເອງທີ່ເພີ່ນໄດ້ກໍ່ສ້າງທໍ່ສົ່ງອາຍຂະໜາດ ຍັກ " ເຊຢູ່ສ " ທີ່ມີຄວາມຍາວ ໒.ກ໕໐ ກິໂລແມັດ ອອກ ຈາກເຂດ ໂອຣັງບູກ ( ໃນ ສ.ສ.ສ.ຊູ . ) ໄປຍັງຊາຍ ແດນພາກຕາເວັນຕົກ ເພື່ອນຳສົ່ງອາຍໄຕຈຳນວນ ໑໕ ພັນ ລ້ານແມັດກ້ອນໃຫ້ແກ່ປະເທດສະມາຊິກຂອງ ສ.ຊ.ສ. ທາງ ເອີຣົບ ( ການຈັດສົ່ງດັ່ງທຳອິດດຳເນີນຢູ່ໃນປີ ໑໙ກ໙ ) , ນອກຈາກນີ້ແລ້ວ ຍັງມີການກໍ່ສ້າງສາຍສົ່ງກະແສໄຟຟ້າ ແຮງ ຂະໜາດ ກ໕໐ ກິໂລໂວນ ຈາກວິນນິດຊາ ( ສ.ສ.ສ.ຊ) ໄປຍັງອານແບກຕຽກຊາ ( ຮົງກາຣີ ), ລວງຍາວ ຫລາຍ ກວ່າ ๘໐໐ ກິໂລແມັດ ( ເລີ່ມປະຕິບັດກິດຈະການ ໃນປີ ໑໙ກ໙ ), ມີການກໍ່ສ້າງໂຮງງານຜະລິດໃຍເຈຍຢູ່ອູດ-ອິລີມ ( ສ.ສ.ສ.ຊ ) ສາມາດຜະລິດໃຍເຈຍຄຸນນະພາບສູງ ໄດ້ ໕໐໐.໐໐໐ ໂຕນຕໍ່ປີ, ມີການກໍ່ສ້າງໂຮງງານປະສົມ ຜະລິດ ໃຍແກ້ວຢູ່ກີເອຍບາຍ (ສ.ສ.ສ.ຊ ) ທີ່ສາມາດຜະລິດ ໄດ້ ໕໐໐.໐໐໐ ໂຕນຕໍ່ປີ ມີການປັບປຸງສະມັດຖະພາບໃໝ່ ຢູ່ໃນ ຂອບເຂດການຜະລິດສິນຄ້າເຄື່ອງຂອງດ້ວຍນິແກນ ແລະ ໂກ ບານ ( ສະມັດຖະພາບ. ๓໐.໐໐໐ ໂຕນ ຕໍ່ປີ ) ຢູ່ສາທາ ລະນະລັດກູຍບາ, ມີການສ້າງສາແຫລ່ງເສດຖະກິດເຊິ່ງ ມີ ຄວາມສຳຄັນຢ່າງຫລວງຫລາຍດ້ວຍຄວາມພະຍາຍາມຮ່ວມກັນ.

ໃນປີ ໑໙ກ๘ ແລະ ໑໙ກ໙, ກອງປະຊຸມຄັ້ງທີ ໜ໒ແລະ ໜ໓ ຂອງ ສ.ຊ.ສ ໄດ້ຮັບຮອງເອົາໂຄງການທີ່ມີເປົ້າໝາຍ ໄລຍະຍາວຈຳນວນ ໕ ໂຄງການກ່ຽວກັບການຮ່ວມມືເຊັ່ນໃນ

ຂອບເຂດພະລັງງານ, ວັດຖຸເຊື້ອໄຟ ແລະ ວັດຖຸດິບພື້ນຖານ; ການກະສິກຳ ແລະ ອຸດສາຫະກຳເຄື່ອງບໍລິໂພກ; ການກໍ່ສ້າງທາງດ້ານກົນຈັກ; ການຜະລິດສິນຄ້າອຸດສາຫະກຳສຳລັບ ບໍລິໂພກທົ່ວໆໄປ; ການຂົນສົ່ງ. ໂຄງການເຫລົ່ານີ້ກຳນົດຍຸດທະສາດຮ່ວມກັນກ່ຽວກັບການປະສານງານເພື່ອແລວທາງ ໄລຍະຍາວ.

ໂຄງການຮ່ວມມືທີ່ມີເປົ້າໝາຍປະ ກອບດ້ວຍ ມາດຕະການຕ່າງໆ ມີ໔໐ ຂໍ້ນັບທັງການຄົ້ນຄວ້າບັນຫາວິທະຍາສາດ-ແລະ ເຕັກນິກ. ການປະຕິບັດມາດຕະການຫລາຍກວ່າ ໖໐໐ ຂໍ້ຢ່າງເປັນຜົນສຳເລັດນັ້ນ ດຳເນີນໄປບົນພື້ນຖານການຕົກລົງຈາກຫລາຍກ້ຳຫລາຍຝ່າຍ.

ປະເທດອ້າຍນ້ອງແກ້ໄຂພາລະກິດອັນມີຄວາມສຳຄັນເປັນປະຫວັດການຢ່າງໜຶ່ງເຊັ່ນ ປ່ຽນຮູບຊຸມປີ ໗໐ ໃຫ້ເປັນ ໄລຍະແຫ່ງການສູມການປະສານງານໃນດ້ານການຜະລິດແລະໃນດ້ານວິທະຍາສາດເຕັກນິກ. ປະເທດສະມາຊິກ ສ.ຊ.ສ ດຳເນີນຂະບວນການຮ່ວມມືວາງແຜນເສດຖະກິດແຫ່ງຊາດສຳລັບແຕ່ລະແຜນການຫ້າປີ, ວາງແຜນການກ່ຽວກັບມາດຕະການບູລະນະພາບຫລາຍດ້ານຫລາຍແນວ. ເພື່ອຈຸດປະສົງ ດັ່ງກ່າວພວກເຂົາຮັບຮອງເອົາໂຄງການໄລຍະຍາວຈາກສອງຝ່າຍໃນສ່ວນກ່ຽວກັບການຫັນເປັນສາຂາສະເພາະ ແລະ ການສົມທົບຕໍ່ເຕີມການຜະລິດຕ່າງໆລະຫວ່າງ ສ.ສ.ສ.ຊ ກັບ ປະເທດສະມາຊິກ ສ.ຊ.ສ ທາງເອີຣົບ.

ໃນຕົ້ນຊຸມປີ ໗໐ ຂໍ້ຕົກລົງຈາກຫລາຍຝ່າຍວ່າດ້ວຍ ການຫັນປ່ຽນເປັນສາຂາສະເພາະສາກົນ ແລະ ການປະສານງານໃນການຜະລິດ ມີຢູ່ ໑໔໐ ຂໍ້ ໃນນັ້ນມີຂໍ້ຕົກລົງວ່າດ້ວຍຊຸດສາຫະກຳກົນຈັກ, ວິທະຍຸເຕັກນິກ ແລະ ເອເລັກໂຕຣນິກ ໓໐ຂໍ້ ນອກນັ້ນຍັງມີຂໍ້ຕົກລົງຈາກສອງຝ່າຍຫລາຍກວ່າ ໑.໐໐໐ ຂໍ້. ບັນດາຂໍ້ຕົກລົງເຫລົ່ານີ້ກວມເອົາການຜະລິດສິນຄ້າຫລາຍກວ່າ ໑໐.໐໐໐ ເຍື່ອງ.

ໂດຍສອດຄ່ອງກັບແຜນການ ວ່າດ້ວຍມາດຕະການຫລາຍດ້ານເພື່ອຄວາມເປັນກຸ່ມກ້ອນເອກະພາບ ສຳລັບປີ ໑໙໗໑ - ໗໕ ນັ້ນ ປະເທດຕ່າງໆສືບຕໍ່ຂະຫຍາຍການແບ່ງງານ ແລະ ການປະສານງານໃນການຜະລິດ, ຮ່ວມມືໃນການກໍ່ສ້າງ ກິດຈະການໃໝ່ ແລະ ການແກ້ໄຂບັນຫາຕ່າງໆໃນດ້ານວິທະຍາສາດ ແລະ ເຕັກນິກ.

ການຊ່ວຍເຫລືອທາງດ້ານວິທະຍາສາດ ເຕັກນິກ ເພື່ອ-ການຮ່ວມມືໄດ້ມີຄວາມສຳຄັນຂຶ້ນຢ່າງຫລວງຫລາຍ; ເພິ່ນໄດ້ຕັ້ງຄະນະກຳມະການພິເສດຊຸດໜຶ່ງຂຶ້ນຢູ່ພາຍໃນຂອງ ສ.ຊ.ສ ຄືຄະນະກຳມະການເພື່ອການຮ່ວມມືທາງດ້ານວິທະຍາສາດ ແລະ ເຕັກນິກ. ໃນປີ ໑໙໗໐ ການຮ່ວມມືດັ່ງກ່າວດຳເນີນ-ໄປບົນພື້ນຖານຂໍ້ຕົກລົງ ໑໔໐ ຂໍ້ຢູ່ພາຍໃນອົງການ ວິທະຍາສາດເຕັກນິກ ແລະ ເສດຖະກິດລະຫວ່າງຊາດຈຳນວນ ໔໕ ອົງການ, ຢູ່ພາຍໃນໜ່ວຍປະສົມນັກຄົ້ນຄວ້າກັບຜູ້ ຊ່ຽວຊານນາໆຊາດ ຈຳນວນ ກ ໜ່ວຍແລະສູນປະສານງານ ໕ກແຫ່ງ

ໂຮມທັງໝົດແລ້ວການຮ່ວມມືທາງດ້ານວິທະຍາສາດແລະເຕັກນິກໄດ້ຮັບການປະກອບສ່ວນຈາກໜ່ວຍຄົ້ນຄວ້າສຶກສາ ແລະ ສະຖາບັນຊັ້ນສູງຫລາຍກວ່າ ໓.໐໐໐ ໜ່ວຍປະສົມ.

ການປະກອບສ່ວນຂອງສະຫະພາບໂຊວຽດຢູ່ໃນການຮ່ວມມືທາງດ້ານວິທະຍາສາດ ແລະ ເຕັກນິກນັ້ນ ມີຄວາມ ສຳຄັນເປັນພິເສດ. ຖ້າຫາກວ່າປະເທດນີ້ຊຶ່ງມີນັກຄົ້ນຄວ້າ ຢູ່ທັງໝົດປະມານ ໑/໔ ຂອງນັກຄົ້ນຄວ້າໃນທົ່ວໂລກທັງເປັນປະເທດທີ່ມີຂີດບາດນຳໜ້າ ຢູ່ໃນການຂະຫຍາຍຕົວຂອງ ວິທະຍາສາດແຫ່ງໂລກນັ້ນ ມີຄວາມສາມາດແກ້ໄຂບັນຫາສຳຄັນ - ທາງດ້ານວິທະຍາສາດ ແລະ ເຕັກນິກໂດຍບໍ່ມີການຮ່ວມມືໃດໃດ ຈາກປະເທດອື່ນໆແລ້ວ, ບັນດາປະເທດສັງຄົມນິຍົມອື່ນໆກໍຫາກບໍ່ຢູ່ໃນຖານະທີ່ຈະຂະຫຍາຍວິທະຍາສາດທັນສະໄໝໄດໂດຍບໍ່ມີການຊ່ວຍເຫລືອຈາກປະເທດອື່ນ.

ສະຫະພາບໂຊວຽດໄດ້ໃຫ້ການຊ່ວຍເຫລືອ ລັດອ້າຍນ້ອງຢ່າງຫລວງຫລາຍ. ຕົວຢ່າງ ຂະນະທີ່ມີການນຳໃຊ້ ຄວາມ-ສຳເລັດທາງດ້ານວິທະຍາສາດເຕັກນິກຢູ່ບູນກາຣີ ນັ້ນເພິ່ນ ກໍສາມາດຕິດຕັ້ງແຫລ່ງຜະລິດຕ່າງໆຢ່າງວ່ອງໄວເຊັ່ນແຫລ່ງຜະລິດເຫລັກ ແລະໂລຫະອື່ນໆ, ການຜະລິດເຄື່ອງຈັກ ຫລາຍ-ແບບ ນັບທັງເຄື່ອງຈັກກະສິກຳ, ເຄື່ອງອຸປະກອນດ້ານພະລັງງານ, ເຄື່ອງວິທະຍຸ, ລົດຈັກ ລົດຖີບ ແລະ ສິນຄ້າ ເຍື່ອງອື່ນໆ. ປະເທດຮົງກາຣີໄດ້ຕິດຕັ້ງແຫລ່ງຜະລິດເຫລັກກ້າ ຄຸນນະພາບສູງ ໄດ້ລົງມືຜະລິດແມ່ຈັກແລະ ສາມາດແກ້ໄຂບັນຫາ

ເຕັກນິກອື່ນໆໄດ້ອີກ. ສ.ປ.ເຢຍລະມັນ ກໍໄດ້ນຳໃຊ້ ເອກະສານໂຊວຽດ ກ່ຽວກັບການຂຸດກົ່ນນ້ຳມັນດິບຢູ່ໃນສະພາບ ຕົວຈິງ. ໂດຍນຳໃຊ້ວິທີການຂອງໂຊວຽດປະເທດ ໂປໂລຍ ໄດ້ຕັ້ງບ່ອນຜະລິດ ກັງຫັນອາຍນ້ຳ ແລະແມ່ ກັງຫັນ, ໝໍ້ນ້ຳ - ຮ້ອນ ສຳລັບຄວາມກົດດັນແຮງ, ລົດຂົນແລະທັບຖ່ານຫີນ , ແລະ ລົດໂອໂຕ. ປະເທດ ຣູມານີ ເຊື່ອຍາມໃດກໍອີງໃສ່ເອກະສານໂຊວຽດໄດ້ຂະຫຍາຍການຜະລິດລົດໄຖນາ, ລົດຈັກ-ເຄື່ອງມື, ຈັກເຈາະຂຸດຂະນິດໃຊ້ກັງຫັນ, ຈັກເຈາະ ຂະນິດໃຊ້ໂສ່, ຈັກຍົກ; ວິທະຍາການຂອງໂຊວຽດ ໄດ້ຮັບການ ນຳໃຊ້ຢ່າງກວ້າງຂວາງຢູ່ໃນຂຸດສາຫະກຳກົນຈັກ ເຄມີ ແຜນແພ ແລະຂະແໜງອື່ນໆທີ່ເຊັກໂກສະໂລວາກີ.

ຄວາມສຳເລັດຂອງໂຄງການ "ແອງແຕກໂກສໂມດ " ເປັນຕົວຢ່າງອັນດີເດັ່ນປະຈັກແຈ້ງແຫ່ງລັກສະນະອັນໃຫ້ໝາກໃຫ້ຜົນຢູ່ໃນການຮ່ວມມືທາງດ້ານວິທະຍາສາດແລະເຕັກນິກ - ຂອງລັດອາຍນອງ. ໄດ້ຫລາຍກວ່າ ໑໐ ປີມາແລ້ວ ທີ່ໂຄງການດັ່ງກ່າວດຳເນີນມາ, ພວກນັກປາດວິທະຍາສາດປະເທດອາຍນອງ ໄດ້ລົງມືເຮັດວຽກງານອັນມີຄວາມສຳຄັນຮ່ວມກັນ - ກ່ຽວກັບການຄົ້ນຄວ້າຄຸນສົມບັດທາງດ້ານຟີຊິກຂອງອະວະກາດ ເລື່ອງອຸຕຸນິຍົມໃນອະວະກາດ, ເລື່ອງ ໂທລະຄົມມະນາຄົມ, ຊີວະວິທະຍາ ແລະ ການແພດ ໂດຍອາໄສດາວທຽມບໍລິວານດິນຂອງໂຊວຽດ ແລະ ລູກສອນໄຟຄົ້ນຄວ້າ, ຢູ່ໃນດ້ານ ສຶກສາຄົ້ນຄວ້າບໍ່ຊັບພະຍາກອນທຳມະຊາດໃນພື້ນແຜ່ນດິນ ກໍເຊັ່ນ

24/VII

ດຽວກັນ. ການຮ່ວມບິນຮ່ວມກັນຂອງນັກອະວະກາດລັດສັງຄົມນິຍົມຊັບອກຢ່າງບໍ່ມີໃຜຂັດແຍ້ງໄດ້ວ່າ ປະເທດອ້າຍນ້ອງ ມີຄວາມສາມາດພຽງພໍທີ່ຈະແກ້ໄຂບັນຫາສຳຄັນຢູ່ໃນການ ຄົ້ນຄວ້າ ແລະ ການພິຊິດອະວະກາດ ເພື່ອຜົນປະໂຫຍດຂອງມະນຸດຊາດທັງຫມົດ. ຜົນສຳເລັດຂອງນັກປາດ ແລະນັກຄົ້ນຄວ້າຢູ່ໃນການປະດິດສ້າງເຕັກນິກຕ່າງໆ ວັດຖຸອຸປະກອນແລະເຕັກໂນໂລຊີໃຫມ່ໆ, ຢູ່ໃນການປ້ອງກັນແລະປັບປຸງ ສິ່ງແວດລ້ອມແມ່ນມີຄວາມສຳຄັນຫລາຍ.

ການຊ່ວຍເຫລືອກັນ ແລະກັນບົນພື້ນຖານການຕົກລົງຈາກຫລາຍຝ່າຍຫລືຈາກສອງຝ່າຍ ແນໃສ່: ວິທີຫມູນໃຊ້ເອົາພະລັງວິທະຍາສາດ ແລະ ເຕັກນິກຂອງແຕ່ລະປະເທດຢ່າງມີປະສິດທິພາບ, ຫລຸດຜ່ອນໄລຍະເວລາອັນຈຳເປັນຢ່າງສູດຂີດສຳລັບການຄົ້ນຄວ້າແລະການຜະລິດຕາມແບບທົດລອງ ແລະ ແນໃສ່ການປະຢັດບໍ່ຊັບພະຍາກອນທາງວັດຖຸ ແລະ ແຮງງານ.

ຂໍ້ມູນດັ່ງຕໍ່ໄປນີ້ ຢັ້ງຢືນເຖິງຄວາມກວ້າງຂວາງຂອງການຮ່ວມມືທາງດ້ານວິທະຍາສາດ ແລະ ເຕັກນິກ. ໃນໄລຍະຊຸມປີ ໗໐ ຫລັງຈາກການຮັບຮອງເອົາໂຄງການສົມບູນແລ້ວວຽກງານທາງດ້ານທິດສະດີ ແລະ ພາກຕົວຈິງແລ້ວ ຫລາຍກວ່າ ໑໐.໐໐໐ ຢ່າງສາມາດສຳເລັດລົງ, ໂດຍສະເພາະ ແມ່ນມີລະບົບກົນຈັກ ແລະເຄື່ອງຈັກຂະຫນາດນ້ອຍຫລາຍກວ່າ໑໕໐໐ ຊະນິດ ຖືກປະດິດສ້າງຂຶ້ນດ້ວຍຄວາມພະຍາຍາມຮ່ວມກັນແລະວິທະຍາການຕ່າງໆຫລາຍກວ່າ ໑.໘໐໐ ວິທີໄດ້ຮັບການ ປັບ

ປຸງ, ນອກຈາກນີ້ກໍຍັງມີການປະດິດວັດຖຸອຸປະກອນຜະລິດຕະ- ພັນແລະເຄື່ອງທາດສານແບບໃຫມ່ຫລາຍກວ່າ ໑.໓໐໐ເຍື່ອງ ຕົວຢ່າງຢູ່ໃນດ້ານເຄມີ ເພິ່ນສາມາດປະດິດສານຫນຽວ ປລາ ສຕິກ ແບບໃຫມ່, ຢາງໄມ້ສັງເຄາະ, ຢາງແຂງ,ທາດຊ່ວຍ ກະທົບ ຜະລິດຕະພັນເຄມີສຳລັບການບໍລິໂພກທົ່ວໆໄປ, ທາດ ສານເຄມີເພື່ອປ້ອງກັນພືດ ແລະທາດສານແບບອື່ນໆອີກ(ເບິ່ງ " ການຮ່ວມມືທາງດ້ານເສດຖະກິດຂອງປະເທດສະມາຊິກສ. ຊ.ສ, ໑໙໗໗, ສະບັບ ໕, ໜ້າ ໓໓-໓໔.)

ເຄື່ອງຍົນຍານພາຫະນະແບບໃຫມ່ປະມານ ໔໐ ຊະນິດ ໄດ້ຮັບການປະດິດສ້າງຂຶ້ນຢູ່ໃນຂອບເຂດອຸດສາຫະກຳກົນຈັກ. ເພິ່ນດຳເນີນວຽກງານປັບປຸງລະບົບຂອງເຄື່ອງຈັກຍົນທີ່ແນໃສ່ ການນຳໃຊ້ເຄື່ອງກົນຈັກແບບສົມບູນຢູ່ໃນອຸດສາຫະກຳ ແລະ ການບຸກເບີກ ປ່າ. ພາຫະນະແບບໃຫມ່ ທີ່ໃຊ້ລະບົບກົນຈັກ ແລະ ອັດຕະໂນມັດ ກັບເຄື່ອງຍົນຍານຫຸ້ມສະໄຫມ ເພື່ອວຽກ ງານບໍ່ແຮ່ໄດ້ຖືກປະດິດສ້າງຂຶ້ນແລ້ວເຊັ່ນດຽວກັນ ເຄື່ອງຈັກອຸ ປະກອນ ຫລາຍກວ່າ ໘໐ ຊະນິດແລ່ນດ້ວຍລະບົບຕັ້ງແຜນອັດ ຕະໂນມັດ ກໍໄດ້ສຳເລັດແລ້ວຄືກັນ. ຊັ້ນທຳອິດຂອງລະບົບ - ຮ່ວມປະກອບດ້ວຍເຄື່ອງຈັກຄິດໄລ່ ແລະສະຫມອງກົນ ຣຸ່ນທີ ສາມກໍສ້າງສຳເລັດແລ້ວໃນໄລຍະເວລາສັ້ນໆທີ່ນັ້ນ.( ເບິ່ງ " ການຮ່ວມມືທາງດ້ານເສດຖະກິດຂອງປະເທດສະມາຊິກສ. ຊ.ສ " ໑໙໗໗ ສະບັບ ໕, ໜ້າ ໓໔-໓໕ .)

ໃນປີ ໑໙໗໙ ບັນດາປະເທດສະມາຊິກ ສ.ຊ.ສ ໄດ້ກຳ

7*

ນົດແລະຮັບຮອງເອົາທິດທາງໃຫຍ່ຂອງການຮ່ວມມືທາງດ້ານວິ
ທະຍາສາດແລະ ເຕັກນິກ ຈົນຮອດປີ ໑໙໙໐ ວຽກງານຮ່ວມ
ພັນທະກິລະນີເຫລົ່ານີ້ ຜູກມັດຕິດກັນຢ່າງແຫນນແຟນດວຍ ພາ
ລະກິດທີ່ວາງອອກ ໂດຍພາກປະຕິບັດໂຄງການ ຕາມເປົ້າ
ຫມາຍໄລຍະຍາວໃນດ້ານການຮ່ວມມືຢູ່ໃນຂະແຫນງການ ອັນ
ສຳຄັນແຫ່ງການຜະລິດວັດຖຸ, ໂຄງການນີ້ກອງປະຊຸມສະໄຫມ
ສຸດທ້າຍຂອງ ສ.ຊ.ສ ໄດ້ຮັບຮອງເອົາແລ້ວ. ໃນບັນຫາ
ຕ່າງໆຈຳນວນ ໑໒໔ ບັນຫາກ່ຽວກັບວິທະຍາສາດແລະ ເຕັກ
ນິກ ເຊິ່ງບັນດາປະເທດອາຍນອງ ກຳລັງເອົາໃຈໃສ່ນຳກັນ
ຫວ່າງຊຸມປີ ໙໐ ນັ້ນ, ໑໑໖ ບັນຫາແມ່ນຕິດພັນໂດຍກົງ ກັບ
ການປະຕິບັດໂຄງການເຫລົ່ານີ້.

ຊີວິດເອງໄດ້ພິສູດວ່າການຮ່ວມມືທາງດ້ານວິທະຍາສາດ,
ແລະ ເຕັກນິກ ແມ່ນເງື່ອນໄຂຕັດສິນຂອງການເລັ່ງລັດຄວາມ
ກ້າວຫນ້າທາງເຕັກນິກໃນທົ່ວໄປຂອງປະເທດສັງຄົມນິຍົມ .
ສະພາຊ່ວຍເຫລືອຊຶ່ງກັນແລະກັນ ສຸມຄວາມເອົາໃຈໃສ່ ຂອງ
ຕົນຕໍຂະແຫນງການຕົ້ນຕໍຂອງວິທະຍາສາດ ແລະເຕັກນິກເຊິ່ງ
ມີຄວາມສຳຄັນກອມຫມູ່ເພື່ອການພັດທະນາເຕັກນິກ. ເພິ່ນເອົາ
ໃຈໃສ່ເປັນອັນດັບຫນຶ່ງຕໍ່ການຜະລິດສາງສິນຄ້າທີ່ສອດຄ່ອງກັບ
ຕົວຢ່າງດີເດັ່ນຂອງໂລກ, ຕໍ່ການນຳໃຊ້ຢ່າງຮີບເຮັ່ງ ຄວາມ
ສຳເລັດແຫ່ງການປະຕິວັດວິທະຍາສາດ ແລະ ເຕັກນິກທັນສະ
ໄຫມຢູ່ໃນການຜະລິດ, ຕໍ່ການສຸມນຸ່ມກຳລັງໃສ່ສາຍພົວພັນ -
ເສດຖະກິດ.

ຄວາມເປັນຫ່ວງເປັນໄຍຂອງພັກອ້າຍນ້ອງ ໃນການຫມູນໃຊ້ໃນວັດທາງເສດຖະກິດຢ່າງມີປະສິດທິພາບ ພາຍໃນແຕ່ລະປະເທດ ສົມທົບເຂົ້າກັບຄວາມຮຽກຮ້ອງຕ້ອງການໃຫ້ຕ່າງ - ຝ່າຍຕ່າງໄດ້ຮັບຜົນດີ ແລະ ໃຫ້ມີຜົນໄດ້ຈາກການຄ້າ ພາຍນອກນັ້ນ ແມ່ນເງື່ອນໄຂອັນສຳຄັນທີ່ສຸດ ສຳລັບປັບປຸງບຳລຸງແບບຕໍ່ເນື່ອງລະບົບສາຍພົວພັນແບບສັງຄົມນິຍົມທາງດ້ານເສດຖະກິດພາຍນອກ.

ໃນໄລຍະແຜນການຫ້າປີຊຸດຫລັງໆນີ້ ຢູ່ໃນການຮ່ວມ ມືທາງດ້ານເສດຖະກິດຂອງປະເທດສັງຄົມນັ້ນ ເພີ່ມເນັ້ນ ຫນັກເປັນພິເສດກ່ຽວກັບດ້ານຄຸນນະພາບຂອງມັນ ກ່ຽວກັບ ການເພີ່ມທະວີປະສິດທິພາບຂອງການຜະລິດເພື່ອສັງຄົມ ແລະຂອງການຮ່ວມມືແບບສັງຄົມນິຍົມສາກົນ. ສິ່ງນີ້ຕິດພັນຢ່າງ ແຫນ້ນແຟ້ນກັບພາລະຫນ້າທີ່ບົ່ງອອກຈາກການນຳໃຊ້ບໍ່ຊັບພະຍາກອນພາຍໃນຂອງແຕ່ລະປະເທດຢ່າງສູດຂີດ ທັງນີ້ ໂດຍມີເປົ້າ-ຫມາຍແນໃສ່ເລັ່ງລັດຄວາມຈະເລີນຮຸ່ງເຮືອງຂອງເສດຖະກິດແຫ່ງຊາດ. ສິ່ງນີ້ສ້າງຜົນກະທົບຕໍ່ການປັບລະດັບຂອງການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ວັດທະນະທຳຂອງ ປະເທດສັງຄົມນິຍົມຕ່າງໆ, ມັນທັງອຳນວຍໃຫ້ປະເທດເຫລົ່ານີ້ຫລຸດຜ່ອນເວລາກຳນົດການສະຖາປະນາລະບອບສັງຄົມ ນິຍົມລົງອີກ. ກອງປະຊຸມໃຫຍ່ຄັ້ງທີ ໒໖ ຂອງ ພ.ກ.ສ.ຊ. ໄດ້ເນັ້ນຢ້ຳນັ້ນແລວວ່າ: " ບໍ່ມີໃຜກ່າຄິດດອກວ່າ ປະເທດ ສັງຄົມນິຍົມປະເທດໃດປະເທດຫນຶ່ງສາມາດຂະຫຍາຍຕົວດ້ວຍວິທີ

ທາງອັນແນ່ນອນ, ແກ້ໄຂບັນຫາຢ່າງມີຜົນເຊັ່ນເລື່ອງກະກຽມສະສົມບໍ່ວັດຖຸທາງດ້ານພະລັງງານ ແລະ ວັດຖຸດິບ, ການນຳໃຊ້ຄວາມສຳເລັດຫລ້າສຸດຂອງວິທະຍາສາດ ແລະ ເຕັກນິກ-ຢ່າງປາດສະຈາກສາຍຜູກພັນກັບປະເທດອາຍນອງອື່ນໆໄດ້". ( ເອກະສານກອງປະຊຸມໃຫຍ່ ພ.ກ.ສ.ຊ. ຄັ້ງທີ ໒໔ ,ມົດສະກູ, ໑໙໗໑, ໜາ ໕.)

ສະພາຊ່ວຍເຫລືອເຊິ່ງກັນແລະກັນທາງດ້ານເສດຖະກິດ ບໍ່ແມ່ນອົງການຈັດຕັ້ງຄັບແຄບ. ອົງການນີ້ກຽມພ້ອມສະເໝີ ທີ່ຈະສົ່ງເສີມການພົວພັນທາງດ້ານເສດຖະກິດກັບທຸກໆປະ ເທດຢ່າງບໍ່ຂຶ້ນກັບລະບອບສັງຄົມຫລືຮູບການປົກຄອງລັດຂອງ ພວກເຂົາ, ບົນຫລັກການສະເໝີພາບຕ່າງຝ່າຍຕ່າງໄດ້ຮັບ ຜົນດີ ແລະ ເຄົາລົບນັບຖືອະທິປະໄຕຂອງກັນແລະກັນ.

ປະເທດຢູໂກສະລາວີ ຮ່ວມມືຢ່າງແຂງຂັນກັບ ສ.ຊ.ສ, ປະກອບສ່ວນເຂົ້າໃນວຽກງານກ່ຽວກັບບັນຫາວ່າດ້ວຍຜົນ ປະໂຫຍດຂອງກັນ ແລະ ກັນ ຂອງເກືອບທຸກໆອົງການຂອງ ສະພາ. ການຮ່ວມມືດັ່ງກ່າວກວມເອົາຂະແໜງຫລອມໂລຫະອື່ນ ອື່ນ ແລະ ເຫລັກ, ອຸດສາຫະກຳກົນຈັກເຄມີ ເອເລັກໂຕຣ-ນິກ, ນ້ຳມັນດິບ ກະສິກຳ, ການຄ້າພາຍນອກ,ການເຄື່ອນ-ໄຫວຕ່າງໆຢູ່ໃນດ້ານວິທະຍາສາດເຕັກນິກ ແລະອື່ນໆ.

ຜົນສຳເລັດຂອງບັນດາປະເທດໃນ ວົງຄະນາຍາດສັງຄົມນິຍົມ, ບົດຮຽນຈາກການຮ່ວມມືຂອງພວກເຂົານັບມື້ນັບດຶງດູດຄວາມສົນໃຈຕໍ່ການເຄື່ອນໄຫວຂອງ ສ.ຊ.ສ ຈາກລັດອື່ນໆ.

ຕົວຢ່າງ ສ.ຊ.ສ. ໄດ້ຕົກລົງເຊັນສັນຍາວ່າດ້ວຍການຮ່ວມມື ກັບແຟງລັງ, ອີຣັກ ແລະ ເມັກຊິກ. ປະຈຸບັນ ສະພາກຳລັງຮັກສາສາຍພົວພັນພາຍໃຕ້ຮູບການໃດຮູບການໜຶ່ງ ກັບ ອົງການສາກົນຕ່າງໆຫລາຍກວ່າ ໖໐ ອົງການ.

ປະເທດສັງຄົມນິຍົມ ຕັ້ງໃຈຢາກຂະຫຍາຍການພົວ ພັນທາງດ້ານເສດຖະກິດອັນກວ້າງຂວາງແບບຕ່າງຝ່າຍຕ່າງມີຜົນດີກັບລັດຕ່າງໆທີ່ບໍ່ເປັນລັດສັງຄົມນິຍົມຢູ່ໃນໂລກ. ຕັ້ງແຕ່ ຕົ້ນຊຸມປີ ໖໐ ມາ, ສ.ປ ເຢຍລະມັນ ໄດ້ຄ້າຂາຍກັບປະເທດ-ຕ່າງໆຫລາຍກວ່າ ໑໐໐ ປະເທດ, ເຊັກໂກສະໂລວາກີ ຄ້າຂາຍເກືອບທຸກໆປະເທດໃນໂລກ, ຮົງກາຣີ ກັບ ໖໐ປະເທດ ( ສະໄໝກ່ອນສົງຄາມນັ້ນ ມີພຽງ ໔໑ ປະເທດ ), ໂປໂລຍ ກັບ ໑໕໐ ປະເທດ, ຣູມານີກັບ ໘໐ ກວ່າປະເທດ, ບູນກາຣີ ກັບຫລາຍກວ່າ ໗໕ ປະເທດ, ເກົາຫລີເໜືອ ກັບຫລາຍກວ່າ ໔໐ ປະເທດ, ສ.ປ ຫວຽດນາມ ກັບ ໒໙ ປະເທດ, ມົງໂກລີ ກັບ ໑໕ ປະເທດ ( ກ່ອນປີ ໑໙໕໒, ປະເທດນີ້ມີຄູ່ຄ້າຂາຍນຳແຕ່ພຽງປະເທດດຽວເທົ່ານັ້ນຄື ສະຫະພາບໂຊວຽດ ). ( ເບິ່ງ ການສະຖາປະນາລະບອບກອມມູນິດຢູ່ ສ.ສ.ສ.ຊ ແລະການຮ່ວມມືຂອງບັນດາປະເທດສັງຄົມນິຍົມ . ມົດສະກູ, ໑໙໗໐, ໜ້າ ໑໗໒. )

ການຮ່ວມມືທາງດ້ານເສດຖະກິດຂອງປະເທດສັງຄົມນິຍົມແມ່ນປັດໃຈສຳຄັນ ປັດໃຈໜຶ່ງຂອງການປັບປຸງບຳລຸງກຳລັງ-ລະບອບສັງຄົມນິຍົມໂລກ ແລະ ຂອງການແຂ່ງຂັນອັນເປັນປະ

ຫວັດການຂອງມັນກັບລະບອບທຶນນິຍົມອັນເປັນປັດໄຈແຫ່ງການເສີມສ້າງລະບອບສັງຄົມນິຍົມໃຫ້ເປັນກຳແພງຍັກຂ່ອງ ກຳລັງປົດປ່ອຍແຫ່ງຍຸກສະໄຫມທຸກາງອັນ.

## <u>ພັນທະພາບ ທາງການ</u>
## <u>ເມືອງແລະການທະຫານ</u>

ການຮ່ວມມືທາງດ້ານການເມືອງຂອງປະເທດອ້າຍນ້ອງຢູ່ພາຍໃນລະບົບສັງຄົມນິຍົມໂລກ ມີໜ້າທີ່ສ້າງເງື່ອນໄຂອັນອຳນວຍກ່ວາໝູ່ເພື່ອການສ້າງສາລະບອບສັງຄົມນິຍົມ ແລະ ລະບອບກອມມູນິດຢູ່ໃນແຕ່ລະປະເທດ ແລະ ເພື່ອການຂະຫຍາຍຕົວຂອງລະບົບສັງຄົມນິຍົມໃນທົ່ວໆໄປຢ່າງມີຜົນສຳເລັດ.

ລະບົບສັງຄົມ-ເສດຖະກິດ, ຄວາມເປັນເອກະພາບຂອງເປົ້າໝາຍຢູ່ໃນການສ້າງສາລະບອບສັງຄົມນິຍົມແລະລະບອບກອມມູນິດ, ພື້ນຖານແນວຄິດແບບມາກຊິດ-ເລນິນິດ ອັນດຽວກັນຂອງລັດຕ່າງໆໃນວົງຄະນາຍາດສັງຄົມນິຍົມ ທັງໝົດນີ້ກຳນົດລັກສະນະພະລາດອນພາບອັນແທ້ຈິງ, ການມີສິດເທົ່າທຽມກັນຢູ່ໃນການພົວພັນທາງກັນ. ການຕົກລົງຮ່ວມກັນກ່ຽວກັບແນວທາງນະໂຍບາຍ, ການປ້ອງກັນໄຊພິຊິດຂອງສັງຄົມນິຍົມຂອງຊາວຜູ້ອອກແຮງງານຮ່ວມກັນ, ການປະສານຄວາມ ບາກບັ່ນພະຍາຍາມຢູ່ໃນການສ້າງສາລະບອບສັງຄົມນິຍົມ ແລະ ລະບອບກອມມູນິດ, ຢູ່ໃນການຕໍ່ສູ້ເພື່ອປັບປຸງສັນຕິພາບທັງໝົດນີ້

ກ້າວໄປໜ້າກ່ອນໝູ່.

ການຮ່ວມມືທາງດ້ານການເມືອງ ລະຫວ່າງປະເທດ ສັງຄົມນິຍົມໃນເອີຣົບ ປະຕິບັດໄປບົນພື້ນຖານຮ່ວມໝູ່ ຢູ່ໃນຂອບເຂດຂອງອົງການສົນທິສັນຍາວາກໂຊວີ. ມັນແມ່ນພັນທະພາບທາງທະຫານແລະການເມືອງ ທີ່ອີງໃສ່ແນວຄິດເລນິນ ກ່ຽວກັບການປ້ອງກັນໄຊພິຊິດຂອງລະບອບສັງຄົມນິຍົມແບບຮ່ວມໝູ່, ອີງໃສ່ຫລັກການຂອງລັດທິສັງຄົມນິຍົມສາກົນ. ອົງການ ສົນທິສັນຍາວາກໂຊວີ ມີລັກສະນະຂອງຕົວເອງ ຄື ຫລັກການແຫ່ງຄວາມສະເໝີພາບ ແລະ ຄວາມມີອະທິປະໄຕຂອງລັດສະມາຊິກ, ການບໍ່ແຊກແຊງເຂົ້າໃນກິດຈະການພາຍໃນປະເທດ - ຂອງກັນແລະກັນ. ສົນທິສັນຍາວາກໂຊວີແມ່ນສົນທິສັນຍາແບບປ້ອງກັນຕົວ. ມາດຕາທີໜຶ່ງຂອງສົນທິສັນຍາດັ່ງກ່າວ ບົ່ງວ່າ " ພາຄີຂອງສົນທິສັນຍາໃຫ້ຄຳສັນຍາຢ່າງສອດຄ່ອງກັບກົດບັດຂອງສະຫະປະຊາຊາດວ່າຈະງົດເວັ້ນການໃຊ້ວິທີນາບຂູ່ ດ້ວຍກຳລັງຫລືໃຊ້ກຳລັງໂດຍກົງຢູ່ໃນການພົວພັນສາກົນ ແລະ ຈະແກ້ໄຂຂອດຕັດສິນສາກົນດ້ວຍວິຖີທາງສັນຕິ ທັງນີ້ເພື່ອບໍ່ໃຫ້ກະທົບກະເທືອນ ສັນຕິພາບແລະຄວາມປອດໄພລະຫວ່າງຊາດ". ( ອົງການສົນທິສັນຍາວາກໂຊວີ ປີ ໑໙໕໕-໑໙໗໕. ເອກະສານຕ່າງໆ ມົດສະກູ. ໑໙໗໕, ໜ້າ ໖.)

ດ້ວຍເອກະລັກແລະເປົ້າໝາຍຂອງມັນເອງ, ສົນທິສັນຍາ ວາກໂຊວີ ແບບປ້ອງກັນຕົວ ຈຶ່ງຢູ່ໃນທ່າກົງກັນຂ້າມ ກັບກຸ່ມຈັກກະພັດຜູ້ຮຸກຮານຢ່າງເດັດຂາດ, ໂດຍສະເພາະ ແລວ

ແມ່ນກັບກຸ່ມນາໂຕ. ດັ່ງນັ້ນມັນຈຶ່ງບໍ່ຖືກຕ້ອງເລີຍ ທີ່ໄປຕີ ລາຄາວ່າ ອົງການຈັດຕັ້ງທາງທະຫານເຫຼົ່ານີ້ມີລັກສະນະ ດຽວກັນຄືກັບບຸກຄົນສຳຄັນໃນວົງການເມືອງຕ່າງປະເທດກະທຳໄປໃນບາງເທື່ອ.

ປະເທດສັງຄົມນິຍົມເປັນສັດຕູຜູ້ເດັດດ່ຽວກັບການແບ່ງປັນໂລກ ເປັນກຸ່ມທະຫານຫລາຍກຸ່ມຂັດກັນເທົ່າກັບການ ແຂ່ງຂັນປະກອບອາວຸດ. ເຖິງຢ່າງໃດກໍຕາມ ຕາບໃດທີ່ຍັງມີກຸ່ມ ນາໂຕ ຕາບໃດທີ່ອົງການຊຸນເສິກຍັງສືບຕໍ່ແຂ່ງຂັນປະກອບ ສ້າງອາວຸດແລ້ວ ຕາບນັ້ນສະມາຊິກຂອງສົນທິສັນຍາວາກໂຊວີ ກໍຕ້ອງສືບຕໍ່ປັບປຸງພົນທະພາບທາງທະຫານ-ການເມືອງຂອງຕົນອີກຕໍ່ໄປ.

ຢູ່ໃນການວາງແນວທາງນະໂຍບາຍຮ່ວມກັນຂອງປະເທດສະມາຊິກສົນທິສັນຍາວາກໂຊວີນັ້ນ ບົດບາດສຳຄັນເປັນພິເສດຕົກເປັນຂອງຄະນະກຳມະການທີ່ປຶກສາທາງການເມືອງ,ຄະນະກຳມະການນີ້ໄດ້ດຳເນີນກອງປະຊຸມສູດຍອດຂອງຕົນ.ການແລກປ່ຽນຄວາມຄິດເຫັນແບບມິດສະຫາຍອະນຸມັດໃຫ້ຄະນະກຳມະການທີ່ເປິກສາທາງການເມືອງສາມາດກຳນົດທັດສະນະອັນດຽວກັນ ຕໍ່ບັນຫາສຳຄັນແຫ່ງການພົວພັນສາກົນເຊິ່ງເປັນ ຈຸດສົນໃຈຂອງພັກປະເທດອາຍນອງ ຂອງຄະນະກຳມະການ ສູນກາງຂອງພວກເຂົາ ແລະ ຂອງລັດຖະບານບັນດາປະເທດພັນທະມິດ. ເຊັ່ນດຽວກັນ ເພິ່ນກໍພິຈາລະນາບັນຫາກ່ຽວກັບການປັບປຸງສາຍພົວພັນ ນາໆຊະນິດລະຫວ່າງລັດສະມາຊິກສົນທິສັນ

ຍາໃຫ້ເລີກເຊົາ. ໃນປີ ໑໙໗໖ ເພິ່ນໄດ້ສ້າງຕັ້ງອົງກອນສຳຄັນແຫ່ງໜຶ່ງຂຶ້ນຄື: ຄະນະລັດຖະມົນຕີກະຊວງຕ່າງປະເທດ-ແຫ່ງອົງການສົນທິສັນຍາວາກໂຊວີ.

ເອກະສານຕ່າງໆທີ່ຮັບຮອງເອົາໃນໄລຍະກອງປະຊຸມ໑໗ ຄັ້ງ ຂອງຄະນະກຳມະການທີ່ປຶກສາທາງດ້ານການເມືອງລະຫວ່າງ ໑໙໕໕-໑໙໘໐ ນັ້ນ ເປັນຕົວແທນຂອງນະໂຍບາຍ - ການເມືອງແບບສາກົນນິຍົມ ຂອງລັດສັງຄົມນິຍົມ, ມັນແນໃສ່ປົກປ້ອງບຳລຸງສັນຕິພາບ ແລະ ຄວາມປອດໄພສາກົນສະໜັບ-ສະໜູນການຕໍ່ສູ້ເພື່ອເສລີພາບປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມຂອງປະຊາຊາດຕ່າງໆ. ກອງປະຊຸມແຕ່ລະຄັ້ງຊຶ່ງພິຈາລະນາບັນຫາສາກົນອັນສຳຄັນກວ່າໝູ່ນັ້ນ ໄດ້ປົກປ້ອງບຳລຸງຄວາມປອດໄພບ່ອນຢູ່ໃນເອີຣົບກໍຄືຢູ່ໃນທົ່ວໂລກ. ການປະຊຸມເຫລົ່ານີ້ໄດ້ສະເໜີຍົດຕິສຳຄັນຫລາຍຂໍ້ເຊັ່ນວ່າ : ຕໍ່ເຕີມການຫລຸດຜ່ອນຄວາມເຄັ່ງຕຶງທາງການເມືອງ ດ້ວຍການຫລຸດຜ່ອນຄວາມເຄັ່ງຕຶງທາງທະຫານ, ເຈລະຈາຕົກລົງຂໍ້ສັນຍາບໍ່ຮຸກຮານກັນລະຫວ່າງປະເທດສະມາຊິກ ນາໂຕ ກັບປະເທດພາຄີສົນທິສັນຍາວາກໂຊວີ, ຮຽກປະຊຸມອີກຄັ້ງ ໜຶ່ງກ່ຽວກັບການຫລຸດຜ່ອນຄວາມເຄັ່ງຕຶງທາງການທະຫານ ແລະ ການຫລຸດຜ່ອນອາວຸດຢູ່ເອີຣົບ ແລະ ອື່ນໆອີກ.

ການເຄື່ອນໄຫວຂອງສົນທິສັນຍາວາກໂຊວີ ສ່ອງສະທ້ອນບັນຫາອັນສຳຄັນທຸກຢ່າງຂອງຊີວິດ ນາໆຊາດ. ຖານະອັນຈະແຈ້ງແຈ່ມໃສຢ່າງໜຶ່ງ ຂອງປະເທດອ້າຍນ້ອງຢູ່ໃນການ ຕໍ່ສູ້

ເພື່ອລົບລ້າງການຂົ່ມຂູ່ຂອງສົງຄາມນິວເຄລຍ, ເພື່ອ ຍຸຕິການແຂ່ງຂັນການປະກອບອາວຸດນັ້ນ ມັນສອດຄ່ອງກັບຜົນປະໂຫຍດຂອງມະນຸດທຸກຮູບທຸກນາມໃນໂລກນີ້.

ໃນນາມວ່າເປັນປະເທດຢູ່ໃນເອີຣົບ ບັນດາປະເທດພາຄີສົນທິສັນຍາວາກໂຊວີ ຈຶ່ງໃຫ້ຄວາມສຳຄັນເປັນພິເສດແກ່ການອູ້ມຊູ ແລະ ເສີມສ້າງບຳລຸງສັນຕິພາບຢູ່ໃນທະວີບນີ້. ຍ້ອນຄວາມພະຍາຍາມຂອງ ສ.ສ.ສ.ຊ. ແລະປະເທດອື່ນໆ ໃນວົງຄະນາຍາດສັງຄົມນິຍົມ ໃນໄລຍະສິບປີຫລັງມານີ້ຈຶ່ງໄດ້ ມີການເຊັນຮັບຮອງເອົາສົນທິສັນຍາ ແລະ ຂໍ້ຕົກລົງອັນ ສຳຄັນຕັ້ງຊຸດໜຶ່ງ. ເອກະສານເຫລົ່ານີ້ໄຂແລວທາງ ອັນກວ້າງຂວາງໃຫ້ແກ່ການຂະຫຍາຍຕົວຂອງການຮ່ວມມືແບບຕ່າງຝ່າຍຕ່າງມີຜົນດີ ແລະ ມີສິດເທົ່າທຽມກັນລະຫວ່າງລັດທີ່ຢູ່ໃນ ລະບອບສັງຄົມແຕກຕ່າງກັນ.

ກອງປະຊຸມເອີຣົບ ຢູ່ເຮັນຊິນກີ ເມື່ອປີ ໑໙໗໕ ທີ່ໄຂຂຶ້ນຕາມການສະເໜີລິເລີ່ມຂອງປະເທດສັງຄົມນິຍົມ ກັບເອກະສານສຸດທ້າຍເຊິ່ງກອງປະຊຸມນີ້ຮັບຮອງເອົານັ້ນໄດ້ໝາຍບອກຂັ້ນຕອນສຳຄັນອັນໜຶ່ງ ຢູ່ໃນການປັບປຸງຄວາມປອດໄພ ຢູ່ໃນທະວີບ.

ລັດພາຄີຂອງສົນທິສັນຍາວາກໂຊວີ ຖືວ່າມັນຈຳເປັນ ໄດ້ສືບຕໍ່ແນວທາງນະໂຍບາຍອັນແນ່ໃສ່ປັບປຸງສັນຕິພາບຢ່າງໜັກແໜ້ນ ແລະ ສຸດກົກສຸດປາຍ ບໍ່ວ່າໃນປະຈຸບັນແລະໃນອະນາຄົດກໍຄືກັນ, ຈຳເປັນໄດ້ເຮັດທຸກສິ່ງທຸກຢ່າງທີ່ພໍເຮັດໄດ້ ເພື່ອ

ເສີມສ້າງແລະທະວີຄູນພົນຮັບອັນອຳນວຍຢູ່ໃນການຫລຸດຜ່ອນ-ຄວາມເຄັ່ງຕຶງ ແລະ ຂອງການຮ່ວມມືລະຫວ່າງຊາດ.

ລັດສັງຄົມນິຍົມປະເທດອ້າຍນ້ອງ ຊອກປ່ອງທາງຮັບປະ-ກັນສັນຕິພາບໃຫ້ແກ່ປະຊາຊາດທັງຫມົດ, ພວກເຂົາສະຫນັບ-ສະຫນູນເຂົ້າຂ້າງປະເທດທີ່ຕໍ່ສູ້ເພື່ອການປົດປ່ອຍຊາດ ຢ່າງບໍ່ປ່ຽນແປງ. ຢູ່ໃນກອງປະຊຸມຂອງຄະນະກຳມະການທີ່ເປິກສ່າທາງການເມືອງຂອງປະເທດພາຄີສົນທິສັນຍາ ວາກໂຊວີ ໄດ້ອອກສຽງຫລາຍເທື່ອ ເພື່ອປົກປ້ອງເສລີພາບແລະເອກະລາດຂອງປະຊາຊາດ ອິນດູຈີນ, ຕາເວັນອອກກາງ ອາຟຣິກກາ, ແລະ ອາເມລິກາລາຕິນ.

ແນວທາງການເມືອງຕ່າງປະເທດແບບຮັກຫອມສັນຕິພາບແລະຕາມຫຼັກການຂອງປະເທດພາຄີສົນທິສັນຍາວາກໂຊວີ ສະແດງຕົວອອກຢ່າງຈະແຈ້ງຢູ່ບ່ອນວ່າ ບັນດາປະເທດເຫຼົ່ານີ້ໄດ້ສະເຫນີຍັດຕິຫລາຍເທື່ອ ເພື່ອຍຸບເລີກອົງການສົນທິ ສັນຍາວາກໂຊວີ ແລະ ພັນທະພາບອັດລັງຕິກ(ນາໂຕ ) ໄປພ້ອມໆກັນ ແລະ ໃນບາດກ້າວທຳອິດນີ້ໃຫ້ຍຸບອົງການທາງ ທະຫານກ່ອນ. ແຕ່ປານນັ້ນທາງຝ່າຍຕາເວັນຕົກກໍຍັງບໍ່ເຫັນດີນຳບາດກ້າວໃນທ່ານີ້. ໂດຍຕີລາຄາສະພາບການສາກົນໄດ້ຢ່າງຖືກຕ້ອງ, ເຫັນເປົ້າຫມາຍຮຸກຮານຂອງກຸ່ມຈັກກະພັດທີ່ກຳລັງຮຸ່ມຮ້ອນປ່ວງຍາດວຍລັດທິຊຸນເສິກ ບັນດາປະເທດສັງຄົມນິຍົມ - ອ້າຍນ້ອງຈຶ່ງດຳເນີນມາດຕະການອັນຈຳເປັນຫລາຍອັນ ເພື່ອປັບປຸງບຳລຸງສະມັດຖະນະປ້ອງກັນຕົວຂອງພວກ ຕົນແລະ ຂະ

ຂະຫຍາຍການຮ່ວມມືອັນສະໜິດແໜ້ນຢູ່ໃນຂົງເຂດນີ້.

ກອງທັບຂອງສະຫະພາບໂຊວຽດ ປະກອບເປັນ ພື້ນຖານ
ຂອງກອງທັບສົມທົບແຫ່ງລັດພາຄີສົນທິສັນຍາວາກໂຊວີ. ຕາມ
ເທົ້າພະລັງທາງດ້ານການທະຫານ-ເຕັກນິກ, ຄວາມແກ່ກ້າ
ທາງດ້ານແນວຄິດ-ການເມືອງ ຄູນສົມບັດທາງດ້ານສິນທຳ ສູ້
ຣົບ ແລະການກຽມພ້ອມຂອງຕົນ ກອງທັບໂຊວຽດ ແລະກອງ
ທັບເຮືອຂອງ ສ.ສ.ສ.ຊ ກໍຕອບສະໜອງຕາມຄວາມ ຮຽກ
ຮ້ອງ ອັນທັນສະໄໝໄດ້. ກອງທັບຂອງປະເທດພາຄີ ກໍເປັນ
ກອງທັບທັນສະໄໝດີກັນ. ກອງທັບທັງໝົດປະກອບດ້ວຍເຕັກ
ນິກແບບໃໝ່ອ່ຽມທັງມີຖັນແຖວກຳລັງພົນຄູນນະພາບສູງ ສາ
ມາດນຳພາໜ່ວຍກອງຢ່າງຄ່ອງແຄວ.

ອີງຕາມຂໍ້ຕົກລົງຂອງສົນທິສັນຍາວາກໂຊວີ ກອງທະຫານ
ໂຊວຽດ ຕັ້ງທັບຢູ່ໃນດິນແດນຂອງບາງລັດສັງຄົມນິຍົມທາງເອີ
ຣົບ ເປັນໄລຍະຊົ່ວຄາວ. ການປະຈຳການຊົ່ວຄາວຂອງກອງ
ທະຫານໂຊວຽດ ບົນພື້ນແຜ່ນດິນປະເທດອ້າຍນ້ອງນັ້ນບໍ່ ສ້າງ
ຄວາມເສຍຫາຍອັນໃດຕໍ່ອະທິປະໄຕຂອງປະເທດເຫຼົ່ານັ້ນ .
ກອງທະຫານໂຊວຽດ ແລະ ກອງບັນຊາການທະຫານໂຊວຽດ
ເຄົາລົບນັບຖືຢ່າງເລິກເຊິ່ງໃນອະທິປະໄຕຂອງລັດເຊິ່ງ ພວກ
ເຂົາຕັ້ງທັບຢູ່ທັງໃຫ້ການຮ່ວມມືແບບອ້າຍນ້ອງກັບກອງທັບຂອງ
ລັດດັ່ງກ່າວອີກ.

ປະເທດພາຄີສົນທິສັນຍາວາກໂຊວີ ມີກອງບັນຊາການແຫ່ງ
ດຽວທີ່ຮັບຜິດຊອບການກະກຽມຕໍ່ສູ້ຂອງກອງທະຫານ,ການປັບ

ລະດັບມາດຕະຖານຂອງອາວຸດຍຸດໂທປະກອນ ແລະການ ສົມທົບຄວາມພະຍາຍາມເຂົ້າກັນຢູ່ໃນດ້ານປ້ອງກັນອື່ນໆ.

ເພີ່ມປັບປຸງດັດແປງຕະຫຼອດເວລາກົນໄກຂອງການຮ່ວມມືທາງທະຫານຂອງປະເທດອ້າຍນ້ອງ ເຊິ່ງທຸກວັນນີ້ໃນຕົວຈິງແລ້ວມັນກວມລວມການເຄື່ອນໄຫວຂອງກອງທັບພັນທະມິດ ໃນທຸກໆດ້ານ. ອົງການສົນທິສັນຍາວາກໂຊວີ ມີອົງການສູງສຸດຢູ່ອົງການຫນຶ່ງຄື ຄະນະລັດຖະມົນຕີກະຊວງປ້ອງກັນປະເທດຊຶ່ງເປັນຜູ້ຮັບຜິດຊອບບັນຫາສຳຄັນ ຂອງການປັບປຸງບຳລຸງສະມັດຖະນະປ້ອງກັນຕົວຂອງລັດພັນທະມິດ, ເປັນຜູ້ພິຈາລະນາ ບັນຫາວາດວຍການກະກຽມກອງທະຫານ ແລະ ກອງທັບເຮືອ , ການຊີ້ນຳພາກປະຕິບັດຂອງກອງທັບປະສົມຂຶ້ນຢູ່ກັບກອງບັນຊາການປະສົມແຫ່ງດຽວ. ສະພາທະຫານຂອງ ກອງທັບປະສົມພິຈາລະນາບັນຫາສຳຄັນທີ່ພົວພັນກັບການເຄື່ອນໄຫວປະຈຳ ວັນຂອງກອງທັບປະສົມ. ກອງບັນຊາການຂອງກອງທັບປະສົມຮັບຜິດຊອບໃນການຊີ້ນຳກອງທະຫານແລະສະຫລຸບສັງລວມ ບົດຮຽນຂອງພວກເຂົາ.

ໃນຂະນະທີ່ທຳການປັບປຸງບຳລຸງການປ້ອງກັນຕົວນັ້ນ ສະຫະພາບໂຊວຽດກັບປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ບໍ່ຊອກຫາຊ່ອງທາງໃຫ້ຕົນກາຍເປັນຜູ້ໄດ້ປຽບກວ່າທາງດ້ານການທະຫານ. ໃນປະຈຸບັນກໍຄືກັບທີ່ຜ່ານມາແລ້ວ ພວກເຂົາ ບໍ່ຕ້ອງການຂົ່ມຂູ່ລັດຫລືກຸ່ມປະເທດໃດໝົດ. ລັດທິທາງການທະຫານຂອງພວກເຂົາມີແຕ່ລັກສະນະປ້ອງກັນຕົວເອງເທົ່ານັ້ນ. ຈັ່ງຊັ້ນ

ແລ້ວຈຶ່ງບໍ່ມີກຸ່ມປະເທດອື່ນໃດສະເຫນີຍັດຕິແບບສ້າງສັນ ອອກມາຫລາຍເທົ່າກັບບັນດາປະເທດພາຄີສົນທິສັນຍາ ວາກໂຊວີ, ຍັດຕິທີ່ກ່ຽວກັບການຫລຸດຜ່ອນຄວາມເຄັ່ງຕຶງທາງດ້ານທະຫານ. ການຮັບຮອງເອົາຍັດຕິຂອງພວກເຂົາຈະບຳລຸງປັບປຸງ ສັນຕິພາບ ແລະ ຄວາມປອດໄພຂອງປະຊາຊາດບົນພື້ນພິພົບ. ເຖິງຢ່າງນັ້ນກໍຕາມ ປະເທດໃນກຸ່ມນາໂຕ ກໍຍັງດື້ດ້ານປະຕິບັດນະໂຍບາຍອັນແນໃສ່ສືບຕໍ່ແຂ່ງຂັນການປະກອບສ້າງອາວຸດ ແລະ ສ້າງ " ສະພາບການເຄັ່ງຮ້ອນ " ຢູ່ໃນຫລາຍຂົງເຂດຂອງໂລກ, ສິ່ງດັ່ງກ່າວຈະສົ່ງຜົນສະທ້ອນອັນຮ້າຍແຮງມາກະທົບໃສ່ພາລະກິດສັນຕິພາບ ແລະ ຄວາມກ້າວຫນ້າທາງສັງຄົມ.

ການເຄື່ອນໄຫວຂອງອົງການສົນທິສັນຍາວາກໂຊວີ ຜ່ານມາຫລາຍກວ່າຊາວຫ້າປີ ຊີ້ບອກວ່າອົງການນີ້ ເປັນພາຫະນະອັນເຂັ້ມແຂງ ແລະ ມີປະສິດທິພາບໃນການປ້ອງກັນ ການຂົ່ມຂູ່ຂອງຈັກກະພັດ ແລະ ໃນການປັບປຸງສັນຕິພາບ. ອົງການດັ່ງກ່າວກາຍເປັນປັດໃຈອັນສຳຄັນສູດໃນເລື່ອງຮັບປະກັນວຽກງານປະດິດສ້າງແບບສັນຕິຂອງປະຊາຊາດໃນປະເທດສັງຄົມນິຍົມ.

ຄຽງຂ້າງກັບສົນທິສັນຍາ ວາກໂຊວີ ນີ້ຍັງມີສົນທິສັນຍາແບບມິດຕະພາບ ແບບຊ່ວຍເຫລືອຊຶ່ງກັນແລະກັນ ລະຫວ່າງ໒ຝ່າຍຂອງກຸ່ມປະເທດສັງຄົມນິຍົມ, ສົນທິສັນຍາດັ່ງກ່າວມີສ່ວນຊ່ວຍຢ່າງໃຫຍ່ຫລວງຢູ່ໃນການຂະຫຍາຍລະບອບສັງຄົມ ນິຍົມໂລກ ແລະ ຮັບປະກັນສັນຕິພາບ. ມັນຜູກພັນປະເທດ ອາຍ

ນ້ອງທຸກໆປະເທດເຂົ້າກັນດ້ວຍການຕົກລົງສັນຍາປ້ອງກັນໄຊພິຊິດສັງຄົມນິຍົມຊ່ວຍກັນ ທັງກຳນົດຫລັກການແລະທິດທາງຕົ້ນຕໍແຫ່ງການຮ່ວມມືແບບສອງຝ່າຍ.

ການຮ່ວມມືແບບສອງຝ່າຍ ລະຫວ່າງປະເທດ ອ້າຍນ້ອງ ອີງໃສ່ວົງຄະນາຍາດຂອງລະບົບສັງຄົມແບບສັງຄົມນິຍົມ ແລະ ການມີຜົນປະໂຫຍດຕົ້ນຕໍຮ່ວມກັນ. ມັນອີງໃສ່ຫລັກການ ແຫ່ງຄວາມເຄົາລົບໃນອະທິປະໄຕເອກະລາດ ຂອງກັນ ແລະກັນ, ໃນຄວາມສະເໝີພາບອັນເດັດດ່ຽວ ແລະ ການບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງຜູ້ອື່ນ. ການຮ່ວມມືແບບນີ້ມັນທັງກວມລວມໄປທົ່ວທຸກຂົງເຂດຂອງຊີວິດການເມືອງແລະ ສັງຄົມ, ມັນມີເປົ້າໝາຍຢາກໃຫ້ການຊ່ວຍເຫລືອຢູ່ໃນການສ້າງສາລະບອບສັງຄົມນິຍົມ, ຢາກປະກອບສ່ວນຢ່າງມີປະສິດທິ - ພາບຢູ່ໃນການປັບປຸງບຳລຸງວົງຄະນາຍາດແຫ່ງລັດສັງຄົມນິຍົມ.

## ການຮ່ວມມືທາງດ້ານແນວຄິດ

ການຮ່ວມມືຢູ່ໃນຂົງເຂດແນວຄິດ ແມ່ນທິດທາງສຳຄັນອັນໜຶ່ງແຫ່ງການຮ່ວມມືຂອງປະເທດສັງຄົມນິຍົມ. ມັນຊ່ວຍ ຍົກລະດັບຂອງວຽກງານທາງດ້ານແນວຄິດ ແລະ ສຶກສາອົບຮົມຢູ່ໃນແຕ່ລະປະເທດ ແລະ ປະກອບສ່ວນຢູ່ໃນການຕໍ່ສູ້ທາງດ້ານແນວຄິດຂອງສອງລະບົບສັງຄົມຢ່າງມີຜົນ.

ໃນໄລຍະຊຸມປີຫລັງໆມານີ້ ສາຍຜູກພັນລະຫວ່າງ ສະຖາ

ບັນຫາງດ້ານແນວຄິດ ຂອງພັກກອມມູນິດແຫ່ງປະເທດສັງຄົມນິ
ຍົມ ໄດ້ຮັດແໜ້ນເຂົ້າທັງຂະຫຍາຍຕົວອອກ. ຕັ້ງແຕ່ປີ໑໙໗໔
ມາ ໄດ້ມີການພົບປະລະຫວ່າງເລຂາຄະນະກຳມະການ ສູນ
ກາງຂອງພັກອ້າຍນ້ອງເປັນປະຈຳ ເພື່ອພິຈາລະນາບັນຫາ -
ການປະສານງານທາງດ້ານແນວຄິດ. ການປະສານງານ ໃນ
ດ້ານນີ້ ກໍເປັນສິ່ງຈຳເປັນເພື່ອດຳເນີນການຮ່ວມມື ທາງດ້ານ
ແນວຄິດ-ທິດສະດີຂອງພັກກອມມູນິດ ແລະ ກຳມະກອນ ໃຫ່
ເປັນພົນສຳເລັດຢູ່ໃນຂອບເຂດກວ້າງຂວາງແລະມີລະດັບສູງ,
ເພື່ອເຕົ້າໂຮມຄວາມພະຍາຍາມຂອງພວກເຂົາເຂົ້າໃສ່ການ-
ສຶກສາຄົ້ນຄວ້າທິດສະດີ ເຂົ້າໃສ່ການຕໍ່ສູ້ທາງດ້ານແນວຄິດ -
ຕ້ານກັບປັດຊະຍາ ແລະ ສັງຄົມວິທະຍານາຍທຶນ,ຕ້ານກັບລັດ
ທິແກ້ ອຽງຂວາ ແລະອຽງຊ້າຍ. ສັດຕູຂອງລະບອບສັງຄົມ
ນິຍົມຕັ້ງໜ້າທຳການໂຄສະນາເບົ່າຂາວຢ່າງຫາວຫັນດ້ວຍພາ
ຫະນະສື່ມວນຊົນແບບຕ່າງໆ ທັງພະຍາຍາມສິ່ງແຊກແນວຄິດ-
ນາຍທຶນເຂົ້າມາໃນຊີວິດຈິດໃຈຂອງປະເທດສັງຄົມນິຍົມ, ພະ
ຍາຍາມໃສ່ຮ້າຍປ້າຍສີລະບອບສັງຄົມນິຍົມ ແລະ ສົ່ມຄອນ ຊຸ
ດົມຄະຕິແບບສັງຄົມນິຍົມ. ຕໍ່ໜ້າການໂຄສະນາແບບເປັນສັດ
ຕູເຊິ່ງປະສານສາງໄວ້ເປັນພິເສດໂດຍສູນກາງສະເພາະຂອງ
ມະຫາອຳນາດຈັກກະພັດນີ້ ພວກປະເທດສັງຄົມນິຍົມກໍຍິ່ງ ສົມ
ທົບເຕົ້າໂຮມຄວາມພະຍາຍາມຂອງພວກຕົນເຂົ້າໃສ່ກັນເລື້ອຍ
ທີ່ສຸດ ເພື່ອຕອບໂຕ້ຢ່າງຫັນການກັບພວກນັກລະບາຍສີ ເຫຼົ່າ
ນີ້.

ພັກອ້າຍນ້ອງທັງຫລາຍຮ່ວມມືກັນວາງພື້ນຖານວິທະຍາ -
ສາດໃຫ້ແກ່ນະໂຍບາຍການເມືອງຕ່າງປະເທດຂອງປະເທດ
ສັງຄົມນິຍົມ, ໃຫ້ແກ່ບັນຫາວ່າດ້ວຍຄວາມເປັນເອກະພາບ -
ຂອງການຕໍ່ສູ້ເພື່ອສັນຕິພາບ, ເພື່ອຄວາມຍັ້ງຍືນ ຂອງຫລັກ
ການແຫ່ງການຢູ່ຮ່ວມກັນແບບສັນຕິລະຫວ່າງລັດທີ່ມີລະບົບ ສັງ
ຄົມແຕກຕ່າງກັນ ແລະ ຫລັກການດັດປ່ຽນສັງຄົມໃຫມ່ແບບປະ
ຕິວັດ ແລະ ບັນຫາຍຸດທະສາດ ແລະ ຍຸດໂທບາຍຂອງການຕໍ່
ສູ້ທາງດ້ານແນວຄິດຢູ່ສະພາບແວດລ້ອມໃຫມ່. ພັກເຫລົ່ານີ້ຮ່ວມ
ກັນສຶກສາຄົ້ນຄວ້າບັນຫາເຊິ່ງຕິດພັນກັບການເພີ່ມທະວີບົດບາດ
ນຳພາຂອງພັກມາກ-ເລນິນ ຢູ່ໃນການສ້າງສາລະບອບສັງຄົມ
ນິຍົມກັບລະບອບກອມມູນິດ, ຕິດພັນກັບອິດທິພົນຂອງແນວຄິດ -
ມາກ-ເລນິນ ຕໍ່ການສ້າງຕັ້ງແນວໂຮມເອກະພາບຕາມຈັກກະ
ພັດນິຍົມ ແລະຄົ້ນຄວ້າສ່ວນທີ່ກ່ຽວກັບບັນຫາອື່ນໆຂອງວິວັດທະ
ນາການແຫ່ງສັງຄົມໃນທຸກວັນນີ້ນຳ.

ເພີ່ມເຕີມອີກວ່າການປະສານງານ, ການເຄື່ອນໄຫວຮ່ວມ
ກັນຂອງປະເທດສັງຄົມນິຍົມເລິກເຊິ່ງຫນັກແຫນ້ນຂຶ້ນອີກ ຢູ່ໃນ
ຂົງເຂດວິທະຍາສາດ ແລະ ການສຶກສາ. ການຮ່ວມມື ດັ່ງ
ກ່າວຂະຫຍາຍຕົວອອກພາຍໃຕ້ຮູບການຫລາຍແບບຫລາຍແນວ
ແລະໃນລະດັບຕ່າງໆກັນ. ຕົວຢ່າງທີ່ພໍຍົກມາໄດ້ກໍຄື ກອງປະ
ຊຸມແບບປະຈຳຂອງຮອງປະທານສະພາບັນດິດວິທະຍາສາດສັງ
ຄົມຂອງປະເທດສັງຄົມນິຍົມ, ກອງປະຊຸມນີ້ຮ່ວມກັນກຳນົດທິດ
ທາງຕົ້ນຕໍຂອງການຄົ້ນຄວ້າຢູ່ໃນຂົງເຂດວິທະຍາສາດສັງຄົມ.

ເພີ່ມຮ່ວມມືກັນວາງຂໍ້ໃຫຍ່ໃຈຄວາມຂອງການຄົ້ນຄ້ວາ. ດັ່ງນັ້ນ ລະຫວ່າງເຄິ່ງກາງຊຸມປີ ໗໐ ນັ້ນ ພຽງແຕ່ຢູ່ໃນຂົງເຂດວິທະຍາສາດສັງຄົມເທົ່ານັ້ນ ດ້ວຍຄວາມພະຍາຍາມຮ່ວມພຽງ ກັນ ເພີ່ມກໍ່ຮ່າງໄດ້ຫລາຍກວ່າ ໔໐໐ ຂໍ້. ຍ້ອນການເຄື່ອນ ໄຫວຮ່ວມກັນນີ້ ເພີ່ມຈິ່ງໄດ້ຍົກລະດັບສະມັດຖະນະຂອງວຽກງານວິທະຍາສາດຂຶ້ນອີກ, ເພີ່ມຫມູນໃຊ້ເຕົ້າພະລັງວິທະຍາສາດ-ຂອງປະເທດພາຍໃນວົງຄະນາຍາດສັງຄົມນິຍົມ ໄດ້ດີກວ່າ;ເພີ່ມປະຢັດມັດທະຍັດພາຫະນະແລະ ແກ້ໄຂບັນຫາວິທະຍາສາດໄດ້ວ່ອງໄວກວ່າເກົ່າ. ສາຍພູກພັນຕໍ່ກັນໂດຍກົງລະຫວ່າງສະຖາບັນສຶກສາຊັ້ນສູງຂອງປະເທດອ້າຍນ້ອງນັບມື້ນັບມີຮູບຮ່າງ ອັນແນ່ນອນຂຶ້ນ.

ການຮ່ວມມືທາງດ້ານວັດທະນະທຳຂອງລັດສັງຄົມນິຍົມໄດ້ກາຍເປັນພາຫະນະດີເດັ່ນຢ່າງໜຶ່ງຂອງ ການຫຍັບເຂົ້າ ໃກ້ຊິດກັນລະຫວ່າງປະຊາຊາດ ແລະການປັບປຸງມິດຕະພາບຂອງພວກເຂົາ. ມັນເຮັດໃຫ້ຊີວິດຈິດໃຈຂອງປະຊາຊາດຕ່າງກໍ່ ຊຸດົມສົມບູນຂຶ້ນ ແລະ ອຳນວຍໃຫ້ວັດທະນະທຳແຫ່ງຊາດ ວິທະຍາສາດ ແລະ ເຕັກນິກເບັ່ງບານເຮືອງຮຸ່ງຢ່າງໄວວາ ແລະມີຫລາຍຮູບຫລາຍແບບ.

ແຕ່ລະປີໄດ້ຮູບການແລກປ່ຽນທາງດ້ານວັດທະນະທຳ ລະຫວ່າງປະເທດອ້າຍນ້ອງນັບມື້ນັບມີຫລາຍຮູບຫລາຍແບບຂຶ້ນ . ການທ່ຽວສະແດງຂອງຫນ່ວຍລະຄອນ ແລະ ຄະນະນັກປະດິດແຕ່ງແລະການເດີນທາງຂອງບຸກຄົນສຳຄັນ ດ້ານວັນນະຄະດີ

ແລະສິລະປະ ອົງການວາງສະແດງດ້ານສິລະປະ, ການພິມຈຳໜ່າຍປຶ້ມ, ການແລກປ່ຽນຮູບເງົາ, ການອອກລາຍການທາງວິທະຍຸ ແລະ ໂທລະພາບ-ທັງໝົດເຫຼົ່ານີ້ອະນຸມັດ ໃຫ້ຜູ້ຄົນຫລາຍລ້ານຄົນຮູ້ຈັກວັດທະນະທຳຂອງປະເທດສັງຄົມນິຍົມດີຂຶ້ນ. ຮູບການແລກປ່ຽນທາງວັດທະນະທຳເຊັ່ນການຈັດ ຕັ້ງວັນ ວັດທະນະທຳຂອງປະເທດໃດປະເທດໜຶ່ງ ແລ້ວມີຄະນະຜູ້ແທນສຳຄັນຫລາຍໆຄະນະມາຮ່ວມນຳນັ້ນກຳລັງດຶງດູດຄວາມສົນໃຈຈາກສາທາລະນະຊົນ ແລະ ມັນກຳລັງກາຍເປັນທີ່ນິຍົມຊົມຊອບທົ່ວໆໄປ.

ສະມາຊິກອົງຄະນະມາຍາດສັງຄົມນິຍົມໄດ້ບັນລຸຜົນ ສຳເລັດອັນຍິ່ງໃຫຍ່ປະຈັກແຈ້ງຢູ່ໃນການຂະຫຍາຍຕົວຂອງການ ແລກປ່ຽນທາງດ້ານວັດທະນະທຳນາໆຊາດ ໃນຊຸມປີ 70, ຂະນະທີ່ສຸມໃສ່ໜັກຢູ່ໃນຂົງເຂດການແລກປ່ຽນວັດທະນະທຳ ໄດ້ເລີ່ມຂະຫຍາຍໄປຢູ່ໃນອົງການຈັດຕັ້ງກຳມະບານແລະຊາວໜຸ່ມ, ເພີ່ມເລີ່ມລົງມືວາງແຜນການແລກປ່ຽນທາງດ້ານວັດທະນະທຳສຳລັບໄລຍະຫ້າປີແລ້ວ.

ການສົງເຄາະຊ່ວຍລັດສັງຄົມນິຍົມມອບໃຫ້ແກ່ປະເທດກຳລັງພັດທະນານັ້ນ ກໍເປັນພາກສ່ວນໜຶ່ງຂອງການຮ່ວມມື ທາງດ້ານວັດທະນະທຳ ຄືກັນ. ພວກເຂົາໃຫ້ການຊ່ວຍເຫລືອ ແກ່ຫລາຍໆປະເທດໃນອາຊີອາຟຣິກກາ ແລະ ອາເມລິກາລາຕິນຢູ່ໃນການສ້າງຕັ້ງລະບົບສຶກສາອັນມີປະສິດທິພາບແລະຢູ່ໃນ - ການຕໍ່ສູ້ຕ້ານກັບຄວາມຫລ້າຫລັງທາງດ້ານວັດທະນະທຳ ອັນ

ເປັນຜົນສະທ້ອນຈາກການຄອບຄອງຂອງພວກໂຫ່ຫົວເມືອງຂຶ້ນ.

ສຸດທ້າຍນີ້ ຄວາມສຳຄັນອັນຍິ່ງໃຫຍ່ອັນໜຶ່ງກໍແມ່ນ ການຂະຫຍາຍຄວາມເກີດແທດໂດຍກົງລະຫວ່າງຊາວຜູ້ອອກແຮງ - ງານ ລະຫວ່າງຊຸ້ມຊົນອັນກວ້າງຂວາງຢູ່ໃນໝູ່ປະຊາຊົນຂອງປະເທດສັງຄົມນິຍົມ. ຄວາມຕິດແທດອັນນີ້ມີສ່ວນຊ່ວຍເລັ່ງລັດຂະບວນການຫຍັບເຂົ້າຫາກັນລະຫວ່າງປະເທດຊາດອ້າຍນ້ອງ ແລະ ສ້າງບັນຍາກາດອັນອຳນວຍຢ່າງໜັກແໜ້ນເລິກ ເຊິ່ງ ເພື່ອປັບປຸງບຳລຸງການຮ່ວມມື ເສີມສ້າງກຳລັງແຮງ ໃຫ້ແກ່ຄວາມເປັນເອກະພາບທາງດ້ານຈິດໃຈ, ການເມືອງ ແລະ ແນວຄິດຂອງບັນດາປະເທດສັງຄົມນິຍົມ.

ສິ່ງດັ່ງກ່າວ ມີສ່ວນຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຖານະຂອງລະບົບສັງຄົມນິຍົມໂລກໃນການຕໍ່ສູ້ທາງດ້ານ ແນວຄິດ ກັບລັດທິທຶນນິຍົມເຊັ່ນດຽວກັນ. ການຫຍັບເຂົ້າໃກ້ຊິດກັນດ້ວຍຫຼາຍຮູບຫຼາຍແບບ, ຄວາມເປັນເອກະພາບທາງດ້ານຈິດໃຈ ອັນນັບມື້ນັບເລິກເຊິ່ງຂຶ້ນຂອງປະຊາຊາດໃນລັດອ້າຍນ້ອງແມ່ນການໂຕ້ຕອບອັນດີເດັ່ນສຸດຕໍ່ການໂຄສະນາຕ້ານລະບອບ-ສັງຄົມນິຍົມຂອງຊົນຊັ້ນນາຍທຶນ, ມັນແມ່ນຂໍ້ພິສູດອັນໜ້າເຊື່ອຖືທີ່ຊີ້ບອກຄວາມຫວ່າງເປົ່າໄຮ້ສາລະຂອງລັດທິຕ້ານກອມມູນິດແລະລັດທິຕ້ານໂຊວຽດ.

## ພັນທະພາບສູ້ຮົບ ຂອງພັກກອມມູນິດ

ອີງປະກອບຮາກຖານອັນທຳອິດຂອງການຮ່ວມມືແບບ ສະໜິດແໜ້ນລະຫວ່າງປະເທດສັງຄົມນິຍົມ, ກຳລັງແຮງນຳພາ ແລະ ຈັດຕັ້ງຂອງມັນ ນອນຢູ່ໃນພັບທະພາບສູ້ຮົບອັນບໍ່ມີ ຫຍັງທັບມ້າງໄດ້ຂອງພັກກອມມູນິດຂອງປະເທດສັງຄົມນິຍົມ ຢູ່ໃນຄວາມເປັນເອກະພາບຂອງໂລກະທັດຂອງພວກເຂົາ, ຢູ່ໃນຄວາມເປັນເອກະພາບທາງດ້ານເປົ້າໝາຍແລະມານະຈິດ . ການຮ່ວມມືຂອງພັກກອມມູນິດທີ່ກຳອຳນາດກວມຄອງ ທຸກອົງເຂດແຫ່ງການເຄື່ອນໄຫວຂອງພວກຕົນ ທັງດຳເນີນປະຕິ ບັດໄປພາຍໃຕ້ຮູບການຫຼາຍແບບ ແລະ ຢູ່ໃນທຸກລະດັບ.

ບົດບາດພິເສດຢ່າງໜຶ່ງຢູ່ໃນການຮ່ວມມືອັນນີ້ ຕົກເປັນຂອງຄວາມໃກ້ຊິດກັນຈາກຫຼາຍກ້ຳຫຼາຍຝ່າຍແລະຈາກສອງຝ່າຍລະຫວ່າງເລຂາທິການໃຫຍ່ ແລະ ເລຂາທີໜຶ່ງຂອງຄະນະກຳມະການສູນກາງພັກອ້າຍນ້ອງ, ຄວາມໃກ້ຊິດດັ່ງກ່າວມີຢູ່ເປັນປະຈຳ ແລະ ສະໝ່ຳສະເໝີ. ການພົບປະເຫຼົ່ານີ້ເບິ່ງລວມແລ້ວ ໝາຍບອກຂັ້ນຕອນອັນສຳຄັນຢູ່ໃນການປັບປຸງວົງຄະນາຍາດສັງຄົມນິຍົມ. ໃນລະຫວ່າງການພົບປະເຫຼົ່ານີ້ເພິ່ນສົນທະນາປຶກສາກັນຢ່າງລະອຽດ ເຖິງບັນຫາປະຈຳວັນແລະບັນຫາທີ່ຈະເກີດຂຶ້ນ, ວາງມາດຕະການອັນແນ່ໃສ່ປັບປຸງບຳລຸງການຮ່ວມມືນາໆຊະນິດ ແລະ ເຮັດໃຫ້ມັນເລິກເຊິ່ງຂຶ້ນ. ໃນຊຸມປີຫຼັງ ໆ ມານີ້ເພິ່ນໃຫ້ຄວາມສົນໃຈເປັນພິເສດຕໍ່ບາດກ້າວອັນຍິ່ງໃຫຍ່ທີ່ເນັ້ງແນ່ໃສ່ຂະຫຍາຍການຮ່ວມມື ທາງດ້ານ

ເສດຖະກິດແບບຕ່າງຝ່າຍຕ່າງມີຜົນຂອງລັດສັງຄົມນິຍົມ. ເພິ່ນເນັ້ນຢ້ຳເຖິງຄວາມຈຳເປັນ ໃນການຍົກສະມັດຖະພາບ ຂອງສາຍພົວພັນເສດຖະກິດ ແລະຍົກບົດບາດຂອງການຫັນເປັນສາຂາສະເພາະ ແລະການປະສານງານຢູ່ໃນການຜະລິດ ບົນພື້ນຖານໂຄງການຮ່ວມກັນໃນໄລຍະຍາວກັບຄວາມສຳຄັນຂອງນະໂຍບາຍຕົ້ນຕໍຂອງການບູລະນະແບບສັງຄົມນິຍົມ ຢູ່ໃນວົງເຂດຂອງສະພາຊ່ວຍເຫລືອຊຶ່ງກັນແລະກັນທາງດ້ານເສດຖະກິດ.

ການພົບປະເຫລົ່ານີ້ອະນຸມັດໃຫ້ວິເຄາະຢ່າງລະອຽດ ບັນຫາສຳຄັນລະຫວ່າງຊາດ, ໃຫ້ຊີ້ເນັ້ນຢ່າງຄັກແນ່ເຖິງ ເປົ້າໝາຍຕົວຈິງ ທີ່ຫັນໄປຫາ ການດຳເນີນງານອັນເພິ່ນຕ້ອງສູມຄວາມພະຍາຍາມຂອງປະເທດອ້າຍນ້ອງໃສ່ພ້ອມພຽງກັນ. ສິ່ງດັ່ງກ່າວມີສ່ວນຊ່ວຍຍົກລະດັບການປະສານງານທາງການ ນະໂຍບາຍການເມືອງນອກປະເທດຂອງລັດສັງຄົມນິຍົມ.

ເພິ່ນຈັດໃຫ້ມີກອງປະຊຸມສອງຝ່າຍຫລືຫລາຍກ້ຳ ຫລາຍຝ່າຍລະຫວ່າງເລຂາທິການຂອງຄະນະກຳມະການສູນກາງພັກອ້າຍນ້ອງຢ່າງເປັນໄລຍະສະເໝີ, ກອງປະຊຸມເຫລົ່ານີ້ ສຸມໃສ່ບັນຫາຕ່າງໆ, ມີການພົບປະເພື່ອເປີກສາຫາລື,ມີການຜັດປ່ຽນພຽນເດີນທາງນັກບັນຍາຍວິຊາການ ແລະ ການ ສຳມະນາ ເພີ່ມດຳເນີນວິທີການແລກປ່ຽນຄະນະຜູ້ແທນເພື່ອ ສຶກສາບົດຮຽນວຽກງານຂອງພັກ. ສະຖາບັນຄົ້ນຄວ້າ, ສະຖາບັນ-ສຶກສາ ແລະ ອົງການຂ່າວສານຂອງພັກອ້າຍນ້ອງຕ່າງໆ ກໍໃຫ້ຮ່ວມມືກັນ.

ອົງການຈັດຕັ້ງທ້ອງຖິ່ນຂອງພັກກໍຮັກສາຄວາມໃກ້ຊິດອັນມີຊີວິດຊີວາເຊັ່ນດຽວກັນ. ຕົວຢ່າງໃນຊຸມປີ ໗໐ ນັ້ນ ເຂດແຄ້ວນທ້ອງຖິ່ນ ແລະ ເມືອງຕ່າງໆໃນສະຫະພາບໂຊວຽດ - ໑໓໐ ກວ່າແຫ່ງໄດ້ຮັກສາການພົວພັນອັນໃກ້ຊິດໂດຍກົງ ກັບເຂດແຄ້ວນແລະເມືອງອື່ນໆຂອງປະເທດສັງຄົມນິຍົມອ້າຍນ້ອງ ໑໕໐ ແຫ່ງ.

ການຮ່ວມມືລະຫວ່າງພັກ ສົມທົບເຂົ້າກັບສາຍພູກພັນ ອັນກວ້າງຂວາງລະຫວ່າງອົງການຂອງລັດແລະອົງການຈັດຕັ້ງມະຫາຊົນ, ລະຫວ່າງຫນ່ວຍຫມູ່ຊາວຜູ້ອອກແຮງງານ ສະມາຄົມມິດຕະພາບ ຂອງ ສ.ສ.ສ.ຊ ກັບປະເທດອື່ນໆຂອງ ວົງຄະນາຍາດສັງຄົມນິຍົມໄດ້ມີສ່ວນຮ່ວມອັນຍິ່ງໃຫຍ່ໃນວຽກງານນີ້ ຄວາມໃກ້ຊິດຕິດແທດອັນນັບມື້ນັບກວ້າງຂວາງຂອງລະຫວ່າງ-ຊາວຜູ້ອອກແຮງງານນຳເອົາລັກສະນະມະຫາຊົນຢ່າງແທ້ຈິງ-ມາໃຫ້ແກ່ສາຍພົວພັນລະຫວ່າງປະເທດສັງຄົມນິຍົມ.

ຄວາມເປັນເອກະພາບແລະການຮ່ວມມືອັນມີຫມາກຜົນລະຫວ່າງພັກກອມມູນິດສ່ວນຫລວງຫລາຍຂອງປະເທດສັງຄົມນິຍົມເອງ ກໍ່ບໍ່ໄດ້ເຮັດໃຫ້ບາງປະເທດເຫຼົ່ານັ້ນປາສະຈາກຄວາມຄິດເຫັນພິເສດຕໍ່ຫຼາຍໆບັນຫາ. ແຕ່ທ່າອຽງລວມ ກໍຫາກຊົງລັກສະນະກົມກຽວເປັນອັນດຽວກັນຫຼາຍຂຶ້ນລະຫວ່າງພັກກອມມູນິດກັບລັດສັງຄົມນິຍົມ. ແມ່ນຈຸດນີ້ເອງທີ່ພັກອ້າຍນ້ອງສຸມຄວາມສົນໃຈໃສ່ ແລະເນັ້ນຢ້ຳຢູ່ເລື້ອຍໆ. ພວກເຂົາ ວົງໃສ່ເຫດຜົນ ທີ່ວ່າ ເພື່ອປັບປຸງບຳລຸງລະບອບສັງຄົມນິຍົມແຫ່ງໂລກນັ້ນ ຈຳ

ຕ້ອງເຕົ້າໂຮມຄວາມພະຍາຍາມຂອງພັກ ບົນພື້ນຖານ ຫລັກການອັນເປັນບົດຮຽນແລ້ວຂອງລັດທິມາກ-ເລນິນ, ຂອງລັດທິສັງຄົມນິຍົມສາກົນຂອງຄວາມສະເຫມີພາບ ແລະຂອງການ - ຮ່ວມມືແບບເພື່ອນມິດ.

ພາກປະຕິບັດຕົວຈິງຂອງການຂະຫຍາຍຕົວແຫ່ງວົງຄະນາຍາດສັງຄົມນິຍົມ ພິສູດຢ່າງປະຈັກແຈ້ງວ່າ ປັດໄຈຕັດສິນແຫ່ງການສ້າງສາອັນສຸກສົມຂອງລະບອບສັງຄົມນິຍົມ ກັບລະບອບກອມມູນິດນັ້ນ ມັນນອນຢູ່ໃນຄວາມເປັນເອກະພາບແລະຄວາມເປັນປຶກແຜ່ນແຫນ້ນຫນາຂອງບັນດາປະເທດອ້າຍນ້ອງ. ມັນແມ່ນຄວາມພະຍາຍາມຮ່ວມກັນທີ່ອະນຸຍາດໃຫ້ແກ້ໄຂບັນຫາສັບສົນກວ່າຫມູ່ທີ່ລະບອບສັງຄົມນິຍົມໂລກກຳລັງປະເຊີນຫນ້າຢູ່ , ມັນອຳນວຍເກື້ອກູນການຂະຫຍາຍແບບເລັ່ງລັດໃຫ້ແກ່ບາງປະເທດຢ່າງມີປະສິດທິຜົນ.

ຍ້ອນຄວາມເປັນເອກະພາບ ຍ້ອນຄວາມສາມັກຄີ ຍ້ອນການຊ່ວຍເຫລືອຊຶ່ງກັນແລະກັນ ບັນດາປະເທດໃນວົງ ຄະນາຍາດສັງຄົມນິຍົມ ຈຶ່ງກ້າວມາເຖິງຂັ້ນ ສຳເລັດການປ່ຽນແປງອັນເລິກເຊິ່ງ, ແກ້ໄຂພາລະກິດອັນສຳຄັນຢູ່ໃນຂົງເຂດຕ່າງໆຂອງການດຳລົງຊີວິດສັງຄົມ. ຄວາມຍືນຍົງແຫ່ງເອກະລາດຂອງຊາດຕ່າງໆ ແລະ ຄວາມມຸ່ງຫວັງຂອງພວກເຂົາ ທີ່ຢາກຫຍັບເຂົ້າໃກ້ຊິດກັນອີກຢູ່ຂອບເຂດວົງຄະນາຍາດສັງຄົມນິຍົມ-ແມ່ນທ່ວງທ່າສອງແບບຂອງບາດກ້າວເດີນອັນດຽວກັນ ແຫ່ງການສະຖາປະນາ ແລະ ພັດທະນາລະບອບສັງຄົມນິຍົມ ແຫ່ງ

ໂລກ.

ຄວາມເປັນເອກະພາບ, ການຮ່ວມມືແບບສະໜິດແໜ້ນ ຂອງປະເທດສັງຄົມນິຍົມ ແມ່ນເງື່ອນໄຂສຳຄັນແຫ່ງການ ຂະຫຍາຍຕົວຂອງຂະບວນກຳມະກອນສາກົນ ແລະ ການປົດປ່ອຍຊາດ. ເອກະສານສຸດທ້າຍຂອງກອງປະຊຸມສາກົນ ແຫ່ງພັກກອມມູນິດ ແລະ ກຳມະກອນໃນປີ ໑໙໖໙ ເນັ້ນຍ້ຳວ່າ: "ຜົນສຳເລັດຂອງລະບອບສັງຄົມນິຍົມ, ອິດທິພົນຂອງມັນຕໍ່ການພົ້ນປຽນສາກົນ, ສະມັດຖະພາບຂອງມັນໃນການຕໍ່ສູ້ຕ້ານກັບການຮຸກຮານຂອງຈັກກະພັດທັງໝົດນັ້ນເບິ່ງຢ່າງກວ້າງໆແລ້ວມັນຂຶ້ນຢູ່ກັບຄວາມເປັນປຶກແຜ່ນແໜ້ນໜາ ຂອງປະເທດສັງຄົມນິຍົມເອງ. ການເຄື່ອນໄຫວຢ່າງເປັນເອກະພາບຂອງບັນດາ ປະເທດສັງຄົມນິຍົມແມ່ນປັດໄຈອັນສຳຄັນຂອງຄວາມເປັນປຶກແຜ່ນແໜ້ນໜາແຫ່ງກຳລັງຕ້ານຈັກກະພັດທັງໝົດ ". (ກອງປະຊຸມສາກົນຂອງພັກກອມມູນິດ ແລະ ກຳມະກອນ ປຣາກ໑໙໖໙ ມົດສະກູ ໑໙໖໙ ໜ້າ ໑໐໐ .) ຈຶ່ງຊຶ່ງແລ້ວມັນຈຶ່ງບໍ່ ແມ່ນແຕ່ພົ້ນມາກ-ເລນິນຂອງບັນດາປະເທດສັງຄົມນິຍົມເທົ່ານັ້ນແຕ່ແມ່ນຂະບວນກອມມູນິດທັງໝົດ ຂະບວນກາວໜາ ແລະ ຂະບວນປະຊາທິປະໄຕອື່ນໆ ທີ່ຄວນສົນໃຈຕໍ່ການສົ່ງເສີມ ຄວາມເປັນປຶກແຜ່ນແໜ້ນໜາຂອງປະເທດສັງຄົມນິຍົມ.

ຄວາມເປັນຫວ່ງເປັນໄຍຕໍ່ການເສີມສ້າງປັບປຸງ ຄວາມເປັນເອກະພາບຂອງປະເທດສັງຄົມນິຍົມ ຍິ່ງມີຄວາມ ສຳຄັນຫລາຍຂຶ້ນອີກ ຍ້ອນເຫດຜົນທີ່ວ່າ ອິດທິກຳລັງຈັກກະພັດ ອອກ

ແຮງພະຍາຍາມສຸດຂີດເພື່ອທັບມ້າງຄວາມສາມັກຄີເອກະພາບ
ອັນນີ້ ເຊິ່ງປະກອບຕົວເປັນເຫງົ້າພະລັງຂອງລະບອບສັງຄົມນິ
ຍົມເອງ. ດ້ວຍການພະຍາຍາມຫາທາງໃຫ້ລັດສັງຄົມນິຍົມ --
ເປັນສັດຕູກັນເອງ, ຫວ່ານຢາຍຄວາມບໍ່ເຂົ້າອົກເຂົ້າໃຈຢູ່ໃນ
ໝູ່ພວກເຂົາ, ພວກອິດທິກຳລັງຈັກກະພັດເນັ້ນຢ້ຳທີ່ສຸດ ກ່ຽວ
ກັບການແຜ່ກະຈາຍ ແນວຄິດ "ລັດທິກອມມູນິດແຫ່ງຊາດ "
ໝາຍຄວາມວ່າ ແນວຄິດຂອງການຄອບງຳ ເອກະລັກ ຂອງ
ຊາດຢູ່ໃນບາດຄືບໜ້າໄປສູ່ລະບອບກອມມູນິດຂອງປະເທດທັງ
ຫລາຍ, ລັກສະນະ " ບໍ່ເປັນຕົວເອງ" ແລະຈົນຮອດຄວາມ
ແຕກຕ່າງອັນພື້ນຖານຢູ່ໃນວິຖີທາງຂອງພວກເຂົາ.

ວົງການຜູ້ນຳຂອງລັດຈັກກະພັດ ນຳໃຊ້ພາຫະນະ ກໍ່ກວນ
ຄົບເຄື່ອງຢ່າງກວ້າງຂວາງເພື່ອຕ້ານກັບປະເທດສັງຄົມນິຍົມ,
ແລະ ພະຍາຍາມສະເໜີ " ສິ່ງທີ່ມີຄຸນຄ່າ " ທາງດ້ານສັງ
ຄົມການເມືອງ ແລະ ຈິດວິນຍານຂອງພວກເຂົາໃຫ້ເປັນແບບ
ຢ່າງແກ່ປະເທດສັງຄົມນິຍົມ. ພວກເຂົາພະຍາຍາມຍັດສິ່ງຈິດ
ຕະສາດຊົມໃຊ້ຂອງພວກເຂົາມາໃຫ້ຊາວຜູ້ອອກແຮງງານ ໃນ
ປະເທດສັງຄົມນິຍົມ, ພະຍາຍາມປູກຝັງແນວຄິດນາຍທຶນ ໃສ່
ຫົວພວກເຂົາ. ໜຶ່ງໃນຈຳນວນບາດກ້າວເດີນຂອງການ ໂຄ
ສະນານາຍທຶນ ກໍ່ແມ່ນຄວາມພະຍາຍາມທີ່ເຮັດໃຫ້ເຊື່ອວ່າ -
ພວກນາຍທຶນແມ່ນ "ມິດສະຫາຍ " ຂອງລະບອບສັງຄົມນິຍົມ
ຈັ່ງຊັ້ນພວກເຂົາ ຈຶ່ງມີແຕ່ຈະ " ປັບປຸງ " ມັນໃຫ້ດີຂຶ້ນແລະ
" ເຮັດໃຫ້ມັນອິດສະລະເສລີຂຶ້ນ " ແລະອື່ນໆອີກ. ໃນຄວາມ

ຈິ່ງແລ້ວ ພວກສັດຕູຂອງລະບອບສັງຄົມນິຍົມ ຕ້ອງການ ກົດບ່ຽມມັນຢ່າງຮາກຖານ, ຢາກເຮັດໃຫ້ມັນເສື່ອມເສຍເປື່ອຍ-ເຍື່ອຍ ແລະ ຟື້ນຟູລະບອບທຶນນິຍົມຄືນມາ.

ສາເຫດໃນການລົບອື່ນໆກໍມີອິດທິພົນຕໍ່ການຂະຫຍາຍ ຕົວຂອງການຮ່ວມມືລະຫວ່າງປະເທດສັງຄົມນິຍົມເຊັ່ນດຽວກັນ . ມັນຍັງມີບັນຫາອີກຈຳນວນໜຶ່ງທີ່ຄ້າງຄາບໍ່ວ່າຢູ່ໃນລະບອບສັງຄົມນິຍົມທົ່ວໆໄປກໍດີຢູ່ໃນບາງປະເທດສັງຄົມນິຍົມ. ລະບອບ-ສັງຄົມນິຍົມຂະຫຍາຍຕົວອອກໂດຍຜ່ານການຕໍ່ສູ້ລະຫວ່າງ ສິ່ງໃໝ່ກັບສິ່ງເກົ່າ, ຜ່ານການແກ້ໄຂຄວາມຂັດແຍ້ງພາຍໃນ . ດ້ວຍເຫດນີ້ ຄວາມສັບສົນຈຶ່ງສາມາດໂປ່ໂລອອກມາໄດ້ ຢູ່ໃນບາງຂົງເຂດຂອງຊີວິດສັງຄົມ, ຄວາມສັບສົນທີ່ອາດເປັນ ມູນເຫດໃຫ້ເກີດມີສາເຫດໃນການລົບຢູ່ໃນຂອບເຂດການພົວພັນ-ລະຫວ່າງປະເທດ.

ຍ້ອນການຮ່ວມມືຢ່າງໃກ້ຊິດ, ປະເທດອ້າຍນ້ອງຈຶ່ງເອົາຊະນະຢ່າງອົງອາດສະພາບການອັນສັບສົນທີ່ໂປ່ໂລອອກມາ ຢູ່ໃນໄລຍະຂະຫຍາຍຕົວ ຂອງການພັດທະນາ ລະບອບສັງຄົມນິຍົມ ແລະ ຂອງການຕໍ່ສູ້ອັນຂ້ຽວຂາດຕ້ານກັບອິດທິກຳລັງຈັກກະພັດ. ບົດຮຽນຜ່ານມາຊ່ວຍໃຫ້ພັກອ້າຍນ້ອງແກ້ໄຂບັນຫາທີ່ເກີດຂຶ້ນຢ່າງມີຜົນ ແລະ ຢ່າງຖືກຕ້ອງທັງປັບປຸງການຮ່ວມມືຢູ່ໃນທຸກລະດັບການເຄື່ອນໄຫວຂອງລັດ, ຂອງສັງຄົມຂອງເສດຖະກິດ ແລະ ວັດທະນະທຳ. ຄວາມເຄົາລົບຕໍ່ຫລັກການ ສະເໝີພາບອັນຄົບຖ້ວນ ອັນຕ່າງຝ່າຍຕ່າງໄດ້ຮັບຜົນດີແລະຫລັກ

ການຊ່ວຍເຫຼືອກັນແບບມິດສະຫາຍນັ້ນ ນຳໄປເຖິງການ ປັບປັບປຸງບຳລຸງ ສາຍພົວພັນລະຫວ່າງປະເທດ ແຫ່ງລະບອບສັງຄົມນິຍົມ ຢ່າງເນືອງນິດ. ພັກອ້າຍນ້ອງ ເອົາໃຈໃສ່ ໃນຜົນປະໂຫຍດຂອງກັນແລະກັນ ການສົມທົບຜົນປະໂຫຍດແຫ່ງຊາດແລະ ຂອງສາກົນໃສ່ກັນນັ້ນເປັນສິ່ງບົກກະຕິຢູ່ໃນການ ເຄື່ອນໄຫວຂອງພວກເຂົາ.

ລະຫວ່າງປີ ໑໙໖໗-໑໙໖໘ ວິກິດການຢ່າງໜຶ່ງກໍ ອຸບັດຂຶ້ນຢູ່ເຊັກໂກສະໂລວາກີ. ສ່ວຍໂອກາດທີ່ເກີດມີຄວາມ ອ່ອນແອຢູ່ໃນການນຳພາປະເທດຊາດຂອງພັກ, ພວກກຳລັງປະຕິ-ການໄດ້ທຳການບຸກໂຈມຕີພັກກອມມູນິດເຊັກໂກສະໂລວາກີ - ພາຍໃຕ້ຄຳຂວັນທີ່ວ່າ " ຫັນປ່ຽນເປັນປະຊາທິປະໄຕ ",ທັງນີ້ເພື່ອລົບລ້າງບົດບາດນຳພາຂອງພັກ ແລະ ມ້າງເພລະບອບສັງຄົມນິຍົມ. ພວກລັດທິແກ້ຍຶດກຳເອົາສະຖາບັນທາງ ການເມືອງໄວ້ເຊັ່ນວ່າ ໜັງສືພິມ ວິທະຍຸ ແລະ ໂທລະທັດ.ຍອມການຈອບວອຍແບບຕ້ານໂຊວຽດຢ່າງບໍ່ມີຂອບເຂດຂອງ ພວກເຂົາເອງ, ພວກເຂົາໄດ້ຕົວະເຍົ້າເອົາຊຸມຊົນກຳມະກອນ - ສ່ວນໜຶ່ງໄປນຳ. ພວກນັກສ່ວຍໂອກາດຄ່ອຍໆແຊກຊຶມ ເຂົ້າມາຢູ່ໃນຄະນະນຳຂອງພັກເທື່ອລະກ້າວ. ພວກສ່ວຍໂອກາດ-ເຫຼົ່ານີ້ໄດ້ຮັບການຊ່ວຍເຫຼືອຢ່າງກວ້າງຂວາງຈາກພວກຈັກກະພັດປະຕິການ ເຊິ່ງໝູນໃຊ້ຄຳຂວັນແບບໜ້າໄຫວ້ ຫຼັງຫຼອກອັນນີ້: " ປັບປຸງ " ລັດທິສັງຄົມນິຍົມ. ຈຳເປັນຕ້ອງລະດົມກຳລັງອັນບໍລິສຸດສະອາດຂອງພັກແລະຂອງສັງຄົມ ທັງ

ໝົດຢ່າງຮີບດ່ວນ ເພື່ອຍຸຕິການບຸກໂຈມຕີຂອງພວກຝືນປະຕິ-ວັດ. ປະເທດສັງຄົມນິຍົມອ້າຍນ້ອງທັງຫລາຍກໍໄດ້ຊ່ວຍ ຂັດຂວາງຫົນທາງຂອງພວກເຂົາເຊັ່ນ ດຽວກັນ. ເພື່ອເປັນການພິສູດໃຫ້ເຫັນເຖິງຄວາມສຳນຶກອັນສູງສົ່ງໃນຄວາມຮັບຜິດຊອບແບບສາກົນນິຍົມ, ພວກເຂົາຈຶ່ງໄດ້ຈັດສົ່ງກອງທະຫານ ເຂົ້າໄປໃນເຊັກໂກສະໂລວາກີ ເມື່ອເດືອນສິງຫາ ປີ ໑໙໖໘, ສິ່ງດັ່ງກ່າວໄດ້ເຮັດໃຫ້ຄວາມມຸ່ງຫວັງທັງຫລາຍຂອງພວກຈັກກະ-ພັດ ທີ່ຢາກດຶງເອົາປະເທດນີ້ອອກຈາກວົງຄະນາຍາດສັງຄົມນິຍົມ ອາວະສານລົງ.

ແນວທາງການເມືອງຂອງ ພ.ກ.ສ.ຊ ແລະ ພັກ ມາກຊິດ-ເລນິນອື່ນໆ ທີ່ແນໃສ່ປັບປຸງບຳລຸງຄວາມເປັນເອກະ-ພາບ ຍິ່ງຕື່ມຂອງບັນດາປະເທດສັງຄົມນິຍົມນັ້ນໃນຊຸມປີຫລັງຫລັງມານີ້ ມັນໄດ້ຮັບໄຊຊະນະໃໝ່ຕື່ມອີກ. ການຮ່ວມມື ລະຫວ່າງພັກກອມມູນິດ ແລະ ກຳມະກອນຂອງປະເທດອ້າຍນ້ອງຜ່ານໄລຍະຂະຫຍາຍຕົວຫລາຍຮູບຫລາຍແບບມາແລ້ວ. ການຮ່ວມມືດັ່ງກ່າວອະນຸມັດໃຫ້ໝູນໃຊ້ການແລກປ່ຽນບົດຮຽນເພື່ອຮ່ວມມືກັນຄົ້ນຄວ້າບັນຫາພື້ນຖານວ່າດ້ວຍການສ້າງສາລະບອບສັງຄົມນິຍົມ ແລະ ລະບອບກອມມູນິດ, ອະນຸມັດໃຫ້ກຳນົດຮູບສາຍພົວພັນທາງເສດຖະກິດ ແລະ ວັດທະນະທຳອັນໃຫ້ ປະໂຫຍດຫລາຍກວ່າໝູ່, ໃຫ້ກຳນົດແນວທາງຮ່ວມຂອງ ນະໂຍບາຍການເມືອງຕ່າງປະເທດ.

ທັງປັບປຸງບຳລຸງຄວາມເປັນເອກະພາບແລະຄວາມ ເປັນ

ປີກແຜ່ນແຫ່ນນັ້ນທີ່ນີ້, ວົງຄະນາຍາດປະເທດສັງຄົມນິຍົມກໍ່ປະກອບສ່ວນໃນການເລັ່ງລັດຈັງຫວະຄວາມກ້າວໜ້າ ທາງດ້ານສັງຄົມ, ສ້າງເງື່ອນໄຂອັນນັບມື້ນັບອໍານວຍກວ່າໝູ່ ໃຫ້ແກ່ການຕໍ່ສູ້ເພື່ອສັນຕິພາບ ເພື່ອເອກະລາດແຫ່ງຊາດ ແລະ ເພື່ອສັງຄົມນິຍົມຂອງປະຊາຊາດຕ່າງໆ.

ສະຫລຸບຈາກບົດຮຽນສະສົມໄວ້ໂດຍລະບົບສັງຄົມນິຍົມ - ໂລກ ເພິ່ນສາມາດຕີລາຄາໄດ້ວ່າຍິ່ງເສີມກໍາລັງໃຫ້ແກ່ຄວາມຈະເລີນຮຸ່ງເຮືອງທາງດ້ານເສດຖະກິດຂອງບັນດາປະເທດ - ອາຍນອງໄດ້ຫລາຍຮູບຫລາຍແບບ ແລະ ຕິດຕໍ່ກັນເທົ່າໃດ , ຍິ່ງຫລຸດຜ່ອນຄວາມແຕກຕ່າງຢູ່ໃນລະດັບຂະຫຍາຍຕົວທາງສັງຄົມຫລາຍເທົ່າໃດ, ການປະສານງານຂອງພວກເຂົາ, ການຊ່ວຍເຫລືອຊຶ່ງກັນແລະກັນຂອງພວກເຂົາ ແລະການແລກປ່ຽນບົດຮຽນຂອງພວກເຂົາກໍ່ຍິ່ງຈະກ້າວໄປຢ່າງເລິກເຊິ່ງ ໜັກແໜ້ນເພີ່ມຂຶ້ນອີກເທົ່ານັ້ນ. ຢູ່ໃນວົງຄະນາຍາດລັດເອກະລາດ ແລະ ມີສິດສະເໝີພາບກັນນີ້ ເພິ່ນຈະເຫັນອາການີດມີທາອຽງອັນນັບມື້ນັບຈະແຈ້ງຂຶ້ນ ຢູ່ໃນການຫຍັບເຂົ້າໃກ້ຊິດກັນ ລະຫວ່າງຊາດ ແລະ ປະຊາຊາດຕ່າງໆ ແລະ ຂອບເຂດ ແວດວົງຂອງຊີວິດແບບຕ່າງໆກໍ່ຫັນມາມີລັກສະນະສາກົນຫລາຍຂຶ້ນ.

# ການເຄື່ອນໄຫວຮ່ວມກັນ ຢູ່ໃນເວທີສາກົນ

ປົດປາດອັນສູນທະວີ ຂອງລະບອບສັງຄົມນິຍົມໂລກຢູ່ໃນຊີວິດຂອງສັງຄົມຍຸກປະຈຸບັນ ສະແດງຕົວອອກຢ່າງຈະແຈ້ງ ຢູ່ໃນການເຄື່ອນໄຫວຂອງມັນເທິງເວທີສາກົນ, ການເຄື່ອນ - ໄຫວອັນແນໃສ່ຫັນປ່ຽນລະບົບສາຍພົວພັນລະຫວ່າງຊາດ ໃຫ້ມີປະຊາທິປະໄຕ, ເພື່ອຄວາມຍືນຍົງ ຂອງຫລັກການແຫ່ງການຢູ່ຮ່ວມກັນແບບສັນຕິລະຫວ່າງລັດທີ່ມີລະບອບສັງຄົມແຕກຕ່າງກັນ, ເພື່ອປັບປຸງສັນຕິພາບຢູ່ໃນສາກົນ, ເພື່ອຢຸຕິການແຂ່ງຂັນ ປະ-ກອບສ້າງອາວຸດຍຸທະພັນ. ປະເທດສັງຄົມນິຍົມປະກາດ ຢ່າງເດັດດ່ຽວຕ້ານກັບນະໂຍບາຍຮຸກຮານແລະຄອບຄອງໂລກ, ສະຫນັບສະຫນູນຢ່າງເດັດດ່ຽວການຕໍ່ສູ້ຂອງປະຊາຊາດເພື່ອການປົດປ່ອຍຊາດສັງຄົມ ແລະ ເພື່ອເອກະລາດ.

ແຕ່ລະປີ ການຮ່ວມມືລະຫວ່າງປະເທດສັງຄົມນິຍົມຢູ່ໃນ-ເວທີສາກົນ ກໍ່ຍິ່ງຮັດແໜ້ນຂຶ້ນຊຸກໄຊ. ຈາກການຕົກລົງຮ່ວມກັນກ່ຽວກັບຂັ້ນຕອນດ່ຽວໆບາງຕອນຂອງນະໂຍບາຍ ການ

ເມືອງຕ່າງປະເທດໃນຂັ້ນຕົ້ນ ຂອງການພົວພັນເຊິ່ງກັນ ແລະ ກັນນັ້ນ ບັດນີ້ປະເທດສັງຄົມນິຍົມໄດ້ກ້າວຜ່ານມາເຖິງຂັ້ນ ປະສານສົມທົບການເຄື່ອນໄຫວຮ່ວມກັນ ຢູ່ໃນຂົງເຂດຍຸທະ ສາດອັນດຽວກັນ. ໄດ້ມີການປະສານງານແບບນີ້ ທັງຢູ່ໃນອົງກອນທັງຫລາຍຂອງສົນທິສັນຍາວາກູໂຊວີ ທັງວາງຢູ່ບົນພື້ນຖານ ໔ ດ້ານ, ມັນອຳນວຍໃຫ້ລັດອ້າຍນ້ອງ ທຳການຕໍ່ສູ້ຢ່າງມີປະສິດທິຜົນ ເພື່ອບັນລຸເປົ້າໝາຍອັນດຽວກັນ ແລະ ບັບປຸງ ຖານະຂອງພວກເຂົາ ຢູ່ໃນການແຂ່ງຂັນ ອັນເປັນປະຫວັດການ ລະຫວ່າງສັງຄົມນິຍົມກັບທຶນນິຍົມ.

ນະໂຍບາຍຕ່າງປະເທດຂອງລັດອ້າຍນ້ອງ ຍັງຄົງສືບ ຕໍ່ ແລະ ພັນຂະຫຍາຍນະໂຍບາຍ ເຊິ່ງລັດສັງຄົມນິຍົມລັດທຳອິດ ສ້າງຕັ້ງຂຶ້ນໃນປີ ໑໙໑໗ ໄດ້ເລີ່ມປະຕິບັດມາແລ້ວ ແລະ ທັງເດີນຕາມຫລັກການເລນິນນິດນັ້ນຕໍ່ໄປ. ເລນິນ ຊີ້ບອກວ່າ ນະໂຍບາຍຕ່າງປະເທດຂອງສະຫະພາບໂຊວຽດ ສະທ້ອນ ບອກຄວາມມຸ່ງມາດປາຖະໜາຂອງຕົນທີ່ " ຢາກຢູ່ຢ່າງສະຫງົບ-ກັບປະຊາຊາດທັງໝົດ ແລະ ທັງຢາກຫັນກຳລັງແຮງທັງໝົດໄປສູ່ການສ້າງສາພາຍໃນ " ແລະໃນເວລາດຽວກັນ ກໍຍັງບອກມານະຈິດຂອງຕົນທີ່ຢາກເຮັດທຸກຢ່າງເພື່ອ"ຮັບປະກັນ - ແລະ ຕັດຫຍໍ້ເສັ້ນທາງທີ່ຈະນຳພາມະນຸດຊາດ... ໄປສູ່ການກໍ່ຕັ້ງສັງຄົມແບບສັງຄົມນິຍົມ ແລະ ສັນຕິພາບອັນຍຸຕິທຳ ແລະ ຖາວອນ..." ( ວ.ອີ.ເລນິນ, ນິພົນຄົບຊຸດ, ເຫລັ້ມທີ໓໔ ໜ້າ ໓໖໖; ເຫລັ້ມທີ ໓໖, ໜ້າ ໑໔໓ .)

ນະໂຍບາຍຕ່າງປະເທດແບບສັນຕິນອນຢູ່ໃນກະໂຕ ທາດແທ້ຂອງລະບອບສັງຄົມນິຍົມເອງນັ້ນຄື ມັນເປັນປໍລະປັກ ຢ່າງເລິກເຊິ່ງທີ່ສຸດກັບການຮຸກຮານທຸກແບບ, ກັບການຍຶດຄອງດິນແດນຜູ້ອື່ນ ແລະ ການເອົາປະຊາຊາດອື່ນໆມາເປັນຂ້າທາດ. ປະເທດໂຊວຽດກຳເນີດຂຶ້ນພາຍໃຕ້ລາສີສັນຕິພາບ. ດຳລັດຂອງ ເລນິນ ກ່ຽວກັບສັນຕິພາບ ແມ່ນກົດໝາຍຂໍ້ທຳອິດຂອງການປະຕິວັດສັງຄົມນິຍົມຊະນະເລີດ. ດຳລັດໄດ້ປະກາດຫລັກການຂອງລັດທິສາກົນກຳມາຊີບ ແລະ ຂອງການຢູ່ຮ່ວມ ກັນແບບສັນຕິ ໃນຖານະວ່າມັນເປັນຫລັກການພື້ນຖານຂອງນະໂຍບາຍຕ່າງປະເທດແຫ່ງລັດສັງຄົມນິຍົມ. ພາຍຫລັງຕໍ່ມາ ຫລັກການເຫລົ່ານີ້ໄດ້ເປັນຮູບເປັນຮ່າງຂຶ້ນແທ້ ແລະ ກໍໄດ້ບົ່ງ ໄວ້ໃນກົດໝາຍຂໍ້ອື່ນໆ, ມັນສະແດງຕົວອອກຢ່າງໜັກແໜ້ນ ຢູ່ໃນຊີວິດຕະຫລອດໄລຍະປະຫວັດຂອງ ສ.ສ.ສ.ຊ.ຫລັກການເຫລົ່ານີ້ມີຮູບຮ່າງຢ່າງແທ້ຈິງຢູ່ໃນທຸກໆເອກະສານສຳຄັນຂອງປະເທດສັງຄົມນິຍົມ.

ໃນຊຸມປີທຳອິດແຫ່ງການຄົງຕົວຢູ່ຂອງສະຫະພາບໂຊວຽດພຸ້ນແລ້ວ ຫລັກການ "<u>ລັດທິສາກົນກຳມາຊີບ</u> "ກໍໝາຍຄວາມວ່າ ຄວາມສາມັກຄີ ແລະ ການສະໜັບສະໜູນກັນແລະ ກັນຂອງຊາວຜູ້ອອກແຮງງານໃນລັດສັງຄົມນິຍົມ ແລະ ຊາວ ຜູ້ອອກແຮງງານໃນປະເທດອື່ນໆ ຢູ່ໃນການຕໍ່ສູ້ເພື່ອຍຸຕິສົງຄາມຈັກກະພັດ ອັນນອງເລືອດ ແລະ ເພື່ອສ້າງສາສັນຕິພາບແບບປະຊາທິປະໄຕ ແລະ ຍຸຕິທຳ, ເພື່ອປົກປັກຮັກສາໄວ້ເຊິ່ງໄຊ

9*

ພິຊິດຂອງການປະຕິວັດເດືອນຕຸລາ ແລະ ເຮັດໃຫ້ມັນ ຍືນຍົງ ຄົງຕົວຕໍ່ໄປ.

ຫລັງຈາກການກໍ່ຕັ້ງລະບົບສັງຄົມນິຍົມແຫ່ງໂລກແລ້ວຫລັກການຂອງລັດທິສາກົນກຳມາຊີບ ໄດ້ກາຍເປັນຫີນສີລາ ໃຫ້ແກ່ນະໂຍບາຍຕ່າງປະເທດຂອງບັນດາປະເທດສັງຄົມນິຍົມ ຢູ່ໃນສາຍພົວພັນຕິດຕໍ່ກັນຂອງພວກເຂົາ ແລະ ທັງຢູ່ໃນການຕິດ ຕໍ່ຂອງພວກເຂົາກັບຊາວຜູ້ອອກແຮງງານໃນປະເທດທຶນນິຍົມກັບປະຊາຊາດໃນລັດເອກະລາດໜຸ່ມນ້ອຍ ເຊິ່ງກຳລັງຕໍ່ສູ້ ຕ້ານກັບຈັກກະພັດນິຍົມ.

ສະຫະພາບໂຊວຽດ ກັບປະເທດສັງຄົມນິຍົມອື່ນໆຍາມໃດກໍສະໜັບສະໜູນການປົດປ່ອຍຂອງປະຊາຊາດ, ເພື່ອເອກະລາດທາງດ້ານເສດຖະກິດ ແລະ ການເມືອງຢ່າງບໍ່ປ່ຽນແປງ, ຍາມໃດກໍ່ຄັດຄ້ານການປອງຮ້າຍນາງເພີດທ້ອນສັກກາລະ - ຂອງພວກເຂົາຈາກຈັກກະພັດນິຍົມ. ນະໂຍບາຍຕ່າງປະເທດຂອງປະເທດສັງຄົມນິຍົມ ມີສ່ວນຊ່ວຍໃຫ້ບັນຫາສຳຄັນ ທັງຫລາຍຂອງໂລກປະຈຸບັນ ແລະ ການຈັດລະບົບຊີວິດຂອງ ມັນໄດ້ຮັບການແກ້ໄຂໂດຍປະຊາຊາດຜູ້ເຈົ້າຂອງບັນຫາ ບົນພື້ນຖານຄວາມສະໝັກໃຈຂອງພວກເຂົາເອງ.

ບັດນີ້ມາເບິ່ງ ຫລັກການຂອງການຢູ່ຮ່ວມກັນຢ່າງສັນຕິ - ຂອງລັດຕ່າງໆ ເຊິ່ງມີລະບອບສັງຄົມແຕກຕ່າງກັນ. ຫລັກການນີ້ ອອກມາໂດຍກົງຈາກທັດສະນະພາບຂອງເລນິນ ວ່າດ້ວຍການປະຕິວັດສັງຄົມນິຍົມ, ອອກມາຈາກຂໍ້ວິນິດໄສທັດສະນະ-

ພາບດັ່ງກ່າວທີ່ວ່າ ຍ້ອນການຂະຫຍາຍຕົວແບບບໍ່ສະໝ່ຳ ສະເໝີຂອງທຶນນິຍົມ ການປະຕິວັດຈະບໍ່ສາມາດໄດ້ຮັບໄຊຊະນະຢູ່ໃນທຸກໆປະເທດພ້ອມໆກັນ. ມັນໃຫ້ກຳເນີດແກ່ສະພາບ ຢູ່ຮ່ວມກັນລະຫວ່າງລັດທີ່ມີລະບົບສັງຄົມເສດຖະກິດກົງກັນ ຂ້າມຕະຫຼອດໄລຍະປະຫວັດສາດຍາວນານໄລຍະໜຶ່ງຢ່າງຫລີກບໍ່ໄດ້. ຄວາມບໍ່ອ່ອນຂໍ້ໃຫ້ແກ່ກັນແລະກັນ ຂອງລະບົບເຫລົ່າ ນີ້ເປັນເງື່ອນໄຂກຳເນີດຂອງການຕໍ່ສູ້ອັນດຸເດືອດລະຫວ່າງ ລັດສັງຄົມນິຍົມ ແລະ ທຶນນິຍົມ. ການຕໍ່ສູ້ອັນນີ້ອາດດຳເນີນ ໄປຢ່າງສັນຕິ ຫລືບໍ່ສັນຕິ. ຄວາມໃຝ່ຝັນປາຖະໜາຢາກຮຸກຮານອັນເປັນລັກສະນະສະເພາະຕົວຂອງລັດທິຈັກກະພັດນິຍົມ ເອງຊຸກຍູ້ເອົາໄປເຖິງການກໍ່ສົງຄາມຕ້ານກັບລັດທີ່ສັງຄົມນິຍົມຢ່າງຫລີກບໍ່ໄດ້. ແຕ່ວ່າການຢາກຮຸກຮານແບບໃດແບບໜຶ່ງນັ້ນກໍບໍ່ແມ່ນ ວ່າຕ້ອງກາຍເປັນຈິງໄດ້ສະເໝີໄປດອກ ມັນຂຶ້ນກັບ - ການຊັ່ງຊາກຳລັງໃນຕົວຈິງພຸ້ນ.

ຕັ້ງແຕ່ລະບົບສັງຄົມນິຍົມເກີດຂຶ້ນມາ ໂດຍສະເພາະ ກະໂຕສະຫະພາບໂຊວຽດເອງ ມັນກໍ່ມຸ່ງໜ້າຫັນໄປຫາການ ຢູ່ຮ່ວມກັນແບບສັນຕິກັບລັດນາຍທຶນໂລກ. ເຖິງປານນັ້ນ ກໍຕາມເວລາຫລາຍສິບປີຜ່ານເລີຍໄປແລ້ວກ່ອນທີ່ວົງການຜູ້ນຳ ປະເທດນາຍທຶນສຳຄັນໆທັງຫລາຍຈະເລີ່ມຍອມຮັບນັບຖື ແນວຄິດຂອງການຢູ່ຮ່ວມກັນແບບສັນຕິ.

ສິ່ງດັ່ງກ່າວເກີດຂຶ້ນກໍຕໍ່ເມື່ອການຊັ່ງຊາກຳລັງໃນໂລກໄດ້ຜັນປ່ຽນໄປຢ່າງເລິກເຊິ່ງໂດຍໃຫ້ທ່າດີແກ່ລະບອບສັງຄົມນິຍົມ.

ປັນດາປະເທດນາຍທຶນເຂົ້າໃຈເຖິງຄວາມເຂັ້ມແຂງ ແລະສະຖຽນລະພາບຂອງລັດສັງຄົມນິຍົມແລ້ວ. ຄວາມອ່ອນເພຍເປ່ຍລອຍຂອງລະບອບທຶນນິຍົມກາຍເປັນສິ່ງປະຈັກແຈ້ງຂຶ້ນ.

ການຢູ່ຮ່ວມກັນຢ່າງສັນຕິ ອີງໃສ່ສົມມຸດຖານທີ່ວ່າການຂັດແຍ່ງກັນລະຫວ່າງລັດຕ່າງໆ ຕ້ອງແກ້ໄຂດ້ວຍສັນຕິວິທີ. ມັນໝາຍບອກວ່າ ຕ້ອງຫລີກເວັ້ນພຶດຕິກຳອັນເປັນປໍລະປັກກັນ , ຫລີກເວັ້ນ " ສົງຄາມເຢັນ ", ໝາຍບອກວ່າຕ້ອງສ້າງສາປັນຍາກາດແຫ່ງຄວາມໄວ້ເນື້ອເຊື່ອໃຈກັນ, ໃຫ້ຂະຫຍາຍ - ສາຍພົວພັນອັນກວ້າງຂວາງໃນຫລາຍຮູບຫລາຍແບບ. ຫລັກການຕ່າງໆຂອງການຢູ່ຮ່ວມກັນຢ່າງສັນຕິໝາຍເຖິງການ "ປະຕິເສດສົງຄາມໃນນາມວ່າມັນເປັນວິທີທາງແກ້ໄຂບັນຫາທີ່ເປັນຄວາມກັນຢູ່ລະຫວ່າງລັດຕ່າງໆ ໝາຍເຖິງການແກ້ໄຂບັນຫາດ້ວຍການເຈລະຈາ; ໝາຍເຖິງການມີສິດສະເໝີພາບກັນມີຄວາມເຂົ້າໃຈຕໍ່ກັນ ແລະ ມີຄວາມເຊື່ອຖືລະຫວ່າງລັດຕໍ່ລັດ, ມີຄວາມເອົາໃຈ່ໃສ່ຕໍ່ຜົນປະໂຫຍດຂອງແຕ່ລະຝ່າຍ, ໝາຍເຖິງການບໍ່ແຊກແຊ່ງເຂົ້າໃນກິດຈະການພາຍໃນຂອງກັນແລະກັນ, ຮັບຮູ້ສິດທິຂອງແຕ່ລະປະຊາຊາດໃນການແກ້ໄຂ ບັນຫາຂອງປະເທດຕົນຢ່າງເສລີທີ່ສຸດ, ໝາຍເຖິງການເຄົາລົບ ຕໍ່ອະທິປະໄຕ ແລະ ບູລະນະພາບໃນດິນແດນຂອງແຕ່ລະ ປະເທດຢ່າງເຂັ້ມງວດ; ໝາຍເຖິງການຂະຫຍາຍຕົວແລະການຮ່ວມມືທາງດ້ານເສດຖະກິດ ແລະ ວັດທະນະທຳ ບົນພື້ນຖານຄວາມສະເໝີພາບຢ່າງຄົບຖ້ວນແລະຕ່າງຝ່າຍຕ່າງໄດ້ຮັບຜົນ

ດີ ( ໂຄງການຂອງພັກກອມມູນິດສະຫະພາບໂຊວຽດ.ມົດສະ
ກູ ໑໙໗໔, ຫນາ ໕໙ .)

ຍອມຮັບເອົາຫລັກການຂອງການຢູ່ຮ່ວມກັນ ຢ່າງສັນຕິ, ຫມາຍຄວາມວ່າ ຍອມຮັບເອົາການແກ້ໄຂແບບສັນຕິວິທີ ຢູ່ໃນທຸກຂົງເຂດ ແຫ່ງການພົວພັນລະຫວ່າງລັດຕ່າງໆ ບົນພື້ນຖານຄວາມເຂົ້າໃຈເຊິ່ງກັນແລະກັນ ແລະ ການຮ່ວມມືກັນ.

ແມ່ນຢູ່ວ່າ ບັນດາປະເທດສັງຄົມນິຍົມບໍ່ເຊື່ອວ່າສິ່ງນີ້ ຈະລຶບລ້າງຄວາມເປັນປໍລະປັກກັນລະຫວ່າງສອງໂລກໄດ້ ເພາະບໍ່ມີທາງເປັນໄປໄດ້ ທີ່ຈະຢຸດຕິພຶດຕິກຳຂອງກົດເກນພາວະວິໄສແຫ່ງປະຫວັດສາດທີ່ຈະທັບມ້າງຄວາມເປັນປໍລະປັກກັນ ລະຫວ່າງທຶນນິຍົມກັບສັງຄົມນິຍົມ.ທ່ານ ລ.ເບຣຊເນັຟ ໄດ້ກ່າວຢູ່ໃນກອງປະຊຸມໃຫຍ່ຄັ້ງທີ ໒໕ ຂອງ ພ.ກ.ສ.ຊ. ວ່າ"ມັນເປັນສິ່ງຈະແຈ້ງທີ່ສຸດວ່າ ການຫລຸດຜ່ອນຄວາມເຄັ່ງຕຶງ ແລະ ການຢູ່ຮ່ວມກັນຢ່າງສັນຕິນັ້ນ ກ່ຽວຂ້ອງກັບສາຍພົວພັນ ລະຫວ່າງລັດ. ອັນນີ້ຫມາຍຄວາມວ່າກ່ອນອື່ນຫມົດ ຕ້ອງບໍ່ແກ້ໄຂບັນຫາທີ່ເປັນຄວາມກັນ ແລະ ຄວາມຂັດແຍ່ງລະຫວ່າງ ປະເທດ ດ້ວຍສົງຄາມ, ດ້ວຍການໃຊ້ກຳລັງຫລືການຂົ່ມຂູ່ວ່າຈະໃຊ້. ການຫລຸດຜ່ອນຄວາມເຄັ່ງຕຶງ ຈະບໍ່ທັບມ້າງແລະບໍ່ອາດທັບມ້າງຫລືຜັນປ່ຽນກົດເກນແຫ່ງການຕໍ່ສູ້ຊົນຊັ້ນ ໂດຍວິທີໃດວິທີຫນຶ່ງເລີຍ. ບໍ່ມີໃຜສາມາດຄາດຫວັງວ່າ ຍ້ອນຜົນສະທ້ອນ - ຂອງການຫລຸດຜ່ອນຄວາມເຄັ່ງຕຶງ ນັກກອມມູນິດ ຈະຍອມຮັບເອົາການຂູດຮີດແບບນາຍທຶນຫລືວ່າພວກນາຍທຶນຜູກຂາດ ຈະ

ກາຍມາເປັນຜູ້ສະໜັບສະໜູນການປະຕິວັດ". (ເອກະສານກອງປະຊຸມໃຫຍ່ຄັ້ງທີ ໒໕ ຂອງ ພ.ກ.ສ.ຊ, ໜ້າ ໖໖.)

ຈັ່ງຊັ້ນໝາຍຄວາມວ່າ ມີການທັງການຮ່ວມມືກັນ ແລະການຊ່ວງເລັງໄປພ້ອມກັນບໍ ? ແມ່ນແທ້, ມັນເປັນໄປໄດ້ ແລະ ກໍ່ບໍ່ມີທາງຫຼີກເວັ້ນອີກ ເພາະວ່າສາຍພົວພັນລະຫວ່າງຊາດ ໝ່າຍເຖິງຂົງເຂດອັນສັບສົນຫຼາຍຮູບຫຼາຍແບບເປັນພິເສດແຫ່ງຊີວິດສັງຄົມ. ປະຫວັດຂອງການພົວພັນລະ ຫວ່າງຊາດໃຫ້ຕົວຢ່າງຫຼາຍອັນກ່ຽວກັບການປະນິປະນອມໃຫ້ ກັນ ແລະ ກັນນັ້ນສະແດງວ່າໂດຍອີງໃສ່ເງື່ອນໄຂຕົວຈິງຂອງການຕໍ່ສູ້ຄູ່ແຂ່ງອັນໄດ້ເລືອກເອົາສັນຕິພາບແທນການປະທະ ແບບສ້າງຄວາມເສຍຫາຍ. ສິ່ງດັ່ງກ່າວນີ້ເປັນໄປຕາມຄຳບົ່ງ ຊີ້ຂອງສະພາບການຕົວຈິງຂອງການຊ່ວງຊາກຳລັງທີ່ກຳນົດແລ້ວ. ຢູ່ໃນປະຫວັດສາດຜ່ານມາເຄີຍມີຕົວຢ່າງມາຫຼາຍແລ້ວທີ່ຄູ່ສັດຕູກັນໄດ້ຕົກລົງນຳກັນກ່ຽວກັບຮູບການຕໍ່ສູ້ກ່ຽວກັບຂອບເຂດ - ຂອງການໃຊ້ອາວຸດ ແລະ ອື່ນໆອີກ. ໃນໄລຍະສິບປີຫຼັງມານີ້ ເພິ່ນກໍໄດ້ມີການຕົກລົງລະຫວ່າງຊາດຫຼາຍອັນກ່ຽວກັບຮູບຮ່າງ ແລະ ລະດັບອາວຸດເຊັ່ນ: ສົນທິສັນຍາວ່າດ້ວຍການ ບໍ່ສົ່ງເສີມການໃຊ້ອາວຸດນິວຄະເລຍ ກ່ຽວກັບການເກືອດ ຫ້າມການທົດລອງອາວຸດດັ່ງກ່າວຢູ່ຂົງເຂດຕ່າງໆ, ກ່ຽວກັບ ການເກືອດຫ້າມອາວຸດເຊື້ອພະຍາດ ແລະອື່ນໆອີກ.

ການຢູ່ຮ່ວມກັນຢ່າງສັນຕິລະຫວ່າງລັດຕ່າງໆທີ່ມີລະບອບ-ສັງຄົມແຕກຕ່າງກັນ ບໍ່ປ່ຽນແປງທາດແທ້ພາຍໃນຂອງລັດເຫຼົ່າ

ນີ້ແຕ່ແນວໃດ ແຕ່ມັນຫາກຮັດໃຫ້ເກີດມີເງື່ອນໄຂພາຍ ນອກ ແບບໃຫມ່, ໃນນັ້ນການແຂ່ງຂັນລະຫວ່າງສອງລະບົບສັງຄົມ-ໄດ້ແຜ່ຂະຫຍາຍອອກ ນັບທັງຄວາມເປັນປໍລະປັກກັນທາງດ້ານກຳລັງແຫ່ງປະຕິກິລິຍາແລະກຳລັງແຫ່ງຄວາມກ້າວຫນ້ານຳ.

ການຫລຸດຜ່ອນຄວາມເຄັ່ງຕຶງລະຫວ່າງຊາດ ທີ່ສຳເລັດ-ລົງໃນຊຸມປີ ໗໐ ນັ້ນສ່ອງສະທ້ອນເຖິງເຫດການທີ່ວ່າລະບອບສັງຄົມນິຍົມເປັນຝ່າຍດຳເນີນການບຸກ ຮຸກຍ່າງເປັນປະຫວັດ-ການ, ໃນເວລາດຽວກັນ ກໍຊ້ຳແນນສະພາບການອັນນີ້ເຂອງ-ແຫງ ທີ່ບັງຄັບພວກວົງການປະຕິການຂອງກຸ່ມຊຸມເລີກ ຈັກກະພັດໃຫ້ລົ້ມເລີກແຜນການຫລຸດຜ່ອນຄວາມເຄັ່ງຕຶງ ທີ່ຫາກໍລົງມືທົດສອບນັ້ນເສຍ.

ເປັນທຳມະດາທີ່ນັກກອມມູນິດທັງຫລາຍເຫັນຈະແຈ້ງເອົາເອງວ່າ ນັກການເມືອງຝ່າຍທຶນນິຍົມປະລະຫລັກຫມັ້ນ ຕົ້ນຕໍຂອງພວກເຂົາເລີຍ: ພວກເຂົາພະຍາຍາມສວຍໂອກາດ ສູດຂີດໃນວາລະຫລຸດຜ່ອນຄວາມເຄັ່ງຕຶງ ເພື່ອເສີມສ້າງປັບປຸງ-ສະຖານະຂອງພວກເຂົາ ທັງພະຍາຍາມປົດອາວຸດ ທາງດ້ານແນວຄິດ ແລະ ການເມືອງ ຂອງລະບອບສັງຄົມນິຍົມ. ທັງໆທີ່ຍອມຮັບເອົາຫລັກການຂອງການຢູ່ຮ່ວມກັນຢ່າງສັນຕິແລ້ວ , ພວກເຂົາກໍຍັງພະຍາຍາມຊອກຫາຍຸດໂທບາຍທີ່ຈະອຳນວຍໃຫ້ພວກເຂົາທັບມ້າງລະບອບສັງຄົມນິຍົມໄດ້ໃນສະພາວະການ - ໃຫມ່.

ຕໍ່ໄປນີ້ ແມ່ນຂໍ້ຄວາມເຊິ່ງ ເກຣເວ ອະດີດທີ່ປຶກສາ ນາ

ຍຶກ ຂອງເຢຍລະມັນຕາເວັນຕົກ ອາເດໂນເອີ, ທັງເປັນ ຜູ້ຕົ້ນຕໍຄົນໜຶ່ງໃນຈຳນວນນັກທິດສະດີຕ້ານລັດທິກອມມູນິດ, ເຂົາຂຽນວ່າ: "ໃນທີ່ສຸດນະໂຍບາຍຫລຸດຜ່ອນຄວາມເຄັ່ງຕຶງກໍ ສະແດງອອກເຖິງການເລືອກເອົາເປົ້າໝາຍ ແລະ ວິທີການອັນດັດປ່ຽນແລ້ວ-ມັນໝາຍເຖິງການປະຕິເສດຄວາມພະຍາຍາມໃນໄລຍະສັ້ນໆທຸກໆຢ່າງທີ່ແນໃສ່ຢາກປົດປ່ອຍເອີຣົບ ຕາເວັນອອກອອກຈາກລະບອບກອມມູນິດຢ່າງວ່ອງໄວ. ມັນ ໝາຍເຖິງການຫັນທິດໄປຫາຂະບວນການຫັນປ່ຽນພາຍໃນ ອັນຍືດຍາວ ຢູ່ໃນກຸ່ມປະເທດຕາເວັນອອກ, ໃນໄລຍະດຽວກັນ ນີ້ເພິ່ນກໍຈະສາມາດສ້າງອິດທິພົນຕໍ່ການດັດສ້າງລະບົບສັງຄົມ - ການເມືອງເປັນຂັ້ນໆໃນລັດຕ່າງໆທາງຕາເວັນອອກ."(W. Grewe. Spil der Krafte in der Weltpolitik. Dusselclorf, 1970, S.614.)

ຈັກກະພັດນິຍົມເຮັດທຸກຢ່າງຕາມຄວາມສາມາດຂອງພວກເຂົາ ເພື່ອເຮັດໃຫ້ອິດທິພົນຂອງລະບອບສັງຄົມນິຍົມອັນແທ້ຈິງຕໍ່ປະຊາຊາດບົນພື້ນພິພົບອ່ອນເພຍລົງ ໂດຍດຳເນີນການ ຕໍ່ສູ້ກັບລະບອບສັງຄົມນິຍົມດ້ວຍວິຖີທາງແບບ ແປກຕ່າງກັນຫລ່າຍທີ່ສຸດ. ເຂົາຖ່ວງດຶງການຂະຫຍາຍຕົວຂອງສາຍພົວພັນ ເສດຖະກິດກັບປະເທດສັງຄົມນິຍົມທີ່ສອດຄ່ອງກັບຜົນປະໂຫຍດຂອງການແບ່ງງານສາກົນ ແລະ ຂອງການສົ່ງເສີມການຮ່ວມມືກັນແບບຕ່າງຝ່າຍຕ່າງໄດ້ຮັບຜົນດີ. ໂດຍຢືນຢູ່ໃນທ່າໝັ້ນ ຕ້ານລັດທິກອມມູນິດ ພວກຈັກກະພັດນິຍົມ ດຳເນີນສົງຄາມ ທາງດ້ານແນວຄິດເປັນປະຈຳກັບບັນດາປະເທດສັງຄົມນິຍົມ, ບິດ

ເບືອນຊີວິດໃນສັງຄົມສັງຄົມນິຍົມ ຕໍ່ໜ້າສາຍຕາຂອງປະຊາຊາດທັງຫລາຍ. ໃນຊຸມປີຫລັງໆມານີ້ ເຂົາໃຊ້ການໂຄສະນາຂີ້ຕົວະແບບເກາະພົດຢ່າງເຂັ້ມແຂງທີ່ສຸດ ກ່ຽວກັບອັນທີ່ ເອີ້ນວ່າ ການລະເມີດສິດທິມະນຸດຢູ່ໃນປະເທດສັງຄົມນິຍົມ. ການກະທຳດັ່ງກ່າວມີເປົ້າໝາຍຢາກຫັນລ່ຽວຄວາມເອົາໃຈໃສ່ - ຂອງມວນຫມູ່ມະຫາຊົນອອກຈາກການລວງລະເມີດຢ່າງ ຫນ້າດ້ານໃນສິດທິຂອງມະນຸດຢູ່ໃນປະເທດທຶນນິຍົມ ອັນແມ່ນ ພະຍາດສືບເຊື້ອຊະນິດປິ່ນປົວບໍ່ໄດ້ຂອງລະບອບທຶນນິຍົມ.

ເພື່ອເຮັດໃຫ້ການໂຄສະນາຕາມລັດທິກອມມູນິດຂອງພວກເຂົາມີລັກສະນະພາວະວິໄສອັນແດ່ ພວກນັກແນວຄິດຂອງ ຈັກກະພັດນິຍົມຈຳເປັນໄດ້ຮັບຮູ້ຄວາມສຳເລັດບາງອັນຂອງລະ - ບອບສັງຄົມນິຍົມ. ແຕ່ການຍອມຮັບສາລະພາບອັນນີ້ກໍຫາກຕິດຕາມດ້ວຍຄວາມເສກສັນປັ້ນແຕ່ງ ມີການອ້າງອີງທຸກແບບ ທຸກແນວກ່ຽວກັບຈຸດອ່ອນ ແລະ ຄວາມຜິດພາດຂອງລະບອບສັງ-ຄົມນິຍົມ ອັນເຮັດໃຫ້ຄວາມຈິງກ່ຽວກັບລະບອບນີ້ຫມົດຄຸນ ຄ່າລົງຢ່າງຫມົດກ່ຽງ. ການໂຄສະນາຂອງພວກນາຍທຶນ ພະຍາຍາມອຳພັງທາທີອັນເປັນປໍລະປັກຢ່າງເປີດເຜີຍຂອງພວກເຂົາກັບລະບອບສັງຄົມນິຍົມດ້ວຍການທ່າທາວ່າ ເຂົາສົນໃຈ ນຳ " ການປັບປຸງການແກ້ໄຂ " ສັງຄົມ ສັງຄົມນິຍົມ. ຍຸດໂທ-ບາຍອັນນີ້ ແນໃສ່ຢາກໃຫ້ລະບອບສັງຄົມນິຍົມອ່ອນແອ ແລະຜຸເປື່ອຍຢູ່ທາງໃນ. ໃນເວລາດຽວກັນພວກຈັກກະພັດ ກໍບໍ່ຢຸດຕິຄວາມພະຍາຍາມຂອງພວກເຂົາ ໃນອັນທີ່ຈະກໍ່ຄວາມຂັດແຍ່ງ

ລະຫວ່າງປະເທດສັງຄົມນິຍົມ ເພື່ອໃຫ້ປະເທດເຫລົ່ານີ້ ເປັນສັດຕູກັນເອງ. ພວກເຂົາຊອກທາງເຮັດໃຫ້ເສດຖະກິດ ຂອງລະບອບສັງຄົມນິຍົມອ່ອນເພຍລົງ ໂດຍສະເໜີແກມບັງຄັບໃຫ້ສັງຄົມນິຍົມເຂົ້າຮ່ວມການແຂ່ງຂັນປະກອບອາວຸດແບບ ໝົດເປືອງນຳ.

ຄວາມພະຍາຍາມທັງຫລາຍຂອງພວກທຶນນິຍົມທີ່ຢາກເຮັດໃຫ້ສັງຄົມ ສັງຄົມນິຍົມເປື່ອຍເນົ່ານັ້ນ ໄດ້ປະສົບກັບຄວາມລົ້ມແຫລວແລ້ວ ເພາະວ່າພາຍໃຕ້ລະບອບສັງຄົມນິຍົມນັ້ນ ມັນບໍ່ມີເງື່ອນໄຂທາງດ້ານສັງຄົມເສດຖະກິດອັນໃດ ເພື່ອຮັບ ເອົາສາຍພົວພັນ ແລະ ອຸດົມຄະຕິຂອງພວກທຶນນິຍົມ. ເປັນ ການຖືກຕ້ອງແລ້ວທີ່ປະເທດສັງຄົມນິຍົມທັງຫລາຍໄດ້ເອົາໃຈໃສ່ ຕໍ່ການເຮັດໃຫ້ການແບ່ງງານສາກົນເລິກເຊິ່ງຂຶ້ນຕື່ມ, ຕໍ່ການແລກປ່ຽນຄວາມສຳເລັດຢູ່ໃນຂົງເຂດວັດຖຸ ແລະ ແນວຄິດຈິດໃຈ. ເຖິງຢ່າງນັ້ນ ພວກເຂົາກໍຫາກສະໜັບສະໜູນ ການແລກປ່ຽນອັນປາສະຈາກການແຊກແຊງເຂົ້າໃນກິດຈະການ - ພາຍໃນຂອງພວກເຂົາຈາກຊຸມຊັ້ນນາຍທຶນ. ຝ່າຍຫລັງນີ້ ພະຍາຍາມດ້ວຍທຸກວິທີການເພື່ອດັດແປງບາດກ້າວເດີມ ແຫ່ງການຕໍ່ສູ້ລະຫວ່າງລະບອບສັງຄົມນິຍົມ ກັບລະບອບທຶນນິຍົມໃຫ້ສ້າງຜົນດີແກ່ພວກເຂົາ, ກ່ອນອື່ນໝົດພວກເຂົາໄດ້ໃຊ້ ວິທີການທາງດ້ານແນວຄິດຫລາຍແບບຫລາຍແນວ. ສິ່ງດັ່ງ ກ່າວເຮັດໃຫ້ການພົວພັນທາງດ້ານແນວຄິດກາຍເປັນສະໜາມແຂ່ງຂັນແຫ່ງປະຫວັດສາດລະຫວ່າງລະບອບສັງຄົມນິຍົມກັບທຶນນິຍົມ

ສຳຄັນຫລາຍຂຶ້ນ.

ການຕໍ່ສູ້ເພື່ອໃຫ້ການຫລຸດຜ່ອນຄວາມເຄັ່ງຕຶງດຳເນີນ ຕໍ່ໄປ ແລະ ເລິກເຊິ່ງຫນັກແຫນ້ນຂຶ້ນນັ້ນ ບໍ່ອາດປາສະຈາກພົນກະທົບຢ່າງຫນຶ່ງຢ່າງໃດຕໍ່ບາດກ້າວເດີນທີ່ກຳລັງເປັນຢູ່ ຢູ່ໃນປະເທດນາຍທຶນ. ແນວທາງແຫ່ງການຂະຫຍາຍຕົວແບບສາງສາສັນຕິພາບນັ້ນ ກຳລັງປຸກສ້າງພະລັງຢູ່ໃນມວນຫມູ່ມະຫາຊົນກຳລັງຊ່ວຍເຕົ້າໂຮມແລະເຮັດໃຫ້ຊາວຜູ້ອອກແຮງງານ ທັງຫລາຍຫາວທັນຂຶ້ນກວ່າເກົ່າ.

ຢູ່ໃນສະພາວະການແບບຢູ່ຮ່ວມກັນໂດຍສັນຕິຂອງບັນດາ-ລັດທີ່ມີລະບອບສັງຄົມແຕກຕ່າງກັນນີ້ ເພິ່ນແນມເຫັນ ຄວາມອາດສາມາດແບບໃຫມ່ ເພື່ອສົ່ງກະຈາຍແນວຄິດສັງຄົມ ນິຍົມອອກທ່າມກາງຊົນຊັ້ນກຳມາຊີບ ແລະ ກຳລັງກ້າວຫນ້າອື່ນໆ. ເພິ່ນເຫັນວ່າ ປະຖົມປັດໄຈຫລາຍອັນເພື່ອສ້າງຄວາມ ໃກ້ຊິດຕິດແທດລະຫວ່າງອົງການຈັດຕັ້ງກຳມະກອນ ຊາວຫນຸ່ມ ແມ່ຍິງ ແລະ ອື່ນໆ ຂອງປະເທດຕ່າງໆດີຂຶ້ນ. ເພິ່ນເຫັນວ່າເກີດມີສະຖານະການອັນອຳນວຍສຳລັບການພັດທະນາສາຍພົວ ພັນລະຫວ່າງກຳມະກອນຂອງປະເທດສັງຄົມນິຍົມ ກັບທຶນນິຍົມບົນພື້ນຖານຫລັກການຂອງລັດທິສາກົນກຳມາຊີບ.

ການທີ່ສາຍພົວພັນທາງດ້ານ ເສດຖະກິດລະຫວ່າງ ປະເທດສັງຄົມນິຍົມ ກັບປະເທດທຶນນິຍົມແຜ່ກວ້າງອອກນັ້ນ ມັນຊ່ວຍເຫລືອຊາວຜູ້ອອກແຮງງານ ເຊິ່ງເປັນຜູ້ແບກຫາບພົນສະທ້ອນອັນຫນັກຫນ່ວງຈາກວິກິດການເປັນໄລຍະຂອງລະບອບ -

ເສດຖະກິດນາຍທຶນ ດ້ວຍການສ້າງຄວາມສາມາດທີ່ຮັບປະກັນ ໃຫ້ມີບ່ອນເຮັດວຽກງານໃຫ້ແກ່ຫລາຍໆຄົນ. ຕົວຢ່າງການສົ່ງ ຈອງຈາກລັດສະມາຊິກສະພາຊ່ວຍເຫລືອຊຶ່ງກັນແລະກັນ ທາງ ດ້ານເສດຖະກິດ ຢູ່ໃນປະເທດນາຍທຶນລະຫວ່າງທ້າຍປີ໑໙໗໘ ຕົກເປັນມູນຄ່າຮອດ ໑໙,໘ ພັນລ້ານໂດລາ, ຮ່ວມກັບການ- ຄ້າຂອງບັນດາປະເທດເຫລົ່ານັ້ນ ມັນໄດ້ຮັບປະກັນບ່ອນ ເຮັດ ວຽກຫລາຍກວ່າ ໔໕໐.໐໐໐ ບ່ອນໃຫ້ແກ່ຊາວຜູ້ອອກ ແຮງ ງານໃນເອີຣົບຕາເວັນຕົກ ອາເມລິກາເໜືອ ແລະຍີ່ປຸ່ນ.

ອິດທິພົນອັນມີຜົນດີຂອງການຢູ່ຮ່ວມກັນແບບສັນຕິຕໍ່ການຕໍ່ສູ້ ຂອງມະຫາຊົນຜູ້ອອກແຮງງານຢູ່ໃນປະເທດນາຍທຶນ ສະແດງ ຕົວອອກຄືກັນຢູ່ໃນຄວາມອ່ອນເພຍຂອງປັດໄຈທາງດ້ານ ການ ເມືອງພາຍໃນປະເທດ ແລະ ນອກປະເທດ, ປັດໄຈດັ່ງກ່າວ ອຳນວຍຜົນດີໃຫ້ແກ່ຝ່າຍປະຕິການກວ່າໝູ່ຢູ່ໃນຊົນຊັ້ນນາຍທຶນ, ຂອບເຂດອິດທິພົນຂອງອິດທິກຳລັງທີ່ພະຍາຍາມປະຕິບັດນະໂຍ ບາຍຕ້ານປະຊາຊົນກໍ່ຫລຸດຜ່ອນລົງ ແລະ ເພີ່ມກໍ່ເຫັນວ່າ ມີ ການສ້າງເງື່ອນໄຂອັນອຳນວຍໃຫ້ແກ່ການຕໍ່ສູ້ຂອງຊາວຜູ້ອອກ ແຮງງານເພື່ອສິດທິຂອງພວກເຂົາ, ເພື່ອການຂະຫຍາຍປະ- ຊາທິປະໄຕ ແລະ ການຫັນປ່ຽນອັນເລິກເຊິ່ງຢູ່ໃນໂຄງຮ່າງ- ສັງຄົມເສດຖະກິດກັບການເມືອງ.

ດ້ວຍຄວາມຈົງຮັກພັກດີຕໍ່ຄຳສັ່ງສອນຂອງ ເລນິນ, ພັກ ກອມມູນິດ ແລະ ກຳມະກອນແຫ່ງປະເທດສັງຄົມນິຍົມທັງຫຼາຍ ຕີລາຄາວ່າ ພາລະໜ້າທີ່ຕົ້ນຕໍແຫ່ງນະໂຍບາຍຕ່າງປະ ເທດ

ຂອງພວກຕົນນັ້ນ ບໍ່ມີພຽງແຕ່ຫາທາງຫລີກເວັ້ນສົງຄາມໂລກ-ຄັ້ງໃຫມ່ເທົ່ານັ້ນ ແຕ່ຫາກຍັງຈະຂັບໄລ່ສົງຄາມອອກຈາກຊີວິດຂອງສັງຄົມຕະຫລອດໄປ. ທ່ານ ລ.ເບຣຊເນຟ ໄດ້ ເວົ້າເນັ້ນຢ້ຳວ່າ: " ພວກເຮົາຂໍປະກາດຢ່າງແຂງຂັນໃຫ້ຕັດສິນ-ການຊ່ວງເສັງອັນເປັນປະຫວັດການລະຫວ່າງລະບອບສັງຄົມນິຍົມ ກັບທຶນນິຍົມ ແຕ່ຢູ່ໃນຂົງເຂດອຸດົມການອັນສັນຕິ ບໍ່ແມ່ນຢູ່ໃນສະຫນາມຮົບ ບໍ່ແມ່ນຢູ່ໃນຕອງໂສອາວຸດຍຸດໂທປະກອນ. ລະຫວ່າງຊາຍແດນທີ່ແບ່ງແຍກສອງໂລກອອກຈາກກັນນັ້ນ ພວກເຮົາບໍ່ຢາກໃຫ້ມີຮອງຮອຍຂອງລູກສອນໄຟນິວຄະເລຍ ຜ່ານກາຍໄປແຕ່ຢາກໃຫ້ມີສາຍພົວພັນແຫ່ງການຮ່ວມມືອັນກວ້າງ - ຂວາງຫລາຍຮູບຫລາຍແບບ ເພື່ອຄວາມຢູ່ດີກິນດີຂອງມະ ນຸດຊາດທັງຫມົດ ຜ່ານກາຍໄປ ". ( ລ.ເບຣຊເນຟ. ເດີນຕາມທາງມະໂຍບາຍ ເລນິນິດ ຄຳປາໄສ ແລະ ບົດຄວາມ. ເຫລັ້ມທີ ໖, ຫນ້າ ໕໙໗ .)

ໂດຍເດີນຕາມຫລັກການເລນິນິດ ແຫ່ງມະໂຍບາຍ ຕ່າງປະເທດຂອງລັດໂຊວຽດ, ກອງປະຊຸມໃຫຍ່ຄັ້ງທີ ໒໔ ຂອງ ພ.ກ.ສ.ຊ (໑໙໗໑) ໄດ້ວາງຮາງໂຄງການສັນຕິພາບແລະປະກາດມັນອອກຕໍ່ມວນມະນຸດທັງຫມົດ, ໂຄງການດັ່ງກ່າວໃຊ້ເປັນພື້ນຖານຂອງພຶດຕິກຳອັນກວ້າງໃຫຍ່ໄພສານຂອງລັດ ໂຊວຽດຢູ່ໃນເວທີສາກົນ, ອັນຊ່ວຍຫລຸດຜ່ອນຄວາມເຄັ່ງຕຶງຢູ່ໃນການພົວພັນລະຫວ່າງລັດທີ່ມີລະບອບສັງຄົມແຕກຕ່າງກັນ ຢ່າງມີປະສິດທິຜົນ, ຊ່ວຍປັບປຸງຄວາມປອດໄພຂອງສະຫະພາບໂຊ

ວຽດ ແລະ ປະເທດສັງຄົມນິຍົມອື່ນໆ. ກ່ອນອື່ນຫມົດເພິ່ນໄດ້ກຳນົດພາລະຫນ້າທີ່ເພື່ອໃຫ້ມີຄວາມຄືບຫນ້າໄປຍັງເປົ້າຫມາຍເຫລົ່ານີ້:

- ດ້ວຍການເສີມສ້າງປັບປຸງຢ່າງຕໍ່ເນື່ອງຄວາມເປັນເອກະພາບລະຫວ່າງບັນດາລັດ ສັງຄົມນິຍົມອ້າຍນ້ອງ ແລະ ທັງຂະຫຍາຍການຮ່ວມມືຫລາຍແບບຫລາຍຮູບຂອງພວກເຂົາຢູ່ໃນການສະຖາປະນາສັງຄົມໃຫມ່, ເພີ່ມທະວີການປະກອບ ສ່ວນຫ້າວຫັນຢ່າງດຽວກັນເຂົ້າໃສ່ການປັບປຸງສັນຕິພາບ;

- ເຮັດໃຫ້ການແຂ່ງຂັນປະກອບອາວຸດອັນຕະລາຍຢຸດຕິລົງເພື່ອສັນຕິພາບ, ແລະ ຂ້າມຜ່ານ ຈາກ ການຫລຸດຜ່ອນອາວຸດທີ່ສະສົມໄວ້ແລ້ວໄປສູ່ການປົດອາວຸດ;

- ຈຸ້ມຂັ້ນ ຄວາມພະຍາຍາມຂອງລັດທີ່ຮັກຫອມສັນຕິພາບທັງຫລາຍໄປໃສ່ການລົບລ້າງເຮືອນຮັງສົງຄາມທີ່ມີຢູ່ແລະກ່ອນອື່ນຫມົດ ແນ່ໃສ່ການວາງລະບຽບອັນຍຸຕິທຳ ແລະຍືນຍົງ ຢູ່ຕາເວັນອອກກາງ;

- ເຮັດທຸກ ຢ່າງເພື່ອໃຫ້ການຫລຸດຜ່ອນຄວາມເຄັ່ງຕຶງສາກົນເລິກເຊິ່ງຫນັກແຫນ້ນເພື່ອເຮັດໃຫ້ມັນປະກົດ ເປັນຕົ້ນເປັນຕົວອອກມາໃນຮູບຮ່າງຈະແຈ້ງຢູ່ໃນການຮ່ວມມືລະຫວ່າງລັດຕ່າງໆແບບຕ່າງຝ່າຍຕ່າງມີຜົນ, ດຳເນີນຢ່າງເຂັ້ມແຂງນະໂຍບາຍອັນແນ່ໃສ່ການນຳໃຊ້ເອກະສານສຸດທ້າຍຂອງກອງປະຊຸມທົ່ວເອີຣົບໃຫ້ມີຜົນເປັນຈິງ ແລະ ແນ່ໃສ່ການພັດທະນາການຮ່ວມມືແບບ ສັນຕິຢູ່ໃນເອີຣົບ;

- ຊອກຫາທາງຮັບປະກັນຄວາມປອດໄພຢູ່ອາຊີ ໂດຍອາໄສຄວາມພະຍາຍາມພ້ອມກັນຂອງບັນດາປະເທດໃນຂົງເຂດນີ້;

- ຊອກຫາທາງຕົກລົງສົນທິສັນຍາລະຫວ່າງຊາດກ່ຽວກັບການບໍ່ນຳໃຊ້ກຳລັງຢູ່ໃນການພົວພັນສາກົນ;

- ຖືວ່າການລຶບລ້າງຢ່າງສົມບູນຮ່ອງຮອຍທຸກໆອັນ ຂອງລະບົບກົດຂີ່ຫົວເມືອງຂຶ້ນຂອງການລວງລະເມີດສິດລະເໝີ - ພາບ ແລະ ເອກະລາດຂອງປະຊາຊາດ ເຮືອນຮັງທຸກໆແຫ່ງຂອງລັດທິໄຫ່ເມືອງຂຶ້ນກັບລັດທິຈຳແນກເຊື້ອຊາດເປັນ ພາລະໜ້າທີ່ສາກົນອັນສຳຄັນຢ່າງໜຶ່ງ;

- ຊອກຫາທາງລຶບລ້າງການຈຳແນກ ແລະ ອຸປະສັກອັນປັ້ນແຕ່ງເອົາທຸກຢ່າງຢູ່ໃນການຄ້າຂາຍລະຫວ່າງຊາດ, ລຶບລ້າງປະກົດການບໍ່ສະເໝີພາບທຸກຢ່າງຂໍ້ສະເໜີແບບ ຂົ່ມຂູ່ການຂູດຮີດ ຢູ່ໃນການພົວພັນເສດຖະກິດລະຫວ່າງຊາດ.

ໂຄງການສັນຕິພາບເຊິ່ງກອງປະຊຸມໃຫຍ່ຄັ້ງທີ ໒໔ ແຫ່ງ ພ.ກ.ສ.ຊ ປະກາດອອກນັ້ນໄດ້ຂະຫຍາຍອອກ ແລະສົມບູນຂຶ້ນຕື່ມ ຕາມເງື່ອນໄຂໃໝ່ ດ້ວຍກອງປະຊຸມໃຫຍ່ຂອງພັກຄັ້ງທີ ໒໕ ແລະ ໒໖ ທີ່ໄຂຂຶ້ນໃນປີ ໑໙໗໖ ແລະ ໑໙໘໑ ຕາມລຳດັບ.

ການປະຕິບັດນະໂຍບາຍຕ່າງປະເທດຂອງ ພ.ກ.ສ.ຊ. ໂດຍໄດ້ຮັບການສະໜັບສະໜູນຈາກພັກອ້າຍນ້ອງປະເທດສັງຄົມນິຍົມ ຈາກທຸກຂະບວນກອມມູນິດ ຕົກຖືກໄລຍະດຽວ ກັບເຫດການອັນສຳຄັນຢູ່ໃນຊີວິດສາກົນພໍດີ. ໄລຍະດັ່ງກ່າວມີຈຸດ

ພິເສດຢູ່ບ່ອນວ່າ: ປະເທດທັງຫລາຍໃນລະບອບສັງຄົມ ນິຍົມ ພວມມີຄວາມຄືບຫນ້າແບບເນືອງນິດ, ປະຊາຊາດໃນອາຟຣິກກາ ອາຊີ ແລະ ອາເມລິກາລາຕິນ ມີໄຊຊະນະອັນໃຫມ່ຢູ່ໃນການຕໍ່ສູ້ຂອງພວກເຂົາ ເພື່ອປົດປ່ອຍຊາດ ແລະ ສັງຄົມ.ກຳລັງແຮງຕໍ່ສູ້ເພື່ອສັນຕິພາບ,ປະຊາທິປະໄຕ ແລະ ຄວາມກ້າວຫນ້າທາງສັງຄົມ ໄດ້ຮັບຄວາມສຳເລັດອັນສຳຄັນຫລາຍຢ່າງ.

ໃນເວລາດຽວກັນ, ຢູ່ໃນເຄິ່ງຫລັງຂອງຊຸມປີ 80 ນີ້ບັນດາອິດທິກຳລັງຈັກກະພັດທີ່ປະຕິການກວ່າຫມູ່, ພວກນັກ ສ້າງອາວຸດແລະ ພວກຊຸມເສິກ, ພວກຍຸແຍ່ກໍ່ສົງຄາມເຢັນໄດ້ຮວມຫົວກັນເຂົ້າໃນວົງການໂຄສະນາອັນກວ້າງ ແນໃສ່ຕ້ານການ-ຫລຸດຜ່ອນຄວາມເຄັ່ງຕຶງ ແລະ ການຫລຸດຜ່ອນອາວຸດ. ໂດຍອ້າງເອົາ " ການຂົ່ມຂູ່ໂຊວຽດ " ເຊິ່ງພວກເຂົາເສກສັນ-ຂຶ້ນເອງ ພວກເຂົາຮຽກຮ້ອງໃຫ້ອະນຸມັດງົບປະມານອີກຫລາຍພັນລ້ານ ເພື່ອໃຊ້ໃນກິດຈະການທະຫານ. ພວກເຂົາ ພະຍາຍາມບີບຮັດຂະບວນປົດປ່ອຍຂອງປະຊາຊາດດ້ວຍກຳລັງ, ທັງແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດອື່ນໆ.

ສາເຫດຂອງການຮຸກຮານອັນທະວີຫນ້າຂອງລັດທິຈັກກະ-ພັດນິຍົມ ກ່ອນອື່ນຫມົດມັນນອນຢູ່ໃນຄວາມມຸ່ງມາດປາຖະຫນາທີ່ຢາກກີດຂວາງ ການປັບປຸງຖານະ ຂອງລະບອບສັງຄົມນິຍົມ, ຄວາມສຳເລັດ ຂອງຂະບວນປົດປ່ອຍຊາດ ແລະ ການເພີ່ມທະວີ ອິດທິພົນ ຂອງກຳລັງກ້າວຫນ້າ ປະຊາທິປະໄຕ ຢູ່ໃນໂລກ.ສາເຫດດັ່ງກ່າວ ອອກມາຈາກລະດັບອັນຮ້າຍແຮງຂອງ:

ວິກິດການທົ່ວໄປ ຢູ່ໃນລະບົບທຶນນິຍົມ, ການຕອບໂຕ້ຢ່າງໜຶ່ງຕໍ່ວິກິດການ ອັນເລິກເຊິ່ງ ຢູ່ໃນຂົງເຂດເງິນຕາ, ການເງິນ ພະລັງງານ ແລະ ອື່ນໆ, ການຕໍ່ສູ້ ຂອງຊາວຜູ້ອອກແຮງ-ງານ ເພື່ອສິດທິ ແລະ ຜົນປະໂຫຍດຂອງພວກເຂົາ. ມັນຍັງແມ່ນຄວາມຫວາດກົວຢ້ານສູນເສຍຕຳແໜ່ງທົ່ວໄປໃຫຍ່ ຂອງວົງການຜູ້ນຳສະຫະລັດອາເມລິກາຢູ່ໃນໂລກທຶນນິຍົມ ເຊິ່ງສົ່ມໄກອຢ່າງຮຸນແຮງຍອນສະພາບອັນເຮີຮ້າຍ ຢູ່ໃນຄວາມ ຂັດແຍ່ງລະຫວ່າງພວກຈັກກະພັດເອງ, ຍອນການທັກລຽວ ແບບສຽງໄພ ແລະ ຄວາມຜິດພາດທາງດ້ານນະໂຍບາຍຕ່າງປະ-ເທດຂອງອາເມລິກາ.

ຢູ່ໃນສະພາບການດັ່ງກ່າວ ບັນດາປະເທດສັງຄົມນິຍົມພະຍາຍາມສຸດຂີດ ເພື່ອຂະຫຍາຍການຮ່ວມມືກັບບັນດາກຳລັງຮັກຫອມສັນຕິພາບ ອິດສະຫລະພາບ ແລະ ກ້າວໜ້າທັງຫລາຍ, ເພື່ອເຮັດໃຫ້ໂຄງການຂອງພວກຮຸກຮານລົ້ມແຫລວໄປ, ເພື່ອປົກປັກຮັກສາການຫລຸດຜ່ອນຄວາມເຄັ່ງຕຶງທີ່ໄດ້ເຮັດໃຫ້ມັນເລິກເຊິ່ງໜັກແໜ້ນນອນ, ເພື່ອຮັບປະກັນຄວາມອາດສາມາດສືບຕໍ່ການສ້າງສາແບບສັນຕິໃຫ້ແກ່ປະຊາຊາດຂອງພວກຕົນ ຢ່າງເຂັ້ມແຂງ.

ໂດຍສອດຄ່ອງກັບມະຕິຂອງກອງປະຊຸມໃຫຍ່ແຫ່ງ ພ.ກ.ສ.ຊ. ຄັ້ງທີ ໒໔-໒໕ ແລະ ຂອງພັກອ້າຍນ້ອງປະເທດ ສັງຄົມນິຍົມອື່ນໆ, ເພີ່ມຖອາໜ້າທີ່ບັບປຸງຄວາມສາມັກຄີ ການຮ່ວມມືນາໆຊະນິດລະຫວ່າງລັດ ສັງຄົມນິຍົມ ໜ້າທີ່ເພີ່ມທະວີ

ຄວາມພະຍາຍາມອັນແນ່ໃສ່ຮັກສາສັນຕິພາບຂອງພວກຕົນອອກເປັນຫີນສີລາຢູ່ໃນນະໂຍບາຍການເມືອງຕ່າງປະເທດ ຂອງພວກຕົນ. ຍອນຄວາມພະຍາຍາມອັນສົມທົບພ້ອມພຽງກັນ ບັນດາປະເທດສັງຄົມນິຍົມຈຶ່ງປະສົບກັບຄວາມສຳເລັດອັນ ໃຫຍ່-ຫລວງຢູ່ໃນການຕໍ່ສູ້ເພື່ອປັບປຸງບຳລຸງຖານະຂອງພວກຕົນ, ຢູ່ໃນການແກ້ໄຂພາລະກິດອັນສຳຄັນແຫ່ງນະໂຍບາຍຕ່າງປະ - ເທດ.

ໄຊຊະນະຂອງປະຊາຊົນຫວຽດນາມ ວິລະຊົນໄດ້ ຊີ້ດ ຫມາຍບອກເຖິງການຜັນແປປະຫວັດສາດຢ່າງໜຶ່ງ. ຍອນການຊ່ວຍເຫລືອ ແລະ ການສະໜັບສະໜູນຈາກສະຫະພາບ ໂຊວຽດ ລັດສັງຄົມນິຍົມອື່ນໆ ແລະ ທາງສຽງກ້າວໜ້າໃນໂລກ, ປະຊາຊົນຫວຽດນາມ ໄດ້ໂຕ້ຕອບກຳລັງຈັກກະພັດແລະ ປະຕິການໃນທັນທີ, ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ-ແລະ ເຕົ້າໂຮມເຂົ້າກັນ.

ຄວາມພະຍາຍາມພ້ອມພຽງກັນຂອງສະຫະພາບໂຊວຽດ ແລະ ລັດສັງຄົມນິຍົມອື່ນໆ ກ້າວໄປເຖິງຂັ້ນຍຸບເລີກການ ງັດງ້າງທາງການເມືອງ ແລະ ທາງການທູດຂອງສາທາລະນະ-ລັດປະຊາທິປະໄຕເຢຍລະມັນ ເຊິ່ງຈັດຕັ້ງຂຶ້ນໂດຍກຳລັງ ຈັກກະພັດ ໂດຍສົມບູນ ແລະຕະຫລອດໄປ. ສິ່ງດັ່ງກ່າວ ໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຖານະຂອງລະບອບສັງຄົມນິ-ຍົມໂລກຢູ່ໃນທະວີບເອີຣົບຢ່າງຫລວງຫລາຍ. ການສະໜັບ-ສະໜູນຂອງ ສ.ສ.ສ.ຊ ແລະປະເທດສັງຄົມນິຍົມອື່ນໆ ມີ

ສ່ວນຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ຖານະຂອງສາທາລະນະລັດກູຍບາ ເຊິ່ງເປັນລັດສັງຄົມນິຍົມລັດທຳອິດ ຢູ່ໃນພາກ ຕາເວັນຕົກ. ດ້ວຍເຫດນີ້ ຄວາມພະຍາຍາມທັງຫລາຍຂອງ ຈັກກະພັດອາເມລິກາທີ່ຈະແກ້ໄຂ " ບັນຫາກູຍບາ "ດ້ວຍກຳລັງອາວຸດ ດ້ວຍການງັດງ້າງທາງເສດຖະກິດ ແລະ ທາງ ການທູດຈຶ່ງລົ້ມແຫລວໄປ.

ໃນໄລຍະຕໍ່ສູ້ຮ່ວມກັນນີ້ ເພິ່ນເຫັນວ່າອິດທິພົນຂອງວົງຄະນາຍາດສັງຄົມນິຍົມ ຕໍ່ເຫດການຜັນປ່ຽນໃນໂລກໄດ້ເພີ່ມທະວີຂຶ້ນ, ເຫັນວ່າມັນເສີມຄວາມເຂັ້ມແຂງໃຫ້ແກ່ ຄວາມເປັນອັນຫນຶ່ງອັນດຽວກັນຂອງປະເທດສັງຄົມນິຍົມ ຄວາມສາມັກຄີແລະການສະຫນັບສະຫນູນຊຶ່ງກັນແລະກັນ, ມັນໄດ້ຂະຫຍາຍ ຂອບເຂດຄວາມອາດສາມາດໃນການປະຕິບັດນະໂຍບາຍຮ່ວມ ກັນ ແລະ ປະສານສົມທົບກັນຢູ່ໃນເວທີສາກົນ.

ສະຫະພາບໂຊວຽດ ກັບປະເທດສັງຄົມນິຍົມອື່ນໆ ຊອກຫາທາງແກ້ໄຂສະຖານະການຂັດແຍ່ງອັນຮ້າຍແຮງເຊິ່ງ ໂປໂລຂຶ້ນຢູ່ໃນຫລາຍໆຂົງເຂດເທິງພິພົບ ບົນພື້ນຖານຄວາມ ສະຫມັກໃຈຂອງປະຊາຊາດຢ່າງສູດກົກສູດປາຍ ແລະ ຊອກທາງລົບລ້າງການຂົ່ມຂູ່ທີ່ລະພາບການອັນນີ້ຍອງຕົວຢູ່ເທິງສັນຕິ - ພາບແຫ່ງໂລກ.

ດ້ວຍຄວາມອົດທົນພາກພຽນປະເທດສັງຄົມນິຍົມຊອກຊ່ອງທາງທັບມ້າງເຮືອນຮັງຂອງສົງຄາມ ແລະ ຊອກຫາທາງ ໃຫ້ໄດ້ຮັບລະບຽບການອັນສັນຕິຍືນຍາວຢູ່ໃນຕາເວັນອອກກາງ .

ພວກເຂົາດຳເນີນການເຄື່ອນໄຫວທາງດ້ານການເມືອງ ຢ່າງຫ້າວຫັນ ຢູ່ໃນຂົງເຂດທາງນີ້ທັງປົກປ້ອງຜົນປະໂຫຍດຂອງ ປະຊາຊາດອາຣັບ ຢູ່ໃນອົງການສະຫະປະຊາຊາດ ແລະ ຢູ່ນອກອົງການນີ້, ໃຫ້ການຊ່ວຍເຫລືອໂດຍກົງ ຕໍ່ປະເທດອາຣັບ ຜູ້ຮັບເຄາະຈາກການຮຸກຮານອິດສະຣາແອນ, ປະກອບສ່ວນ ເຂົ້າໃນການປັບປຸງພະລັງທາງດ້ານເສດຖະກິດ ແລະປ້ອງກັນຂອງພວກເຂົາ.

ປະເທດສັງຄົມນິຍົມຢືນຢູ່ຄຽງຂ້າງລັດອາຣັບທັງຄັດຄ້ານວິທີການຕົກລົງແບບກະເທີນ ໃນການແກ້ໄຂບັນຫາກຽວກັບຕາເວັນອອກກາງ. ພວກເຂົາອີງໃສ່ສາເຫດທີ່ວ່າ ການແກ້ໄຂບັນຫານີ້ຕ້ອງມີລັກສະນະທົ່ວໄປ ແລະ ລັກສະນະຄົບຖ້ວນ , ຕ້ອງຄຳນຶງເຖິງຜົນປະໂຫຍດຂອງຫມົດທຸກລັດ ແລະ ປະຊາຊາດໃນເຂດນັ້ນໆ, ຕ້ອງເຄົາລົບໃນສິດ ແຫ່ງການຄົງຕົວຢູ່ ແລະ ການຂະຫຍາຍຕົວຢ່າງເປັນເອກະລາດຂອງພວກເຂົາ. ແມ່ນຍ້ອນເຫດນີ້ເອງ ພວກເຂົາຈຶ່ງປະນາມຢ່າງເດັດດ່ຽວ - ການຕົກລົງຕ່າງຫາກລະຫວ່າງ ເອຢິບ ກັບອິດສະຣາແອນໃນປີ ໑໙໗໘ ອັນແມ່ນການຕົກລົງທີ່ບໍ່ຮັບຮູ້ສິດອັນຊອບທຳແລະຜົນປະໂຫຍດຂອງປະຊາຊາດໃນຕາເວັນອອກກາງ. ເມື່ອ ປະກາດສະຫນັບສະຫນູນການແກ້ໄຂບັນຫາລວມຢູ່ໃນຂົງເຂດນີ້ , ສະຫະພາບໂຊວຽດເນັ້ນຍ້ຳວ່າ ການແກ້ໄຂດັ່ງກ່າວ ຫມາຍເຖິງການຖອນຕົວຂອງອິດສະຣາແອນອອກຈາກດິນແດນອາຣັບທັງຫມົດ ເຊິ່ງຕົນຍຶດຄອງຢູ່ໃນປີ ໑໙໖໗, ຍິນຍອມໃຫ້ປະຊາ

ຊາດອາຣັບ ປາແລສຕິນ ມີຄວາມສາມາດສ້າງຕັ້ງ ແກ່ວເຂດ ແບ່ງຊາດລັດຂອງຕົນເອງຂຶ້ນ ແລະສະເຫນີຂໍຮັບປະກັນຄວາມ ປອດໄພສາກົນ ອັນເຂັ້ມງວດກວ່າຫມູ່ໃຫ້ແກ່ຫມົດທຸກລັດ ຢູ່ໃນ ຂົງເຂດນັ້ນຢ່າງບໍ່ມີການຍົກເວັ້ນ. ປະເທດອາຣັບ ທັງຫລາຍ ທີ່ປະຕິເສດນະໂຍບາຍແບບຍອມຈຳນົນຂອງພວກຜູ້ນຳ ກຸ່ງໄຄ ໂຣ ກໍາລັງຊຸກຍູ້ທາງຂະຫຍາຍການຮ່ວມມືອັນໃກ້ຊິດແລະແບບ ຕ່າງຝ່າຍຕ່າງໄດ້ຮັບຜົນດີກັບ ສ.ສ.ສ.ຊ ແລະກັບລັດສັງຄົມ ນິຍົມອື່ນໆ ທັງຖືວ່າປະເທດເຫລົ່ານີ້ ແມ່ນນັກຕໍ່ສູ້ຜູ້ມີຫລັກການ ເພື່ອສັນຕິພາບອັນທ່ຽງທຳຢູ່ຕາເວັນອອກກາງ.

ໃນຊຸມປີ ໗໐ ນັ້ນ ລັດຕ່າງໆໃນວົງຄະນາຍາດສັງຄົມນິ- ຍົມ ໄດ້ເສີມຂະຫຍາຍສາຍພົວພັນຂອງພວກຕົນກັບປະເທດ - ຫນຸ່ມນ້ອຍທີ່ຫາກໍປົດປ່ອຍໃຫມ່ ທັງຫລາຍ ແລະຮັດໃຫ້ ສາຍ ພົວພັນນັ້ນເລິກເຊິ່ງຂຶ້ນ.

ຄືດັ່ງຖະແຫລງການທີ່ລັດພາຄີສົນທິສັນຍາວາກໂຊວີໄດ້ຮັບ ຮອງເອົາໃນປີ ໑໙໗໘ ບັນທຶກໄວ້ນັ້ນແລ້ວ ບັນດາປະເທດສັງ ຄົມນິຍົມ " ຢັ້ງຢືນອີກເທື່ອຫນຶ່ງເຖິງຄວາມສາມັກຄີຂອງພວກ ຕົນ ກັບການຕໍ່ສູ້ຕ້ານລັດທິຈັກກະພັດນິຍົມ ລັດທິເກົ່າ .ເມືອງ ຂຶ້ນ ແລະ ລັດທິໃຫມ່ເມືອງຂຶ້ນແບບໃຫມ່, ຕ້ານກັບ ການ ຮອບຄອງແລະກົດຂີ່ທຸກຮູບທຸກແບບ. ພວກເຂົາເຄີຍໃຫ້ ການ ສະຫນັບສະຫນູນ ແລະ ຈະໃຫ້ຄວາມຊ່ວຍເຫລືອອີກຕໍ່ໄປ - ເລື້ອຍໆແກ່ບັນດາກໍາລັງທີ່ຕໍ່ສູ້ເພື່ອປົດປ່ອຍຊາດ, ແກ່ປະ ຊາ ຊາດໃນປະເທດປົດປ່ອຍແລ້ວ ທີ່ປົກປ້ອງເອກະລາດກັບເສລີ-

ພາບຂອງຕົນດ້ວຍການຕໍ່ສູ້ອັນລຳບາກຫຍຸ້ງຍາກ, ນັບທັງສິດທິໃນການເລືອກເອົາເສັ້ນທາງຂະຫຍາຍຕົວທາງດ້ານສັງຄົມ - ຢ່າງເປັນອິດສະຫລະ, ຮັບປະກັນ ບູລະນະພາບແຫ່ງດິນແດນປະເທດຊາດເອກະລາດ ແລະ ອະທິປະໄຕຂອງພວກເຂົາ . ອີກເທື່ອໜຶ່ງ ພວກເຂົາເນັ້ນຢ້ຳເຖິງຄວາມຕັດສິນອັນ ໜັກແໜ້ນຂອງປະເທດພວກຕົນ ທີ່ຈະຂະຫຍາຍການຮ່ວມມືຫລາຍຮູບຫລາຍແບບ ທັງການຊ່ວຍເຫລືອກັນແລະກັນ ແບບມິດສະຫາຍ ກັບ ບັນດາລັດໜຸ່ມນ້ອຍທີ່ຫັນທິດໄປຍັງລະບອບສັງຄົມນິຍົມ ຢູ່ໃນອະນາຄົດເຊັ່ນດຽວກັນ ". ( ນະໂຍບາຍຕ່າງປະເທດຂອງສະຫະພາບໂຊວຽດ ແລະ ການພົວພັນລະຫວາງ - ຊ້າດ. ໑໙໗໘, ເອກະສານທອນໂຮມ, ມົດສະກູ, ໑໙໗໙, ໜາ ໔໐໗ .)

ລັດສັງຄົມນິຍົມໃຫ້ຄວາມສຳຄັນຢ່າງຫລວງຫລາຍ ແກ່ການພັດທະນາສາຍພົວພັນກັບປະເທດປົດປ່ອຍແລ້ວຢູ່ໃນ ອາຟຣິກກາ. ສາຍພົວພັນເຫລົ່ານີ້ສ້າງຕັ້ງຢູ່ບົນຫລັກການ ຄວາມສາມັກຄີກັບປະຊາຊາດຜູ້ຕໍ່ສູ້ເພື່ອເອກະລາດແລະເສລີພາບ , ຄວາມກ້າວໜ້າແຫ່ງຊາດ ແລະ ສັງຄົມ " ບົນຫລັກ ການແຫ່ງຄວາມສະເໝີພາບອັນແທ້ຈິງ ແຫ່ງຄວາມເຄົາລົບໃນອະທິປະໄຕ ແລະ ບູລະນະພາບແຫ່ງແດນດິນ, ແຫ່ງການຮ່ວມມືແບບຕ່າງຝ່າຍຕ່າງມີຜົນ. ປະເທດສັງຄົມນິຍົມປະນາມ ຢ່າງເດັດດ່ຽວການແຊກແຊງທາງການທະຫານ ແລະ ການເມືອງເຂົ້າໃນກິດຈະການພາຍໃນຂອງລັດອາຟຣິກກາ, ສະໜັບສະ

ຫນູນກັບການລົບລ້າງບໍ່ເກີດແຫ່ງຄວາມເຄັ່ງຕຶງບົນທະວີບຢ່າງໄວວາ, ສະຫນັບສະຫນູນການແກ້ໄຂຂໍ້ຂັດແຍ່ງທີ່ມີຢູ່ລະຫວ່າງລັດອາຟຣິກກາບາງລັດ.

ເມື່ອສຳເລັດພາລະກິດບາງອັນຮ່ວມກັນນັ້ນ ສະຫະພາບ-ໂຊວຽດ ກັບປະເທດອາຍນອງອື່ນໆ ກໍ່ຕໍ່ສູ້ຢ່າງສຸດກົກສຸດປາຍ ເພື່ອລົບລ້າງການຈຳແນກເຊື້ອຊາດ ແລະ ສີຜິວ, ເພື່ອລົບລ້າງລະບອບຫົວເມືອງຂຶ້ນທີ່ຍັງມີຢູ່. ເມື່ອສາທາລະນະລັດປະຊາຊົນອັງໂກລາ ເລືອກເອົາເສັ້ນທາງຫັນໄປສູ່ລະບອບສັງຄົມນິຍົມນັ້ນ, ສາທາລະນະລັດດັ່ງກ່າວໄດ້ກາຍເປັນເປົ້າ ຫມາຍແຫ່ງການແຊກແຊງຢ່າງຫນຶ່ງ, ສະຫະພາບໂຊວຽດເປັນຜູ້ທຳອິດທີ່ໃຫ້ຄວາມຊ່ວຍເຫລືອແກ່ສາທາລະນະລັດນີ້. ຍອນຄວາມເດັດດ່ຽວຫນຽວຫນັ້ນຂອງຜູ້ຮັກຊາດອັງໂກລາ ແລະ ການສະຫນັບສະຫນູນຂອງ ສ.ສ.ສ.ຊ, ກູບາ ກັບປະເທດສັງຄົມນິຍົມອື່ນໆ, ຄວາມພະຍາຍາມທີ່ຈະຟື້ນຟູລະບອບໂທຫົວ ເມືອງຂຶ້ນແບບໃຫມ່ຢູ່ ອັງໂກລາ ກັບມາຢູ່ພາຍໃຕ້ການອຸ້ມຊູຂອງກຳລັງຈັກກະພັດສາກົນນັ້ນ ໄດ້ລົ້ມແຫລວໄປ. ປະເທດສັງຄົມນິ-ຍົມອາຍນອງໄດ້ໃຫ້ການຊ່ວຍເຫລືອອັນມີປະສິດທິຜົນແກ່ ເອທິໂອເປຍ ເຊິ່ງຕົກເປັນຜູ້ຮັບເຄາະຈາກການຮຸກຮານຢ່າງຫນຶ່ງ. ພວກເຂົາສະຫນັບສະຫນູນການຕໍ່ສູ້ຂອງປະຊາຊາດອາຟຣິກກາໃຫ້ຢ່າງສຸດກົກສຸດປາຍ, ສາມັກຄີກັບທຸກໆປະເທດທີ່ຕໍ່ສູ້ ເພື່ອການປົດປ່ອຍຊາດ ແລະ ຕ້ານກັບລັດທິຈັກກະພັດນິຍົມ.

ລັດສັງຄົມນິຍົມໃຊ້ຄວາມພະຍາຍາມອັນຍິ່ງໃຫຍ່ເພື່ອ ສະ

ຖາປະນາສັນຕິພາບອັນໜັ້ນຄົງກັບສາຍພົວພັນອັນດີ ລະຫວ່າງປະເທດໃກ້ຄຽງກັນ ຢູ່ໃນອາຊີ, ເສີມຂະຫຍາຍສາຍ ພົວພັນແບບຕ່າງຝ່າຍຕ່າງໄດ້ຮັບຜົນດີກັບຫລາຍໆປະເທດໃນທະວີບນັ້ນ. ການຂະຫຍາຍການຮ່ວມມືໂຊວຽດ-ອິນເດຍ ມີບົດບາດສຳຄັນຢູ່ໃນການປັບປຸງສາຍພົວພັນສາກົນ ຢູ່ໃນອາຊີ.ທັງສອງຝ່າຍເຄີຍເນັ້ນຢ້ຳຫລາຍຄັ້ງວ່າ ມິດຕະພາບໂຊວຽດ-ອິນເດຍນັ້ນໄດ້ສູ້ທົນຜ່ານພົ້ນກາລະເວລາທົດສອບແລ້ວ ມັນບໍ່ ປ່ຽນໄປຕາມສະພາບການຂອງໂລກ, ມັນກາຍເປັນປັດໃຈສຳຄັນຂອງສັນຕິພາບ ແລະ ສະຖຽນລະພາບຢູ່ອາຊີ ແລະ ຢູ່ໃນໂລກທັງໝົດ.

ສະຫະພາບໂຊວຽດ ແລະ ປະເທດສັງຄົມນິຍົມອື່ນໆ ຕັດສິນໃຈຢ່າງເດັດດ່ຽວສະໜັບສະໜູນປະຊາຊົນອັບຟະການິດສະຖານ ທີ່ປ້ອງກັນໝາກຜົນຂອງການປະຕິວັດຊາດປະຊາທິປະໄຕຂອງຕົນ. ໃນປີ ໑໙໗໙, ໂດຍອີງໃສ່ຄຳຮ້ອງຂໍຫລາຍຄັ້ງຫລາຍຄາວຂອງລັດຖະບານອັບຟະການິດສະຖານ, ສະຫະພາບໂຊວຽດໄດ້ສົ່ງກອງທະຫານຈຳນວນຈຳກັດໄປຍັງປະເທດນີ້, ພວກເຂົາໄດ້ຊ່ວຍຊາວອັບຟະການິດສະຖານ ຕໍ່ສູ້ຕ້ານກັບການແຊກແຊງຂອງຕ່າງດ້າວເຂົ້າໃນກິດຈະການພາຍໃນ ປະເທດຂອງພວກເຂົາ.

ລັດສັງຄົມນິຍົມ ສະໜັບສະໜູນຄວາມມຸ່ງມາດປາຖະ - ໜາອັນຍຸຕິທຳຂອງປະເທດປົດປ່ອຍໃໝ່ ທີ່ຢາກຊົມໃຊ້ຄວາມອຸດົມຮັ່ງມີຂອງຊາດຕົນຢ່າງເສລີ. ພວກເຂົາເຫັນດີນຳຂໍ້ຮຽກ

ຮ້ອງໃຫ້ສ້າງໂຄງຮ່າງສາຍພົວພັນເສດຖະກິດສາກົນແບບໃໝ່
ບົນພື້ນຖານອັນທ່ຽງທຳມີປະຊາທິປະໄຕທັງຖືສຳຄັນ ຜົນປະ
ໂຫຍດຂອງທຸກໆປະເທດ. ການພົວພັນເສດຖະກິດແບບໃໝ່ກໍ່
ຮ່າງຂຶ້ນລະຫວ່າງລັດສັງຄົມນິຍົມກັບປະເທດກຳລັງພັດທະນາ-
ທັງຫລາຍ. ສິ່ງດັ່ງກ່າວບັງຄັບໃຫ້ພວກຈັກກະພັດຈຳໄດ້ຜ່ອນ-
ຜັນກັບປະເທດກຳລັງພັດທະນາແລະອຳນວຍຄວາມສະດວກໃຫ້
ແກ່ຝ່າຍນີ້ທຳການຍັດປາກອັດສຽງພຶດຕິກຳກອບໂກຍຂອງພວກ
ບໍລິສັດຜູກຂາດ.

ບັນດາປະເທດສັງຄົມນິຍົມ ຕີລາຄາວ່າພາລະໜ້າທີ່ ສະ
ເພາະໜ້າອັນຮີບຮ້ອນຢ່າງໜຶ່ງຂອງພວກຕົນກໍແມ່ນຮັບປະກັນ
ສັນຕິພາບຄວາມປອດໄພ ແລະ ການຮ່ວມມືຢູ່ໃນເອີຣົບຄວາມ
ພະຍາຍາມພາກພຽນຂອງສະຫະພາບໂຊວຽດກັບລັດສັງຄົມນິ-
ຍົມອ້າຍນ້ອງອື່ນໆມີບົດບາດຕັດສິນຢູ່ໃນບາດລ້ຽວໄປຫາ ການ
ຫລຸດຜ່ອນຄວາມເຄັ່ງຕຶງກັບສັນຕິພາບ ບົນທະວີບນີ້. ກອງປະ
ຊຸມກ່ຽວກັບຄວາມປອດໄພ ແລະ ການຮ່ວມມືຢູ່ເອີຣົບຫວ່າງປີ
໑໙໗໕ ທີ່ເຮັນຊິນກິ ນັ້ນສຳເລັດລົງຢ່າງມີພົນເຕັມປ່ຽມ. ລັດ
ໃນເອີຣົບ ໓໓ ລັດພ້ອມກັບສະຫະລັດ ແລະ ການາດາ ກໍມີ
ສ່ວນຮ່ວມຢູ່ໃນວຽກງານຂອງກອງປະຊຸມນີ້. ເອກະສານ ສຸດ
ທ້າຍເຊິ່ງອົງປະຊຸມທຸກຄົນຮັບຮອງເອົານັ້ນປະກາດເຖິງ ຫລັກ
ການແຫ່ງການຢູ່ຮ່ວມກັນແບບສັນຕິ, ການພົວພັນລະຫວ່າງປະ
ເທດພວກນີ້ຕ້ອງສ້າງຕັ້ງຂຶ້ນບົນຫລັກການເຫລົ່ານີ້, ເອກະ -
ສານດັ່ງກ່າວຍັງວາດຮູບພາບຕົວຈິງຂອງການຮ່ວມມືຢູ່ໃນ ອົງ

ເຂດເສດຖະກິດວິທະຍາສາດ ເຕັກນິກ ວັດທະນະທຳແລະການປ້ອງກັນສິ່ງແວດລ້ອມ. ໂດຍອີງໃສ່ຂໍ້ຕົກລົງຢູ່ເຮັນຊິນກີ, ສະຫະພາບໂຊວຽດ ກັບປະເທດສັງຄົມນິຍົມອື່ນໆ ກໍປະກາດ ສະໜັບສະໜູນການພັດທະນາສາຍພົວພັນແບບເຂົ້າອົກເຂົ້າ ໃຈກັນ ແລະ ການຮ່ວມມື ແບບສູດຈະລິດຢູ່ທົ່ວທະວີບນີ້.

ສາຍພົວພັນແບບບ້ານພີ່ເມືອງນ້ອງທີ່ດີຕໍ່ກັນລະຫວ່າງ ສ.ສ.ສ.ຊ ກັບປະເທດຝະລັ່ງ ແມ່ນພາກສ່ວນອັນສຳຄັນ ສ່ວນໜຶ່ງຂອງການຮ່ວມມືຢູ່ເອີຣົບ. ຫລັງຈາກການພົບປະສຸດຍອດຫລາຍຄັ້ງແລ້ວ ເພິ່ນໄດ້ເຊັນເອກະສານພື້ນຖານລະຫວ່າງໂຊວຽດ-ຝະລັ່ງ ຫລາຍສະບັບເຊັ່ນວ່າ ອະນຸສັນຍາວ່າດ້ວຍການເປິກສາຫາລືທາງການເມືອງ ( ໑໙໗໐ ) ຫລັກການ ວ່າດ້ວຍການຮ່ວມມືລະຫວ່າງ ສ.ສ.ສ.ຊ. ກັບຝະລັ່ງ(໑໙໗໑), ໂຄງການພັດທະນາຕໍ່ເນື່ອງການຮ່ວມມືລະຫວ່າງ ສ.ສ.ສ.ຊ ກັບຝະລັ່ງອັນເຫັນພ້ອມກັບການຫລຸດຜ່ອນຄວາມເຄັ່ງຕຶງ ກັບການສ້າງສາສັນຕິພາບ ( ໑໙໗໙ ). ເອກະສານທັງໝົດນີ້ເຮັດໃຫ້ຄວາມອາດສາມາດຮ່ວມມືປະສານງານລະຫວ່າງສອງປະເທດເພີ່ມທະວີຂຶ້ນຢ່າງຫລວງຫລາຍ. ເພິ່ນເຫັນວ່າມີການຂະຫຍາຍຕົວຢູ່ໃນສາຍພົວພັນເສດຖະກິດຂອງພວກເຂົາ ແລະການພົວພັນຕິດຕໍ່ທາງດ້ານການເມືອງກໍກວ້າງຂວາງຂຶ້ນ.

ສາຍພົວພັນລະຫວ່າງ ສ.ສ.ສ.ຊ ກັບ ສ.ສ. ເຢຍລະມັນ ກໍແມ່ນອົງປະກອບສຳຄັນອັນໜຶ່ງຂອງສະຖຽນລະພາບ - ແລະ ຂອງການຫລຸດຜ່ອນຄວາມເຄັ່ງຕຶງຢູ່ທົ່ວທະວີບເອີຣົບ .

ສົນທິສັນຍາເຊັນກັນລະຫວ່າງສະຫະພາບໂຊວຽດ ແລະສາທາລະນະລັດສະຫະພັນເຢຍລະມັນ ໃນເດືອນສິງຫາ ໑໙໗໐ ນັ້ນ ຂີດໝາຍບອກບາດລ້ຽວໜຶ່ງຢູ່ໃນການພັດທະນາສາຍພົວພັນ-ລະຫວ່າງປະເທດທັງສອງ. ໄດ້ມີການຕົກລົງຫລາຍອັນກ່ຽວ-ກັບການຮ່ວມມືຢູ່ໃນຫລາຍໆຂົງເຂດ. ໃນປີ ໑໙໗໗ ຢູ່ໃນກຸ່ມປະເທດນາຍທຶນ ສ.ສ.ຢ, ໄດ້ກາວຂຶ້ນມາເປັນອັນດັບໜຶ່ງ-ໃນເລື່ອງການຄ້າກັບສະຫະພາບໂຊວຽດ. ມີການຄາດໝາຍວ່າຈະຂະຫຍາຍສາຍພົວພັນເສດຖະກິດລະຫວ່າງປະເທດ ທັງສອງຢ່າງກວ້າງຂວາງຢູ່ໃນແລວທາງອະນາຄົດອັນຍາວນານຄື ເຖິງທ້າຍສະຕະວັດນີ້. ພ້ອມດຽວກັນ ເພິ່ນກໍເຫັນວ່າສາຍພົວພັນເສດຖະກິດລະຫວ່າງ ສ.ສ.ຢ. ກັບປະເທດສັງຄົມ ນິຍົມອື່ນໆ ເລິກເຊິ່ງໜັກແໜ້ນຂຶ້ນ.

ຂະນະທີ່ສະຫະພາບໂຊວຽດປະກາດສະໜັບສະໜູນການເຄົາລົບຂໍ້ຕົກລົງໃນຊຸມປີ ໗໐ ຢ່າງເຂັ້ມງວດນັ້ນ ສະຫະພາບໂຊວຽດເນັ້ນຢ້ຳທຸກໆຄັ້ງວ່າ ບາງເທື່ອກຸ່ມບອນກໍພະຍາຍາມ-ຫລີກເວັ້ນຂໍ້ຕົກລົງສີ່ຝ່າຍກ່ຽວກັບແບກແລງ-ຕາເວັນຕົກ ທັງບໍ່ຖືສຳຄັນບັນຫາຊຸດໜຶ່ງກ່ຽວກັບອະທິປະໄຕຂອງສາທາລະນະ-ລັດປະຊາທິປະໄຕເຢຍລະມັນ.

ໃນຊຸມປີ ໗໐ ປະເທດສັງຄົມນິຍົມໄດ້ປະສົບກັບຜົນ ສຳເລັດສຳຄັນຫລາຍອັນຢູ່ໃນການພັດທະນາສາຍພົວພັນກັບລັດເອີຣົບເຊັ່ນອັງກິດ, ອີຕາລີ, ແຟງລັງ, ອອດສະເຕຣຍ, ຊູແອດ, ແບນຊິກ, ລຸກຊຳບູກ, ດານມາກ ແລະອື່ນໆ.

ຕົວຢ່າງດັ່ງທີ່ຜູ້ນຳບັນດາປະເທດເຫຼົ່ານີ້ຮັບຮູ້ມັນແລ້ວວ່າ ອອດສເຕຣຍ ເຊິ່ງແມ່ນປະເທດເປັນກາງໄດ້ກ້າວເຖິງ ການພົວພັນແບບປະເທດໃກ້ຄຽງທີ່ດີ ແລະ ແບບຮ່ວມມືກັນກັບ ທຸກລັດສັງຄົມນິຍົມໃນເອີຣົບ, ສາຍພົວພັນດັ່ງກ່າວສະແດງ ອອກດ້ວຍຄວາມເຂັ້ມຂຸ້ນລະດັບສູງ. ຫຼັງຈາກປີ ໑໙໕໕ ຂະນະທີ່ມີການເຊັນສົນທິສັນຍາແຫ່ງລັດກ່ຽວກັບການຟື້ນຟູປະເທດອອດສະເຕຣຍ ເອກະລາດແລະປະຊາທິປະໄຕນັ້ນ ປະເທດນີ້ກໍໄດ້ຕົກລົງເຊັນສົນທິສັນຍາ ແລະ ຂໍ້ສັນຍາຫຼາຍກວ່າ ໔໓໐ ຂໍ້ ໃນເລື່ອງເສດຖະກິດ ວິທະຍາສາດວັດທະນະທຳ ແລະອື່ນ ໆ ອີກ ກັບບັນດາປະເທດສັງຄົມນິຍົມ.

ສາຍພົວພັນ ໂຊວຽດ-ອາເມລິກາ ມີຄວາມສຳຄັນ ເປັນອັນດັບໜຶ່ງເພື່ອເຮັດໃຫ້ການຂົ່ມຂູ່ວ່າຈະເກີດສົງຄາມໂລກຄັ້ງໃໝ່ ອ່ອນເພຍລົງ, ເພື່ອສົ່ງເສີມການຫຼຸດຜ່ອນຄວາມເຄັ່ງຕຶງ. ໃນຕົ້ນຊຸມປີ ໗໐ ນັ້ນ ການຂະຫຍາຍສາຍພົວພັນ ໂຊວຽດ-ອາເມລິກາໄດ້ຫັນໄປຍັງທິດທາງອັນຈົບງາມແລ້ວ. ທັງສອງຝ່າຍໄດ້ຂະຫຍາຍຄວາມໃກ້ຊິດຕິດແທດຂອງຕົນອອກຢູ່ໃນຂົງເຂດຕ່າງໆຢ່າງເຫັນໄດ້ຄັກ. ສ.ສ.ສ.ຊ. ກັບສະຫະລັດໄດ້ເຊັນສັນຍາກ່ຽວກັບການຮ່ວມມືກັນຫຼາຍກວ່າ ໕໐ ຂໍ້.ແຕ່ປານນັ້ນ ຢູ່ສະຫະລັດອາເມລິກາກໍຍັງມີແຮງອິດທິພົນຢ່າງໜຶ່ງຈ່ອງດຶງການຮ່ວມມືແບບປົກກະຕິລະຫວ່າງສອງປະເທດນີ້ໄວ້. ແຮງອິດທິພົນດັ່ງກ່າວແຜ່ເທບນິຍາຍ "ການຂົ່ມຂູ່ຂອງໂຊວຽດ" ພະຍາຍາມສອດແຊກເຂົ້າໃນກິດຈະການພາຍໃນຂອງ ສະຫະ

ພາບໂຊວຽດ. ແນ່ນອນວ່າສິ່ງດັ່ງກ່າວຕ້ອງເຮັດໃຫ້ການ ຂະຫຍາຍສາຍພົວພັນໂຊວຽດ-ອາເມລິກາສັບສົນຂຶ້ນ.

ການຫລຸດຜ່ອນຄວາມເຄັ່ງຕຶງກໍ່ເປັນສາເຫດໃຫ້ສາຍ ພົວພັນເສດຖະກິດ ແລະ ພານິດລະຫວ່າງປະເທດສັງຄົມນິຍົມກັບທຶນນິຍົມທະວີສູງຂຶ້ນຢ່າງວ່ອງໄວ. ຢູ່ໃນລະຫວ່າງປີ ໑໙໗໐-ຫາ ໑໙໗໕ ນັ້ນ ການແລກປ່ຽນທາງພານິດຂອງ ສ.ສ.ສ.ຊ ກັບບັນດາປະເທດ ທຶນນິຍົມໄດ້ສູງຂຶ້ນຈາກ ໔,໗ ຕື້ຣູບ ມາເປັນ ໑໕,໘ ຕື້ຣູບ, ສ່ວນວ່າການແລກປ່ຽນຂອງປະເທດພາຄີ ສ.ຊ.ສ ກັບ ບັນດາປະເທດທຶນນິຍົມກໍ່ຫລາຍຂຶ້ນຈາກ ໑໖ ຕື້ຣູບ ເປັນ ໔໔ ຕື້ຣູບ. ໃນທ້າຍຊຸມປີ ໗໐ ນັ້ນ ເຄື່ອງ ຈັກກົນ ແລະເຄື່ອງປະກອບເກືອບຮອດ ໑/໔ ທີ່ສົ່ງອອກຈາກສະຫະພາບໂຊວຽດນັ້ນ ສ່ວນຫລວງຫລາຍແລ້ວ ແມ່ນຕົກໄປຫາປະເທດທຶນນິຍົມອຸດສາຫະກຳຈະເລີນ.

ປະເທດສັງຄົມນິຍົມຖືລາຄາວ່າ ການຂະຫຍາຍຂອບເຂດການຫລຸດຜ່ອນຄວາມເຄັ່ງຕຶງທາງດ້ານການທະຫານນັ້ນ ແມ່ນພາລະກິດອັນສຳຄັນຢູ່ໃນຂົງເຂດການປັບປຸງບຳລຸງສັນຕິ ພາບແລະຄວາມປອດໄພຢູ່ເອີຣົບ. ພວກເຂົາພາກພຽນຊອກຫາວິທີຕົກລົງຮ່ວມກັບປະເທດຕາເວັນຕົກກ່ຽວກັບມາດຕາການຕົວຈິງໂດຍຫວັງຢາກໃຫ້ລະດັບການປະທະກັນທາງການທະຫານຫລຸດຕ່ຳລົງ.

ໃນປີ ໑໙໗໖ ປະເທດ ພາຄີສົນທິສັນຍາວາກໂຊວີໄດ້ສະເໜີ ໃຫ້ລັດຄົງປະກອບ ຂອງກອງປະຊຸມເອີຣົບ ຕົກລົງສົນ

ຍາວ່າຈະບໍ່ໃຊ້ອາວຸດນິວເຄລຍຕ້ານກັນເປັນຜູ້ທຳອິດ. ສະຫະພາບໂຊວຽດໄດ້ສະເໜີບໍ່ໃຫ້ປະເທດ ໃດປະເທດໜຶ່ງລົງ ມືໃຊ້ອາວຸດນິວເຄລຍ ທັງອາວຸດທຳລະລາຍອື່ນໆເປັນຜູ້ທຳອິດ.

ຜົນສຳເລັດຂອງການຫລຸດຜ່ອນຄວາມເຄັ່ງຕຶງສ້າງເງື່ອນໄຂອັນອຳນວຍໃຫ້ແກ່ການໄປເປັນຂັ້ນໆຢູ່ໃນເລື່ອງຍຸຕິ ການຊ່ວງແຂ່ງປະກອບອາວຸດ ແລະ ການລົບລ້າງໄພຂົ່ມຂູ່ຂອງສົງຄາມນິວເຄລຍ. ກອງປະຊຸມໃຫຍ່ຄັ້ງທີ ໒໗ ຂອງ ພ.ກ.ສ.ຊ. ໄດ້ເນັ້ນຢ້ຳວ່າຫູກອັນນີ້ ພາລະກິດແຫ່ງການຕໍ່ສູ້ເພື່ອ ຍຸຕິການຊ່ວງແຂ່ງປະກອບອາວຸດນັ້ນກາຍເປັນບັນຫາອັນແຫລມຄົມຍິ່ງກວ່າຄັ້ງໃດໆໝົດ. ຈັກກະພັດນິຍົມສືບຕໍ່ກະກຽມວັດຖຸປະກອບສົງຄາມຢ່າງເລັ່ງຟ້າວເຮັ່ງຮ້ອນ. ການຊ່ວງແຂ່ງປະກອບອາວຸດກ້າວເຖິງລະດັບໃຫຍ່ໂຕແບບບໍ່ເຄີຍມີມາກ່ອນ. ມັນກິນເງິນຂອງມະນຸດຊາດໄປຕັ້ງຫລາຍຮ້ອຍຕື້ໂດລາ ທັງໆທີ່ມັນຈຳເປັນສຳລັບການປະຕິບັດພາລະກິດສ້າງສັນໃຫ້ສຳເລັດຜົນຫຼາຍກວ່າ. ມີການສະສົມຫອມໂຮມອາວຸດຢ່າງມະຫາສານແລະອາວຸດເຫລົ່ານັ້ນກໍ່ນັບມື້ນັບດອນທັນສະໄໝຂຶ້ນຢ່າງບໍ່ຢຸດຢັ້ງ. ເພີ່ມສາງອາວຸດປະເພດທີ່ມີຄຸນນະພາບແບບໃໝ່, ການບັນຊາ - ກວດກາອາວຸດເຫລົ່ານີ້ໝາຍຄວາມວ່າການຈຳກັດມັນຮ່ວມກັນອາດຈະແມ່ນເລື່ອງຫຍຸ້ງຍາກສັບສົນຫຼືວ່າບໍ່ອາດເປັນໄປໄດ້ຊ້ຳ.

ເສັ້ນທາງຂອງລັດສັງຄົມນິຍົມກ່ຽວກັບບັນຫາການ ຈຳກັດຂອບເຂດຂອງອາວຸດນັ້ນປະສົບກັບການຕ້ານຢັນອັນດຸດັນຂອງພວກຈັກກະພັດ. ປະເທດສະມາຊິກນາໂຕ ມີທ່າທີເມີນເສີຍຕໍ່

ຂໍ້ສະເໜີອັນມີພົນດີຂອງສະຫະພາບໂຊວຽດກ່ຽວກັບການ ຕົກລົງສົນທິສັນຍາໂລກໃນການບໍ່ນຳໃຊ້ກຳລັງເຂົ້າໃນການພົວພັນສາກົນ, ແລະກ່ຽວກັບສົນທິສັນຍາຂອງພວກປະເທດທີ່ລົງນາມ-ໃນເອກະສານສຸດທ້າຍຂອງກອງປະຊຸມເອີຣົບວ່າດ້ວຍການ ບໍ່ນຳໃຊ້ອາວຸດນິວເຄຼຍ ສູ້ຣົບຕ້ານກັນເປັນຜູ້ທຳອິດ ແລະອື່ນໆອີກ. ການປະຊຸມກຸ່ມນາໂຕໃນເດືອນພຶດສະພາປີ ໑໙໗໘ ຢູ່ວໍຊິງຕັນ ໄດ້ຮັບຮອງເອົາໂຄງການເພີ່ມເຕີມອັນໜຶ່ງກ່ຽວ ກັບການຊ່ວງເສັງປະກອບອາວຸດ, ປະທານາທິບໍດີສະຫະລັດ ຈິມມີກາກເຕີ ໄດ້ຕັດສິນສົ່ງເສີມການຜະລິດ "ທາດສານ ສະເພາະ " ສຳລັບລະເບີດເນີຕຼອນ .

ນະໂຍບາຍຂອງບັນດາປະເທດຕາເວັນຕົກກ່ຽວກັບ ການຫຼຸດຜ່ອນອາວຸດແລະການຍຸຕິການຊ່ວງເສັງປະກອບອາວຸດນັ້ນສະແດງອອກຍິ່ງເມື່ອມີການເຈລະຈາໂຊວຽດ-ອາເມລິກາໃນບັນຫາວ່າດ້ວຍການຈຳກັດຂອບເຂດອາວຸດຍຸດທະສາດບຸກໂຈມ ຕີ ແລະຢູ່ໃນການເຈລະຈາທີ່ວຽງວຽນ ກ່ຽວກັບການຫຼຸດຜ່ອນອາວຸດຍຸດທະພັນແລະກອງທັບຢູ່ເອີຣົບພາກກາງ. ໃນປີ ໑໙໗໒ ເພິ່ນສາມາດຕົກລົງສັນຍາກັນໄດ້ໃນຂໍ້ທີ່ໜຶ່ງຄືກ່ຽວກັບການຈຳກັດຂອບເຂດອາວຸດຍຸດທະສາດ. ແມ່ນ ໃນສະໄໝດຽວກັນນັ້ນເອງທີ່ເພິ່ນສາມາດຕົກລົງກັນໄດ້ໃນຂັ້ນຮາກຖານກ່ຽວກັບການເຊັນສັນຍາອີກຂໍ້ໃໝ່. ຢ່າງໃດກໍ່ຕາມ ຕໍ່ມາອົງການປົກ ຄອງຂອງອາເມລິກາກໍໄດ້ເລືອກເອົາທາງຖ່ວງດຶງແກ່ຍາວການເຈລະຈາ, ພະຍາຍາມເຮັດໃຫ້ການເຈລະຈາດັ່ງກ່າວ ຂັ້ນກັບ

ການໃຫ້ສະຫະພາບໂຊວຽດເປັນຝ່າຍປະຕິບັດຕາມຂໍ້ຮຽກຮ້ອງທີ່ບໍ່ມີຫຍັງພົວພັນກັບບັນຫາທີ່ພິຈາລະນາຢູ່ເລີຍ.

ແຕ່ວ່າການປົກຄອງອາເມລິກາໄດ້ເລື່ອນເວລາການ ບັງຄັບໃຊ້ຂໍ້ຕົກລົງທັງກ່າວເຂົ້າສູ່ການລົງມືປະຕິບັດໂຄງການສ້າງສາອາວຸດຍຸດທະສາດໂດຍສວຍໃຊ້ຂໍ້ອ້າງອີງທຸກຮູບທຸກແບບ.

ປະເທດສັງຄົມນິຍົມຢາກແກ້ໄຂບັນຫາວ່າດ້ວຍການປົດອາວຸດບົນພື້ນຖານກວ້າງຂວາງອັນໜຶ່ງຄືການຮັບຮອງຄຳໝັ້ນສັນຍາລະຫວ່າງຊາດ.

ຍ້ອນຄວາມພະຍາຍາມອັນບໍ່ຢຸດເຊົາເປັນຂອງສະຫະພາບໂຊວຽດ, ຂອງປະເທດສັງຄົມນິຍົມອື່ນໆ, ຍ້ອນພຶດຕິກຳ ອັນກວ້າງຂວາງຂອງບັນດາກຳລັງຮັກຫອມສັນຕິພາບຢູ່ໃນ ເລື່ອງລະວັງ ການແຂ່ງຂັນປະກອບອາວຸດນັ້ນເພີ່ມກໍສາມາດກ້າວ ມາເຖິງຂັ້ນໄດ້ຮັບໝາກຜົນອັນໜ້າພໍໃຈ. ຂໍ້ກຳນົດກ່ຽວກັບການເກືອດຫ້າມອາວຸດເຊື້ອພະຍາດ ແລະ ກ່ຽວກັບການເກືອດ - ຫ້າມທົດລອງໃຊ້ຢູ່ບໍລິເວນທຳມະຊາດເພື່ອຮັບໃຊ້ການທະຫານເລີ່ມມີໝາກມີຜົນຂຶ້ນ. ໄດ້ມີການລົງມືປະຕິບັດມາດຕະ ການຕົວຈິງຫລາຍອັນກ່ຽວກັບການບໍ່ຄູນທະວີອາວຸດນິວເຄລຍ. ການສ້າງເຂດປອດອາວຸດນິວເຄລຍ ເຂດທຳອິດຢູ່ໃນໂລກເຊິ່ງກຳລັງຂະຫຍາຍກວ້າງອອກຢູ່ໃນຫລາຍໆປະເທດທາງອາເມລິກາລາຕິນນັ້ນກໍມີສ່ວນຊ່ວຍໃນເລື່ອງນີ້ຄືກັນ. ສະມັດຊາໃຫຍ່ ສະຫະປະຊາຊາດໄດ້ຮັບຮອງເອົາຂໍ້ສະເໜີຂອງໂຊວຽດກ່ຽວກັບຂໍ້ຮັບປະກັນຄວາມປອດໄພຂອງລັດທີ່ບໍ່ມີອາວຸດນິວເຄລຍ, ກ່ຽວ

ກັບການບໍ່ຕິດຕັ້ງອາວຸດນິວເຄລຍ ບົນດິນແດນປະເທດທີ່ບໍ່ມີອາ ວຸດດັ່ງກ່າວ ແລະ ສະມັດຊາໃຫຍ່ຍັງໄດ້ຮຽກຮ້ອງໃຫ້ມະຫາ-ອຳນາດນິວເຄລຍລົງມືເຈລະຈາກັນກ່ຽວການຍຸຕິການສ້າງອາ ວຸດນິວເຄລຍທຸກຢ່າງ ແລະ ກ່ຽວກັບການຫລຸດຜ່ອນປະລິມານ ໃນສາງມຽນຂອງມັນ.

ການເຄື່ອນໄຫວຂອງ ພ.ກ.ສ.ຊ ແລະ ຂອງລັດ ໂຊ ວຽດ ທາງດ້ານນະໂຍບາຍຕ່າງປະເທດທີ່ເດີນໄປຄຽງຄູ່ ກັບ ຄວາມພະຍາຍາມຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງກັບ ຂອງລັດທີ່ປົດປ່ອຍແລ້ວທັງຫລາຍນັ້ນມີສ່ວນຊ່ວຍໃນການ ຂະ ຫຍາຍທ່າອຽງອັນໃຫ້ຜົນດີຢູ່ໃນຊີວິດສາກົນຍຸກປະຈຸບັນ ທັງກີດ ຂວາງການກະທຳແບບຮຸກຮານຂອງພວກຈັກກະພັດທີ່ແນໃສ່ - ຕ້ານສັນຕິພາບ ເສລີພາບແລະເອກະລາດຂອງຊາດຕ່າງໆ.

## ລະບົບສັງຄົມນິຍົມແຫ່ງໂລກ ກັບຂະບວນການປົດປ່ອຍ

ມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ແລະ ການກໍ່ຕັ້ງ-ລັດສັງຄົມນິຍົມ ລັດທຳອິດໃນໂລກ ກໍ່ໃຫ້ເກີດການ ຜັນປ່ຽນຢ່າງຮາກຖານຢູ່ໃນເງື່ອນໄຂຂອງການຕໍ່ສູ້ເພື່ອຄວາມ ກ້າວໜ້າທາງສັງຄົມ ຢູ່ໃນທຸກໆປະເທດ. ການຕໍ່ສູ້ປົດປ່ອຍມີບ່ອນອີງອັນແທ້ຈິງເຊິ່ງຕໍ່ມາຄ່ອຍໆປ່ຽນຮູບຮ່າງມາເປັນບໍ່ ກຳເນີດແຫ່ງຄວາມສາມັກຄີກັບທຸກໆກຳລັງກ້າວໜ້າປະຊາທິປະໄຕ - ແລະ ປະຕິວັດ.

ພ້ອມກັບການກໍ່ຕັ້ງວົງຄະນາຍາດສັງຄົມນິຍົມນີ້ ເພິ່ນແນມເຫັນອິດທິພົນອັນນັບມື້ນັບຫລາຍຂື້ນຂອງລະບອບສັງຄົມໃໝ່ ຕໍ່ເຫດການຜັນປ່ຽນໃນໂລກເພື່ອຜົນປະໂຫຍດຂອງພາລະກິດສັນຕິພາບປະຊາທິປະໄຕເອກະລາດແຫ່ງຊາດ ແລະລະບອບສັງ-ຄົມນິຍົມ. ຄວາມສຳເລັດຂອງການສະຖາປະນາລະບອບ ສັງຄົມນິຍົມກັບລະບອບກອມມູນິດ, ການບັບປຸງແລະຄວາມ ຈະເລີນຮຸ່ງເຮືອງທາງດ້ານເສດຖະກິດຂອງປະເທດອ້າຍນ້ອງ ,

ການເພີ່ມທະວີອິດທິກຳລັງຢ່າງຫລວງຫລາຍຂອງລະບົບສັງຄົມນິຍົມໂລກ ທັງໝົດນັ້ນມີສ່ວນຊ່ວຍສ້າງ ເງື່ອນໄຂການເມືອງພາຍນອກອັນໃຫ້ທ່າດີແກ່ການຕໍ່ສູ້ຂອງປະຊາຊາດໃນໂລກເພື່ອຄວາມກ້າວໜ້າທາງສັງຄົມ ແລະ ຄວາມກ້າວໜ້າຂອງ ຂະບວນປົດປ່ອຍທຸກຂະບວນ.

ເມື່ອນັກມາກຊິດ-ເລນິນິດ ເນັ້ນຍ້ຳ ເຖິງຖານະພິເສດຂອງລະບົບສັງຄົມນິຍົມແຫ່ງໂລກຢູ່ໃນບາດກ້າວເດີນຂອງການປະຕິວັດໂລກນັ້ນແມ່ນພວກເຂົາກຳລັງອີງໃສ່ບົດບາດອັນມີເປົ້າໝາຍສາກົນ ແລະ ປະຫວັດສາດເຊິ່ງລະບົບດັ່ງກ່າວ ຖືວ່າແມ່ນຜົນສຳເລັດອັນສຳຄັນກວ່າໝູ່ໝົດ ທີ່ຊົນຊັ້ນກຳມະກອນຍາດແຍ່ງມາໄດ້ ສົມທົບເຂົ້າກັນດ້ວຍຫລັກການສາກົນນິຍົມ, ຖືວ່າໃນຕົວຈິງມັນແມ່ນກຳລັງແຮງຕ້ານຈັກກະພັດແລະຕ້ານລັດທິທຶນນິຍົມອັນຕົ້ນຕໍ. ແມ່ນຢູ່ໃນຕອງໂສ້ຂອງບາດກ້າວເດີນແຫ່ງການປະຕິວັດໂລກຕອງນີ້ເອງ ທີ່ຜົນສຳເລັດອັນຕົ້ນຕໍທາງດ້ານເສດຖະກິດ, ສັງຄົມ-ການເມືອງແລະແນວຄິດຂອງຊົນຊັ້ນກຳມະກອນສາກົນຜູ້ໃຫ້ພື້ນຖານອັນເຂັ້ມແຂງແກ່ການພັນຂະຫຍາຍຂະບວນປະຕິວັດ ແລະ ການປົດປ່ອຍທັງມວນຈູມແໜ້ນກັນ ຢູ່ໃນທຸກວັນນີ້, ແມ່ນຢູ່ນີ້ເອງທີ່ບໍ່ຂອງເຫງົ້າພະລັງຕົ້ນຕໍຂອງມັນຈູມແໜ້ນກັນຢູ່.

ປະເທດສັງຄົມນິຍົມສົ່ງການຊ່ວຍເຫລືອຫລາຍຮູບ ຫລາຍແບບແກ່ກຳລັງປະຕິວັດ ແລະ ກຳລັງຕ້ານຈັກກະພັດ.ລະບອບສັງຄົມນິຍົມທີ່ກຳລັງຄົງຕົວຢູ່ນີ້ເປັນແຫລ່ງເກີດແຫ່ງສຳຄັນຂອງ

ຄວາມຟົດຟື້ນ ແລະການຊຸ້ມຊູທາງດ້ານການເມືອງສຳລັບການປະຕິວັດປົດປ່ອຍທຸກໆອັນ. ແມ່ນຢູ່ວ່າ ການດຳລົງຕົວຢູ່ ຂອງມັນບໍ່ຮັບປະກັນໄຊຊະນະການປະຕິວັດເຫຼົ່ານີ້ ແຕ່ຫາກ ອຳນວຍຄວາມສະດວກໃຫ້ແກ່ການບັບປຸງບຳລຸງມັນໃຫ້ກ້າວໄປ ຂ້າງໜ້າສູ່ລະບອບສັງຄົມນິຍົມ ແລະ ອັນນີ້ແມ່ນແຕ່ຢູ່ໃນປະເທດບໍ່ສຳຄັນປານໃດທີ່ຫາກໍຫລຸດພົ້ນອອກຈາກໂສ້ລ່າມຂອງລະບົບຈັກກະພັດນິຍົມ.

ເລນິນອີງໃສ່ສິ່ງທີ່ວ່າ ການປະຕິວັດອັນມີໄຊນັ້ນ ເມື່ອດຳເນີນພາລະກິດກໍ່ຕັ້ງລະບອບສັງຄົມນິຍົມໃນເວລາດຽວກັນເພີ່ມຍັງຕ້ອງຊ່ວຍເຫຼືອກຳລັງປະຕິວັດຢູ່ໃນປະເທດອື່ນໆ ດ້ວຍວິທີທາງແບບຕ່າງໆ. ນອກນີ້ເລນິນ ຍັງຄັດຄ້ານຢ່າງເດັດ ດ່ຽວທຸກໆຄົນທີ່ຕີລາຄາວ່າສາມາດບັງຄັບ " ເລັ່ງລັດ " ການປະຕິວັດມາຈາກພາຍນອກຢ່າງຜິດທຳມະຊາດ.

ໃນທຸກວັນນີ້ ລະບອບສັງຄົມນິຍົມປະຈຸບັນມີສ່ວນຊ່ວຍ ໃນການຕໍ່ສູ້ເພື່ອການ ດັດແປງສັງຄົມມະນຸດແບບມີລັກສະນະກ້າວໜ້າດ້ວຍວິທີການຕ່າງ ໆ.

ຍອມການຕໍ່ສູ້ເພື່ອສັນຕິພາບຂອງມັນນັ້ນເອງ ລະບອບສັງຄົມນິຍົມປະຈຸບັນຈຶ່ງຮັບປະກັນເງື່ອນໄຂຈຳເປັນອັນດັບ ໜຶ່ງແຫ່ງການດຳລົງຕົວຢູ່ຂອງມະນຸດ ແລະ ແມ່ນແຕ່ຄວາມ ອາດສາມາດເປັນໄປຂອງຄວາມກ້າວໜ້າທາງສັງຄົມກໍ່ເຊັ່ນດຽວກັນ. ເມື່ອເປັນດັ່ງນັ້ນແລ້ວ ການຂະຫຍາຍຕົວຢ່າງໜຸນໜ່ຽງ ຂອງເສດຖະກິດສັງຄົມນິຍົມທີ່ຕິດພັນຢູ່ກັບເສດຖະກິດໂລກດ້ວຍເສັ້ນ

ສ່າຍຫລາຍໆອັນກໍ່ຈິ່ງຕື່ມຄວາມເຂັ້ມແຂງໃຫ້ແກ່ໂຄງຮ່າງວັດຖຸດ້ານໃນຂອງການຫລຸດຜ່ອນຄວາມເຄັ່ງຕຶງສາກົນ, ທັງ ອຳນວຍຄວາມສະດວກໃຫ້ແກ່ຄວາມຍືນຍົງຂອງຫລັກການ ແຫ່ງການຢູ່ຮ່ວມກັນຢ່າງສັນຕິລະຫວ່າງລັດຕ່າງໆທີ່ມີລະບອບສັງຄົມແຕກຕ່າງກັນ.

ລະບອບສັງຄົມນິຍົມໃນປະຈຸບັນ ສົ່ງອິດທິພົນນັບມື້ ນັບຫລາຍຂຶ້ນຕໍ່ລັກສະນະຂອງສາຍພົວພັນລະຫວ່າງຊາດທີ່ມີ ສ່ວນຊ່ວຍໃຫ້ມັນເປັນປະຊາທິປະໄຕຫລາຍຂຶ້ນ. ຫລັກການ ແລະ ມາດຕະຖານຂອງຄວາມພົວພັນສາກົນທີ່ສັງຄົມນິຍົມວາງ ອອກເຊັ່ນວ່າ ສິດສະເໝີພາບອັນສົມບູນ, ຄວາມເຄົາລົບໃນບູລະນະພາບແຫ່ງດິນແດນ ໃນເອກະລາດ ແລະ ອະທິປະໄຕແຫ່ງຊາດ, ການບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງ ກັນແລະກັນ ເຫລົ່ານີ້ ນັບມື້ນັບໄຂປ່ອງທາງໃຫ້ແກ່ການປະຕິບັດຕົວຈິງຢູ່ໃນໂລກ, ຢູ່ໃນຊີວິດສາກົນທັງໝົດ ມີຜົນສຳເລັດ - ຫລາຍຂຶ້ນ. ນະໂຍບາຍການເມືອງຂອງປະເທດສັງຄົມນິຍົມມີບົດບາດຕັດສິນຢູ່ໃນບາດລ້ຽວຫລັກຈາກ "ສົງຄາມເຢັນ" ໄປສູ່ການຫລຸດຜ່ອນຄວາມເຄັ່ງຕຶງສາກົນ, ນັ້ນແມ່ນບາດລ້ຽວ ທີ່ອຸບັດຂຶ້ນໃນເຄິ່ງທຳອິດຊຸມປີ ໗໐.

ລະບອບສັງຄົມນິຍົມໂລກອອນນຳເອົາມວນມະນຸດກ້າວໄປຂ້າງໜ້າ ໄປສູ່ໄຊຊະນະຂອງແນວຄິດກອມມູນິດ ແລະອັນນັ້ນກໍ່ແມ່ນຍອນກຳລັງແຮງຈາກຕົວຢ່າງຂອງມັນເອງຄືກັນ. ຍັງລະບອບສັງຄົມນິຍົມສະແດງທ່າດີເໜືອກວ່າຂອງມັນອອກມາເທົ່າ

ໃດ ແນວຄິດກອມມູນິດກໍຍິ່ງເອົາຊະນະຈິດໃຈສາວົກໄດ້ຫລາຍຂຶ້ນເທົ່ານັ້ນ ທັງກະຕຸ້ນໃຫ້ຊາວຜູ້ອອກແຮງງານຕໍ່ສູ້ກັບທຶນ ອີກນຳ. ເລນິນ ຂຽນໄວ້ວ່າ "...ພວກເຮົາເວົ້າແລ້ວແລະຍັງຈະເວົ້າຕໍ່ໄປອີກວ່າ: ລະບອບສັງຄົມນິຍົມມີກຳລັງແຮງອັນເປັນຕົວຢ່າງ . ຄວາມຮຸນແຮງມີກຳລັງກໍແຕ່ເມື່ອນຳມັນມາໃຊ້ກັບຜູ້ທີ່ຢາກຟື້ນຟູອຳນາດຂອງພວກເຂົາຄືນມາເທົ່ານັ້ນ , ແລ້ວຄວາມໝາຍສຳຄັນຂອງຄວາມຮຸນແຮງຍຸຕິລົງທັນທີ. ຕໍ່ຈາກນັ້ນອິດທິພົນ ແລະການເປັນແບບຢ່າງຂອງມັນເອງ ກໍເລີ່ມສະແດງກຳລັງແຮງອອກມາ. ຕ້ອງຊີ້ບອກຄວາມ ສຳຄັນຂອງລະບອບກອມມູນິດດ້ວຍເຫດການຈິງ ແລະດ້ວຍການເປັນແບບຢ່າງ". ( ວ.ອີ.ເລນິນ ນິພົນຄົບຊຸດ, ເຫລັ້ມທີ ໔໔ , ໜ້າ ໗໕ .)

ລະບອບສັງຄົມນິຍົມເຄີຍສົ່ງຜົນກະທົບອັນຍິ່ງໃຫຍ່ ຕໍ່ແນວຄິດ ແລະ ອາລົມຈິດຂອງຜູ້ຄົນຫລາຍຮ້ອຍລ້ານຄົນບົນໂລກ ນັບຕັ້ງແຕ່ປະຈຸບັນນີ້ໄປ. ມັນຊີ້ບອກວ່າມັນຮັບປະກັນຢ່າງແນ່ນອນໃນເສລີພາບ ສິດປະຊາທິປະໄຕອັນແທ້ຈິງ, ຄວາມຢູ່ດີກິນດີ, ການສຶກສາຮ່ຳຮຽນຢ່າງກວ້າງຂວາງ ແລະ ຄວາມຮູ້ສຶກ ແນ່ໃຈຕໍ່ອະນາຄົດຂອງຊາວຜູ້ອອກແຮງງານ. ມັນມີທັງສັນຕິພາບຄວາມເຄົາລົບໃນອະທິປະໄຕຂອງທຸກໆປະເທດ ແລະ ມີການປະສານງານພາຍໃນລັດແບບມີສິດສະເໝີພາບ, ມັນເປັນກຳແພງຍັກຂອງປະຊາຊາດຜູ້ທຳການຕໍ່ສູ້ເພື່ອເສລີພາບ ແລະ ເອກະລາດຂອງພວກເຂົາ. ຍິ່ງລະບອບສັງຄົມນິຍົມວິວັດໄປເທົ່າ

ໃດມັນກໍ່ຍິ່ງສະເຫນີສັກຂີພິຍານອັນໃຫມ່ໃນເລື່ອງເຫງົ້າພະລັງອັນບໍ່ມີຂອບເຂດ ແລະ ໃນເລື່ອງຄວາມເຫນືອກວ່າລັດທິທຶນນິຍົມຂອງຕົນອອກມາຫລາຍຂຶ້ນເລື້ອຍໆ.

ການເຕີບໃຫຍ່ອັນວ່ອງໄວ ແລະ ຫມັ້ນທ່ຽງຂອງເສດຖະກິດແຫ່ງຊາດ ຢູ່ໃນປະເທດສັງຄົມນິຍົມ,ການຍົກລະດັບຄວາມຢູ່ດີກິນດີຂອງປະຊາຊົນ, ການກ້າວຂຶ້ນສູ່ລະດັບສູງແບບ ໃຫມ່ຢ່າງບໍ່ຢຸດຢັ້ງຢູ່ໃນການແຂ່ງຂັນທາງດ້ານເສດຖະກິດ ແລະ ວິທະຍາສາດເຕັກນິກ ກັບໂລກທຶນນິຍົມຊູນທະວີແຮງດຶງດູດຂອງແນວຄິດສັງຄົມນິຍົມຕື່ມອີກ ທັງເສີມຕື່ມຄວາມເຂັ້ມແຂງໃຫ້ແກ່ທີ່ຫມັ້ນຝ່າຍຊ້າຍຢູ່ໃນການຕໍ່ສູ້ຊົນຊັ້ນ.

ຕົວຢ່າງຂອງລະບອບສັງຄົມນິຍົມປະຈຸບັນ ກ້າວເຖິງຂັ້ນມີຄວາມສຳຄັນເປັນພິເສດ ຂະນະທີ່ວິກິດການລວມຂອງລະບອບທຶນນິຍົມຮ້າຍແຮງຂຶ້ນ. ກ່ອນອື່ນຫມົດລະບອບສັງຄົມນິຍົມຊີ້ສະແດງທ່າດີກວ່າໃນດ້ານເສດຖະກິດອອກມາກ່ອນ. ລັກສະ ນະຫມັ້ນທ່ຽງຂອງການຂະຫຍາຍຕົວແຫ່ງເສດຖະກິດຢູ່ໃນປະ ເທດສັງຄົມນິຍົມ, ລະບົບເສດຖະກິດທີ່ປາສະຈາກວິກິດການປາສະຈາກການຫວ່າງງານມັນຝາກຄວາມຈາລຶກອັນຮຸນແຮງຕໍ່ຊາວຜູ້ອອກແຮງງານ ໃນປະເທດອື່ນໆທີ່ບໍ່ເປັນປະເທດສັງຄົມນິຍົມ.

ໃນຍຸກຂອງພວກເຮົາ ແມ່ນເລື່ອງເສດຖະກິດ ທີ່ເປັນສະຫນາມຮົບຕົ້ນຕໍລະຫວ່າງສອງລະບົບສັງຄົມທີ່ຕ້ານຍັນກັນ.ພຽງວັນດຽວຫລັງຈາກການກຳອຳນາດຂອງສະພາໂຊວຽດ ເລີມໄດ້ໃຫ້ຂໍ້ສັງເກດວ່າ: "ວັນນີ້ ພວກເຮົາສົ່ງອິດທິພົນອັນໃຫຍ່ໂຕ

ຂອງພວກເຮົາໃສ່ການປະຕິວັດໂລກດ້ວຍນະໂຍບາຍເສດຖະ-
ກິດຂອງພວກເຮົາ...ການຕໍ່ສູ້ໃນດ້ານນີ້ໄດ້ຂະຫຍາຍ ຂະ
ໜາດເປັນການຕໍ່ສູ້ລະດັບໂລກ. ຖ້າຫາກວ່າພວກເຮົາ ດຳ
ເນີນພາລະກິດນີ້ໄປຈົນສຳເລັດ ພວກເຮົາກໍຈະກ້າວເຖິງ ຂັ້ນ
ສາມາດກວມລວມທົ່ວສາກົນຢ່າງບໍ່ຕ້ອງສົງໄສ ແລະຢ່າງ ຕະ
ຫລອດໄປ ". ( ວ.ອີ.ເລນິນ, ນິພົນຄົບຊຸດ, ເຫລັ້ມທີ໔ມີ
ໜ້າ ມີ໔໑ .)

ການຈັດແບ່ງກຳລັງຕົ້ນຕໍຢູ່ໃນເວທີສາກົນກັບລະດັບ ອິດທິ
ພົນທາງການເມືອງຂອງພວກເຂົາ ສ່ວນຫລາຍແລ້ວຍັງຂຶ້ນ ຢູ່
ກັບຄວາມສົມສ່ວນລະຫວ່າງເຫງົ້າພະລັງເສດຖະກິດທັງ ໝົດ
ຂອງບັນດາປະເທດສັງຄົມນິຍົມກັບປະເທດທຶນນິຍົມ,ຍັງຂຶ້ນກັບ
ສ່ວນປະກອບຂອງເຂົາຢູ່ໃນບໍລິມາດລວມຂອງການຜະລິດ ຊຸດ
ສາຫະກຳໂລກຢູ່. ເຫງົ້າພະລັງທາງດ້ານການຜະລິດຂອງປະ
ເທດສັງຄົມນິຍົມຍິ່ງສູງຂຶ້ນເທົ່າໃດ ອິດທິພົນຂອງພວກເຂົາ ຕໍ່
ຈັງຫວະ ແລະ ທິດທາງຂະຫຍາຍຕົວແຫ່ງປະຫວັດສາດ ກໍຍິ່ງ
ໃຫຍ່ຫລວງຂຶ້ນເທົ່ານັ້ນ ແລະ ຄວາມອາດສາມາດທີ່ພວກທຶນນິ
ຍົມຢາກນຳມາໃຊ້ຖ່ວງດຶງຄວາມຄືບໜ້າຂອງສັງຄົມມະນຸດ ກໍ
ຍິ່ງຫລຸດຜ່ອນຄວາມສຳຄັນລົງເທົ່ານັ້ນ.

ທາງດຽວ ສຳຄັນຢູ່ໃນການແຂ່ງຂັນເສດຖະກິດສັງຄົມນິຍົມ
ກັບທຶນນິຍົມນັ້ນແມ່ນປະກອບສ້າງດ້ວຍການຜັນປ່ຽນຢ່າງບໍ່ຢຸດ-
ຢັ້ງທັງບໍ່ສົ້ນສະເທືອນຢູ່ໃນການຊັ່ງຊາກຳລັງເສດຖະກິດ ແບບ
ໃຫ້ທ່າດີແກ່ລະບອບສັງຄົມນິຍົມ. ຖ້າຫາກວ່າກ່ອນໜ້າ ສົງ

ຄາມໂລກຄັ້ງທີໜຶ່ງນັ້ນ ການຜະລິດຂອງລັດເຊຍເທົ່າກັບ ແຕ່ ໑໗% ຂອງການຜະລິດສະຫະລັດ ມາຮອດທຸກວັນນີ້ມັນໄດ້ ສູງຂຶ້ນຫລາຍກວ່າ ໘໐% ແລ້ວ. ຢູ່ໃນເອີຣົບ ສະຫະພາບໂຊ - ວຽດ ນຳໜ້າຢູ່ໃນເລື່ອງການຜະລິດສິນຄ້າຕົ້ນຕໍ ໔໔ປະເພດ ( ໃນນັ້ນ ໑໗ ປະເພດ, ສະຫະພາບໂຊວຽດຄອງຕຳແໜ່ງທີໜຶ່ງຢູ່ໃນໂລກ ). ສ.ສ.ສ.ຊ. ຜະລິດສິນຄ້າອຸດສາຫະ-ກຳໄດ້ເທົ່າກັບ ໔໔% ຂອງຜົນຜະລິດອຸດສາຫະກຳໂລກ, ນຳໜ້າໝູ່ຢູ່ໃນການຂຸດຄົ້ນກົ່ນຖ່ານຫີນ ແຮ່ເຫລັກ ຢູ່ໃນການຜະລິດຂາງ, ຖ່ານກົກ, ຝຸ່ນເຄືອ, ຫົວຈັກລົດໄຟຊະນິດໃຊ້ ໄຟຟ້າ, ຫົວຈັກລົດໄຟຊະນິດດີແຊນ, ລົດໄຖນາ (ຄິດໄລ່ ເອົາສະມັດຖະພາບລວມຂອງໜ່ວຍຈັກ ), ໄມ້ສຳເລັດຮູບ, ຊີມັງ, ໂຄງຮ່າງວັດຖຸເຮັດດ້ວຍຊີມັງເສີມເຫລັກແລະອຸປະກອນຕ່ອນຍ່ອຍ, ແພຂົນສັດ ແລະ ວັດຖຸອື່ນໆທີ່ເປັນດັດຊະນີ ຕົ້ນຕໍ ຊີ້ບອກລັກສະນະຂະຫຍາຍຕົວຂອງເສດຖະກິດ.

ຈັງຫວະແຫ່ງການຂະຫຍາຍຕົວຂອງ ສ.ສ.ສ.ຊ ຊີ້ບອກວ່າ ລະບອບສັງຄົມນິຍົມ ມີຄວາມສາມາດສ້າງຄວາມພ່າຍແພ້ທາງດ້ານເສດຖະກິດໃຫ້ແກ່ລັດທິທຶນນິຍົມ. ຖ້າຫາກວ່າ ຢາກເພີ່ມການຜະລິດອຸດສາຫະກຳໃຫ້ໄດ້ປະມານ ໓໐ ເທົ່າ ຂອງການຜະລິດສະຫະລັດ, ເຢຍລະມັນກັບອັງກິດໄດ້ໃຊ້ເວລາ - ຮອດ ໘໐ ຫາ ໑໕໐ ປີ, ສະຫະພາບໂຊວຽດ ກັບເຮັດໄດ້ພຽງແຕ່ໃນໄລຍະ ໔໐ ປີເທົ່ານັ້ນ, ພ້ອມດຽວກັນນີ້ ສະຫະພາບໂຊວຽດຈຳໄດ້ສະຫລະເວລາສອງທົດສະວັດທຳອິດໃສ່ສົງ

ຄາມ ກັບຜູ້ຮຸກຮານຕ່າງດ້າວ ແລະ ໃສ່ການຟື້ນຟູເສດຖະກິດແຫ່ງຊາດ. ສົງຄາມໂລກຄັ້ງທີສອງ ສ້າງຄວາມເສຍຫາຍອັນມະຫາສານໃຫ້ແກ່ສະຫະພາບໂຊວຽດ ຄິດໄລ່ເປັນມູນຄ່າຮອດ ໖໗໙ ຕື້ລານໂດລາ ( ຕາມຄ່າຂອງເງິນໃນປີ ໑໙໔໑ ) , ສ່ວນວ່າສະຫະລັດນັ້ນແທນທີ່ຈະໄດ້ຮັບຄວາມເສຍຫາຍຢູ່ບົນດິນແດນຂອງຕົນ, ກົງກັນຂ້າມຊ້ຳກັບມີລາຍໄດ້ແຫ່ງຊາດເພີ່ມທະວີຂຶ້ນຮອດ ໙໖ ຕື້ລານໂດລາໃນລະຫວ່າງປີ ໑໙໓໙-໑໙໔໔.

ໃນປີ ໑໙໗໗ ການຜະລິດອຸດສາຫະກຳຢູ່ ສ.ສ.ສ.ຊ . ໄດ້ເພີ່ມຂຶ້ນຮອດ ໑໔໔ ເທົ່າເມື່ອປຽບໃສ່ກັບການຜະລິດໃນປີ ໑໙໑໓ ແລະເປັນ ໘໘໕ ເທົ່າ ເມື່ອປຽບໃສ່ກັບປີ ໑໙໑໗ . ທຸກວັນນີ້ສະຫະພາບໂຊວຽດກາຍລື່ນສະຫະລັດບໍ່ພຽງແຕ່ ໃນສ່ວນກ່ຽວກັບອັດຕາສະເລ່ຍທະວີຕໍ່ປີຂອງການຜະລິດອຸດສາຫະກຳເທົ່ານັ້ນ ແຕ່ຍັງລື່ນກາຍໃນດ້ານສ່ວນທະວີຂາດຕົວຕໍ່ປີຂອງສິນຄ້າຫລາຍປະເພດອີກ.

ຢູ່ໃນແລວທາງແຫ່ງປະຫວັດສາດນັ້ນ ປະກົດການທີ່ວ່າບັນດາປະເທດສັງຄົມນິຍົມກ້າວກາຍໜ້າລັດທິທຶນນິຍົມຕ່າງໆ ໃນດ້ານອັດຕາທະວີຂອງເສດຖະກິດ ຈະມີຜົນກະທົບອັນນັບມື້ ນັບຍິ່ງໃຫຍ່ຂຶ້ນຕໍ່ບາດກ້າວເດີນຂອງການແຂ່ງຂັນໃນເລື່ອງ ເສດຖະກິດລະຫວ່າງລະບອບສັງຄົມນິຍົມ ກັບລະບອບທຶນນິຍົມ.ຕົວຢ່າງ, ຖ້າຫາກວ່າການຜະລິດອຸດສາຫະກຳຂອງປະເທດພາຄີຕະຫລາດຮ່ວມເອີຣົບ ເພີ່ມຂຶ້ນແຕ່ພຽງ ໑໗% ລະຫວ່າງ ປີ ໑໙໗໐ ຫາປີ ໑໙໗໗, ການຜະລິດດັ່ງກ່າວໄດ້ເພີ່ມຂຶ້ນ ໖໕%

ຢູ່ໃນປະເທດພາຄີ ສ.ຊ.ສ. ອັດຕາທະວີສູງຂອງເສດຖະກິດແຫ່ງຊາດຢູ່ໃນປະເທດສັງຄົມນິຍົມອຳນວຍໃຫ້ຍົກລະດັບ ຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານ, ຂະຫຍາຍຂອບ ເຂດຄວາມອາດສາມາດເພື່ອກ້າວໄປເຖິງພົນສຳເລັດແບບໃໝ່ ຢູ່ໃນການພັດທະນາເສດຖະກິດ ວິທະຍາສາດ ແລະວັດທະນະ-ທຳ.

ຍິ່ງການຊຸ່ງຊາເຫງົ້າພະລັງ ທາງດ້ານເສດຖະກິດ ລະຫວ່າງລະບອບສັງຄົມນິຍົມກັບທຶນນິຍົມຜັນປ່ຽນໄປເທົ່າໃດການແຂ່ງຂັນລະຫວ່າງສອງລະບອບກໍ່ຍິ່ງດຸເດືອດຮຸນແຮງຂຶ້ນ ເທົ່ານັ້ນ. ໂດຍນຳໃຊ້ຄວາມກ້າວໜ້າທາງດ້ານເຕັກນິກຫລາຍ ທີ່ສຸດ ຈົນຮອດ " ການບູລະນະ " ເສດຖະກິດແບບນາຍ ທຶນ ແລະ ໂດຍໝູນໃຊ້ການຈັດລະບຽບແບບລັດຜູກຂາດຢູ່ໃນເສດຖະກິດ, ທຶນຜູກຂາດຫາທາງຫລຸດຜ່ອນແລະລົບລ້າງປອງຍະຢູ່ໃນອັດຕາຂະຫຍາຍຕົວເຫລົ່ານີ້. ແຕ່ປະເທດທຶນນິຍົມທີ່ ສາມາດເຮັດໄດ້ນັ້ນ ແມ່ນມີໜ້ອຍຫລາຍ, ຍິ່ງໄປກວ່ານັ້ນຖ້າ ວ່າເຮັດໄດ້ ພວກເຂົາກໍ່ເຮັດໄດ້ໃນໄລຍະສັ້ນໆເທົ່ານັ້ນ. ເວົ້າທົ່ວໆໄປແລ້ວ ເສດຖະກິດທຶນນິຍົມຍັງຄົງບໍ່ໝັ້ນທ່ຽງແລະເປັນທີ່ຮອງຮັບຜົນກະທົບຂອງວິກິດການເຊັ່ນການຜະລິດຕົກຕ່ຳ, ໄພເງິນເຟີ້ ການຫວ່າງງານ, ການຂຶ້ນລາຄາ, ແລະອື່ນໆ...

ອັດຕາທະວີຂອງບໍລິມາດການຜະລິດອຸດສາຫະກຳ (໑໙໕໐=໑*)

| ປະເທດ | ໑໙໖໐ | ໑໙໖໕ | ໑໙໗໐ | ໑໙໗໕ | ໑໙໗໖ |
|---|---|---|---|---|---|
| ພົນລວມຍອດຂອງໂລກ | ໒,໑ | ໒,໘ | ໓,໙ | ໕,໐ | ໕,໓ |
| ປະເທດສັງຄົມນິຍົມ | ໓,໕ | ໕,໐ | ໗,໒ | ໑໐,໘ | ໑໑,໔ |
| ປະເທດສະມາຊິກ ສ.ຊ.ສ | ໓,໐ | ໔,໕ | ໖,໘ | ໑໐,໐ | ໑໐,໕ |
| ສ.ສ.ສ.ຊ | ໓,໐ | ໔,໖ | ໖,໙ | ໙,໙ | ໑໐,໓ |
| ປະເທດສະມາຊິກ ສ.ພ.ສ ຍົກເວັ້ນ ສ.ສ.ສ.ຊ | ໓,໑ | ໔,໕ | ໖,໖ | ໑໐,໒ | ໑໑,໑ |
| ບູນກາຣີ | ໔,໐ | ໖,໙ | ໑໑,໖ | ໑໗,໙ | ໑໙,໑ |
| ກູບາ | ໑ | ໐,໙໙ | ໑,໑ | ໑,໗ | ໑,໘ |
| ຮົງກາຣີ | ໒,໗ | ໓,໙ | ໕,໒ | ໗,໑ | ໗,໔ |
| ມົງໂກລີ | ໒,໘ | ໔,໕ | ໗,໑ | ໑໑,໑ | ໑໑,໙ |
| ໂປໂລຍ | ໓,໒ | ໔,໗ | ໗,໑ | ໑໑,໖ | ໑໒,໗ |
| ສ.ປ.ຢ | ໒,໙ | ໓,໙ | ໗,໔ | ໗,໓ | ໗,໘ |
| ຣູມານີ | ໓,໔ | ໖,໕ | ໑໑ | ໒໑ | ໒໓ |
| ເຊັກໂກສະໂລວາກີ | ໒,໗ | ໓,໕ | ໔,໙ | ໖,໗ | ໗,໑ |
| ປະເທດທຶນນິຍົມ ອຸດສາຫະກຳຈະເລີນ | ໑,໖ | ໒,໒ | ໒,໘ | ໓,໒ | ໓,໔ |
| ສະຫະລັດ | ໑,໕ | ໒,໐ | ໒,໔ | ໒,໖ | ໒,໙ |
| ປະເທດສະມາຊິກຕະຫລາດຮ່ວມເອີຣົບ | ໑,໘ | ໒,໓ | ໓,໐ | ໓,໒ | ໓,໔ |
| ອັງກິດ | ໑,໔ | ໑,໖ | ໑,໘ | ໑,໘ | ໑,໘ |
| ຝະລັ່ງ | ໑,໘ | ໒,໓ | ໓,໐ | ໓,໔ | ໓,໗ |
| ສ.ສ.ຢ | ໒,໔ | ໓,໒ | ໔,໓ | ໔,໔ | ໔,໘ |
| ອີຕາລີ | ໒,໔ | ໓,໓ | ໔,໖ | ໕,໐ | ໕,໖ |
| ແບນຊິກ | ໑,໔ | ໑,໘ | ໒,໓ | ໒,໕ | ໒,໗ |
| ໂຮລັງ | ໑,໘ | ໒,໔ | ໓,໖ | ໔,໒ | ໔,໕ |
| ລຸກຊຳບວກ | ໑,໕ | ໑,໗ | ໑,໙ | ໑,໘ | ໑,໙ |
| ດານມາກ | ໑,໖ | ໒,໒ | ໒,໗ | ໒,໘ | ໓,໐ |
| ຍີ່ປຸ່ນ | ໔,໓ | ໗,໔ | ໑໕ເທົ່າ | ໑໗ເທົ່າ | ໑໙ ເທົ່າ |

*ຖືເອົາບໍລິມາດການຜະລິດອຸດສາຫະກຳປີ ໑໙໕໐ ເປັນຫົວໜ່ວຍ.

ການປັບປຸງສາຍພົວພັນເສດຖະກິດລະຫວ່າງປະເທດ ສັງຄົມນິຍົມ ກັບທຶນນິຍົມ ໃນຊຸມປີ 70 ທີ່ໄດ້ຂະນຸມັດໃຫ້ເພີ່ມຕື່ມຄວາມໝັ້ນໜຽວໃຫ້ແກ່ພື້ນຖານວັດຖຸຂອງການຫລຸດຜ່ອນ - ຄວາມເຄັ່ງຕຶງນັ້ນ ກໍຫາກບໍ່ມີແຕ່ຜົນສະທ້ອນໃນດ້ານລົບ ໃສ່ເສດຖະກິດຂອງປະເທດສັງຄົມນິຍົມ ເທົ່ານັ້ນ. ແມ່ນແທ້ແລ້ວ, ວິກິດການແລະ ຄວາມສັບສົນຢູ່ໃນເສດຖະກິດຂອງ ປະເທດນາຍທຶນ, ຄວາມບໍ່ໝູ້ນທ່ຽງຂອງຕະຫລາດພວກເຂົາກໍປະຮ່ອງຮອຍໃນດ້ານລົບໃສ່ການພົວພັນເສດຖະກິດກັບປະເທດ ພວກເຂົາ, ມັນບໍ່ຮັບປະກັນຄວາມຄົງທົນທີ່ຄວນມີໃນຖານະເປັນ ຄູ່ຄ້າຂາຍຂອງພວກເຂົາກັບລັດສັງຄົມນິຍົມ.

ມາດຕະການປະຕິບັດຂອງ ພ.ກ.ສ.ຊ ກັບພັກອ້າຍນ້ອງອື່ນໆ ໃນລະຍະຊຸມປີຫລັງ ເພື່ອໝູນໃຊ້ກຳລັງການຜະລິດໃຫ້ດີກວ່າເກົ່າ, ເພື່ອສະແດງຢ່າງປະຈັກຕາເຖິງທ່າດີກວ່າຂອງລະບອບສັງຄົມນິຍົມນັ້ນ ກໍອ້ານວຍໃຫ້ລະບົບສັງຄົມນິຍົມ ແຫ່ງໂລກ ກ້າວເຂົ້າສູ່ຄອບຄອງຖານະໃໝ່ ເທື່ອລະຂັ້ນຢູ່ໃນ ການຊ່ວງເສັງທາງດ້ານເສດຖະກິດແບບສັນຕິ ກັບລະບອບທຶນນິຍົມແນວທາງອັນແນ່ໃສ່ເພີ່ມທະວີປະສິດທິພາບ ແລະ ຄຸນນະພາບຂອງການຜະລິດ, ແນ່ໃສ່ໝູນໃຊ້ຄວາມສຳເລັດຂອງການປະຕິວັດວິທະຍາສາດເຕັກນິກຢ່າງສົມບູນຄົບຖ້ວນກວ່າເກົ່າ, ແນ່ໃສ່ນຳໃຊ້ເຄື່ອງຈັກຍົນ ແລະ ລະບົບກົນໄກທັນສະໄໝໃຫ້ໄວກວ່າເກົ່າຕະຫລອດຮອດ ບາດກ້າວເດີນແລະວິທີການ ເຮັດວຽກແບບໃໝ່, ແນ່ໃສ່ຂະຫຍາຍຂະແໜງອໍກຸນແຈແຫ່ງເສດ

ຖະກິດກ່ອນໝູ່, ທັງໝົດນັ້ນມີສ່ວນຊ່ວຍເລັ່ງລັດທ່າບຸກເສດຖະກິດຂອງລະບອບສັງຄົມນິຍົມໂລກ.

ລະບອບສັງຄົມແບບໃໝ່ຍັງຊີ້ສະແດງເຖິງຄວາມ ເໜືອກວ່າລະບອບທຶນນິຍົມຂອງຕົນອອກມາໃນຂົງເຂດການພົວພັນ-ສັງຄົມອີກ. ຄວາມສາມາດ ແລະ ທ່າດີກວ່າຂອງລະບອບສັງຄົມນິຍົມ ເປີດເຜີຍຫລາຍຂຶ້ນໃນແຕ່ລະປີທັງສົມບູນຂຶ້ນຈັກໄຊຢູ່ໃນຂົງເຂດການເມືອງຢູ່ໃນການພັດທະນາລະບົບການເມືອງ-ຂອງສັງຄົມນິຍົມ, ຢູ່ໃນການປັບປຸງ ແລະ ສ້າງຄວາມ ເລິກເຊິ່ງໜັກແໜ້ນໃຫ້ແກ່ປະຊາທິປະໄຕ. ຕົວຢ່າງຈາກການແກ້ໄຂຢ່າງມີປະຊາທິປະໄຕ ແລະ ທ່ຽງທຳອາດວຍບັນຫາຊົນ - ຊາດຢູ່ ສ.ສ.ສ.ຊ. ແລະ ໃນລັດສັງຄົມນິຍົມອື່ນໆ ກໍເກີດມີຄວາມສຳຄັນເປັນພິເສດ. ເຫັນໄດ້ວ່າຜົນສຳເລັດຂອງ ປະເທດສັງຄົມນິຍົມຈະແຈ້ງບາດຕາເປັນພິເສດບົນພື້ນແຜ່ນ ພາບແຫ່ງການບຸກໂຈມຕີຂອງການຜູກຂາດ ຕ້ານກັບການຍົກລະດັບຊີວິດ ແລະ ສິດທິທາງສັງຄົມຂອງຊາວຜູ້ອອກແຮງງານ (ໄພເງິນເຟີ້ ການຫວ່າງງານເພີ່ມທະວີຂຶ້ນ ) ບົນພື້ນແຜ່ນ ພາບຂອງລະບອບຈຳແນກເຊື້ອຊາດແລະລະບອບຜະເດັດການອາຍດຽວ ທີ່ກຳລັງລະບາດຢູ່ໃນໂລກທຶນນິຍົມ.

ໂດຍຮັບປະກັນສິດທິທາງສັງຄົມເສດຖະກິດອັນເປັນ ຕາຍ ແລະ ເສລີພາບໃຫ້ແກ່ຊາດຂອງຕົນ, ໃນໂອກາດດຽວກັນ , ປະເທດສັງຄົມນິຍົມຈຶ່ງກະຕຸ້ນການຕໍ່ສູ້ຂອງຊາວຜູ້ອອກແຮງ - ງານໃນປະເທດທຶນນິຍົມ ເພື່ອຍາດເອົາສິດທິແລະເສລີ ພາບ

ອັນດຽວກັນນີ້, ເວົ້າໄດ້ອີກວ່າປະເທດສັງຄົມນິຍົມ ເພີ່ມທະວີ ໄພ້ໃບຕາຍໃຫ້ພວກເຂົາໃນການຕໍ່ສູ້ຕ້ານກັບອິດທິພົນ ອັນຍິ່ງໃຫຍ່ຂອງທຶນອີກ.

ການຄົງຕົວຢູ່ຂອງລະບອບສັງຄົມນິຍົມບະຈຸບັນຜົນສຳເລັດຂອງມັນຢູ່ໃນການແກ້ໄຂບັນຫາເສດຖະກິດສັງຄົມ ແລະ ການເມືອງອັນສຳຄັນທັງຫລາຍ ບັງຄັບໃຫ້ຊົນຊັ້ນນາຍທຶນຈັກກະພັດສະແດງຕົວຢາກຜ່ອນສັ້ນຜ່ອນຍາວຫລາຍຂຶ້ນ ໃນເລື່ອງກ່ຽວພັນ ກັບຂໍ້ຮຽກຮ້ອງ ຂອງຊົນຊັ້ນກຳມະກອນແລະຊາວຜູ້ອອກແຮງງານຊັ້ນຄົນອື່ນໆ. ຈຳເປັນຊົນຊັ້ນນາຍທຶນຈັກກະພັດ ຈິ່ງຍອມຕອບສະໜອງຂໍ້ຮຽກຮ້ອງ ທາງດ້ານສັງຄົມ-ເສດຖະກິດບາງອັນຂອງພວກເຂົາ.

ແມ່ນຍ້ອນກະໂຕໄຊຊະນະ ແລະ ການຂະຫຍາຍຕົວແບບມີຜົນສຳເລັດຂອງລະບອບສັງຄົມນິຍົມນັ້ນເອງ ທີ່ສົ່ງເສີມ ຊົນຊັ້ນກຳມະກອນ ຊາວຜູ້ອອກແຮງງານໃນທົ່ວໂລກ, ປູກອາລົມສູຂະນິຍົມໃຫ້ແກ່ພວກເຂົາທັງສ້າງຄວາມເຊື່ອໝັ້ນ ໃນໄຊຊະນະຂັ້ນສຸດທ້າຍຂອງພວກເຂົາ.

ການເກີດມີຕົວຕົນຂອງລະບົບ ສັງຄົມນິຍົມແຫ່ງໂລກ ໄດ້ເຮັດໃຫ້ຄວາມອາດສາມາດຂອງພວກຈັກກະພັດທີ່ຢາກນຳໃຊ້ວິທີສົ່ງການຝົນປະຕິວັດອອກນອກຫົດຫຽນລົງຢ່າງຫລວງຫລາຍ. ສິ່ງດັ່ງກ່າວອະນຸມັດໃຫ້ຊົນຊັ້ນກຳມະກອນແລະພົນທະມິດ ຂອງພວກເຂົາກໍເຊັ່ນດຽວກັນ, ພາກັນຫັນໜ້າມາຫາວິທີການ ອັນສັນຕິເພື່ອຍາດແຍ່ງອຳນາດທັງຫລີກເວັ້ນສົງຄາມ ກາງເມືອງ

ແລະທັງໜູນໃຊ້ຮູບການຕ່າງໆຂອງປະຊາທິປະໄຕນາຍທຶນ - ໂຮມທັງການໃຊ້ສະພານຳ.

ແນ່ນອນວ່າຮູບການຂ້າມຜ່ານຂອງປະເທດຕ່າງໆໄປສູ່ລະບອບສັງຄົມນິຍົມນັ້ນ ກ່ອນອື່ນໝົດມັນຂຶ້ນກັບການຈັດແບ່ງ ກຳລັງຕົວຈິງຂອງຊົນຊັ້ນຢູ່ພາຍໃນປະເທດ. ຢ່າງໃດກໍຕາມການພັດທະນາບາດກ້າວເດີນຂອງການປະຕິວັດໂລກໃນຂັ້ນຕອນປະຈຸບັນນີ້ກໍມີຈຸດພິເສດສຳຄັນອັນໜຶ່ງຢູ່ບ່ອນວ່າ ລະບອບສັງຄົມນິຍົມປະຈຸບັນກັບລະບົບສັງຄົມນິຍົມກຳລັງສົ່ງອິດທິພົນ ອັນໃຫຍ່ຫລວງຂຶ້ນທຸກວັນຕໍ່ຮູບການວິທີການແລະເສັ້ນທາງແຫ່ງການດັດສ້າງສັງຄົມແບບປະຕິວັດ.

ລະບົບສັງຄົມນິຍົມແຫ່ງໂລກ, ຕົວຢ່າງຂອງລະບອບ ສັງຄົມນິຍົມສົ່ງອິດທິພົນອັນເລິກເຊິ່ງໃສ່ທາດແທ້ແລະຮູບການ ທັງທິດທາງສັງຄົມເສດຖະກິດຂອງຂະບວນການປົດປ່ອຍຊາດ. ປະຊາຊາດທັງຫລາຍທີ່ໂຄ່ນລົ້ມການຄອບຄອງຂອງຈັກກະພັດ ໃນທາງການເມືອງໝຸບໂກຍເອົາແນວຄິດຢູ່ໃນບົດຮຽນຕ່າງໆຂອງລະບອບສັງຄົມນິຍົມ, ແນວຄິດທີ່ອະນຸມັດໃຫ້ພວກເຂົາພົບເຫັນເສັ້ນທາງອັນມີປະສິດທິພາບຕໍ່ການຂັບປຸງເອກະລາດຂອງຊາດ, ແນວຄິດທີ່ ອະນຸມັດໃຫ້ພວກເຂົາເອົາຊະນະສະພາບ ຫລ້າຫລັງ, ກ້າວມາເຖິງຂັ້ນເປັນເອກະລາດທາງດ້ານເສດຖະກິດ ແລະ ມີຄວາມກ້າວໜ້າທາງສັງຄົມກັບເສດຖະກິດ.

ປະເທດສັງຄົມນິຍົມກັບປະເທດປົດປ່ອຍແລ້ວໄດ້ສ້າງສາຍພົວພັນຕໍ່ກັນບົນພື້ນຖານຫລັກການການມີສິດສະເໝີພາບ ແລະ

ເຄົາລົບຕໍ່ກັນຢ່າງສົມບູນ. ພັນທະພາບກັບປະເທດໃນ ລະບົບສັງຄົມນິຍົມມີສ່ວນຊ່ວຍຍົກບົດບາດຂອງລັດໜຸ່ມນ້ອຍໃນຖານະເປັນປັດໄຈເອກະລາດອັນສຳຄັນຂອງການເມືອງໂລກ. ພັນທະພາບດັ່ງກ່າວ ນັບມື້ນັບແໜ້ນແຟ້ນຂຶ້ນຍ້ອນວ່າມັນອີງໃສ່ການມີຜົນປະໂຫຍດຮ່ວມກັນຢູ່ໃນການຕໍ່ສູ້ຕ້ານຈັກກະພັດ, ເພື່ອສັນຕິພາບແລະເພື່ອ ລົບລ້າງລະບອບໂທ່ຫົວເມືອງຂຶ້ນທັງແບບເກົ່າແລະແບບໃໝ່. ລັດສັງຄົມນິຍົມໃຫ້ການຊ່ວຍເຫຼືອທາງການທະຫານ ແລະ ທາງການທູດແກ່ປະເທດທີ່ປົດປ່ອຍແລ້ວ ທີ່ຮັບເຄາະຈາກການສ່ຽງໄພທາງການທະຫານຂອງຈັກກະພັດ.ການປະສານງານກັບປະເທດສັງຄົມນິຍົມຊ່ວຍໃຫ້ລັດໜຸ່ມນ້ອຍ ຕໍ່ສູ້ເພື່ອຄວາມເປັນເອກະລາດທາງເສດຖະກິດ, ເພື່ອເອົາ ຊະນະຄວາມຫຼ້າຫຼັງທາງດ້ານເສດຖະກິດ ແລະ ວັດທະນະທຳ.

ປະເທດປົດປ່ອຍແລ້ວ ຈຳນວນສຳຄັນເຕີບກູມໜຶ່ງ (ຫຼາຍກວ່າ ໔໐ ) ໄດ້ຫັນໜ້າມາຍັງເສັ້ນທາງສັງຄົມນິຍົມ. ຖ້າຫາກວ່າປະຊາຊາດໃນປະເທດເຫຼົ່ານີ້ໄດ້ເລືອກເອົາ ເສັ້ນທາງຂະຫຍາຍຕົວແບບນີ້ມັນກໍແມ່ນຍ້ອນຕົວຢ່າງອັນໜ້າເຊື່ອຖືຂອງລະບອບສັງຄົມປະຈຸບັນ, ຍ້ອນຄວາມຮຸ່ງເຮືອງອັນ ແຮງກາ ແລະວອງໄວຂອງກຳລັງການຜະລິດ, ຂອງວິທະຍາສາດ ແລະ ວັດທະນະທຳຢູ່ໃນປະເທດສັງຄົມນິຍົມ, ຍ້ອນໄຊຊະນະຂອງພວກເຂົາໃນການແຂ່ງຂັນກັບລະບອບທຶນນິຍົມ. ປະຊາຊາດໃນລັດໜຸ່ມນ້ອຍທັງຫຼາຍແມ່ນເຫັນອຸດົມການແລະຄວາມໃຝ່ຝັນຂອງພວກຕົນກາຍເປັນຄວາມຈິງຢູ່ໃນປະເທດສັງຄົມນິ-

ຢືມ.

ລະບົບສັງຄົມນິຍົມໃຫ້ການຊ່ວຍເຫລືອທາງດ້ານ ເສດຖະກິດຫລາຍຮູບຫລາຍແບບ ແກ່ປະເທດກຳລັງພັດທະນາ, ສິ່ງດັ່ງກ່າວອະນຸມັດໃຫ້ປະເທດເຫລົ່ານີ້ ຫລຸດພົ້ນອອກຈາກການເປັນບໍລິວານຂອງທຶນນິຍົມ, ໃຫ້ຄວາມສະດວກ ແກ່ການຜັນປ່ຽນແບບກ້າວຫນ້າແກ່ຂົງເຂດເສດຖະກິດ ແລະ ຂົງເຂດອື່ນໆ ຢູ່ໃນຊີວິດສັງຄົມ. ປະເທດສັງຄົມນິຍົມຂາຍວັດຖຸອຸປະກອນທີ່ປະເທດຫນຸ່ມນ້ອຍຕ້ອງການເພື່ອຫັນປ່ຽນປະເທດຕົນໃຫ້ເປັນ ປະເທດອຸດສາຫະກຳໃຫ້ແກ່ພວກເຂົາ ທັງຮັບຊື້ ສິນຄ້າ ສົ່ງອອກແບບທຳມະດາຂອງພວກເຂົາ ອັນເຮັດໃຫ້ມີຜົນກະທົບອັນດີ ຕໍ່ການຊັ່ງຊາການຄ້າ ແລະ ລາຍຈ່າຍຂອງປະເທດປົດປ່ອຍ - ແລ້ວ. ປະເທດສັງຄົມນິຍົມຕົກລົງໃຫ້ເງິນກູ້ຢືມແລະ ສິນເຊື່ອໃນເງື່ອນໄຂທີ່ດີ ແກ່ປະເທດປົດປ່ອຍແລ້ວ. ມູນຄ່າ ສິນເຊື່ອຈາກຝ່າຍປະເທດສະມາຊິກ ສ.ຊ.ສ ທີ່ຕົກລົງໃຫ້ບັນດາ ປະເທດກຳລັງພັດທະນາຢູ່ໃນອາຊີ ອາຟຣິກກາ ແລະ ອາເມລິ-ກາລາຕິນ ຕາມເງື່ອນໄຂນີ້ສູງຂຶ້ນປະມານ ໑໕ ຕື້ຮູບ ໃນລະຫວ່າງຊຸມທ້າຍປີ ໗໐.

ຍ້ອນວ່າລະບອບສັງຄົມນິຍົມລົບລ້າງການຜູກຂາດຂອງຈັກກະພັດຢູ່ໃນຂົງເຂດການກູ້ຢືມ ແລະ ສິນເຊື່ອ, ຢູ່ໃນການສົ່ງອຸປະກອນປະກອບອອກນອກ ແລະ ການຖ່າຍທອດ ບົດຮຽນທາງດ້ານເຕັກນິກແລ້ວກອງທຶນຕາເວັນຕົກ ຈຶ່ງຕ້ອງຫລີກເວັ້ນ ( ພວກເຂົາຈະມັກຫລືບໍ່ມັກກໍຕາມ ) ຮູບການຂູດຮີດແບບຫົວ

ເມືອງຂຶ້ນຊະນິດຮຸນແຮງ ແລະ ຊະນິດເປີດແປນກວ່າຫມູ່ເສຍ, ທັງຫລຸດຜ່ອນດອກເບ້ຍສິນກູ້ຢືມລົງນີ ຍືດກຳນົດເວລາການສົ່ງຕົ້ນທຶນຂອງພວກຕົນໃນບາງກໍລະນີ. ອັນນີ້ກໍຖືໄດ້ວ່າແມ່ນການຊ່ວຍເຫລືອທາງອ້ອມຢ່າງຫນຶ່ງຂອງປະເທດສັງຄົມນິຍົມ ຕໍ່ລັດຫນຸ່ມນ້ອຍທັງຫລາຍ.

ເບິ່ງລວມແລ້ວ ລັດພາຄີ ສ.ຊ.ສ ໃຫ້ການຊ່ວຍ ເຫລືອທາງດ້ານເສດຖະກິດ ແລະ ເຕັກນິກໃຫ້ແກ່ລັດຫນຸ່ມນ້ອຍຮອດ ໒໐ ລັດແຕ່ສະຫະພາບໂຊວຽດຜູ້ດຽວໄດ້ໃຫ້ສັນຍາຮັບ ຊ່ວຍເຫລືອປະເທດກຳລັງພັດທະນາເພື່ອການສ້າງສາແລະ ບັບປຸງໂຮງງານອຸດສາຫະກຳ, ການຕິດຕັ້ງກິດຈະການອື່ນໆປະມານ ໑.໐໐໐ ແຫ່ງ. ໃນນັ້ນຫລາຍກວ່າ ໕໔໐ ແຫ່ງສຳເລັດແລະປະຕິບັດວຽກງານແລ້ວ. ເຊັ່ນວ່າລະຫວ່າງ ປີ ໑໙໕໗ ຫາ ໑໙໗໗ ການຊ່ວຍເຫລືອຂອງສະຫະພາບໂຊວຽດຈຶ່ງ ອຳນວຍໃຫ້ມີການກໍ່ສ້າງສະຖານທີ່ຫລອມໂລຫະຂະຫນາດມີ ສະມັດຖະພາບຜະລິດເຫລັກກ້າ ໕,໙ ລ້ານໂຕນ ແລະ ຜະລິດຕະ ພັນແຜ່ນໂລຫະອື່ນໆຫລາຍກວ່າ ໔ ລ້ານໂຕນຢູ່ໃນປະເທດກຳລັງພັດທະນາ. ຍົກຕົວຢ່າງໂຮງງານລົມທົບຢູ່ ບີລາຍ ແລະ ໂບກາໂຣ ຜະລິດເຫລັກກ້າໄດ້ຮອດ ໔໐% ຂອງປະລິມານເຫລັກກ້າຜະລິດໄດ້ຢູ່ໃນອິນເດຍ, ໂຮງງານໂລຫະ ຢູ່ ອິສປາການຜະລິດເຫລັກກ້າໄດ້ ໗໙% ຂອງປະລິມານທັງໝົດທີ່ຜະລິດໄດ້ຢູ່ອີຣານ, ນອກນັ້ນກໍຍັງມີໂຮງງານຫລອມໂລຫະຢູ່ອາເຊຣີຕວກກີ ແລະ ໃນປະເທດອື່ນໆ.

ຢູ່ໃນຂອບເຂດການຮ່ວມມືກັບລັດຫນຸ່ມນ້ອຍນີ້ ປະເທດສັງຄົມນິຍົມໃຫ້ການຊ່ວຍເຫລືອອັນສຳຄັນໃນດ້ານກໍ່ສ້າງ ຖັນແຖວນັກວິຊາສະເພາະ ແລະ ນາຍຊ່າງກຳມະກອນແຫ່ງຊາດ. ທັງຫມົດແລ້ວມີນາຍຊ່າງວິຊາສະເພາະຫລາຍຮ້ອຍພັນຄົນໄດ້ ຮັບການສຶກສາສຳເລັດ ຍ້ອນການຊ່ວຍເຫລືອຈາກປະເທດສັງຄົມນິຍົມຢູ່ໃນສະຖາບັນການສຶກສາຕ່າງໆ, ຢູ່ໃນສະຖານກໍ່ສ້າງ- ແລະ ຢູ່ໃນໂຮງຈັກໂຮງງານຂອງປະເທດສັງຄົມນິຍົມ ແລະ ທັງໃນປະເທດກຳລັງພັດທະນາເອງກໍ່ເຊັ່ນດຽວກັນ. ປະເທດສັງຄົມນິຍົມໄດ້ປະກອບສ່ວນຢ່າງຫລວງຫລາຍ ເຂົ້າໃນການສ້າງນັກວິທະຍາສາດ ແລະ ພະນັກງານດ້ານວັດທະນະທຳ.

ສະຫະພາບໂຊວຽດ ກັບປະເທດສັງຄົມນິຍົມອື່ນໆທຳການໂຕ້ຕອບຢ່າງເຂັ້ມແຂງຕ້ານກັບນະໂຍບາຍຮຸກຮານຂອງພວກ-ປະຕິການຈັກກະພັດໃນບ່ອນທີ່ປະເທດ ແລະ ປະຊາຊາດ ທັງຫລາຍ ຍາດເອົາເສລີພາບ ແລະ ເອກະລາດຂອງຊາດ ໄດ້ແລ້ວຫັ້ນທັນທີ. ຢູ່ໃນສະພາບການທີ່ມີການຊ່ວງຊາກຳລັງ ແບບໃຫມ່ນີ້ ຈັກກະພັດນິຍົມບໍ່ອາດສ່ຽງຕໍ່ການເຂົ້າແຊກແຊງ ຢ່າງເປີດເຜີຍໃນກິດຈະການຂອງຊາດຕ່າງໆໃນອາຊີ ແລະ ອາຟຣິກກາ. ການປັບປຸງຖານະຂອງລະບົບສັງຄົມນິຍົມແຫ່ງໂລກບໍ່ພຽງແຕ່ມີສ່ວນຊ່ວຍສົ່ງເສີມຂະບວນປົດປ່ອຍຊາດເທົ່ານັ້ນແຕ່ຫາກຍັງໄດ້ສ້າງເງື່ອນໄຂຫລາຍອັນທີ່ອະນຸມັດໃຫ້ປະຊາ ຊາດໃນຫລາຍໆປະເທດຊຶ່ງແຕ່ກ່ອນເຄີຍຢູ່ໃຕ້ແອກຂອງພວກ ໂຫເມືອງຂຶ້ນ ຍາດແຍ່ງເອົາເອກະລາດແຫ່ງຊາດດ້ວຍສັນຕິ ວິທີ

ແບບບໍ່ໃຊ້ການຕໍ່ສູ້ດ້ວຍອາວຸດເລີຍ.

ປະເທດສັງຄົມນິຍົມເຄື່ອນໄຫວດ້ວຍຄວາມເອົາໃຈໃສ່ - ເພື່ອສ້າງເງື່ອນໄຂອັນດີກວ່າສຳລັບສົ່ງເສີມການຮ່ວມມືກັບປະເທດປົດປ່ອຍແລ້ວ, ເງື່ອນໄຂອັນອະນຸມັດໃຫ້ແກ້ໄຂ ຄວາມຫຍຸ້ງຍາກທີ່ໂປໂລ໊ຂມຢູ່ໃນການພົວພັນຂອງບາງປະເທດ ພວກເຂົາກັບວົງຄະນາຍາດສັງຄົມນິຍົມ. ດ້ວຍອາລົມຈິດຜູກມັດ ຢູ່ກັບຫລັກການ ເລນິນິດ ຢ່າງບໍ່ປ່ຽນແປງ ພວກເຂົາ ພະຍາຍາມແກ້ໄຂຄວາມບໍ່ເຂົ້າໃຈກັນທີ່ໂປໂລ໊ຂມມາຢ່າງສູດກົກ ສຸດປາຍ, ທັງນີ້ເພື່ອບໍ່ໃຫ້ຄວາມບໍ່ເຂົ້າໃຈກັນເຫລົ່ານີ້ສ້າງຄວາມເສຍຫາຍໃຫ້ແກ່ການຮ່ວມມື. ນອກນີ້, ປະເທດສັງຄົມ ນິຍົມຍັງຕ້ານຕິຕຽນການກະທຳແບບການທູດຂອງບາງປະເທດ ປົດປ່ອຍທີ່ຖ່ວງດຶງຄວາມເປັນເອກະພາບຂອງກຳລັງແຮງຕ້ານຈັກກະພັດນິຍົມ ແລະ ປະຕິເສດຄຳດ່າວ່າ ສຽດສີຕ້ານໂຊວຽດ ແລະ ຕ້ານກອມມູນິດຂອງພວກເຂົາ.

ດ້ວຍການສົ່ງອິດທິພົນອັນຍິ່ງໃຫຍ່ຕໍ່ການຂະຫຍາຍຕົວຂອງບາດກ້າວເດີນແຫ່ງການປະຕິວັດໂລກ, ລະບົບສັງຄົມນິຍົມ - ຍາມໃດກໍຫາກຕ້ອງການຄວາມສະໜັບສະໜູນຈາກຊົນຊັ້ນກຳມາຊີບໃນປະເທດທຶນນິຍົມ ຈາກປະຊາຊາດໃນປະເທດ ປົດປ່ອຍທັງຫລາຍ. ແມ່ນຄວາມສາມັກຄີຂອງກຳລັງແຮງປະຕິວັດທຸກໆອັນທີ່ອຳນວຍໃຫ້ດຳເນີນການຕໍ່ສູ້ເພື່ອສັນຕິພາບປະຊາທິ-ປະໄຕ ເອກະລາດແຫ່ງຊາດ ແລະລະບອບສັງຄົມນິຍົມ ພ້ອມດ້ວຍຄວາມສຳເລັດ, ອັນທີ່ເຮັດໃຫ້ຖານະຂອງພວກຈັກກະພັດ

ອ່ອນເພຍລົງ ແລະ ກີດຂວາງການສ່ຽງໄພທາງການທະຫານຂອງພວກເຂົາ. ເມື່ອກຳລັງແຮງປະຕິວັດອັນແທ້ຈິງຂອງຍຸກ-ສະໄຫມທຸກໆອັນປະກອບຕົວເປັນດ່ານຫນ້າຢູ່ໃນການ ເຄື່ອນໄຫວເອກະພາບຕ້ານກັບການກະທຳຮຸກຮານຂອງຈັກກະພັດນັ້ນ ພວກເຂົາຕີລາຄາວ່າຫນ້າທີ່ຂອງຕົນແມ່ນການປ້ອງກັນລະບອບສັງຄົມນິຍົມ ແລະຄວາມສຳເລັດທີ່ຍາດມາໄດ້.

ຄວາມສາມັກຄີຂອງກຳລັງແຮງປະຕິວັດກັບປະເທດສັງຄົມນິຍົມ ສະແດງອອກດ້ວຍການປະສານສົມທົບພຶດຕິກຳ ກັບລະບອບສັງຄົມນິຍົມປະຈຸບັນຢູ່ໃນການຕໍ່ສູ້ເພື່ອສັນຕິພາບ ເພື່ອຄວາມກ້າວຫນ້າທາງສັງຄົມ. ມັນສະແດງອອກດ້ວຍການແຜ່-ກະຈາຍຄວາມຈິງ ກ່ຽວກັບ ນະໂຍບາຍຕ່າງປະເທດອັນສັນຕິຂອງບັນດາປະເທດອ້າຍນ້ອງ, ຊຶ່ງແມ່ນນະໂຍບາຍ ທີ່ສອດຄ່ອງກັບຜົນປະໂຫຍດອັນເປັນຕາຍຂອງທຸກປະຊາຊາດ; ແລະດ້ວຍການແຜ່ກະຈາຍຄວາມຈິງກ່ຽວກັບພຶດຕິກຳອ່າດ້ວຍ ການປ່ຽນແປງສັງຄົມບົນຫລັກການສັງຄົມນິຍົມ. ນອກນັ້ນມັນຍັງເປັນການໂຕ້ຕອບໄປໃນຕົວການໂຄສະນາປ່າວຂ່າວຂອງພວກນາຍທຶນ ທີ່ພະຍາຍາມໃສ່ຮ້າຍປ້າຍສີລະບອບສັງຄົມນິຍົມປະຈຸບັນ, ຢາກແຍກປ່ຽວກຳລັງປະຕິວັດທຸກໆຢ່າງອອກຈາກມັນ ແລະຢາກເວົ້າໂຈມຕີຄຸນນະທຳໃນແນວຄິດປະຕິວັດຂອງມັນ.

ເພື່ອໃຫ້ຄວາມສາມັກຄີແບບສາກົນນິຍົມກັບປະເທດສັງຄົມນິຍົມຂະຫຍາຍຕົວອອກ ກ່ອນອື່ນຫມົດຄວນສົ່ງເສີມການ ຕໍ່ສູ້ຕ້ານທຸກຮູບການຝືນກອມມູນິດ. ພັກກອມມູນິດບໍ່ຖືວ່າ ພວກຝືນ

ລັດທິກອມມູນິດ ແມ່ນບຸກຄົນທີ່ບໍ່ເຫັນດີເຫັນງາມນຳນະໂຍບາຍຂອງຕົນຫລືຜູ້ທີ່ສອດແຊກເຂົ້າມາໃນຖານະເປັນນັກວິຈານການເຄື່ອນໄຫວຂອງພັກ. ລັດທິຝືນກອມມູນິດເຄີຍເປັນແລະຍັງຄົງເປັນເຄື່ອງມືຂອງ ກຳລັງປະຕິການ ແລະ ຈັກກະພັດ ບໍ່ພຽງແຕ່ສຳລັບການຕໍ່ສູ້ຕ້ານນັກກອມມູນິດຂອງພວກເຂົາເທົ່ານັ້ນແຕ່ຫາກຍັງຕ້ານກັບນັກປະຊາທິປະໄຕອື່ນໆ ແລະ ກັບເສລີ ພາບແບບມີປະຊາທິປະໄຕນຳອີກ. ໂດຍອີງໃສ່ບັ້ນຮົບ ຕ້ານລັດທິກອມມູນິດ ກຳລັງແຮງປະຕິການເຫລົ່ານັ້ນອອກແຮງສຸດຂີດເພື່ອກີດຂວາງຄວາມເປັນເອກະພາບຂອງຂະບວນກຳມະກອນການຮ່ວມມືຂອງກຳລັງປະຊາທິປະໄຕ ແລະ ມະຫາຊົນ.

ມາເຖິງບັ້ນລະດັບປະຈຸບັນຂອງການປະທະກັນທາງ ດ້ານແນວຄິດລະຫວ່າງລະບອບສັງຄົມນິຍົມກັບທຶນນິຍົມນີ້ ຄວາມສຳຄັນທີ່ບໍ່ອາດເມີນເສີຍໄດ້ຂຶ້ນຢູ່ກັບການຕໍ່ສູ້ກັບ ທັດສະນະພາບຂອງລັດທິສວຍໂອກາດອຽງຊ້າຍ ແລະແຮງຈັດທຸກຮູບທຸກແບບລັດທິສວຍໂອກາດອຽງຊ້າຍກັບລັດທິແຮງຈັດນັ້ນ ມີຫລາຍ ທ່າອຽງທີ່ສຸດ. ຕົວແທນບາງຄົນຂອງອັນທີ່ເອີ້ນວ່າ "ຝ່າຍຊ້າຍ" ນັ້ນຍຶດຫມັ້ນຢູ່ນຳແນວຄິດນິຍົມໂຕຣຊະກີ ກັບລັດທິອະນາທິປະ-ໄຕ, ບາງຄົນອວດອ້າງວ່າເປັນນັກກໍ່ກວນທຳຮ້າຍ ແລະອື່ນໆອີກ. ການກັບຄືນມາມີພຶດຕິກຳໃຫມ່ຂອງກະແສເຫລົ່ານີ້ ດ້ານຫນຶ່ງແມ່ນດັດຊະນີຍັ້ງຢືນເຖິງລະດັບຮ້າຍແຮງຂອງວິກິດ ການທົ່ວໄປໃນລະບອບທຶນນິຍົມ ແລະ ອີກດ້ານຫນຶ່ງແມ່ນຄວາມຮຸນແຮງຢູ່ໃນການຕໍ່ສູ້ທາງດ້ານແນວຄິດຢູ່ໃນເວທີສາກົນ. ເມື່ອສູ້

ຢັນກັບພວກ " ຊ້າຍຈັດ " ນັ້ນພັກກອມມູນິດ ເນັ້ນຢ້ຳ ເຖິງຄວາມຈຳເປັນທີ່ຕ້ອງໃຈແຍກເບິ່ງຄວາມແຕກຕ່າງລະຫວ່າງ-ລັດທິສວຍໂອກາດ ກັບຂະບວນການສັງຄົມນິຍົມແຮງຈັດ ເຊິ່ງເປັນຍາດພີ່ນ້ອງກັນໃນດ້ານຫນຶ່ງ ແລະ ໃນອີກດ້ານຫນຶ່ງກໍໃຈແຍກລະຫວ່າງການຄັດຄ້ານຢ່າງຈິງຈັງລະບອບທຶນນິຍົມ ຈາກຝ່າຍຊັ້ນຄົນທີ່ບໍ່ເປັນຊາວກຳມາຊີບແຕ່ ມີຫົວຮຸນແຮງ.

ກຳລັງແຮງ ທີ່ປາຖະຫນາຢາກປັບປຸງ ການຮ່ວມມື ກັບປະເທດສັງຄົມນິຍົມ ກຳລັງແຜ່ກະຈາຍ ຢ່າງຫ້າວຫັນ ແນວຄິດ ຂອງລັດທິສາກົນກຳມາຊີບ, ແນວຄິດ ກ່ຽວກັບການປະສານງານ ແລະ ຂອງຄວາມເຂົ້າໃຈເຊິ່ງກັນແລະກັນ ລະຫວ່າງອົງການຕ່າງໆຢູ່ໃນຂະບວນປະຕິວັດໂລກ ແລະ ປົກປ້ອງແນວຄິດເຫລົ່ານີ້. ກຳລັງແຮງເຫລົ່ານີ້ອີງໃສ່ສາເຫດທີ່ວ່າອົງຄະນາຍາດສັງຄົມນິຍົມ ແມ່ນພາກສ່ວນຂໍກຸນແຈຂອງບາດກ້າວເດີນແຫ່ງການປະຕິວັດໂລກ ເປັນກຳແພງແລະເປັນເກາະ - ປ້ອງກັນດ້ານຫນ້າຂອງມັນ.

ມີບາງຄົນມັກເວົ້າວ່າ ປະເທດສັງຄົມນິຍົມສາມາດ"ປ້ອງກັນ "ຕົວເອງໄດ້ ແລະ ວ່ານັກປະຕິວັດຢູ່ໃນປະເທດອື່ນໆຈະຕ້ອງປະຕິເສດບໍ່ໃຫ້ການສະຫນັບສະຫນູນພວກເຂົາໂດຍກົງທັງນີ້ເພື່ອຢາກເຊົາເປັນເປົ້າຍິງໃຫ້ການໂຄສະນານາຍທຶນ ທີ່ແນມາຕ້ານກັບປະເທດສັງຄົມນິຍົມ ແລະ ຍິ່ງໄປກວ່ານີ້ອີກຕ້ອງຢູ່ໃນທ່າທີຕຳນິຕິຕຽນປະເທດສັງຄົມນິຍົມນຳ.ທ່ານ ຕ.ຈຽກກັບຜູ້ນຳຂອງພັກກອມມູນິດບູນກາຣີ ໃຫ້ຂໍ້ສັງເກດໄວ້ວ່າ: "ຢູ່ໃນ-

ໂລກນີ້ຍັງມີຜູ້ຄົນທີ່ເອີ້ນຕົນວ່າ "ນັກປະຕິວັດ "ອີກຢູ່ແລະ ສຳລັບພວກນີ້ເອົາເຫັນວ່າ "ຄວາມເປັນເອກະລາດ " ຈາກໂຊວຽດຂອງພວກເຂົາມີລາຄາແພງກວ່າຄວາມຢ້ານພວກນາຍທຶນຕູ່ຫາວ່າເອົາແບບຢ່າງ, ດັ່ງນັ້ນພວກເຂົາຈຶ່ງແລ່ນຕິດຕາມທັດສະນະນາຍທຶນຢ່າງເຕັມປ່ຽມ ແລະ ສະແດງຕົວອອກຈົນໜ້າປະຫລາດໃຈວ່າ ກຽມພ້ອມທີ່ຈະປະຕິເສດທຸກຢ່າງ ນັບທັງ - ການປະຕິວັດຫລືເສັ້ນທາງອັນຖືກຕ້ອງຂອງການສະຖາ ປະນາລະບອບສັງຄົມນິຍົມ ".( ຕ.ຈຽກກົບ ບັນຫາວ່າດ້ວຍການສະຖາປະນາສັງຄົມ ສັງຄົມນິຍົມຈະເລີນ. ມົດສະກູ, ໑໙໗໖ , ໜ້າ ໓໔໙ .)

ແຕ່ຄວາມຈິງໄດ້ຊີ້ບອກວ່າ ຖ້າການຜ່ອນຜັນກັບພວກສວຍໂອກາດໃຫ້ທາດຄົນໃດຄົນໜຶ່ງແບບຈົວຄາວແລ້ວ ບໍ່ຊ້າກໍ່ ໄວມັນຈະນຳເອົາຄວາມເສັຍຫາຍມາສູ່ພາລະກິດສັງຄົມນິຍົມໂລກ

ການຕໍ່ສູ້ອ້ອມຂ້າງທັດສະນະທີ່ຄວນມີຕໍ່ບົດຮຽນຂອງລະບົບສັງຄົມນິຍົມແຫ່ງໂລກນັ້ນ ແຕະຕ້ອງກິດເກັ່ນການຂະຫຍາຍຕົວທົ່ວໄປຂອງການປະຕິວັດ ແລະຂອງການສະຖາປະນາລະບອບສັງຄົມນິຍົມກັບກອມມູນິດຢ່າງຫລີກບໍ່ພົ້ນ. ຄວາມຮັບຮູ້ ແລະການຖືສຳຄັນກົດເກນເຫລົ່ານີ້ແມ່ນພື້ນຖານແຫ່ງການ ເຄື່ອນໄຫວຂອງພັກປະຕິວັດທັງຫລາຍ. ດັ່ງນັ້ນການພິຈາລະນາແລະການປັບປຸງແບບມີທົ່ວຄິດປະດິດສ້າງຍຸດທະສາດແລະ ຍຸດໂທບາຍປະຕິວັດກໍແມ່ນທິດທາງອັນສຳຄັນຂອງວຽກງານທາງດ້ານແນວຄິດຂອງພວກເຂົາ. ຄວາມຮັ່ງມີຂອງບົດຮຽນສັງຄົມນິຍົມ

ໂລກ ແມ່ນບໍ່ເກີດອັນບໍ່ເຫືອດແຫ້ງເປັນຂອງແນວຄິດປະຕິວັດ.

× ×

×

ຜ່ານໄລຍະຄົງຕົວມາຫລາຍກວ່າສາມທົດສະວັດນີ້ ວົງຄະນາຍາດສັງຄົມນິຍົມແຫ່ງໂລກຮູ້ຈັກແກ້ໄຂບັນຫາສຳຄັນ ຫລາຍອັນເຊິ່ງເກີດຂຶ້ນຍອນການບັບປຸງສາຍພົວພັນລະຫວາງລັດອ້າຍນ້ອງ. ການບັບປຸງບຳລຸງມິດຕະພາບການຮ່ວມມື ຄວາມເປັນປຶກແຜ່ນ ຂອງບັນດາປະເທດສັງຄົມນິຍົມ ປະກອບຕົວເປັນທ່າອຽງໃຫຍ່ທີ່ບົ່ງບອກລັກສະນະຂະຫຍາຍຕົວຂອງວົງຄະນາຍາດສັງຄົມນິຍົມແຫ່ງໂລກ. ຝ່າຍສູດທ້າຍນີ້ກໍ່ຫມູນໃຊ້ໄມ້ວັດ ອັນເຂັ້ມແຂງເຊິ່ງລະບອບໃຫມ່ສ້າງສາງໃຫ້ມີຢ່າງສົມບູນຂຶ້ນທຸກມື້. ອະນາຄົດ ເປັນຂອງນະໂຍບາຍແບບພະລາດອນພາບຂອງບັນດາປະເທດສັງຄົມນິຍົມ, ເປັນຂອງນະໂຍບາຍ ຂອງສັນຕິພາບ ແລະ ຂອງຄວາມກ້າວຫນ້າ, ເປັນຂອງ ຄວາມເປັນເອກະພາບ ກັບກຳລັງແຮງປະຕິວັດຂອງຍຸກສະໄຫມທຸກໆອັນ.

## ສະລາບານ


ໜ້າ

ຄຳນຳ .......................... 3

ການປະກອບສ້າງ ລະບົບສັງຄົມນິຍົມແຫ່ງໂລກ ... 6

ວົງຄະນາຍາດປະຊາຊາດອ້າຍນ້ອງ .......... 76

ການຊ່ວຍເຫລືອຊຶ່ງກັນແລະກັນທາງດ້ານເສດຖະກິດ ...................... 79

ພັນທະພາບທາງການເມືອງແລະການທະຫານ . 104

ການຮ່ວມມືທາງດ້ານແນວຄິດ ........... 113

ພັນທະພາບສູ້ຮົບ ຂອງພັກກອມມູນິດ ....... 119

ການເຄື່ອນໄຫວຮ່ວມກັນຢູ່ໃນເວທີສາກົນ ....... 129

ລະບົບສັງຄົມນິຍົມແຫ່ງໂລກ ກັບຂະບວນການປົດປ່ອຍ 164

ບັນດາທ່ານຜູ້ອ່ານທີ່ນັບຖື!

ສຳນັກພິມ "ກ້າວໜ້າ" ມີຄວາມຍິນດີຢາກຈະຮັບຟັງຄວາມຄິດເຫັນຂອງທ່ານ ກ່ຽວກັບການແປ ແລະການຮຽບຮຽງປຶ້ມຫົວນີ້.ດັ່ງນັ້ນ ຖ້າຫາກທ່ານມີຄຳສະເໜີອັນໃດອັນຈະເປັນການຊ່ວຍໃຫ້ມີການປັບປຸງການພິມ ໃນຂ້າງໜ້າແລ້ວ ຂໍເຊີນທ່ານສົ່ງຄວາມຄິດເຫັນໄປຍັງ:

I7, Zoubovski boulevard,Moscou,URSS.

ພິມໃນສະຫະພາບໂຊວຽດ

"ຄັງຄວາມຮູ້ທາງການເມືອງ" ຊຸດທີ່ກຳລັງສະເໜີຕໍ່ຜູ້ອ່ານຊຸດນີ້ ແມ່ນບັ້ນໄຂການພິມປຶ້ມ ກ່ຽວກັບບັນຫາການຂະຫຍາຍຕົວຂອງສັງຄົມໃນຍຸກນີ້. ອີງໃສ່ລັກສະນະມະຫາຊົນຂອງມັນ ປຶ້ມຊຸດນີ້ ສຶກສາຄົ້ນຄວ້າບັນຫາວ່າດ້ວຍການຈັດຕັ້ງສັງຄົມ, ການດັດປ່ຽນລະບອບສັງຄົມ-ເສດຖະກິດ ແລະລັກສະນະພິເສດ ຂອງການຂະຫຍາຍຕົວການປະຕິວັດວິທະຍາສາດ-ເຕັກນິກ ໃນຍຸກສະໄໝນີ້.

ປຶ້ມຊຸດນີ້ ຈັດພິມອອກຢ່າງເປັນລະບົບທີ່ມີວິທະຍາສາດແລະຈະເປັນທີ່ສົນໃຈສຳລັບທຸກຄົນທີ່ຕ້ອງການສຶກສາທິດສະດີ ມາກ-ເລນິນ ແລະບັນຫາຕົວຈິງ ຂອງການກໍ່ສ້າງລະບອບສັງຄົມນິຍົມ.

ປຶ້ມໃນຊຸດ "ຄັງຄວາມຮູ້ທາງການເມືອງ" ມີດັ່ງນີ້:

໑) ວິທີຂະຫຍາຍຕົວ ຂອງສັງຄົມ. ໂດຍ ອ. ໂອໂລດິນ, ອ. ປູີມາກ.

໒) ລະບອບກອມມູນິດ ແມ່ນຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ແບບໜຶ່ງ. ໂດຍ ປ. ໂລປາຕາ.

໓) ທິດສະດີຂອງ ເລນິນ ກ່ຽວກັບການປະຕິວັດ. ໂດຍ ອ. ບາຕາລົບ.

໔) ວິກິດການຮອບດ້ານ ຂອງລະບອບທຶນນິຍົມ. ໂດຍ ວ. ເຕຣເປລກອຟ.

໕) ກ່ຽວກັບເສັ້ນທາງຂ້າມຜ່ານແຕ່ທຶນນິຍົມ ໄປສູ່ສັງຄົມນິຍົມ. ໂດຍ ວ. ເນຊຸມານອຟ.

໖) ລະບົບສັງຄົມນິຍົມແຫ່ງໂລກ. ໂດຍ ກ. ປີໂຣກອຟ.

໗) ລັດທິເລນິນ ກ່ຽວກັບການປະຕິວັດປົດປ່ອຍຊາດ ແລະຍຸກສະໄໝ. ໂດຍ ວ. ໂຊຕອຟ.

໘) ລັດທິ ມາກ-ເລນິນ ກ່ຽວກັບບັນຫາສົງຄາມ ແລະ ສັນຕິພາບ. ໂດຍ ວ. ໂສບາກິນ.

໙) ລະບອບທຶນນິຍົມ,ລະບອບສັງຄົມນິຍົມ ກັບການປະຕິວັດວິທະຍາສາດ - ເຕັກນິກ. ໂດຍ ຄະນະນັກຂຽນ.

໑໐) ການຄຸ້ມຄອງສັງຄົມສັງຄົມນິຍົມ ແບບວິທະຍາສາດ. ໂດຍ ກ. ວາຣລາ-ມົບ.

໑໑) ບຸກຄະລິກລັກສະນະ ໃນລະບອບສັງຄົມນິຍົມ. ໂດຍ ກ. ສະມີຣໂນຟ.

໑໒) ການຕໍ່ສູ້ທາງດ້ານແນວຄິດໃນໂລກປະຈຸບັນ. ໂດຍ ລ. ມາກສູໂດຟ.

໑໓) ຂະບວນການປະຕິວັດໂລກ. ໂດຍ ອ. ປາວເລັນໂກ.

໑໔) ໂຄງການເລນິນ ກ່ຽວກັບການແກ້ໄຂບັນຫາຊົນຊາດຢູ່ໃນ ສ.ສ.ສ.ຣ. ໂດຍ ສ. ກິລີໂລຟ.